DOCUMENT RESUME

ED 303 246 PS 017 743

AUTHOR Nakatsu, Gail
TITLE Family Day Care Training Curriculum (Lao).
INSTITUTION Union of Pan Asian Communities, San Diego, Calif.
SPONS AGENCY Administration for Children, Youth, and Families (DHHS), Washington, D.C.; San Diego County Dept. of Social Services, CA.
PUB DATE 87
GRANT 90-CW-0775
NOTE 199p.; Compiled for publication by Jessica Kheo. For English and Vietnamese versions, see PS 017 741-742. For companion resource manual, see PS 017 744.
PUB TYPE Guides - Classroom Use - Guides (For Teachers) (052)
LANGUAGE Lao

EDRS PRICE MF01/PC08 Plus Postage.
DESCRIPTORS *Asian Americans; *Child Caregivers; Chinese Americans; *Curriculum; Early Childhood Education; *Family Day Care; Lao; Laotians; *Refugees; *Small Businesses
IDENTIFIERS *Caregiver Training

ABSTRACT

California's Family Day Care Training Program was designed to recruit and train, in 7 weeks, Lao, Vietnamese, and Chinese refugees to establish their own state-licensed, family day care homes. Topics in the program's curriculum include an introduction to family day care, state licenses for family day care, state licensing requirements for family day care, licensing application forms, tuberculosis clearances, fingerprinting, welfare benefits and self-employment, visitation of a day care home and preschool, preparation of the home for day care, safety-proofing of the home, child care equipment, home inspections, nutrition, meal planning and budgeting, health and illness, financial policies, recruitment, effective communication skills, behavioral problems of children, emergency situations, and basic business management. Written in Lao, this document provides the content of instruction, forms, and regulations central to the curriculum topics. (RH)

***********************************************************************
* Reproductions supplied by EDRS are the best that can be made *
* from the original document. *
***********************************************************************

ED303246

U.S. DEPARTMENT OF EDUCATION
Office of Educational Research and Improvement
EDUCATIONAL RESOURCES INFORMATION CENTER (ERIC)

☒ This document has been reproduced as received from the person or organization originating it

☐ Minor changes have been made to improve reproduction quality

• Points of view or opinions stated in this document do not necessarily represent official OERI position or policy

SCOPE OF INTEREST NOTICE

The ERIC Facility has assigned this document for processing to:

In our judgment, this document is also of interest to the Clearinghouses noted to the right. Indexing should reflect their special points of view.

# ສະຫະພັນ ຊຸມຊົນເອເຊັຍ

# ຫລັກສູດຝຶກອົບຮົມ
# ການເບິ່ງແຍງລ້ຽງເດັກຢູ່ກັບເຮືອນ

PS017743

**UNION OF PAN ASIAN COMMUNITIES**

# FAMILY DAY CARE TRAINING CURRICULUM (LAO)



BEST COPY AVAILABLE

ERIC

# ສາຣະບານ

ຫນ້າ


ຫລັກສູດກ່ຽວກັບການອົບຮົມຕັ້ງບ່ອນລ້ຽງເດັກນ້ອຍແບບຢູ່ບ້ານເຮືອນ.................. 2

ຣັບຮູ້ບຸນຄຸນ.................................. 4

ລາຍຣະອຽດກ່ຽວກັບໂຄງການ.......................... 7

ການລ້ຽງເດັກແບບຢູ່ບ້ານເຮືອນ : ແມ່ນສຳຫລັບທ່ານບໍ່ ? .................. 14

ໃບສມັກສຳຫລັບການຂໍໃບອານຸຍາດ ສຳຫລັບຣັຖຄາລີຟໍຣ໌ເນັຽ .................. 20

ສິ່ງແວດລ້ອມ ກ່ຽວກັບການລ້ຽງເດັກ .......................... 67

ຄວາມປອດພັຍຂອງບ້ານເຮືອນ .......................... 76

ອາຫານການກິນ ສຳຫລັບການລ້ຽງເດັກ .......................... 93

ສຸຂພາບ ອານາມັຍ ແລະ ການເຈັບໄຂ້ຕ່າງໆຂອງເດັກ .......................... 101

ການຕັ້ງກົດຣະບຽບຂອງຣາຄາ .......................... 126

ການແນະນຳ ວິທີຊອກຫາເດັກນ້ອຍ .......................... 131

ຄວາມຄາດຫມາຍ ຂອງການສົນທະນາທີ່ໄດ້ພົບ .......................... 134

ການແກ້ໄຂ ຄວາມປະພຶດຂອງເດັກນ້ອຍ .......................... 140

ສະພາບເຫດການສຸກເສີນຕ່າງໆ .......................... 151

ການແນະນຳ ກ່ຽວກັບການຕັ້ງທຸຣະກິດສ່ວນຕົວ .......................... 171

## ໂຄງການອົບຮົມກ່ຽວກັບການຕັ້ງບ່ອນລ້ຽງເດັກນ້ອຍ ຢູ່ໃນເຮືອນ

<u>ລາຍຣະອຽດກ່ຽວກັບໂຄງການ</u> : ໂຄງການນີ້ຈະເປີດຮັບເອົາ ຄົນອົພຍົພລາວ, ວຽດນາມ ແລະ ຈີນ ເຂົ້າມາຮັບການອົບຮົມ ເພື່ອຈະໄດ້ຂໍໃບອານຸຍາດຈາກຣັຖໃນການຂໍຕັ້ງສະຖານທີ່ຮັບລ້ຽງເດັກນ້ອຍຢູ່ ໃນເຮືອນ. ຫົວຂໍ້ໃຫຍ່ໆຂອງການອົບຮົມນີ້ ປະກອບໄປດ້ວຍການພັທນາ ແລະ ເບິ່ງແຍງເດັກນ້ອຍ, ກົດຣະບຽບຂອງຣັຖວ່າດ້ວຍ ການຂໍໃບອານຸຍາດຕັ້ງບ່ອນລ້ຽງເດັກນ້ອຍ ພ້ອມທັງຫລັກການໃນການບໍຣິຫານກິຈການຂນາດນ້ອຍນຳອີກ. ຄຣູຝຶກອົບຮົມທີ່ສາມາດປາກສອງພາສາ ຈະທຳການສິດສອນ ແລະ ອົບຮົມຕາມຫົວຂໍ້ທີ່ກ່າວມາຂ້າງເທິງນີ້ ຊຶ່ງຈະໄດ້ຈັດຂຶ້ນເປັນກຸ່ມ ແລະ ໃຊ້ເວລາອົບຮົມ ໕໐ ຊົ່ວໂມງ ການສິດສອນອົບຮົມທັງຫມົດ ໃຊ້ພາສາຂອງນັກຣຽນຜູ້ມາຮ່ວມຮັບການອົບຮົມນັ້ນເອງ. ໂຄງການນີ້ໄດ້ເລີ້ມຕົ້ນມາຕັ້ງແຕ່ ເດືອນສິງຫາ (ອົກັດ) ໑໙໘໔ ແລະ ໄດ້ຮັບທຶນເພື່ອດຳເນີນການອົບຮົມນີ້ ຈົນເຖິງເດືອນມີນາ (ມາກຊ໌) ໑໙໘໗ ພາຍໃຕ້ໂຄງການຊ່ວຍເຫລືອໂດຍສະເພາະ ສຳຫລັບອົພຍົພ ຊຶ່ງເປັນໂຄງການອັນນຶ່ງຂອງກົມ ບໍຣິການສັງຄົມຂອງກຳແພງນະຄອນເມືອງ ແຊນດິເອໂກ.

<u>ຄຸນນະສົມບັດ ຂອງຜູ້ທີ່ຈະເຂົ້າຮັບການອົບຮົມ</u> :

໑. ຈະຕ້ອງເປັນຄົນອົພຍົພຜູ້ໃຫຍ່ ຊຶ່ງເປັນຄົນລາວ, ຄົນຈີນ ຫລືວ່າ ວຽດນາມ.

໒. ຈະຕ້ອງມີຖານະເປັນຄົນອົພຍົພຢູ່ ຊຶ່ງຢັ້ງຢືນໂດຍ V.E.S.C. ໃນການຈົດຊື່ເຂົ້າອົບຮົມ.

໓. ຈະຕ້ອງມີສິ່ງຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດຣະບຽບວ່າດ້ວຍການຂໍໃບອານຸຍາດຂອງຣັຖແຄລິຟໍເນັຽ ດັ່ງຂ້າງລຸ່ມນີ້ :

- ກ. ຫລັກຖານສແດງວ່າ ໄດ້ຜ່ານການຕຣວດວ່າ : ບໍ່ເປັນໂຣຄປອດ.
- ຂ. ບໍ່ມີປະວັດວ່າເຄີຍເປັນ : ອາຊຍາກອນ
- ຄ. ມີເຮືອນທີ່ເຫມາະສົມແລະປອດພັຍ (ຕຶກໃຫ້ເຊົ່າ ຫລື ເຮືອນເປັນຫລັງ)
- ງ. ມີໂທຣະສັພ
- ຈ. ມີທຶນພໍທີ່ຈະບໍຣິຫານ ກິຈການ ການລ້ຽງເດັກນ້ອຍໃນຕອນເລີ້ມຕົ້ນ ດຳເນີນງານ

໔. ຈະເປັນຄົນທີ່ຍັງໄດ້ຮັບການຊ່ວຍເຫລືອທາງດ້ານປະຊາສົງເຄາະຢູ່ກໍໄດ້.

<u>ຣະຍະເວລາ ຂອງ ການອົບຮົມ</u> : ການອົບຮົມນີ້ ໃຊ້ເວລາປະມານ ໗ ອາທິດ, ສາມມື້ ຕໍ່ ນຶ່ງອາທິດ (ວັນອັງຄານ, ວັນພຸດ ແລະ ວັນພະຫັດ).

<u>ສະຖານທີ່ຂອງການອົບຮົມ</u> : ແມ່ນຢູ່ບ້ານເຮືອນຂອງຜູ້ທີ່ເຂົ້າຮັບການອົບຮົມນັ້ນເອງ ໂດຍການສັບປ່ຽນກັນໄປ ແລະສແດງການຕົບແຕ່ງ ສະຖານທີ່ຂອງແຕ່ລະເຮືອນ ໃຫ້ເປັນຕົວຢ່າງໄປເລີຍ.

<u>ຜົລປະໂຍດຈາກການອົບຮົມ</u> :

໑. ໄດ້ຮັບໃບອານຸຍາດຂອງການລ້ຽງເດັກນ້ອຍຢູ່ໃນເຮືອນຈາກຣັຖ (ຊຶ່ງສາມາດລ້ຽງເດັກນ້ອຍໄດ້ ໖ ຄົນ)

໒. ມີລາຍໄດ້ຕື່ມ ໃນຂນະທີ່ຢູ່ບ້ານເຮືອນ ແລະ ລ້ຽງລູກຂອງຕົນເອງ.


ERIC Full Text Provided by ERIC

໓. ໄດ້ຮັບຄວາມຮູ້ກ່ຽວກັບການພັທນາ ແລະ ລ້ຽງດູເດັກນ້ອຍ, ກົດຣະບຽບຂອງຣັຖກ່ຽວກັບ ການຂໍໃບອານຸຍາດ ແລະ ການບໍຣິຫານກິຈການຂນາດນ້ອຍ.

໔. ໄດ້ຮັບການບໍຣິການຊ່ວຍເຫລືອດ້ານພາຫານະ ແລະ ເບິ່ງແຍງລູກໃນຂນະທີ່ ເຂົ້າຮັບການ ອົບຣົມ.

໕. ຈະໄດ້ຮັບການຊ່ວຍເຫລືອ ໃນການຊອກຫາຄອບຄົວທີ່ເຮັດການ ແລະ ຕ້ອງການລົ້ນເບິ່ງ-ແຍງລູກ.

<u>ຖ້າຫາກທ່ານຕ້ອງການ ຂໍ້ມູນ ແລະ ລາຍຣະອຽດເພີ້ມເຕີມຕ່າງໆ</u> : ກະຣຸນາຕິດຕໍ່ ເກລ ນາຄັທສູ, ຂັນແກ້ວ ບຸພະສິຣິ, ຫລື ໂສພີ ອິລໄບູຕ໌ ທີ່ເລກໂທຣະສັພ : ໒໓໕-໕໓໐໕.



ERIC
Full Text Provided by ERIC

# ຮັບຮູ້ບຸນຄຸນ

ສະຫະພັນ ຊຸມຊົນເອຊຽນ ຂອງເມືອງແຊນດິເອໂກ ຂໍຮັບຮູ້ບຸນຄຸນ ຜູ້ອຸປະຖຳທີ່ມີຊື່ຢູ່ຂ້າງລຸ່ມນີ້ ດ້ວຍຄວາມຍິນດີເປັນຢ່າງຍິ່ງ ຊຶ່ງຖ້າປາສຈາກ ບຸຄຄົນແລະອົງການ ເຫລົ່ານີ້ແລ້ວ ປຶ້ມຫລັກ ສູດ ກ່ຽວກັບການອົບ ການລ້ຽງເດັກນ້ອຍຢູ່ບ້ານເຮືອນ ຫົວນີ້ ກໍຈະບໍ່ມີໂອກາດໄດ້ອອກມາປາກົດ ຕໍ່ ສາຍຕາຂອງທ່ານ :

໑. ຍານາງ ເດບບີ ສະແກນແບລລູຣີ ຈາກອົງການ Advocates for Better Child Care ກຸ່ມເພື່ອສນັບສນູນ, ສົ່ງເສີມແລະປັບປຸງການລ້ຽງເດັກນ້ອຍ ຊຶ່ງເປັນສາຂາຂອງ ຫ້ອງ ການກ່ຽວກັບອຸປກອນການສອນຂອງ ລາ ເມສາ, ຄາລີຟໍຣເນັຽ. ທາງສະຫະພັນ ຂໍ ຂອບໃຈໃນຄວາມເອື້ອເຟື້ອຂອງລາວ ທີ່ໃຫ້ທາງສະຫະພັນ ຢືມປຶ້ມຫລັກສູດ ກ່ຽວກັບການ ລ້ຽງເດັກນ້ອຍ ຊຶ່ງລາວເອງໄດ້ມີສ່ວນຮ່ວມໃນການແຕ່ງ ຊຶ່ງໃນຂັ້ນຕົ້ນທາງ ສະມາຄົມ ຂອງຜູ້ຮັບລ້ຽງເດັກນ້ອຍ ຂອງກຳແພງເມືອງ ແຊນດິເອໂກ ໄດ້ໃຊ້ປຶ້ມດັ່ງກ່າວໃນການ ອົບຮົມ ຜູ້ຮັບລ້ຽງເດັກນ້ອຍ ທີ່ມີໃບອານຸຍາດ ທີ່ຍັງດຳເນີນກິຈການຢູ່.

໒. ທາງສະຫະພັນ ຂໍຂອບໃຈ ພແນກບໍຣິການສັງຄົມຂອງ ກຳແພງເມືອງ ແຊນດິເອໂກ ທີ່ ໄດ້ໃຫ້ທຶນຜ່ານໂຄງການ ການຊ່ວຍເຫລືອອົພຍົພໂດຍສະເພາະ ໃນການຈັດໃຫ້ມີ ການ ອົບຮົມຜູ້ຍິງຂອງຊາວອົພຍົພ ໃຫ້ມີອາຊີພ ເປັນຜູ້ລ້ຽງເດັກນ້ອຍຢູ່ໃນເຮືອນ ຕາມສັນຍາ ເລກທີ ໒໒໓໙໙ ອີ. ໃນປີງົບປະມານ ໑໙໘໔ ເຖິງ ໑໙໘໗.

໓. ພແນກບໍຣິການກ່ຽວກັບເດັກນ້ອຍ, ເຍົາວະຊົນ ແລະ ຜູ້ມີຄອບຄົວຂອງ ກະຊວງສາທາ ຣະນະສຸຂ ແລະ ປະຊາສົງເຄາະ ກໍ່ມີບົດບາດອັນສຳຄັນ ໂດຍການໃຫ້ທຶນເພື່ອຈັດພິມ ປຶ້ມຫລັກສູດ ໃນການລ້ຽງເດັກນ້ອຍແບບຢູ່ບ້ານເຮືອນ ອອກມາເປັນພາສາອັງກິດ ລາວ ແລະວຽດນາມ ຕາມສັນຍາເລກທີ ໙໐ ຊີດັບບລີວ ວາກ໔ ໃນປີງົບປະມານ ໑໙໘໓ - ໑໙໘໗.

ຜູ້ຍິງຊາວອົພຍົພຈາກເອເຊັຽ ຕະເວັນອອກສ່ຽງໃຕ້ ຫລາຍກ່ວາ ໑໐໐ ຄົນໄດ້ໃຊ້ປຶ້ມຫົວນີ້ ໃນການອົບຮົມມາຕັ້ງແຕ່ປີ ໑໙໘໔. ຄວາມເວົ້າແລະຕົວຢ່າງ ທີ່ໃຊ້ໃນປຶ້ມຫົວນີ້ ຜູ້ລຽບລຽງ ໄດ້ ໃຊ້ພາສາ ແລະ ຕົວຢ່າງງ່າຍໆ ເພື່ອຄວາມສດວກໃນການເຂົ້າໃຈຂອງຜູ້ເຂົ້າຮັບການອົບຮົມ ເພາະວ່າສ່ວນຫລາຍຂອງພວກທີ່ເຂົ້າຮັບການອົບຮົມ ໃນໂຄງການນີ້ ບໍ່ໄດ້ມີໂອກາດໄດ້ຮັບສຶກສາ ມາຢ່າງພຽງພໍ (ສ່ວນຫລາຍແລ້ວບໍ່ເກີນ ໓ ປີ) ນອກຈາກນັ້ນເຂົາເຈົ້າ ຍັງມີປັນຫາແລະພາລະ ອື່ນໆອີກເຊັ່ນ ຄວາມຮູ້ທາງດ້ານພາສາອັງກິດ ຍັງບໍ່ດີພໍ, ຄວາມຊຳນານໃນວຽກການທີ່ຕລາດຕ້ອງ ການ ກໍ່ບໍ່ມີຫລາຍ, ຍັງອາສັຍຄວາມຊ່ວຍເຫລືອຈາກຫ້ອງການປະຊາສົງເຄາະ, ເບິ່ງແຍງລູກ-



ERIC Full Text Provided by ERIC

ນ້ອຍ ຜູ້ຫຍິງບໍ່ທັນໄດ້ເຂົ້າໂຮງຮຽນ ແລະ ນອກຈາກນີ້ບາງຄົນ ກໍມີສະມາຊິກພາຍໃນຄອບຄົວຫລາຍຄົນ. ດັ່ງນັ້ນ ໃນຂນະທີ່ ທ່ານອ່ານຫລືໃຊ້ປຶ້ມຫົວນີ້ ຂໍຈົ່ງຄໍານຶງເຖິງຂໍ້ເທັຈຈິງ ທີ່ໄດ້ກ່າວມານັ້ນດ້ວຍ.

ໃນພາກຕໍ່ໄປ ປະກອບດ້ວຍ ຕົວຢ່າງຂອງແບບຟອມຕ່າງໆ ແລະ ບົດຮຽນທີ່ໄດ້ແຈກຢາຍໃຫ້ແກ່ຜູ້ທີ່ເຂົ້າຮັບການອົບຮົມ ສິ່ງເຫລົ່ານີ້ອາດຈະໃຊ້ໄດ້ສະເພາະແຕ່ໃນເຂດ ກໍາແພງເມືອງແຊນດີເອໂກ ຣັຖຄາລີຟໍຣ໌ເນັຽ ທໍ່ນັ້ນ ທ່ານຜູ້ໃດທີ່ສົນໃຈ ຢາກຈະເອົາຫລັກສູດໄປໃຊ້ ອາດຈະຕ້ອງຊອກຫາ ຫລື ໃຊ້ຟອມທີ່ໃຊ້ຢູ່ໃນທ້ອງຖິ່ນ ຂອງທ່ານເອງ.

## ການອົບຮົມກ່ຽວກັບ ການຕັ້ງບ່ອນລ້ຽງເດັກ

ລາຍການ

| ວັນທີ | ເວລາ | ຫົວຂໍ້ຕ່າງໆ |
|---|---|---|
| | ໘:໐໐ - ໑໑:໐໐ ຕອນເຊົ້າ | ໑. ການແນະນຳກ່ຽວກັບການລ້ຽງເດັກນ້ອຍແບບຢູ່ບ້ານເຮືອນ |
| | " | ໒. ການແນະນຳກ່ຽວກັບຜົລການຕ່າງໆຂອງໃບອານຸຍາດ |
| | " | ໓. ການອະທິບາຍກ່ຽວກັບຄວາມຕ້ອງການຂອງຜູ້ອອກໃບອານຸຍາດ |
| | " | ໔. ການແນະນຳວິທີການ ປະກອບ/ຂຽນໃບສມັກ ສຳຫລັບການຂໍໃບອານຸຍາດ ເຊັ່ນ : ໃບກວດພຍາດປອດ - ການແປະໂປ ລາຍມືຕ່າງໆ |
| | " | ໕. ການແນະນຳກ່ຽວກັບ ແວລແຟຣ໌ ຫລື ກິຈການການຄ້າສ່ວນຕົວ |
| | " | ໖. ການປ້ອນປ່ານສະຖານທີ່ ບ່ອນລ້ຽງເດັກ ແລະ ໂຮງຮຽນຕ່າງໆ |
| | " | ໗. ວິທີການຈັດບ້ານເຮືອນ ສຳຫລັບການລ້ຽງເດັກ |
| | " | ໘. ຄວາມປອດພັຍ ຂອງບ້ານເຮືອນ |
| | " | ໙. ອຸປກອນ ຂອງການລ້ຽງເດັກ |
| | " | ໑໐. ການກວດກາ ບ້ານເຮືອນ |
| | " | ໑໑. ການກວດກາ ບ້ານເຮືອນ |
| | " | ໑໒. ອາຫານການກິນ ການວາງແຜນຂອງການຕຽມອາຫານ - ຕົ້ນທຶນ |
| | " | ໑໓. ສຸຂພາບ - ອານາມັຍ - ການເຈັບໄຂ້ຕ່າງໆ |
| | " | ໑໔. ການຕັ້ງກົດຣະບຽບຂອງຣາຄາ ຄ່າຈ້າງຂອງການລ້ຽງເດັກ |
| | " | ໑໕. ການແນະນຳວິທີການຊອກຫາເດັກນ້ອຍ |
| | " | ໑໖. ການສົນທະນາ ກ່ຽວກັບຄວາມຮູ້ຄວາມຊຳນານ ຜົລປະໂຍດ |
| | " | ໑໗. ການແກ້ໃຂຄວາມປະພຶດຂອງເດັກນ້ອຍ |
| | " | ໑໘. ການແກ້ໃຂ ກ່ຽວກັບການເກີດເຫດສຸກເສີນ ບ້ານເຮືອນ |
| | " | ໑໙. ການແນະນຳ ກ່ຽວກັບການຈັດຕັ້ງທຸຣະກິດການຄ້າສ່ວນຕົວ ບົດທີ ໑. |
| | " | ໒໐. ການແນະນຳ ກ່ຽວກັບການຈັດຕັ້ງທຸຣະກິດການຄ້າສ່ວນຕົວ ບົດທີ ໒. |

ການຝຶກສອນ ແລະ ສະຖານທີ່ຈະຕ້ອງແມ່ນບ້ານເຮືອນຂອງຜູ້ທີ່ເຂົ້າໂອບຮົມ ທີ່ຈະໃຊ້ເປັນບ່ອນຝຶກ ແລະ ຮຽນຢູ່ຕາມເຂດຄຸ້ມຕ່າງໆ, ຊຶ່ງຈະປະກາດໃຫ້ຮູ້.

ພິມ : ກ/ຊຜ



ERIC Full Text Provided by ERIC

# ລາຍລະອຽດກ່ຽວກັບໂຄງການ



## ໂຄງການອົບຮົມ ກ່ຽວກັບການຕັ້ງບ່ອນລ້ຽງເດັກ ຢູ່ກັບເຮືອນ

## ອົງການ ສະຫະພັນ ຊຸມຊົນ ເອຊຽນ (ຢູ.ພີ.ເອ.ຊີ)

| ມື້/ເວລາ | ການປະຊຸມ | ຫົວຂໍ້ເຣື່ອງ |
|---|---|---|
| | ໑. | ການແນະນຳກ່ຽວກັບ ການລ້ຽງເດັກແບບຢູ່ບ້ານເຮືອນ<br>● ກິຈກັມ ສ້າງຄວາມລຶ້ງເຄີຍ ຊຶ່ງກັນແລະກັນ<br>● ລາຍຣະອຽດຂອງໂຄງການ ແລະ ການອົບຮົມ ໂດຍສັງເຂບ<br>● ການຕີຄວາມຫມາຍ ຂອງການລ້ຽງເດັກແບບຢູ່ກັບບ້ານເຮືອນ ແລະ ບົດບາດຂອງ ແມ່ລ້ຽງ<br>● ການເບິ່ງແຍງ ແບບ ເຕັມມື້ ຫລື ເຄິ່ງມື້.<br>● ແຈກຢາຍຫລັກສູດ ແລະ ລາຍການຕາຕລາງການຮຽນ |
| | ໒. | ໃບອານຸຍາດ ຈາກ ຣັຖ ກ່ຽວກັບການລ້ຽງເດັກຢູ່ກັບເຮືອນ<br>● ການແຕກຕ່າງສຳຫລັບ ໃບອານຸຍາດ ສຳຫລັບລ້ຽງເດັກນ້ອຍ<br>● ຄວາມແຕກຕ່າງຂອງເດັກ ໃນຫມວດອາຍຸ, ລັກສນະ ແລະ ຄວາມຕ້ອງການ ຂອງເດັກເກີດໃຫມ່, ເດັກໃຫຍ່, ເດັກຕຽມ ເຂົ້າໂຮງຮຽນ ແລະ ເດັກທີ່ເຂົ້າໂຮງຮຽນແລ້ວ.<br>● ການເລືອກເດັກ ມາຮັບລ້ຽງຕາມຫມວດອາຍຸ<br>● ແຈກຢາຍ ບົດແນະນຳ/ຫລັກສູດ |
| | ໓. | ຄວາມຕ້ອງການ ຂອງຜູ້ອອກໃບອານຸຍາດ<br>● ຄວາມຕ້ອງການ ຂອງຜູ້ອອກໃບອານຸຍາດ/ອັດຕຣາສ່ວນ<br>● ຂັ້ນຕອນຕ່າງໆຂອງ ຣະບຽບການ ການຂໍໃບອານຸຍາດ (ການ ຕຣວດພຍາດປອດແຫ້ງ ແລະ ໃບຢັ້ງຢືນວ່າ ບໍ່ເຄີຍຕ້ອງໂທດອາຊຍາ ໃບແປະໂປ້ລາຍມື, ການຍື່ນໃບຄຳຮ້ອງ, ການອອກໄປກວດກາ ບ້ານເຮືອນ ແລະ ການອອກໃບອານຸຍາດ).<br>● ແຈກຢາຍ ໃບຄຳຮ້ອງ |
| | ໔. | ໃບຄຳຮ້ອງຂໍ ອານຸຍາດ / ໃບຕຣວດພຍາດປອດ / ໃບແປະໂປ້ລາຍມື<br>● ການແນະນຳ ປະກອບ/ຂຽນຄຳຮ້ອງ ໃຫ້ຄົບຖ້ວນແຕ່ລະຂັ້ນໆ<br>● ຊ່ວຍໃນການຕຣວດພຍາດປອດ ແລະ ການແປະໂປ້ລາຍມື |

| ມື້/ເວລາ | ກອງປະຊຸມ | ຫົວຂໍ້ເຣື່ອງ |
|---|---|---|

**໔** ການຊ່ວຍເຫລືອຈາກ ປະຊາສົງເຄາະ ແລະ ກິຈການຄ້າສ່ວນຕົວ

- ຜົນສະທ້ອນ ຂອງກິຈການຄ້າສ່ວນຕົວ ຕໍ່ຜົລປະໂຍດຂອງ ການຊ່ວຍເຫລືອຈາກ ປະຊາສົງເຄາະ.
- ພນັກງານ ຈາກກົມປະຊາສົງເຄາະ ມາອະທິບາຍບັລຍາຍກ່ຽວກັບ ການປ່ຽນແປງ ມາຕຖານຂອງ ຜົລປະໂຍດ

**໕.** ການຢ້ຽມຢາມ ສະຖານທີ່ບ່ອນລ້ຽງເດັກ ແລະ ໂຮງຮຽນ

- ໄປຢ້ຽມຢາມ ເຮືອນ ບ່ອນລ້ຽງເດັກ ທີ່ໄດ້ຮັບອານຸຍາດ
- ໄປຢ້ຽມຢາມໂຮງຮຽນ 'ເຮດສະຕາດ' (ບ່ອນຝາກເດັກ)
- ສົນທະນາ ກ່ຽວກັບຄວາມຄ້າຍຄືກັນ ຫລື ຄວາມແຕກຕ່າງກັນ ກ່ຽວກັບ ສະພາບຕົວຈິງຂອງສະຖານທີ່, ເຄື່ອງໃຊ້ສອຍ, ຄວາມປອດພັຍ, ລາຍການປະຈຳວັນ, ຄວາມຕ້ອງການ ຂອງ ອາຫານການກິນ, ອື່ນໆ...)
- ແຈກຢາຍ ບົດແນະນຳ/ຫລັກສູດ ແລະ ເອກກະສານ

**໖.** ການຈັດບ້ານເຮືອນ ສຳຫລັບການລ້ຽງເດັກ

- ການຕົບແຕ່ງບ້ານເຮືອນ (ໃຫ້ແຕກຕ່າງກັນກັບ ສະພາບແບບຄອບຄົວ, ເຄື່ອງອຸປກອນຕ່າງໆ ທີ່ຕ້ອງການ).
- ປຶກສາຫາລື ກ່ຽວກັບ ຄວາມຕ້ອງການຂອງຄອບຄົວ ແລະ ຕາຕລາງ ສຳຫລັບລ້ຽງເດັກ
- ແຈກຢາຍ ບົດແນະນຳ/ຫລັກສູດ ແລະ ເອກກະສານ

**໗.** ຄວາມປອດພັຍຂອງບ້ານເຮືອນ

- ການພິສູດວ່າ ມີຄວາມປອດພັຍໃນບ້ານເຮືອນ
- ການສແດງຕົວຢ່າງຢູ່ບ້ານເຮືອນ
- ແຈກຢາຍ ບົດແນະນຳ/ຫລັກສູດ ແລະ ເອກກະສານ

**໘.** ເຄື່ອງອຸປກອນ ໃນການລ້ຽງເດັກ

- ການຊີ້ແຈງກ່ຽວກັບ ເຄື່ອງອຸປກອນຕ່າງໆຂອງການລ້ຽງເດັກ ເຊັ່ນ (ອູ່ນອນ, ອູ່ຫລິ້ນຕ່າງໆ).
- ສົນທະນາກ່ຽວກັບຄວາມປອດພັຍ/ການຣະມັດຣະວັງ
- ແຈກຢາຍ ບົດແນະນຳ/ຫລັກສູດ ແລະ ເອກກະສານ

| ມື້/ເວລາ | ການປະຊຸມ | ຫົວຂໍ້ເຣື່ອງ |
|---|---|---|

໑໐. ການກວດກາບ້ານເຮືອນ

- ນັດໝາຍກວດກາບ້ານເຮືອນກ່ຽວກັບ ອານາມັຍ ແລະ ຄວາມປອດພັຍ ຂອງບ້ານເຮືອນ
- ໃຊ້ແບບຟອມ ທີ່ກຳແພງນະຄອນອອກໃຫ້ ສຳຫລັບເປັນແນວແນະດັດແປງ ການບົກພ່ອງ
- ແຈກຢາຍ ສຳເນົາແບບຟອມ ແນວແນະດັດແປງ ການບົກພ່ອງ

໑໑. ການກວດກາ ບ້ານເຮືອນ (ຕໍ່)
(ຄືກັນກັບ ຢູ່ຂ້າງເທິງ)

໑໒. ອາຫານການກິນ / ວາງແຜນຕຽມອາຫານ / ວາງແຜນການເງິນ

- ຄວາມຈິງກ່ຽວກັບ ອາຫານທີ່ມີປະໂຍດແກ່ຮ່າງກາຍ ; ການນຳມາປະກອບໃສ່ ໃນການປຸງແຕ່ງ ແລະ ວາງແຜນງົບປະມານ
- ອາຫານຕ່າງໆປະຈຳ ຊົນຊາດ ຊົນເຜົ່າ
- ວິທີການເຂົ້າຮ່ວມ ໃນລາຍການອາຫານຂອງເດັກ
- ແຈກຢາຍ ບົດແນະນຳ/ຫລັກສູດ ແລະ ເອກກະສານ

໑໓. ສຸຂພາບ ອະນາມັຍ - ການເຈັບໄຂ້ຕ່າງໆ

- ບັນຫາກ່ຽວກັບ ສຸຂພາບ
- ການເຈັບປ່ວຍຂອງເດັກ/ເຊື້ອໂຣຄຕ່າງໆ
- ການຮັກສາພິເສດ ກ່ຽວກັບເດັກນ້ອຍທີ່ບໍ່ສບາຍ
- ແຈກຢາຍ ບົດແນະນຳ/ຫລັກສູດ ແລະ ເອກກະສານ

໑໔. ການຕັ້ງກົດຣະບຽບຂອງຣາຄາ ຄ່າຈ່າຍຂອງການລ້ຽງເດັກ

- ການຕັ້ງຣາຄາຕໍ່ຊົ່ວໂມງ/ ຕໍ່ອາທິດ, ການຈ່າຍຕ່າງໆຂອງການເບິ່ງແຍງ
- ວິທີຊ່ວຍ ໃນກໍຣະນີພິເສດ
- ທົບທວນຂໍ້ສັນຍາ ທີ່ສຳລັບ ທີ່ຄ້າຍຄືກັນ ແລະ ແຕກຕ່າງກັນ.
- ແຈກຢາຍ ບົດແນະນຳ/ຫລັກສູດ, ເອກກະສານ ແລະ ສັນຍາ

໑໕. ການແນະນຳ ວິທີການຊອກຫາເດັກນ້ອຍ

- ໂຄສນາ ແລະ ການແນະນຳຈາກບ່ອນລ້ຽງເດັກ (ສະຖານທີ່ແນະນຳບ່ອນລ້ຽງເດັກ).
- ການສັມພາດ ພໍ່ແມ່ ໃນການຝາກລູກ

| ມື້/ເວລາ | ການປະຊຸມ | ຫົວຂໍ້ເຣື່ອງ |
|---|---|---|
| | ໑໔. | ການແນະນຳ ວິທີການຊອກຫາເດັກນ້ອຍ (ຕໍ່)<br>● ແຈກຢາຍ ບົດແນະນຳ/ຫລັກສູດ ແລະ ເອກກະສານ |
| | ໑໕. | ວິທີການ ສົນທະນາ ທີ່ໃຊ້ໄດ້ຜົນ<br>● ວິທີການສົນທະນາ ຢ່າງແຈ່ມແຈ້ງ ກັບເດັກນ້ອຍ ແລະຜູ້ປົກຄອງ<br>● ການຕັ້ງກົດຣະບຽບ ຂອງບ້ານເຮືອນ ແລະ ຄວາມຄາດຫວັງພໍ່ແມ່ ແລະ ເດັກນ້ອຍ.<br>● ມະຕິ ໃນການແກ້ໄຂບັນຫາ<br>● ແຈກຢາຍ ບົດແນະນຳ/ຫລັກສູດ ແລະ ເອກກະສານ |
| | ໑໖. | ການແກ້ໄຂ ຄວາມປະພຶດ ຂອງເດັກນ້ອຍ<br>● ເນັ້ນຫນັກກ່ຽວກັບ ຄວາມປະພຶດຂອງເດັກນ້ອຍ ທີ່ເຮັດຖືກຕ້ອງ<br>● ເຫດຜົນທີ່ບໍ່ສາມາດ ຍອມຮັບໄດ້ຕໍ່ການປະພຶດບໍ່ດີຂອງເດັກນ້ອຍ ແລະ ວິທີແກ້ບັນຫາ<br>● ຍອມຮັບຮູ້ກ່ຽວກັບ ບັນຫາພິເສດ (ປາກເວົ້າເກີະໆ ກະໆ, ຫູຕຶງ-ຫູຫນວກ, ອື່ນໆ...)<br>● ການລົງໂທດ ທີ່ມີຂອບເຂດ (ການທຳໂທດ ດ້ວຍການທຸບຕີຕໍ່ຮ່າງກາຍ ຈະເປັນທີ່ຍອມຮັບບໍ່ໄດ້ ໃນສະຖານທີ່ລ້ຽງເດັກ.)<br>● ການສືບສວນ-ສອບສວນ ແລະ ກົດຫມາຍກ່ຽວກັບ ການຂົ່ມເຫງເດັກ<br>● ແຈກຢາຍ ບົດແນະນຳ/ຫລັກສູດ ແລະ ເອກກະສານ |
| | ໑໗. | ສະພາບເຫດການ ສຸກເສີນຕ່າງໆ<br>● ການວາງແຜນໄວ້ລ່ວງຫນ້າ (ຄືກັນກັບ ການຊ່ວຍເຫລືອແບບເພື່ອນບ້ານ ຫລືພີ່ນ້ອງ, ໃນດ້ານການຈັດຫາ ພາຫານະ, ໂຮງພຍາບານທີ່ຢູ່ໃກ້ຄຽງ ລາຍຣະອຽດ, ຊີວະປະວັດຂອງເດັກນ້ອຍແຕ່ລະຄົນ)<br>● ໃບອານຸຍາດ ສຳຫລັບການສຸກເສີນ<br>● ວິທີການຕິດຕໍ່ ຢ່າງງ່າຍໆ ເມື່ອເວລາມີເຫດການສຸກເສີນ (ກົມດັບເພີງ, ຕຳຣວດ, ຣົດໂຮງຫມໍ, ພວຈ ແລະ ສູນກາງຄວບຄຸມການເບື່ອເມົາ)<br>● ວິທີການແນະນຳ ກ່ຽວກັບ ການປະຖົມພຍາບານ<br>● ແຈກຢາຍ ບົດແນະນຳ/ຫລັກສູດ ແລະ ເອກກະສານ. |

| ມື້/ເວລາ | ການປະຊຸມ | ຫົວຂໍ້ເຣື່ອງ |
|---|---|---|
| | ໑໙. | ການແນະນຳກ່ຽວກັບ ການຈັດຕັ້ງທຸຣະກິດການຄ້າ ສ່ວນຕົວ ບົດທີ ໑.<br>• ການປະກອບ ທຸຣະກິດການຄ້າ ແບບສ່ວນຕົວ ແມ່ນຫຍັງ ?<br>• ການຈຳກັດຂອບເຂດ ໜ້າທີ່, ການຮ່ວມມື<br>• ການລ້ຽງເດັກ ໄດ້ຖືກອານຸຍາດຫັກໂດຍ ຫ້ອງການພາສີລາຍໄດ້ (ໄອ.ອາຣ໌.ແອສ.)<br>• ໃຫ້ເກັບຮັກສາ ເອກກະສານໃຫ້ຄົບຖ້ວນ ສຳຫລັບການພາສີທົ່ວໄປ<br>• ຕົວຢ່າງ ຟອມບົດຝຶກຫັດ ສຳຫລັບການເກັບເອກກະສານ<br>• ແຈກຢາຍບົດແນະນຳ/ຫລັກສູດ ແລະ ເອກກະສານ |
| | ໒໐. | ການແນະນຳກ່ຽວກັບ ການຈັດຕັ້ງທຸຣະກິດການຄ້າ ສ່ວນຕົວ ບົດທີ ໒.<br>• ການປະກັນພັຍ ສຳຫລັບພວກເບິ່ງແຍງ<br>• ການແຈ້ງລາຍໄດ້ ໃຫ້ແກ່ກົມປະຊາສົງເຄາະທົ່ວໄປ<br>• ຊອກຫາຜູ້ຊ່ວຍ ຜູ້ຊຳນານໃນການເຮັດບັນຊີ ແລະ ການເສັຍພາສີ<br>• ແຈກຢາຍ ບົດແນະນຳ/ຫລັກສູດ ແລະ ເອກກະສານ |

# ຂໍ້ສັນຍາ

ໂຄງການຝຶກຝົນວິຊາການລ້ຽງເດັກນ້ອຍແບບຢູ່ບ້ານເຮືອນ

ໂຄງການຝຶກຝົນການອົບຮົມວິຊາການລ້ຽງເດັກນ້ອຍຊຶ່ງໄດ້ຮັບທຶນຈາກກຳແພງເມືອງ ແຊນດີເອໂກ ໂດຍການເອື້ອເຟື້ອຈາກໂຄງການ UPAC ບຸກຄົນທີ່ຈະເຂົ້າຮ່ວມໃນລາຍການນີ້ຈະຕ້ອງປະຕິບັດດັ່ງນີ້:

- ຈະຕ້ອງເຂົ້າມາຮຽນທຸກໆລາຍການຂອງວັນອັງຄານ, ວັນພຸດແລະວັນພະຫັດ ຊຶ່ງເລີ່ມແຕ່ເວລາ ໘.໓໐ ຕອນເຊົ້າ ຫາ ໑໑.໓໐ ຕອນກາງເວັນ ( ຈະຂໍອະນຸຍາດພັກໄດ້ ໒ ເທື່ອຕໍ່ເດືອນເທົ່ານັ້ນ ).
- ຈະຕ້ອງໃຫ້ຄວາມຮ່ວມໄມ້ຮ່ວມມືແກ່ໂຄງການຜູ້ອອກໃບອະນຸຍາດເຊັ່ນ: ການເສັຽຄ່າທຳນຽມຕ່າງໆ ສຳຫຼັບການແປະໂປ້ລາຍມື, ການກວດພະຍາດປອດແລະຄ່າອື່ນໆສຳຫຼັບການປະກອບຄຳຮ້ອງຂໍໃຫ້ຄົບຖ້ວນ.
- ໃບອະນຸຍາດຂອງການລ້ຽງເດັກນ້ອຍຈະມີອາຍຸໄດ້ແຕ່ ນຶ່ງ ປີ ເທົ່ານັ້ນ.
- ຈະຍອມເຮັດຕາມກົດຣະບຽບຂອງການລ້ຽງເດັກ ທີ່ທາງຣັຖບານໄດ້ວາງໃຫ້.
- ຈະຕ້ອງໃຫ້ຄວາມຮ່ວມໄມ້ຮ່ວມມືແກ່ພະນັກງານຂອງ UPAC ໃນການຈັດຫາເດັກໃຫ້ລ້ຽງ.
- ຈະຕ້ອງແຈ້ງລາຍໄດ້ຕ່າງໆ ໃຫ້ກົມປະຊາສົງເຄາະຮູ້ທຸກໆກໍຣະນີ.
- ຈະຕ້ອງແຈ້ງເສັຽພາສີລາຍໄດ້ທຸກໆກໍຣະນີ.
- ໂຄງການຝຶກສອນຈະສາມາດຊ່ວຍ ເຊັ່ນ:
  ການອົບຮົມວິຊາການລ້ຽງເດັກນີ້ກຳນົດຢູ່ ໓ ອາທິດຮວມທັງການເບິ່ງແຍງ ລ້ຽງດູເດັກແລະວິທີການດຳເນີນກິຈການສ່ວນຕົວແບບຍ່ອຍອີກ.
- ໂຄງການຈະຊ່ວຍເສັຽຄ່າເບິ່ງແຍງລູກຂອງທ່ານໃນເວລາຝຶກຝົນ, ຄ່າໄປມາແລະຄ່າສຖານທີ່ບ່ອນຝຶກຝົນ.
- ໂຄງການຈະຊ່ວຍໃນການແກ້ໄຂບັນຫາຕ່າງໆທີ່ໂຄງການຜູ້ອອກໃບອະນຸຍາດຕ້ອງການ.
- ໂຄງການຈະຊ່ວຍທ່ານໃນດ້ານການຊອກຫາເດັກມາລ້ຽງຕາມທີ່ໂຄງການຜູ້ອອກໃບອະນຸຍາດຕ້ອງການ.
- ໂຄງການຈະຊ່ວຍສອນດ້ານການເທັກນິຄຕ່າງໆສຳລັບການດຳເນີນກິຈການ ແບບນ້ອຍໆສ່ວນຕົວໃຫ້ .

____________________________

ລາຍເຊັນຂອງຜູ້ເຂົ້າອົບຮົມ

__________________

ວັນທີ

____________________________

ລາຍເຊັນຂອງຜູ້ແນະນຳ

__________________

ວັນທີ

# ການລ້ຽງເດັກແບບຢູ່ບ້ານເຮືອນ
# ແມ່ນສຳຫລັບທ່ານ ບໍ່?



ບົດຮຽນທີ ໑.

## ບົດບາດຂອງການລ້ຽງເດັກຢູ່ບ້ານເຮືອນ

ກ. ວິທີການກ່ຽວກັບການຂຍາຍຄອບຄົວ

- ບົດບາດຂອງຜູ້ລ້ຽງເດັກ ໃນການທົດແທນແມ່ຂອງເດັກນ້ອຍ
- ການດັດແປງສະພາບສິ່ງແວດລ້ອມ ແລະ ຈັດແຈງສະຖານທີ່ບ່ອນລ້ຽງເດັກ ເພື່ອໃຫ້ເດັກນ້ອຍມີຄວາມຮູ້ສຶກ ຄືກັບກັບຢູ່ບ້ານເຮືອນຂອງເຂົາເຈົ້າເອງ.
- ຄວາມຜູກພັນ ແລະ ຄວາມຮັກແພງແບບອ້າຍນ້ອງ ຢູ່ໃນສະຖານທີ່ບ່ອນລ້ຽງເດັກ.

ຂ. ຄວາມສັມພັນຣະຫວ່າງ ພໍ່ແມ່ທີ່ແທ້ຈິງ ກັບ ຕົວແທນທີ່ຢູ່ໃນສະຖານທີ່ ບ່ອນລ້ຽງເດັກ

- ການສົ່ງເດັກມາຍັງສະຖານທີ່ ແລະ ການຮັບກັບເມືອບ້ານແຕ່ລະມື້
- ການແລກປ່ຽນຄວາມຄິດຄວາມເຫັນ ແລະ ການສັງເກດເບິ່ງການເຄື່ອນໄຫວ ແລະ ການຈເຣີນເຕີບໂຕຂອງເດັກ
- ການປຶກສາຫາລື ເພື່ອແກ້ໄຂບັນຫາ ຂອງເດັກຮ່ວມກັນຢ່າງເປີດເຜີຍ.

ຄ. ລັກສະນະປະຈຳຕົວຂອງເດັກແຕ່ລະຄົນ.

- ຄວນເອົາໃຈໃສ່ ກ່ຽວກັບລັກສະນະພິເສດ ປະຈຳຕົວຂອງເດັກ ເຊັ່ນ: ຣະດັບອາຣົມ ແລະ ຣະດັບຮ່າງກາຍຂອງແຕ່ລະຄົນ.
- ຄວນຈັດລາຍການ ໃຫ້ແຕ່ລະຄົນເຊັ່ນ : ການນອນ ການຫຼິ້ນ ແລະອື່ນໆຮ່ວມກັນແບບເປັນກຸ່ມເປັນພວກ ຕົວຢ່າງ ການກິນເຂົ້າ ແລະ ການລື່ນເລີງຕ່າງໆ.
- ຊ່ວຍສົ່ງເສີມຊຸກຍູ້ ກ່ຽວກັບຄວາມຕັ້ງໃຈ ແລະ ຄວາມສຳເຣັດຂອງເດັກ
- ຈົ່ງເປີດເຜີຍ ຮັບເອົາຄວາມຜ່ອນສັ້ນຜ່ອນຍາວ ຕໍ່ການຜິດພາດແລະການປ່ຽນແປງຂອງເດັກ.

ງ. ຄວາມຮູ້ທີ່ເດັກຈະໄດ້ຮັບຈາກ ສະຖານທີ່.

- ຊ່ວຍສົ່ງເສີມໃຫ້ເດັກມີຄວາມສລາດ ໃຊ້ຄວາມສາມາດໃນການເຂົ້າໝູ່ (ໂດຍສະເພາະແມ່ນຄວາມສັມພັນ ການແບ່ງປັນ ແລະ ຄວາມຮ່ວມໄມ້ຮ່ວມມື)
- ໃຫ້ຄວາມອິສຣະພາບ ໃນການສແດງຄວາມສາມາດ ໃນກິຈກັມແລະການຫຼິ້ນຕ່າງໆ ແລ້ວແຕ່ຄວາມສາມາດຂອງໃຜລາວ.
- ໃຫ້ເດັກຮຽນຮູ້ວິຊາຂັ້ນພື້ນຖານ ເຊັ່ນຂັ້ນອານຸບານ ຫຼື ການໃຫ້ເດັກນ້ອຍຮຽນຮູ້ກ່ຽວກັບການກິຈກັມຕ່າງໆເປັນກຸ່ມໆ.

ຈ. ຈະເວົ້າເຖິງຄວາມຕ້ອງການພິເສດ ກ່ຽວກັບ.

- ການລ້ຽງເດັກນ້ອຍເກີດໃໝ່
- ການລ້ຽງເດັກນ້ອຍທີ່ເລີກຈາກໂຮງຮຽນແລ້ວ
- ການລ້ຽງເດັກນ້ອຍ ທີ່ຕ້ອງການຄວາມເອົາໃຈໃສ່ພິເສດ (ເຊັ່ນເດັກພິການ)



ERIC Full Text Provided by ERIC

## ວ່າດ້ວຍກົດຣະບຽບ

ບົດຮຽນທີ ໒

ກ. ໃບອະນຸຍາດຂອງການລ້ຽງເດັກ

໑. ໃບອະນຸຍາດທັມມະດາ

ອັດຕຣາສ່ວນ :

ກ. ນາຍຄູຣຜູ້ນຶ່ງຕໍ່ເດັກນ້ອຍ ໖ ຄົນ

ຂ. ເອົາເດັກນ້ອຍຕ່ຳກວ່າ ໒ ປີໄດ້ແຕ່ບໍ່ເກີນ ໓ ຄົນ

ຄ. ອັດຕຣາສ່ວນນີ້ລວມທັງລູກຂອງທ່ານເອງທີ່ມີອາຍຸຕ່ຳກວ່າ ໑໒ ປີລົງມາ

໒. ໃບອະນຸຍາດແບບພິເສດ

ອັດຕຣາສ່ວນ

ກ. ນາຍຄູຣຜູ້ນຶ່ງຕໍ່ເດັກນ້ອຍ ໔ ຄົນ

ຂ. ສຳຫລັບເດັກນ້ອຍທີ່ເກີດໃຫມ່ເທົ່ານັ້ນ

໓. ໃບອະນຸຍາດແບບຂະນາດໃຫຍ່

ອັດຕຣາສ່ວນ

ກ. ນາຍຄູຣຜູ້ນຶ່ງຕໍ່ເດັກນ້ອຍ ໖ ຄົນ

ຂ. ອາດຈະເອົາເດັກນ້ອຍໄດ້ສູງສຸດ ໑໒ ຄົນ, ໔ ຄົນນັ້ນນຸເປັນເດັກນ້ອຍທີ່ເກີດໃຫມ່ແລະຈະຕ້ອງມີຜູ້ຊ່ວຍ

ຄ. ອັດຕຣາສ່ວນນີ້ລວມທັງລູກຂອງທ່ານເອງທີ່ມີອາຍຸຕ່ຳກວ່າ ໑໒ ປີ

ງ. ຜູ້ຊ່ວຍ

໑. ຈະຕ້ອງມີອາຍຸຢ່າງຕ່ຳ ໑໔ ປີ

໒. ຖ້າຜູ້ໃດທີ່ມີອາຍຸ ໑໘ ປີຂຶ້ນໄປຈະຕ້ອງມີໃບແປະໂປ້ລາຍມືແລະໃບກວດພະຍາດກ່ຽວກັບໂຣກປອດ

໓. ຜູ້ຊ່ວຍຈະຕ້ອງມີຖ້າທ່ານຫາກມີເດັກນ້ອຍ ໖ ຄົນຂຶ້ນໄປຢູ່ໃນສະຖານທີ່.

໔. ເດັກນ້ອຍບໍ່ຄວນປະປ່ອຍໄປຕາມລຳພັງກັບຄົນໃດຄົນນຶ່ງທີ່ມີອາຍຸຕ່ຳກວ່າ໑໘ ປີ ຈະຕ້ອງມີຄົນແທນເວລາທີ່ທ່ານບໍ່ຢູ່

໕. ທ່ານບໍ່ຈຳເປັນຈະຕ້ອງມີໃບອະນຸຍາດ ຖ້າຫາກທ່ານລ້ຽງລູກຂອງທ່ານເອງແລະລູກຂອງອີກຄອບຄົວນຶ່ງ (ບໍ່ເກີນ ໒ ຄອບຄົວລວມທັງຄອບຄົວຂອງທ່ານເອງ.)

໖. ໃບອະນຸຍາດລ້ຽງເດັກນ້ອຍແບບຢູ່ບ້ານເຮືອນຈະບໍ່ອະນຸຍາດໃຫ້ລ້ຽງເດັກນ້ອຍຜູ້ໃດຜູ້ນຶ່ງຕິດຕໍ່ກັນເຖິງ ໒໔ ຊົ່ວໂມງ

ຂ. ໃບອະນຸຍາດລ້ຽງລູກກຳພ້າແຕກຕ່າງກັນກັບໃບອະນຸຍາດລ້ຽງເດັກນ້ອຍທັມມະດາ.

ບົດຮຽນ ທີ່ ໒

## ນິໄສໃຈຄໍຂອງເດັກນ້ອຍ ແຕ່ລະກຸ່ມອາຍຸ

ແບບຝຶກຫັດນີ້ໄດ້ຮັດຂຶ້ນມາ ເພື່ອໃຫ້ທ່ານໄດ້ຄິດເບິ່ງກ່ຽວກັບ ຄວາມປະພຶດຕ່າງໆຂອງເດັກນ້ອຍເກີດໃໝ່ ແລະເດັກນ້ອຍທີ່ຢູ່ໃນຄວາມເບິ່ງແຍງຂອງທ່ານສແດງອອກມາ ຈະເຫັນວ່າບໍ່ມີຄຳຕອບໃດຖືກຕ້ອງ ຫລື ຜິດ. ຈົ່ງໃຊ້ເວລາຈັກ ໒ - ໓ ນາທີເພື່ອອ່ານເບິ່ງຕົວຢ່າງທີ່ຍົກມາ ກ່ອນທີ່ພວກເຮົາຈະສົນທະນາແລກປ່ຽນ ຄວາມຄິດຄວາມເຫັນ ຊຶ່ງກັນແລະກັນ.

| ກຸ່ມອາຍຸ | ຄວາມປະພຶດ | ທ່ານຄວນຈະຮັດແນວໃດ ? |
|---|---|---|
| ເດັກເກີດໃໝ່<br>໐ - ໓ ເດືອນ | ໑. ຫິວບໍ່ເປັນເວລາ, ຄືກັນກັບບໍ່ມີ ລາຍການ ຫລື ເວລາອັນແນ່ນອນ<br>໒. ຮ້ອງໃຫ້ເມື່ອເອົາໄປນອນ ແລະ ເມື່ອເວລາຕື່ນຂຶ້ນ<br>໓. ຢິ້ມເອົາ ແລະ ກວດເບິ່ງໝົດທຸກແນວ ແລະຊອກຫາເອົາຂອງໃໝ່ຢູ່ເລື້ອຍໆ. | ຈັດເວລາປ້ອນເຂົ້າທີ່ປ່ຽນແປງໄດ້ ແຕ່ວ່າຕ້ອງເບິ່ງເອົາໃຈໃສ່ໃຫ້ດີເວລາປ້ອນ. |
| ໓ - ໑໒ ເດືອນ | ໑. ຄານຢູ່ເລື້ອຍໆ ແລະ ມັກຢືນຂຶ້ນແລະຍ່າງ<br>໒. ມັກຍາດກິນເອງ, ຢິ້ມເອົາບ່ວງ<br>໓. ໃຊ້ເວລາສ່ວນຫລາຍ ນັ່ງ ແລະ ຈອບເບິ່ງຜູ້ອື່ນ | ອະນຸຍາດໃຫ້ມີບ່ອນຄືບຄານ ແຕ່ໃນຂອບເຂດທີ່ຈຳກັດ ແລະຢູ່ໃນເຮືອນ ຫລື ສະຖານທີ່ ທີ່ພໍສູດແລວວ່າມີ - ຄວາມປອດພັຍ |
| ໑໒ - ໑໘ ເດືອນ | ໑. ບໍ່ມັກຍ່າງ ຢາກໃຫ້ແຕ່ອູ້ມ<br>໒. ຕໍ່ຕ້ານ (ເຕະແລະຕີ) ບໍ່ຢາກໃຫ້ປ່ຽນ ໄດເປີ້ ແລະຮ້ອງດ້ວຍຄວາມຮ້າຍ | ໃຫ້ພຍາຍາມຍຶດກັ້ນຢ່າງສງົບ ແລະໃຫ້ບອກເດັກນ້ອຍກ່ອນທີ່ຈະລົງມືກະທຳສິ່ງນຶ່ງສິ່ງໃດລົງໄປ, ເທື່ອລະຂັ້ນ - ເທື່ອລະກາວ, ໃຫ້ເດັກນ້ອຍມີໂອກາດ "ຊ່ວຍ" ໃນການປ່ຽນ ໄດເປີ້ ໃຫ້ເດັກດຶກຄືນມາຕ່າງຫາກ. |


ERIC

| ກຸ່ມອາຍຸ | ຄວາມປະພຶດ | ທ່ານຄວນຈະເຮັດແນວໃດ ? |
|---|---|---|
| | ໓. ຢ້ານບໍ່ໄດ້ຢູ່ນຳ ພໍ່ແມ່, ເສັຽອົກເສັຽໃຈເປັນເວລາດົນນານ ພາຍຫລັງທີ່ ພໍ່ແມ່ອອກຈາກບ້ານໄປໃນແຕ່ລະມື້. | |
| <u>TODDLERS</u><br>ເດັກນ້ອຍທີ່ມີອາຍຸ ໑໘ ເດືອນ ຫາ ໓ ປີ. | | |
| ໑໘ - ໒໔ ເດືອນ | ໑. ບໍ່ມັກປັນຂອງຫລິ້ນ ແລະ ຈະເກີດໂມໂຫ ເມື່ອບອກໃຫ້ປັນຂອງຫລິ້ນໃຫ້ໝູ່ | |
| | ໒. ໂຍນຂອງກິນຖິ້ມ ເມື່ອກິນອີ່ມແລ້ວ | ໃຫ້ໂອກາດແກ່ເດັກນ້ອຍໄດ້ໃຊ້ຄວາມພຍາຍາມເຮັດບາງສິ່ງບາງຢ່າງເພື່ອໂຕຂອງເຂົາເຈົ້າເອງ (ຕາມເຫດຕາມຜົລ) ແລະໃຫ້ເວລາພຽງພໍ ທີ່ຈະເຮັດວຽກນັ້ນສຳເຣັດ. |
| | ໓. ຕ້ອງການເຮັດທຸກສິ່ງ ທຸກຢ່າງເພື່ອໂຕເອງ | |
| ໒ - ໓ ປີ | ໑. ເກີດໂມໂຫ ເມື່ອບໍ່ສົມຫວັງ ຫລື ພໍໃຈ | |
| | ໒. ເມື່ອໃຫ້ຮຽນການໃຊ້ຫ້ອງນ້ຳ ຈະມັກຫລິ້ນແລະບໍ່ໃຫ້ຄວາມຮ່ວມມື | |
| | ໓. ຈະບໍ່ຫລິ້ນກັບຄົນອື່ນ ນອກຈາກໝູ່ຄູ່ທີ່ຮັກແພງກັນເທົ່ານັ້ນ | |
| <u>ຕຽມອານຸບານ</u><br>໓ - ໔ ປີ | ໑. ມັກກວນໝູ່ ຍາມໝູ່ຫລິ້ນ | |
| | ໒. ສາຍຕາໄວ ແຕ່ມັກຈະປະຕິບັດຫລືໂຕ້ຕອບຄວາມເວົ້າຊ້າ | |
| | ໓. ເລີ້ມເຮັດເຄື່ອງນຸ່ງປ່ອກ ຫລື ເປື້ອນເປັນປະຈຳ | |



ERIC Full Text Provided by ERIC

| ກຸ່ມອາຍຸ | ຄວາມປະພຶດ | ທ່ານຄວນຈະເຮັດແນວໃດ ? |
|---|---|---|
| ວັຍທີ່ເຂົ້າໂຮງຮຽນ<br>໕ - ໗ ປີ | ໑. ມັກຈະເບິ່ງທີ.ວີ. ແຕ່ເຣື່ອງທີ່ໂຕເອງເລືອກເທົ່ານັ້ນ ແລະບໍ່-ເພື່ອແຜ່ (ປານີປານອມ) ກັບເດັກນ້ອຍຜູ້ອື່ນ.<br><br>໒. ມີຄວາມຮູ້ສຶກ ແລະ ອາຣົມອັນຮຸນແຮງ ຕໍ່ຄວາມຕິຊົມ ແຕ່ກໍ່ເຊົາໄວພາຍຫລັງ.<br><br>໓. ຈົ່ມບໍ່ຢາກໄປໂຮງຮຽນ ແລະຢາກຢູ່ບ່ອນເຮືອນລ້ຽງເດັກນ້ອຍຫລາຍກວ່າ. | |
| ໗ - ໑໒ ປີ | ໑. ເລີ່ມຕົ້ນມາບ່ອນລ້ຽງເດັກນ້ອຍຊ້າລົງ, ຫລັງຈາກເລີກໂຮງຮຽນກໍ່ມາຊ້າລົງ, ມັກຈະທ່ຽວແວ່ຫລິ້ນຢູ່ນຳໝູ່ຢູ່ບ່ອນອື່ນ.<br><br>໒. ບໍ່ມັກເກັບຮັກສາປຶ້ມ ຫລືຂອງຫລິ້ນຂອງໂຮງຮຽນ ແລະ ມັກເຮັດໃຫ້ມັນເສັຽຫາຍ ຍ້ອນຄວາມບໍ່ຣະມັດຣະວັງ.<br><br>໓. ບໍ່ມັກເຮັດວຽກທີ່ໂຮງຮຽນໃຫ້ເອົາມາເຮັດຢູ່ເຮືອນ (ຊຶ່ງພໍ່ແມ່ຢາກໃຫ້ເຮັດ ຫລື ຮຽນ) ມັກຈະອອກໄປຫລິ້ນຢູ່ກາງບ້ານ. | |



ERIC

# ໃບສມັກສຳຫລັບ ຂໍໃບອານຸຍາດ
# ຣັຖຄາລີຟໍເນັຍ



ໃບຄຳຮ້ອງເພື່ອຂໍອານຸຍາດ
ເປີດບໍລິການ ເບິ່ງແຍງເດັກນ້ອຍຢູ່ກັບເຮືອນ

ຄຳແນະນຳ : ໃບຄຳຮ້ອງນີ້ ໃຊ້ສຳຫລັບຜູ້ ຂໍອານຸຍາດເປີດບໍລິການເບິ່ງແຍງເດັກນ້ອຍຢູ່ກັບເຮືອນ. ພິມ ຫລື ຂຽນໃຫ້ອ່ານໄດ້ງ່າຍ.

==========================================================================

## ລາຍຣະອຽດ ກ່ຽວກັບບຸຄົນ

| | |
|---|---|
| ຊື່ | ອາຍຸກາຍ ໑໘ ປີ ☐ ແມ່ນ ☐ ບໍ່ແມ່ນ |
| ທີ່ຢູ່ | |
| | ໂທຣະສັບ |

ຈົດຊື່ຂອງໝົດທຸກຄົນທີ່ຢູ່ໃນເຮືອນ (ຖ້າວ່າເປັນລູກຄ້າ, ຈົດຊື່ນ້ອຍໃຫ້ເຕັມ ແລະຂຽນນາມສະກຸນເປັນຕົວຫຍໍ້) ອາຍຸ ແລະ ຄວາມສັມພັນ. (ຖ້າຫາກເຈ້ຍບໍ່ພໍ ໃຫ້ຂຽນຕໍ່ໃສ່ທາງດ້ານຫລັງ).

| ຊື່ | ອາຍຸ | ຄວາມສັມພັນ |
|---|---|---|
| | | |
| | | |
| | | |
| | | |
| | | |
| | | |
| | | |

## ລາຍຣະອຽດກ່ຽວກັບ ການດຳເນີນງານ

| ຈຳນວນຄົນທີ່ຂໍ (ຈຳນວນລວມ) | ຊ່ວງອາຍຸ ທີ່ຈະບໍລິການ | ວັນ ແລະ ເວລາ ທີ່ທຳການບໍລິການ |
|---|---|---|
| | | |

ພວກ/ຂ້າພະເຈົ້າ ຂໍຮັບຮອງໃນທີ່ນີ້ວ່າ ພວກ/ຂ້າພະເຈົ້າ :

ກ. ມີທັນນະຍາພື້ນທີ່ຈະດຳເນີນງານຕາມມາຕຖານ ທີ່ວາງໄວ້ໃນຂໍ້ບັງຄັບ ແລະ ກົດຣະບຽບຂອງການເປີດບໍລິການ ການເບິ່ງແຍງເດັກນ້ອຍຢູ່ກັບເຮືອນ.

ຂ. ໄດ້ຄັດຕິດມາພ້ອມນີ້ ບັດພິມລາຍມືຂອງ ພວກ/ຂ້າພະເຈົ້າ ແລະ ຂອງຜູ້ໃຫຍ່ທຸກຄົນ ທີ່ອາໄສຢູ່ໃນເຮືອນຂອງຂ້າພະເຈົ້າ ຫລື ຜູ້ທີ່ມາຊ່ວຍເບິ່ງແຍງເດັກເປັນປະຈຳ, ນອກຈາກຜູ້ທີ່ເປັນລູກຄ້າ ມາຮັບການເບິ່ງແຍງເທົ່ານັ້ນ.

ຄ. ໄດ້ຄັດຕິດ ຫລັກຖານການສແດງວ່າ ຜ່ານການຕລອດ ປາສຈາກການເປັນໂຣຄປອດແຫ້ງ ໃນຕລອດປີທີ່ຜ່ານມາ, ຂອງຜູ້ໃຫຍ່ທຸກຄົນ ທີ່ອາສັຍຢູ່ໃນເຮືອນຂອງຂ້າພະເຈົ້າ ຫລື ຜູ້ທີ່ມາຊ່ວຍເບິ່ງແຍງເດັກເປັນປະຈຳ.

ງ. ມີເຄື່ອງ (ບັງ) ມອດໄຟ ແລະ/ຫລື ເຄື່ອງຈັບຄວັນໄຟ ຢູ່ໃນເຮືອນຂອງ ພວກ/ຂ້າພະເຈົ້າ ທີ່ເປີດບໍລິການເບິ່ງແຍງເດັກນ້ອຍຢູ່ກັບເຮືອນ ຊຶ່ງໄດ້ມາຕຖານຂອງ ກົມດັບເພີງຂອງຣັຖ.

ຈ. ຍອມຮັບຜິດຊອບ ທີ່ຈະປະຕິບັດຕາມ ກົດຣະບຽບຂອງ ສຸຂະພາບແລະຄວາມປອດໄພ ແລະ ກົດຂໍ້ບັງຄັບຕ່າງໆຕາມໃບອານຸຍາດ,

ສ. ຈະແຈ້ງໃຫ້ທາງຫ້ອງການ ອອກໃບອານຸຍາດຮູ້ລ່ວງໜ້າ ກ່ອນຈະມີການປ່ຽນແປງຂອງໃບອານຸຍາດ.

ພວກ/ຂ້າພະເຈົ້າ ຂໍໃຫ້ການ ພາຍໃຕ້ກົດໝາຍ ວ່າ ຄຳໃຫ້ການຢູ່ເທິງໃບຮ້ອງຂໍສະບັບນີ້ ແລະ ຢູ່ເທິງເອກະສານທີ່ຈັດຕິດມາ ພ້ອມນີ້ ວ່າເປັນຄວາມສັຈຈິງທຸກປະການ.

ພວກ/ຂ້າພະເຈົ້າ ເຂົ້າໃຈວ່າ ເມື່ອໄດ້ເຊັນຊື່ລົງຂ້າງລຸ່ມນີ້ແລ້ວ ໄດ້ອະນຸຍາດໃຫ້ຫ້ອງການ ອອກໃບອະນຸຍາດ ຕໍ່ອາຍຸຂອງ ໃບອະນຸຍາດຂອງ ພວກ/ຂ້າພະເຈົ້າໄດ້ ຖ້າຫາກວ່າໃນເວລາຈະຕໍ່ອາຍຸນັ້ນ ຄຸນນະສົມບັດແລະກິດຈະ ບຣບຕ່າງໆໄດ້ຖືກຕ້ອງຕາມກົດໝາຍ, ນອກເສັຽຈາກວ່າ ພວກ/ຂ້າພະເຈົ້າ ຈະແຈ້ງໃຫ້ທາງຫ້ອງການອອກໃບ ອະນຸຍາດວ່າ ພວກ/ຂ້າພະເຈົ້າປະສົງຢາກຈະໃຫ້ ໃບອະນຸຍາດນັ້ນສິ້ນສຸດອາຍຸໄປເລີຍ.

| | |
|---|---|
| ລາຍເຊັນ ຂອງຜູ້ຍື່ນຄຳຮ້ອງ | ວັນທີ |
| ລາຍເຊັນ ຂອງຜູ້ຍື່ນຄຳຮ້ອງ | ວັນທີ |



27

ກົດຂໍ້ບັງຄັບຈາກກົດໝາຍວ່າດ້ວຍການປົກຄອງ
ຂອງຣັດຄາລີຟໍເນັຍ:

<u>ຣະບຽບວິໄນ ແລະສິດທິບຸກຄົນ</u>

ຮຽດລີຟ <u>ສິດທິສ່ວນບຸກຄົນ</u>

ບໍ່ວ່າໃຜທີ່ໄດ້ຮັບບໍຣິການຈາກສະຖານທີ່ລ້ຽງເດັກນ້ອຍ ຈະມີສິດທີ່ຈະໄດ້ຮັບການປະຕິບັດຢ່າງມີກຽດ ຮວມທັງຄວາມປອດພັຍ, ສະຖານທີ່, ເຄື່ອງໃຊ້ແລະອຸປະກອນທີ່ຖືກຫລັກອານາມັຍ ແລະສະດວກສະບາຍ.

<u>ຣະບຽບວິນັຍ</u> ຈະຕ້ອງຍຸຕິທັມ, ມີເຫດຜົລ, ໃຊ້ເປັນປະຈຳສະເໝີ ແລະກ່ຽວກັບຄວາມຜິດນັ້ນ.

ເດັກນ້ອຍທີ່ຢູ່ໃນສະຖານທີ່ລ້ຽງເດັກຈະບໍ່ຖືກລົງໂທດທາງຮ່າງກາຍ, ດູຖູກທາງຈິດໃຈຫລື ການລົງໂທດທີ່ໃຫ້ອົດ ຫລືຮົບກວນຕໍ່ການດຳເນີນຊີວິດປະຈຳວັນ ເຊັ່ນ ການກິນ, ການນອນ, ແລະການໃຊ້ຫ້ອງນ້ຳ.

ເຖິງແມ່ນວ່າພໍ່ແມ່ຂອງເດັກນ້ອຍຈະອະນຸຍາດກໍ່ຕາມ ທາງກົດໝາຍບໍ່ອະນຸຍາດໃຫ້ສະຖານທີ່ລ້ຽງເດັກລົງໂທດທາງຮ່າງກາຍ ແກ່ເດັກນ້ອຍໄດ້. ການລົງໂທດທາງຮ່າງກາຍໝາຍເຖິງການຂ້ຽນຕີ, ຕົບ, ຈັບສັ່ນ ຫລືວິທີການອື່ນໆ ໃນລັກສະນະດຽວກັນ.

ພວກຂ້າພະເຈົ້າ ໄດ້ອ່ານແລະເຂົ້າໃຈ ກົດຣະບຽບກ່ຽວກັບ ສິດທິສ່ວນບຸຄົນ ແລະ ຣະບຽບວິໄນ ແລະ ສັນຍາວ່າຈະປະຕິບັດຕາມ. ພວກຂ້າພະເຈົ້າ ສຳນຶກສເມີວ່າການລະເມີດ ຫລື ບໍ່ປະຕິບັດຕາມກົດຣະບຽບດັ່ງກ່າວນີ້ ຈະເປັນຜົລກະທົບໃຫ້ມີການ ຍຶດໃບອານຸຍາດ.

______________________________ ____________________
ລາຍເຊັນ ຜູ້ຮອງຂໍໃບອານຸຍາດ ວັນທີ

______________________________ ____________________
ລາຍເຊັນ ຜູ້ຮອງຂໍໃບອານຸຍາດ ວັນທີ

## ສັນຍາຍິນຍອມ ທີ່ຈະເກັບຮັກສາອາວຸດ ໄວ້ໃນທີ່ປອດໄພ

______________________________

ຊື່ຂອງຜູ້ອຸປັຖັມ/ຮັບລ້ຽງເດັກ

______________________________

ບ່ອນຢູ່

ເພື່ອຄວາມປອດໄພ ແລະ ເປັນການປ້ອງກັນເດັກນ້ອຍທີ່ຢູ່ໃນສະຖານທີ່ລ້ຽງເດັກ ແລະ ເຮືອນທີ່ອຸປັຖັມເດັກ ອາວຸດອັນຕລາຍຕ່າງໆ ຈະຕ້ອງເກັບມ້ຽນໃສ່ລອກກຸນແຈໄວ້. ອາວຸດເຫລົ່ານີ້ ຈະຕ້ອງຖືກໃສ່ກຸນແຈໄວ້ໃນ ຫ້ອງ, ໃນຕູ້, ບ່ອນເກັບເຄື່ອງ ແລະອື່ນໆ. ລູກປືນຈະຕ້ອງເກັບມ້ຽນ ແລະ ໃສ່ກຸນແຈ ແຍກບ່ອນຕ່າງ-ຫາກຈາກ ບ່ອນມ້ຽນປືນ.

ອາວຸດອັນຕລາຍ ມີລວມທັງ, ແຕ່ບໍ່ໄດ້ຫມາຍເຖິງສເພາະປືນເທົ່ານັ້ນ ສິ່ງເຫລົ່ານີ້ ເຊັ່ນວັດຖຸລະເບີດຕ່າງໆ ທີ່ເຮັດລູກປືນ, ລູກປືນ, ແກບໃສ່ລູກປືນ, ຫມໍ້ລະເບີດ ຫລື ບັ້ງກະໂພກ, ສາຍກະນວນລະເບີດ, ຫອກແຫຼງປາ, ປືນຍິງປາ, ງາວ, ມີດ, ຟ້າໃຫຍ່ງ ແຫວສຳຫລັບໃສ່ສັດໃຫຍ່, ທະນູ ແລະ ລູກທະນູທີ່ມີປາຍເປັນເຫລັກ ກໍຖືວ່າເປັນອາວຸດທີ່ມີອັນຕລາຍຄືກັນ.

ຂ້າງລຸ່ມນີ້ ແມ່ນບັນຊີຂອງອາວຸດຕ່າງໆ ແລະ ສະຖານທີ່ເກັບມ້ຽນ :

______________________________ (ຖ້າວ່າບໍ່ມີ, ກໍໃຫ້ຂຽນ "ບໍ່ມີ")

______________________________

______________________________

______________________________

______________________________

ພວກ/ຂ້າພະເຈົ້າ ສັນຍາຍິນຍອມ ວ່າອາວຸດທີ່ກ່າວໄວ້ຂ້າງເທິງນີ້ ຈະເກັບໃສ່ລອກກຸນແຈໄວ້ຢ່າງດີ ແລະ ຈະບໍ່ອາດສາມາດນຳອອກມາໃຊ້ໃນບໍຣິເວັນ ຫລື ຂອບເຂດອ້ອມແອ້ມເຮືອນທີ່ລ້ຽງເດັກ ຫລື ສະຖານທີ່ລ້ຽງເດັກ ຈົນກວ່າຈະໄດ້ຮັບອານຸຍາດຈາກພນັກງານທີ່ເອົາເດັກມາຝາກ ຫລື ພໍ່ແມ່ຂອງເດັກທີ່ເອົາລູກມາຝາກ.

ພວກ/ຂ້າພະເຈົ້າ ຍັງຂໍໃຫ້ສັນຍາ ຕໍ່ໄປອີກວ່າ ເມື່ອໃດຫາກມີອາວຸດເພີ່ມຕື່ມເຂົ້າມາໃນຄວາມຄອບຄອງ ຂອງ ພວກ/ຂ້າພະເຈົ້າແລ້ວ ຈະໄດ້ແຈ້ງໃຫ້ເຈົ້າຫນ້າທີ່ອອກໃບອານຸຍາດໃຫ້ຊາບນຳ.

ເຊັນຊື່ຂອງ ຜູ້ອຸປັຖັມ/ຮັບລ້ຽງເດັກ ______________________ ວັນທີ __________

ເຊັນຊື່ຂອງ ຜູ້ອຸປັຖັມ/ຮັບລ້ຽງເດັກ ______________________ ວັນທີ __________

ເຈົ້າຫນ້າທີ່ ຜູ້ອອກໃບອານຸຍາດ ______________________ ວັນທີ __________

# ແຜນການ ເມື່ອມີເຫດສຸກເສີນ ແລະ ໄພວິບັດເກີດຂຶ້ນ

ຊື່ ______________________ ທີ່ຢູ່ ______________________

ຢ່າງນ້ອຍທີ່ສຸດ, ຢູ່ໃນເຮືອນຈະຕ້ອງມີຄົນໜຶ່ງ ທີ່ມີຄວາມສາມາດ ແລະ ຮັບຜິດຊອບ ສຳລັບການຕິດຕໍ່ກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງກັບເຫດສຸກເສີນ ຢູ່ຕະຫຼອດເວລາ. ຈະຕ້ອງມີລາຍຊື່, ທີ່ຢູ່ ແລະ ໝາຍເລກໂທຣະສັບ ຂອງພໍ່ແມ່ ແລະ ນາຍໝໍປົວແຂ້ວ ຂອງເດັກນ້ອຍແຕ່ລະຄົນໄວ້ ແລະ ພ້ອມທີ່ຈະຫາມາໃຊ້ໄດ້ໃນທັນທີ ທັນໃດ.

(ຣກ0ກ໕)

ສະຖານທີ່ແຕ່ລະບ່ອນ ທີ່ໄດ້ຮັບໃບອານຸຍາດ ຈະຕ້ອງຂຽນແຜນແລະແຕ້ມແຜນຜັງ ທີ່ຈະປະຕິບັດ ເມື່ອມີໄພວິບັດເກີດຂຶ້ນ (ອກ0໒໓) ແລະ ແຜນນັ້ນຈະຕ້ອງປະກອບໄປດ້ວຍສິ່ງເຫຼົ່ານີ້ :

(໑) ລາຍຊື່, ທີ່ຢູ່ ແລະ ໂທຣະສັບ ຂອງເຈົ້າໜ້າທີ່/ສະຖານທີ່ ຫຼື ບຸກຄົນທີ່ກ່ຽວຂ້ອງກັບເຫດສຸກເສີນຈະຕ້ອງມີໄວ້ໃຫ້ພ້ອມ (ຄວນຈະຕິດໄວ້ ຫຼື ເກັບໄວ້ໃກ້ກັບບ່ອນມ້ຽນໂທຣະສັບ). ບັນທຶກ ເລກໂທຣະສັບ ສຸກເສີນ ດັ່ງຕໍ່ໄປນີ້ໄວ້ :

ດັບເພີງ ______________ ຕຳຣວດ ______________

ປ້ອງກັນໄພສົງຄາມ ______________ ໜ່ວຍພະຍາບານ ______________

ຄວບຄຸມຢາເບື່ອ ______________ ອື່ນໆ ______________

(໒) ຈະຕ້ອງບອກໃຫ້ສະມາຊິກທຸກໆຄົນໃນຄອບຄົວ ຫຼື ໃນສະຖານທີ່, ໂດຍສະເພາະເດັກນ້ອຍຜູ້ທີ່ເຂົ້າມາໃໝ່ ໃຫ້ຮູ້ວ່າຈະປະຕິບັດຕົນແນວໃດ ເມື່ອມີເຫດສຸກເສີນເກີດຂຶ້ນ. ການປະຕິບັດນັ້ນລວມຄວາມເຖິງວ່າ ຈະໂທຣະສັບບອກ ແລະ ລາຍງານກົມດັບເພີງແນວໃດ ເມື່ອມີໄຟໄໝ້ເກີດຂຶ້ນ.

(໓) ຈັດບ່ອນສະເພາະຢູ່ນອກສະຖານທີ່ ຫຼື ເຮືອນເພື່ອໂຮມກັນລວມຕົວແຜນ ທີ່ຈະໂຍກຍ້າຍ ແລະ ຄວບຄຸມ ເດັກນ້ອຍໃນກໍຣະນີເກີດໄຟໄໝ້ ຫຼື ເກີດແຜ່ນດິນໄຫວ.

______________________________________________

______________________________________________

______________________________________________

(໔) ຕັ້ງຫຼັກການ ປະຕິບັດເມື່ອມີເຫດສຸກເສີນເກີດຂຶ້ນ ຈະຕ້ອງມີການຝຶກຊ້ອມ ວິທີການໜີໄພ ເພື່ອໃຫ້ເດັກນ້ອຍຮູ້ເຖິງຄວາມຈຳເປັນທີ່ຈະຕ້ອງຮຽນຮູ້ ແລະ ຝຶກຊ້ອມວິທີການທີ່ຈະອອກຈາກສະຖານທີ່ ແລະ ອາຄານ ຢ່າງວ່ອງໄວ ແລະ ບໍ່ຫຼົບເຂົ້າໄປໃນອີກ ຈົນກວ່າຈະໄດ້ຮັບຄຳສັ່ງຈາກຜູ້ທີ່ຮັບຜິດຊອບ ຈະຕ້ອງແອບຊ້ອມເດັກນ້ອຍ ຢ່າງຕ່ຳທຸກໆ ໖ ເດືອນ ເພື່ອເຂົາຈະໄດ້ປະຕິບັດໂດຍຕາມຫຼັກການທີ່ວາງໄວ້ ຢ່າງອັດຕະໂນມັດ ເມື່ອມີເຫດເກີດຂຶ້ນ.

(ກ) ບັນທຶກ ວັນທີແລະເວລາ ຂອງການຝຶກຊ້ອມໄວ້ ເພາະຜູ້ກວດກາ ໃບອານຸຍາດ ຈະກວດເບິ່ງເມື່ອເວລາເພິ່ນໄປຢ້ຽມຢາມ ແຕ່ລະບ່ອນ.

ການຝຶກຊ້ອມ ໑. ______________ ໒. ______________

໓. ______________ ໔. ______________

໕. ______________ ໖. ______________

30



ERIC

(໒) ຫລັກການປະຕິບັດເມື່ອເກີດໄຟໄຫມ້ : ______________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

(໓) ຫລັກການປະຕິບັດເມື່ອເກີດແຜ່ນດິນໄຫວ :

______________________________________________________________

______________________________________________________________

______________________________________________________________

______________________________________________________________

(໔) ຂຽນແຜນຜັງເຮືອນຂອງທ່ານໃສ່ດ້ານຫລັງຂອງແບບຟອມນີ້. ບອກເຖິງທາງຫລົບຫນີ ຂອງແຕ່ລະຫ້ອງ ແລະ/ຫລື ແຕ່ລະຊັ້ນ. ແຜນຜັງບອກເຖິງທາງຫລົບໄພ ຄວນຈະຕິດໄວ້ຢູ່ໃນເຮືອນ.

ເຫັນດີເຫັນຊອບໂດຍ : ______________________________ ວັນທີ່ ______________

ຜູ້ກວດກາ ໃບອານຸຍາດ

31

ການເບິ່ງແຍງເດັກນ້ອຍ ຢູ່ກັບເຮືອນ
ຄຳໃຫ້ການບັນທຶກ ຄະດີທາງອາຊະຍາກັມ

ຄຳແນະນຳ :

ທຸກຄົນທີ່ອາຍຸ ໑໘ ປີຂຶ້ນໄປ ທີ່ອາໄສຢູ່ໃນເຮືອນທີ່ຈະຂໍເປັນບ່ອນເບິ່ງແຍງເດັກ ຫລືວ່າເຮັດ ການເປັນຜູ້ເບິ່ງ-ແຍງເດັກ ຫລື ເປັນຜູ້ຊ່ວຍໃນການປະຕິບັດງານນີ້ ຈະຕ້ອງປະກອບແບບຟອມນີ້ ແລະ ສົ່ງໄປຍັງຫ້ອງການທີ່ອອກໃບອະນຸຍາດ ພ້ອມກັບບັດພິມລາຍມືຂອງຜູ້ກ່ຽວດ້ວຍ.

---

ທ່ານເຄີຍຕ້ອງໂທດຄະດີທາງອາຊະຍາກັມ, ນອກເໜືອຈາກ ການລ່ວງລະເມີດກົດຈະລາຈອນສະຖານເບົາ ຊຶ່ງຖືກປັບໃໝ $ ໕໐.໐໐ ຫລື ຕ່ຳກວ່ານັ້ນ ບໍ່ ?

☐ ເຄີຍ ☐ ບໍ່ເຄີຍ

ຖ້າເຄີຍ, ກະຣຸນາຂຽນ ແລະ ຊີ້ແຈງເຖິງຂະນິດແລະສະຖານະການຂອງໂທດນັ້ນໆແລ້ວ ເຊັນຊື່ ແລະ ສົ່ງໄປຍັງ ຫ້ອງການທີ່ອອກໃບອະນຸຍາດ.

ຂ້າພະເຈົ້າຂໍໃຫ້ການ ຍອມຮັບໂທດຕາມກົດໝາຍ ວ່າ ຂ້າພະເຈົ້າໄດ້ອ່ານ ແລະ ເຂົ້າໃຈຂໍ້ຄວາມທີ່ໄດ້ຢູ່ເຈັ້ຍແຜ່ນນີ້ ແລະຄຳຕອບພ້ອມດ້ວຍເອກກະສານທີ່ຄັດຕິດມາພ້ອມນີ້ ລ້ວນແລ້ວແຕ່ເປັນຄວາມຈິງ ແລະ ຖືກຕ້ອງ.

| ລາຍເຊັນ | ວັນທີ |
| --- | --- |

ປະກາດ

## ສິດທິ ຂອງຜູ້ປົກຄອງ

໑. ພໍ່ແມ່ ຫລື ຜູ້ປົກຄອງ ທີ່ມີບັດປະຈຳຕົວ ສະແດງວ່າເປັນຜູ້ປົກຄອງຂອງເດັກນ້ອຍແທ້ນັ້ນ ຈະມີສິດທີ່ຈະເຂົ້າໄປ ແລະກວດກາເບິ່ງສະຖານທີ່ ບ່ອນລ້ຽງເດັກທີ່ລູກເຂົາເຈົ້າຖືກລ້ຽງຢູ່ນັ້ນໄດ້ ໂດຍບໍ່ຈຳເປັນຈະຕ້ອງ ບອກໃຫ້ ຜູ້ຮັບລ້ຽງເດັກນ້ອຍຮູ້ລ່ວງໜ້າກໍໄດ້. ແຕ່ການເຂົ້າໄປ ແລະ ກວດກາເບິ່ງສະຖານທີ່ ຈະເຮັດໄດ້ໃນເວລາ ຫລື ຊົ່ວໂມງທີ່ທຳງານປົກກະຕິ ຫລື ໃນຂະນະທີ່ລູກຂອງທ່ານ ກຳລັງຢູ່ໃນຄວາມຄຸ້ມຄອງຂອງສະຖານທີ່ເທົ່ານັ້ນ.

໒. ກົດໝາຍ ຫ້າມບໍ່ໃຫ້ມີການເລືອກຊັ້ນວັນນະ ຫລື ກັ່ນແກ້ງ (ແກ້ແຄ້ນ) ເດັກນ້ອຍຜູ້ໃດຜູ້ນຶ່ງ ຫລື ພໍ່ແມ່/ຜູ້ປົກຄອງຂອງເດັກນ້ອຍ ເມື່ອເຂົາເຈົ້າໃຊ້ສິດທິ ເຂົ້າມາກວດເບິ່ງສະຖານທີ່.

໓. ກົດໝາຍ ບົ່ງໄວ້ວ່າ ພໍ່ແມ່ຫລືຜູ້ປົກຄອງຂອງເດັກນ້ອຍ ຈະຕ້ອງໄດ້ຮັບຄຳຊີ້ແຈງເຖິງ ສິດທິຂອງເຂົາເຈົ້າ ໃນການເຂົ້າມາ ແລະ ກວດກາເບິ່ງສະຖານທີ່ ບ່ອນລ້ຽງເດັກ (ລູກ) ຂອງເຂົາເຈົ້າ.

໔. ກົດໝາຍ ບົ່ງໄວ້ວ່າ ໃຫ້ຕິດປະກາດສຳລັບສິດທິຂອງພໍ່ແມ່ທີ່ຈະເຂົ້າໄປ ແລະ ກວດກາເບິ່ງສະຖານທີ່ບ່ອນລ້ຽງເດັກນ້ອຍໄດ້ ໄວ້ບ່ອນທີ່ ພໍ່ແມ່ຫລື ຜູ້ປົກຄອງຫລຽວເຫັນໄດ້ງ່າຍ.

໕. ກົດໝາຍ ໄດ້ອານຸຍາດໃຫ້ ຜູ້ທີ່ຮັບຜິດຊອບໃນສະຖານທີ່ ບ່ອນລ້ຽງເດັກນ້ອຍປະຕິເສດ ບໍ່ອານຸຍາດໃຫ້ພໍ່ແມ່ ຫລື ຜູ້ປົກຄອງຂອງເດັກນ້ອຍເຂົ້າມາໃນສະຖານທີ່ ບ່ອນລ້ຽງເດັກ ໃນກໍຣະນີດັ່ງກ່າວ :

ກ. ພໍ່ແມ່ ຫລື ຜູ້ປົກຄອງ ປະພຶດຕົວໃນທາງທີ່ຈະເປັນໄພ ຕໍ່ເດັກນ້ອຍທີ່ຢູ່ໃນສະຖານທີ່ບ່ອນຮັບລ້ຽງເດັກນ້ອຍ ຫລືວ່າ,

ຂ. ຜູ້ທີ່ຕ້ອງການຢາກຈະເຂົ້າມາ ໃນສະຖານທີ່ນັ້ນ ບໍ່ແມ່ນຜູ້ປົກຄອງທີ່ຖືກຕ້ອງຕາມກົດໝາຍ ແລະ ທາງສະຖານທີ່ ໄດ້ຮັບຄຳຂໍຮ້ອງເປັນລາຍລັກອັກສອນ ຈາກພໍ່ແມ່ ຫລື ຜູ້ປົກຄອງທີ່ຖືກຕ້ອງຕາມກົດໝາຍ ບໍ່ອານຸຍາດໃຫ້ ຜູ້ປົກຄອງ ທີ່ບໍ່ຖືກຕ້ອງຕາມກົດໝາຍ ເຂົ້າພົບເດັກນ້ອຍນັ້ນໄດ້.

- - - - - - - - - - - - - - - ຕັດບ່ອນນີ້ - - - - - - - - - - - - - - - - - - - -

ແບບຟອມນີ້ ໃຫ້ເກັບມ້ຽນໄວ້ ຢູ່ໃນແຟ້ມບັນທຶກຂອງເດັກນ້ອຍ.

## ສິດທິ ຂອງພໍ່ແມ່

ໜັງສືສະບັບນີ້ ໄດ້ສະແດງໃຫ້ຮູ້ວ່າ ນອກ/ຂ້າພະເຈົ້າ ຜູ້ເປັນພໍ່ແມ່ ຫລື ຜູ້ປົກຄອງຂອງ ____________________ (ຊື່ເດັກນ້ອຍ) ໄດ້ຮັບສຳເນົາ ໃນປະກາດກ່ຽວກັບ ສິດທິ ຂອງພໍ່ແມ່ ຈາກເຈົ້າຂອງສະຖານທີ່ ຫລື ຜູ້ຕາງໜ້າ ສະຖານທີ່ບ່ອນລ້ຽງເດັກທີ່ມີຊື່ວ່າ ____________________ (ຊື່ສະຖານທີ່ບ່ອນລ້ຽງເດັກ)

____________________ (ລາຍເຊັນຂອງພໍ່ແມ່/ຜູ້ປົກຄອງ)

____________________ (ວັນທີ)



33

## ໃບອານຸຍາດ ເພື່ອຮັບການຮັກສາໃນຍາມສຸກເສີນ

ຊື່ເດັກນ້ອຍ : ______________________

ຂ້າພະເຈົ້າ, ຜູ້ທີ່ເຊັນຊື່ຢູ່ຂ້າງລຸ່ມນີ້ ໄດ້ມອບເດັກນ້ອຍ ຜູ້ທີ່ມີຊື່ຢູ່ຂ້າງເທິງນີ້ ຊຶ່ງຢູ່ພາຍໃຕ້ຄວາມເບິ່ງແຍງ ຂອງ (ຊື່ ) ______________________.

ຂ້າພະເຈົ້າ ໄດ້ອານຸຍາດ ໃຫ້ຜູ້ທີ່ມີຊື່ ຢູ່ຂ້າງເທິງນີ້ ໄດ້ຍິນຍອມ ໃຫ້ເດັກນ້ອຍດັ່ງກ່າວ ນີ້ໄດ້ຮັບການ ຊ່ອງໄຟຟ້າ, ການວາງຢາສລົບ, ການວິຈັຍຢາຕ່າງໆ, ການຜ່າຕັດ, ການຜ່າຕັດແຂ້ວ ຫລື ການຮັກສາປິ່ນປົວຕ່າງໆ ທີ່ທາງທ່ານໝໍ ຈະປະຕິບັດຕໍ່ເດັກນ້ອຍ.

ໃບສຳເນົາສະບັບນີ້ ກໍໃຊ້ໄດ້ ເຊັ່ນດຽວກັນກັບ ຕົ້ນສະບັບ.

ວັນທີ ______________________ (ຊື່) ______________________

______________________
(ຄວາມສຳພັນ)



ERIC Full Text Provided by ERIC

# ລາຍລະອຽດຂອງການພິມລາຍມື

ຜູ້ໃຫຍ່ທຸກໆຄົນ ທີ່ໄດ້ອາໄສຢູ່ໃນເຮືອນຈະຕ້ອງໄດ້ມີການ ແປະໂປ້ລາຍມື ອັນນີ້ ເພື່ອຈະນຳໄປປະຕິບັດການ ສອບສວນປະວັດການບັນທຶກຄະດີອາດຊະຍາກັມ. ບັດພິມລາຍມື ນຶ່ງ (໑) ໃບເປັນສິ່ງທີ່ຈຳເປັນສຳຫລັບ ຜູ້ໃຫຍ່ແຕ່ລະຄົນ. ສຳຫລັບການພິມລາຍມືນັ້ນ ທ່ານຄວນຈະເລືອກໄປບ່ອນທີ່ຢູ່ໃກ້ກັບບ້ານຂອງທ່ານ ຫລື ຈະໄປຫາກົມ-ຕຳຣວດກໍໄດ້ ແຕ່ຈະຕ້ອງໄດ້ເສັຽຄ່າທຳນຽມ ພວກທ່ານຈະໄປຫາ ທີ່ບ່ອນຫ້ອງການອອກໃບອານຸຍາດນັ້ນກໍໄດ້ (ເບິ່ງແຜນທີ່ຂ້າງລຸ່ມນັ້ນ) ບ່ອນນັ້ນບໍ່ໄດ້ເສັຽຄ່າທຳນຽມ ແຕ່ວັນຈັນ ຫາ ວັນສຸກ ເລີ້ມແຕ່ ໙:໐໐ ໂມງເຊົ້າ ຫາ ໔:໓໐ ໂມງແລງ. ໃບຄຳຮ້ອງຂອງທ່ານ ແລະ ໃບພິມລາຍມື<u>ຈຳເປັນຕ້ອງ</u> ໄດ້ສົ່ງເຂົ້າພ້ອມກັນ. ກະຣຸນາຕລອດເບິ່ງວ່າ ລາຍລະອຽດທັງໃນທາງໜ້າ ແລະ ດ້ານຫລັງໄດ້ຂຽນປະກອບຖືກຕ້ອງ ແລະ ຄົບຖ້ວນໝົດທຸກອັນ. ແລະຈົ່ງເຊັນຊື່ພວກທ່ານລົງໃສ່.

ພັຍທັມມະຊາດ

ໃນ

ເຂດກຳແພງ ເມືອງ ແຊນດິເອໂກ

ໄຟໄໝ້

ແຜ່ນດິນໄຫວ

ນ້ຳຖວມ

ກຳແພງເມືອງ ແຊນດິເອໂກ
ອົງການກ່ຽວກັບການຕຽມພ້ອມສຳຫລັບ
ພັຍທັມມະຊາດ
5201 Ruffin Rd. Suite Q
San Diego, CA. 92123
(619) 565-3490

San Diego County
Office of Disaster Preparedness
5201 Ruffin Rd. Suite Q
San Diego, CA. 92123
(619) 565-3490

ໄຟ, ແຜ່ນດິນໄຫວ ແລະ ນ້ຳຖ້ວມ ທັງສາມຢ່າງນີ້ເປັນໄພທັມມະຊາດ ທີ່ມັກເກີດຂຶ້ນເລື້ອຍໆໃນເຂດກຳແພງນະຄອນ ເມືອງແຊນດີເອໂກ ໜັງສືສະບັບນີ້ ມີຂໍ້ຄວາມສຳຄັນທີ່ທ່ານຄວນຈະປະຕິບັດ ຕາມໃນເມື່ອມີໄພທັມມະຊາດ ອັນໃດອັນນຶ່ງທີ່ໄດ້ກ່າວມານີ້ເກີດຂຶ້ນ,

<u>ໄຟ.</u>

ໃນເຂດກຳແພງເມືອງແຊນດີເອໂກ ໄຟໄໝ້ປ່າ ແລະ ທົ່ງຫຍ້າ ເປັນໄພອັນຮ້າຍແຮງ ໃນຍາມຣະດູຮ້ອນ.

<u>ຈະເຮັດວິທີໃດ ຖ້າຫາກເກີດມີໄຟໄໝ້ຂຶ້ນ ຢູ່ໃນເຮືອນຂອງທ່ານ ?</u>

ຖ້າຫາກທ່ານສົງໄສວ່າ ມີບ່ອນໃດ ບ່ອນນຶ່ງຢູ່ໃນເຮືອນຂອງທ່ານ ເກີດໄຟໄໝ້ຂຶ້ນ. <u>ຫ້າມ</u> ເປີດປະຕູທາງຂ້າງໃນອອກໄປເບິ່ງ. ກ່ອນທີ່ທ່ານຈະເປີດໃຫ້ເອົາຝາມືຍາຍເບິ່ງວ່າປະຕູນັ້ນຮ້ອນ ຫລື ບໍ່? ຖ້າຫາກວ່າປະຕູນັ້ນຮ້ອນ ຫລືວ່າເຫັນມີຄວັນໄຟລອດເຂົ້າມາຕາມຂອບປະຕູນັ້ນແລ້ວ <u>ຫ້າມ</u>ເປີດປະຕູເດັດຂາດ ເພາະທ່ານຈະໄດ້ຮັບອັນຕລາຍ ຈາກຄວັນໄຟ, ຄວາມຮ້ອນ ຫລືວ່າແປວໄຟ.

ຖ້າຫາກ ທ່ານບໍ່ມີຄວາມສາມາດມອດໄຟດ້ວຍຕົນເອງແລ້ວ ໃຫ້ໜີອອກໄປຫາບ່ອນປອດໄພ ແລະ ລາຍງານກົມດັບເພີງ ທັນທີທັນໃດ.

໑. ໃຫ້ຂຽນນ້ຳເບີໂທຣະສັພຂອງ ກົມດັບເພີງໄວ້ຢູ່ໃກ້ກັບໂທຣະສັພຂອງທ່ານ.
໒. ໃຫ້ລາຍງານ ບ່ອນຢູ່ໃຫ້ຖືກຕ້ອງ ແກ່ເຈົ້າໜ້າທີ່ກົມດັບເພີງ
໓. ໃຫ້ກວດເບິ່ງເຄື່ອງມື ແລະ ເຄື່ອງໃຊ້ທີ່ໃຫ້ຄວາມຮ້ອນຢ່າງນ້ອຍ ເທື່ອນຶ່ງຕໍ່ປີ.
໔. ໃຫ້ກວດເບິ່ງສາຍໄຟ Extension Cord ວ່າຂນາດຖືກຕ້ອງດີ ຫລື ບໍ່ ?
໕. ໃຫ້ເອົາ ກັບໄຟໄວ້ບ່ອນທີ່ເດັກນ້ອຍ ຍື່ນເອົາບໍ່ເຖິງ.
໖. ຢ່າໃຫ້ເດັກນ້ອຍ ລົງໄປຫລິ້ນຢູ່ຮອມມູເຕົາ.
໗. ໃຫ້ມ້ຽນນ້ຳມັນ ຫລື ນ້ຳຢາ ທີ່ຕິດໄຟໄວ ໄວ້ຢູ່ບ່ອນທີ່ປອດໄພ.
໘. ຫ້າມສູບຢາ ຢູ່ໃນບ່ອນນອນ.

ຖ້າຫາກ ໄຟໄໝ້ເສື້ອຜ້າຂອງທ່ານ ຢ່າໄດ້ແລ່ນ ໃຫ້ເອົາຜ້າຫົ່ມ ຫລື ຜ້າພົມນ້ອຍ ຫົ່ມຮັດຕົວແລ້ວນອນລົ້ມກິ້ງໄປ ກິ້ງມາ ເພື່ອໃຫ້ໄຟມອດ.

ຖ້າຫາກທ່ານຈະເຂົ້າໄປຊ່ວຍຄົນ ຢູ່ໃນຫ້ອງທີ່ເກີດໄຟໄໝ້ ໃຫ້ເອົາຜ້າເຊັດຕົວຜືນໃຫຍ່ ຫລື ຜ້າເຊັດໜ້າໄປຈຸ່ມໃສ່ນ້ຳໃຫ້ມັນປຽກ ມາປົກໜ້າຂອງທ່ານເສັຽກ່ອນ ແລ້ວຈຶ່ງຄ່ອຍໆເປີດປະຕູອອກຢ່າງຣະມັດຣະວັງ <u>ໃຫ້ໝູບລົງຕ່ຳ ຈົນໃກ້ພື້ນເຮືອນ ຕ່ຳເທົ່າໃດແຫລວເປັນການດີ</u> ແລ້ວຄ່ອຍໆຄານເຂົ້າໄປຊ່ວຍເອົາຄົນຜູ້ນັ້ນອອກມາຈາກຫ້ອງ ແລະ ໃນຂນະທີ່ເອົາຄົນເຈັບ ອອກມາຈາກຫ້ອງນັ້ນ ກໍຈົ່ງພຍາຍາມກົ້ມລົງ ໃຫ້ຕິດພື້ນເຮືອນໄວ້ເຊັ່ນດຽວກັນ.

ຖ້າຫາກທ່ານພົບເຫັນ ທັນເວລາຕອນທີ່ໄຟກຳລັງເລີ້ມໄໝ້ນັ້ນ ແລະ ຄິດວ່າຈະສາມາດຄວບຄຸມ (ມອດ) ໄວ້ໄດ້ ໃຫ້ທ່ານຈົ່ງມອດຕາມວິທີ ທີ່ຢູ່ຂ້າງລຸ່ມນີ້ :

໑. ໃຫ້ມອດໄຟ ທີ່ເກີດຈາກໄຟຟ້າ ຫລື ນອກນ້ຳມັນຕ່າງໆ ໂດຍການເອົາຜົງເບັກກິ້ງໂຊດາ ( Baking soda ) ດິນຊາຍ, ຫລືວ່າ ດິນທັມມະດາ ວ່ານໃສ່ບ່ອນເກີດໄຟໄໝ້ນັ້ນ.

ກ. ຫ້າມບໍ່ໃຫ້ໃຊ້ແປ້ງ ( Flour ) ມອດໄຟ ເພາະມັນຈະເຮັດໃຫ້ຮະເບີດ.
ຂ. ຫ້າມບໍ່ໃຫ້ໃຊ້ນ້ຳມອດໄຟ ທີ່ເກີດຈາກນ້ຳມັນ ເພາະມັນຈະເຮັດໃຫ້ໄຟໄໝ້ລາມອອກໄປ.
ຄ. ຫ້າມບໍ່ໃຫ້ ເທນ້ຳໃສ່ໄຟ ຈົນກວ່າຈະໄດ້ມອດສວິດໄຟໃຫຍ່ ຫລື ສວິດຢູ່ກ່ອງ ຟິວບັອກ ( Fuse Box )

໒. ໃຫ້ມອດໄຟທີ່ໄໝ້ເຈ້ຍ, ໄໝ້ຜົມ ຫລືວ່າແນວອື່ນໆ ທີ່ບໍ່ແມ່ນນ້ຳມັນໂດຍການໃຊ້ນ້ຳສາດໃສ່ ບ່ອນຕົ້ນໄຟທີ່ເກີດຂຶ້ນ.

<u>ໄຟໄໝ້ຢູ່ນອກເຮືອນ (ເດີ່ນ)</u>

ຖ້າຫາກວ່າຈັບສິນ ຫລື ບ້ານເຮືອນຂອງຄົນຂ້າງບ້ານເກີດໄຟໄໝ້ຂຶ້ນ ໃຫ້ໃຊ້ສາຍຢາງທີດພັກ ທີດ-ຫລັງຄາເຮືອນ ແລະ ບ່ອນຈອດຣົຖຂອງທ່ານໃຫ້ປຽກ ເພື່ອປ້ອງກັນ ໄຟລາມໄໝ້ມາເຖິງເຮືອນຂອງທ່ານ.

ຖ້າຫາກ ໄຟໄໝ້ເຮືອນ ບ່ອນຈອດຣົຖ ຫລື ອາຄານອື່ນໆ ໃຫ້ຮ້ອງໄປຫາກົມດັບເພີງໂດຍດ່ວນ ແລ້ວຈຶ່ງພຍາຍາມມອດໄຟດ້ວຍຕົນເອງ ໂດຍໃຊ້ສາຍຢາງທີດພັກ (ເປັນການດີທີ່ສຸດ ທີ່ທ່ານມີສາຍຢາງທີດພັກ) ທີ່ຍາວພໍທີ່ຈະເຖິງທຸກໆສ່ວນຂອງແຕ່ລະອາຄານ ທີ່ຢູ່ໃນບໍຣິເວັນເຂດບ້ານຂອງທ່ານ.

<u>ໄຟໄໝ້ຕົ້ງຫຍ້າ (ພຸ່ມໄມ້ນ້ອຍໆ)</u>

໑. ຈົ່ງຮັກສາ ຢ່າໃຫ້ມີຂີ້ເຫຍື້ອ ຢູ່ໃນບໍຣິເວັນອ້ອມເຮືອນຂອງທ່ານ.
໒. ໃຫ້ຈອກຫາ ກະສອບປ່ານມຣັບໄວ້ໃຫ້ພຣ້ອມ
໓. ໃຫ້ປູກຕົ້ນ ໄອຊ໌ແປລນທ໌ ( ice plant ) ໄວ້ຢູ່ອ້ອມເຮືອນຂອງທ່ານ ເພາະຕົ້ນໄມ້ຊນິດນີ້ ຈະຊ່ວຍບໍ່ໃຫ້ໄຟລາມໄໝ້ ເຖິງບ້ານເຮືອນຂອງທ່ານໄດ້.
໔. ຖ້າຫາກເກີດມີໄຟໄໝ້ ບ້ານເຮືອນທີ່ຢູ່ຂ້າງຄຽງເຮືອນຂອງທ່ານ ຈົ່ງພຍາຍາມເປີດນ້ຳທີດໃສ່ ເດີ່ນບ້ານຂອງທ່ານໃຫ້ປຽກຊຸ່ມໄວ້ ຈົນກວ່າພວກກົມດັບເພີງ ຈະມາຮອດ.
໕. ຖ້າຫາກ ເຈົ້າໜ້າທີ່ກົມດັບເພີງໄດ້ແນະນຳ ໃຫ້ໂຍກຍ້າຍອອກໄປຈາກສະຖານທີ່ ບ່ອນທີ່ເກີດໄຟໄໝ້ ໄປຫາບ່ອນທີ່ປອດພັຍ. ຂໍໃຫ້ທ່ານຈົ່ງພຍາຍາມ ປະຕິບັດຕາມໂດຍຢ່າໄດ້ລັງເລໃຈ.

<u>ແຜ່ນດິນໄຫວ.</u>

ຄາດວ່າ ແຜ່ນດິນໄຫວຄັ້ງໃຫຍ່ (ຮຸນແຮງ) ຈະເກີດຂຶ້ນ ເຖິງແມ່ນວ່າຍັງຈະບໍ່ທັນໄດ້ເຄີຍເກີດຂຶ້ນ ໃນ ໒ - ໓ ປີທີ່ຜ່ານມານີ້ກໍຕາມ. ສອງໃນສາມສ່ວນຂອງແຜ່ນດິນໄຫວ ທີ່ຈະເກີດຂຶ້ນໃນສະຫະຣັຖອະເມຣິການັ້ນ ມີສູນກາງຢູ່ຕາມຊາຍຝັ່ງມະຫາສມຸດປາຊີຟິກ ແລະ ສ່ວນຫລາຍແລ້ວ ແມ່ນເກີດຢູ່ຣັຖຄາລິຟໍເນັຽ.

ຮອຍແຕກ Elsinore Fault ເລີ່ມຕົ້ນຈາກເມືອງ Pala ຕິດຕໍ່ລົງໄປຮອດທາງທິດຕາເວັນອອກສຽງໃຕ້ຂອງກຳແພງນະຄອນ ຢູ່ໃກ້ກັບເມືອງ Boulevard ແລະຮອຍແຕກເລົ່ານີ້ ຍັງໄດ້ມີ-ການເຫັນງຕົງ ແລະ ມີການເຄື່ອນໄຫວຢູ່ຕລອດເວລາ ໂດຍສະເພາະໃນຣະວາງ ໓໒ ໄມລ໌ ທາງຈາກເມືອງ Julian ຊຶ່ງຢູ່ທາງທິດຕາເວັນອອກສຽງເໜືອ ຂອງເມືອງ Pala .

ຮອຍແທງ Rose Canyon Fault ມາຈາກທະເລ ຂຶ້ນຝັ່ງໃກ້ກັບອ່າວຂອງ La Jolla Cove ແລ້ວຕໍ່ລົງມາທາງໃຕ້ ຈົນກົ່ງໄປຫາ Old Town ເປັນຮອຍແທງທີ່ມີການເໜັງຕົວຢູ່ ແລະຄາດວ່າຈະເປັນຈຸດອັນຕະລາຍແຫ່ງໜຶ່ງໃນອະນາຄົດອັນໃກ້ນີ້.

ນັກທໍຣະນີວິທະຍາ (ຜູ້ຄົ້ນຄວ້າກ່ຽວກັບເຣື່ອງດິນ) ບາງຄົນຍັງເຊື່ອວ່າ ຮອຍແທງ Rose Canyon Fault ນີ້ເປັນສ່ວນໜຶ່ງຊຶ່ງຕໍ່ອອກມາຈາກ ຮອຍແທງ Inglewood-Newport Fault ແລະ ດັ່ງນັ້ນມັນອາດຈະຕໍ່ລົງໄປທາງໃຕ້ ໂດຍຜ່ານອ່າວເມືອງ San Diego ລົງໄປຮອດແດນຂອງປະເທດ Mexico.

ຮອຍແທງຂອງ San Jacinto Fault ກໍເປັນຮອຍແທງທີ່ຍັງມີການເຄື່ອນໄຫວຢູ່ເຊັ່ນດຽວກັນ ຮອຍແທງນີ້ ຕໍ່ໄປທາງທິດຕາເວັນອອກສ່ຽງໃຕ້ຣະຫວ່າງເມືອງ Borrego Springs ກັບ Clark Lake ສຳຫລັບຮອຍແທງຂອງ San Andreas Fault ຊຶ່ງເປັນຮອຍແທງທີ່ໃຫຍ່ ແລະ ເຄີຍສ້າງຄວາມເສັຍຫາຍໃຫ້ເມືອງ San Francisco ໃນປີ ໑໙໐໖. ຮອຍແທງເລື່ອນໄດ້ຜ່ານເມືອງ Spring Valley ແລ້ວຕໍ່ຂຶ້ນໄປທາງພາກເໜືອຊຶ່ງຢູ່ໃກ້ກັບເມືອງ Onofre ຢູ່ທາງພາກເໜືອຂອງ ກຳແພງນະຄອນ ແຊນດິເອໂກ ກໍມີຮອຍແທງຢູ່ ໓ - ໔ ຮອຍ ທີ່ຍັງມີການເໜັງຕີງແລະເຄື່ອນໄຫວຢູ່ຕລອດເວລາ.

ກົມໂຍທາທິການຂອງຣັຖ ໄດ້ຄົ້ນພົບວ່າ ປາກົດວ່າຍັງມີປະມານ ໒໐ ຮອຍແທງທີ່ເປັນເສັ້ນຂະນານແລ່ນໄດວກັນ ຢູ່ຕາມເຂດທາງນອກແລະທາງໃນ ຂອງກຳແພງນະຄອນເມືອງ ແຊນດິເອໂກ. ແຜ່ນດິນໄຫວທີ່ໄດ້ເກີດຂຶ້ນຢູ່ເມືອງ Long Beach ໃນວັນທີ ໑໐ ເດືອນມີນາ ໑໙໓໓ ໄດ້ເຮັດໃຫ້ມີຄົນຕາຍຍອນ ໑໒໐ ຄົນ ແລະ ສ້າງຄວາມເສັຍຫາຍຄິດເປັນເງິນປະມານ $ ໔໘ ລ້ານ ແລະ ແຜ່ນດິນໄຫວທີ່ເກີດຂຶ້ນແຮງກ່ອນນັ້ນ ແມ່ນຢູ່ Imperial Valley ເມື່ອວັນທີ ໑໘ ເດືອນພຶສພາ ໑໙໔໐ ໄດ້ມີຄົນຕາຍຫລາຍຄົນແລະສ້າງຄວາມເສັຽຫາຍປະມານ $ ໗.໒ ລ້ານ. ໃນວັນທີ ໒໙ ເດືອນກໍຣະກະດາ ໑໙໔໐ ຢູ່ໃນທົ່ງໃກ້ກັບເມືອງ Calipatria ໄດ້ເກີດແຜ່ນດິນໄຫວອີກ ສ້າງຄວາມເສັຍຫາຍປະມານ $ ໔໐,໐໐໐. ໃນວັນທີ ໙ ເດືອນກຸມພາ ໑໙໗໑ ໄດ້ເກີດມີແຜ່ນດິນໄຫວຂຶ້ນອີກ ຢູ່ເມືອງ San Fernando ມີຄົນຕາຍ ໔໘ ຄົນ ແລະຄ່າເສັຍຫາຍ $ ໔໐໐ ລ້ານ.

ຄວນຈະເຮັດແນວໃດ ?

ຖ້າຢູ່ທາງໃນເຮືອນ - ກໍຈົ່ງຢູ່ທາງໃນເຮືອນ, ໃຫ້ລອດເຂົ້າກ້ອງໂຕະ ຫລືວ່າ ຕັ່ງຍາວ ຫລືວ່າໃຫ້ຢູ່ບ່ອນທາງເຂົ້າປະຕູ, ຫ້ອງປະຊຸມ ຫລືວ່າ ຢືນອີງຝາທາງໃນ ຢ່າເຂົ້າໄປໃກ້ປ່ອງຢ້ຽມທີ່ມີແວ່ນແກ້ວ ຫລື ດອກໄຟທີ່ຫ້ອຍລົງມາ ຢ່າແລ່ນອອກໄປທາງນອກບ້ານ ເພາະທ່ານອາດຈະຖືກສິ່ງຂອງທີ່ຕົກຫລົ່ນລົງມາທັບ ຫລື ຈະຖືກສາຍໄຟທີ່ຍັງມີໄຟຟ້າແຮງສູງຕົກລົງມາໃສ່ຕົວທ່ານ.

ຖ້າທ່ານຢູ່ນອກເຮືອນ - ໃຫ້ໜີອອກໄກຈາກເຮືອນສູງ ຫລື ອາຄານຕ່າງໆ ໄປຢູ່ເດີ່ນທີ່ບໍ່ມີຕຶກ ຫລືເປັນເດີ່ນໂລ່ງ ຢ່າເຂົ້າໄປໃກ້ກຳແພງຮົ້ວສູງ, ເສົາໄຟຟ້າ ແລະ ສາຍໄຟທີ່ຕົກລົງມາ ເພາະອາດຈະໄດ້ຮັບອັນຕະລາຍອັນຮ້າຍແຮງ ຫລື ເຖິງແກ່ຊີວິດກໍເປັນໄດ້.

ບໍ່ຕ້ອງມອດໄຟຟ້າ ຫລື ອັດທໍ່ນ້ຳ ນອກຈາກສາຍໄຟ ຫລື ທໍ່ນ້ຳຖືກເສັຽຫາຍ ຖ້າຫາກວ່າມີທໍ່ນ້ຳແຕກ ຫລື ສາຍໄຟຂາດລົງມາ.

<u>ໃຫ້ປະຕິບັດ ດັ່ງຕໍ່ໄປນີ້ :</u>

ກ. ນ້ຳ - ຖ້າຫາກວ່າ ທໍ່ນ້ຳແຕກຢູ່ພາຍໃນບ້ານເຮືອນ, ໃຫ້ອັດນ້ຳຢູ່ບ່ອນທໍ່ໃຫຍ່ ທີ່ຕໍ່ເຂົ້າມາໃສ່ໃນເຮືອນ.

ຂ. ໄຟຟ້າ - ຖ້າຫາກບ້ານເຮືອນ ໄດ້ຕິດຕັ້ງສາຍໄຟຟ້າຢ່າງຖືກຕ້ອງ ອາດຈະບໍ່ມີບັນຫາເກີດຂຶ້ນ ແຕ່ຫາກວ່າ ທ່ານເຊື່ອວ່າມີໄຟຊອດ ໃຫ້ໄຟມອດໄຟຢູ່ໃນກ່ອງວັດແທກໄຟ Meter Box ໂດຍການດຶງສວິດລົງ.

ຄ. ແກັສ - ຖ້າຫາກໄດ້ກິ່ນແກັສ ຫລື ສົງໄສວ່າທໍ່ແກັສ ແຕກຢູ່ໃນບ້ານເຮືອນ ໃຫ້ອັດຢູ່ບ່ອນແທກແກັສ ( Meter ) ແລະ ໃຫ້ຮອງໄປຫາ ບໍລິສັດ ແກັສ ໂດຍດ່ວນ ແລະ ຢ່າໄດ້ກັບຄືນໄປເປີດແກັສ ນັ້ນອີກ.

<u>ນ້ຳຖ້ວມ.</u>

ຢູ່ທາງພາກໃຕ້ຂອງຣັຖ ຄາລີຟໍເນັຽ ນ້ຳຈະບໍ່ຖ້ວມທຸກໆປີ ຄືກັນກັບພາກສ່ວນອື່ນໆບາງບ່ອນຊຶ່ງຢູ່ທາງພາກເໜືອຂອງປະເທດ ແຕ່ເຖິງແນວໃດກໍ່ຕາມ ຜົລການບັນທຶກໄດ້ສແດງໃຫ້ເຫັນວ່າ ນ້ຳອາດຈະຖ້ວມເຂດກຳແພງນະຄອນເມືອງ ແຊນດິເອໂກ ໄດ້.

ໃນປີ ໑໙໗໙ ແລະ ໑໙໘໑ ໄດ້ເກີດນ້ຳຖ້ວຍ ໃນເຂດເມືອງ ແຊນດິເອໂກ ໄດ້ສ້າງຄວາມເສັຍຫາຍອັນຫລວງຫລາຍ.

ໃນປີ ໑໙໘໒ ນ້ຳໄດ້ເກີດຖ້ວມ ບາງສ່ວນຂອງກຳແພງເມືອງ ໄດ້ສ້າງຄວາມເສັຍຫາຍຫລາຍເປັນມູນຄ່າເຖິງ $ ໘00,000.00 ຕາມທ້ອງຖິ່ນຕ່າງໆຂອງເຂດກຳແພງນະຄອນໃນຣະດູຝົນ ອາດຈະມີນ້ຳຖ້ວມຢູ່ຫລາຍໆບ່ອນ.

<u>ຈະປະຕິບັດແນວໃດ ?</u>

ໃຫ້ກວດເບິ່ງເຕົາທີ່ຢູ່ພື້ນເຮືອນເລື້ອຍໆ ໃນຣະຫວ່າງທີ່ຝົນກຳລັງຕົກຫນັກ ເພາະຢ້ານນ້ຳໄຫລຊຶມເຂົ້າມາ ຖ້າຫາກວ່າ ມີນ້ຳໄຫລເຂົ້າມາ ໃຫ້ມອດໄຟ ຢູ່ບ່ອນໄຟນ້ອຍໆ ທີ່ໃຕ້ຢູ່ ( Pilot Light ) ແລະບ່ອນໃຕ້ໄຟໃຫຍ່/ເຕົາໄຟ ( Main Burner ) ແລະໃຫ້ຫາວິທີເອົານ້ຳອອກຈາກສະຖານທີ່ໃວໆ ໂດຍການໃຊ້ເຄື່ອງປັ້ມນ້ຳ, ທໍ່ດູດ ຫລືວ່າໃຊ້ເຄື່ອງຕັກນ້ຳອອກ.

ຖ້າຫາກວ່ານ້ຳໄດ້ຖ້ວມຂຶ້ນກາຍພື້ນເຮືອນ ຈົ່ງມອດໄຟຟ້າຢູ່ບ່ອນສວິດໃຫຍ່ ເພື່ອນ້ຳເຂົ້າໄຟຢູ່ໃນຮູບ່ອນສຽບໄຟແລ້ວອາດຈະເກີດເຮັດໃຫ້ໄຟຊອດ ແລະ ຈະເກີດໄຟໄຫມ້ຂຶ້ນໄດ້.

ຖ້າຫາກທ່ານສົງສັຍວ່າ ນ້ຳທີ່ຢູ່ໃນທໍ່ນັ້ນມີເຊື້ອໂຣຄ ກ່ອນໃຊ້ຈະຕ້ອງເຮັດໃຫ້ສອາດເສັຍກ່ອນ ໂດຍການຕົ້ມ, ກັ່ນ ໃຊ້ນ້ຳຢາຂ້າເຊື້ອ ຫລືວ່າໃຊ້ນ້ຳຢາຊັກເຄື່ອງ ( Household Bleach ) ໑໐ ຢອດນ້ຳ ຕໍ່ ໑ ແກລອລ ແລ້ວປະໄວ້ ๓໐ ນາທີນ້ຳນັ້ນກໍສອາດໄດ້.

ຖ້າຫາກວ່າຢູ່ຫລວງຖິ່ນຂອງທ່ານ ຖືກນ້ຳຖ້ວມຫນັກ ຈົນບໍ່ສາມາດທີ່ຈະອົພຍົພໄປບ່ອນອື່ນທີ່ປອດພັຍໄດ້ ຈົ່ງພຍາຍາມຍ້າຍເຄື່ອງຂອງທີ່ຈຳເປັນອອກ ເຊັ່ນອາຫານ, ນ້ຳ, ຜ້າຫົ່ມ ຂັ້ນຊັ້ນເທິງ ຫລືວ່າຫລັງຄາ ແລະເຮັດໃຈໃຫ້ດີ ແລະ ຢູ່ດ້ວຍຄວາມສງົບເພື່ອລໍຄອຍການຊ່ວຍເຫລືອ.

໔໐

## ຂໍ້ສັງເກດ !!

ກະສອບດິນຊາຍມີຜົລປະໂຍດຫລາຍ ເພື່ອໃຊ້ໃນການປ້ອງກັນນ້ຳຖ້ວມຈຸ້ມຈີ່ນຂອງທ່ານໄດ້. ທ່ານຄວນຈະມີໃວ້ໃຫ້ພຽງພໍ ຖ້າຫາກວ່າທ່ານອາສັຍຢູ່ຕາມສະຖານທີ່ບ່ອນຕ່ຳ.

ຖ້າຫາກວ່າ ຫ້າມລໍ້ ( Brakes ) ຣົຖຂອງທ່ານປຽກ ໃຊ້ການບໍ່ໄດ້ (ຫ້າມບໍ່ຢູ່) ເມື່ອຂັບຣົຖແລ່ນໄປຕາມນ້ຳ ໃຫ້ທຽບຄັນຫ້າມຄ່ອຍໆ ເພື່ອຊ່ວຍບໍ່ໃຫ້ມັນປຽກ.

ຈົ່ງຫລີກເວັ້ນ ຈາກການຂັບຣົຖຢູ່ຕາມຖນົນທີ່ຖືກນ້ຳຖ້ວມ ໂດຍສະເພາະຈົ່ງພຍາຍາມຫລີກຮ່ອງນ້ຳ ຫລື ສະຖານທີ່ຕ່ຳ.

## ທ່ານຄວນຈະປະຕິບັດ ດັ່ງນີ້ :

໑. ໃຫ້ເປີດວິທະຍຸ ຫລື ໂທຣະທັດ ຮັບຟັງຂ່າວແລະຄຳສັ່ງຕ່າງໆ (ໃຫ້ໃຊ້ວິທະຍຸຢູ່ຣົຖ ຫລືວ່າ ວິທະຍຸຊນິດຫິ້ວ ຖ້າຫາກວ່າໄຟຟ້າບໍ່ມີ).

໒. ໃຫ້ມ້ຽນ ໄຟສາຍ ໃວ້ບ່ອນທີ່ຫາເຫັນໄດ້ງ່າຍ.

໓. ໃຫ້ຈົດໝາຍເລກໂທຣະສັບທ່ານໝໍ ປະຈຳຄອບຄົວຂອງທ່ານ ຫລື ວ່າທ່ານໝໍ ຜູ້ໃດຜູ້ນຶ່ງທີ່ຢູ່ໃກ້ທ່ານ ໃນເມື່ອມີເຫດຈຳເປັນເກີດຂຶ້ນ.

໔. ໃຫ້ຮຽນຮູ້ ວິທີປະຖົມພຍາບານຂັ້ນຕົ້ນ.

## ສິ່ງທີ່ບໍ່ຄວນເຮັດ !!!

໑. ຢ່າໃຊ້ທຽນໄຂ, ໄມ້ຂີດໄຟ ຫລື ສິ່ງໃດສິ່ງນຶ່ງທີ່ຢູ່ໃກ້ກັບແປວໄຟ.

໒. ຢ່າເຂົ້າໄປໃນອາຄານທີ່ຫັກເພ ກ່ອນທີ່ຈະໄດ້ຮັບອານຸຍາດ ຈາກເຈົ້າໜ້າທີ່ ຫລື ຈາກກົມກວດກາຄວາມປອດພັຍເສັຽກ່ອນ.

໓. ຢ່າໃຊ້ໂທຣະສັບ ໂດຍບໍ່ຈຳເປັນ.



ERIC Full Text Provided by ERIC

ປື້ມຄູ່ມື ກ່ຽວກັບນະໂຍບາຍແລະວິທີການປະຕິບັດ

# ການເບິ່ງແຍງເດັກນ້ອຍ ຢູ່ກັບເຮືອນ

## ພາກ ໑໖

ຣັຖຄາລີຟໍ່ເນັຍ
ຫ້ອງການດູແລ ສຸຂພາບ ແລະ ຄວາມປອດໄພ
ກະຊວງ ບໍຣິການສັງຄົມ

ພິມແຈກຢາຍຖືກຕ້ອງຕາມກົດຣະບຽບທໍາສມຸດ

ກໍຣະກົດ ໑໙໘໘

42

ສາລະບານ

ຫົວຂໍ້ທີ ໒໒, ພາກທີ ໑໒

ບົດທີ ໓ ການເບິ່ງແຍງເດັກນ້ອຍຢູ່ກັບເຮືອນ


ໝວດ

ມາດຕາ ໑. ມາດຕະການທົ່ວໄປ ແລະ ການອະທິບາຍຄວາມໝາຍ

ການຍົກເວັ້ນໂດຍສະເພາະ .................................... ໑໐໒໓໕໑.໑

ການອະທິບາຍຄວາມໝາຍ .................................... ໑໐໒໓໕໒

ມາດຕາ ໒. ການອອກໃບ ອານຸຍາດ

ການປະຕິບັດງານໂດຍປາສຈາກໃບອານຸຍາດ ຫລື ລົງທະບຽນ ............. ໑໐໒໓໕໗

ການຍົກເວັ້ນໃບອານຸຍາດ .................................... ໑໐໒໓໕໘

ມາດຕາ ໓. ວິທີຍື່ນຄຳຮ້ອງ

ໃບອານຸຍາດ ຫລື ການລົງທະບຽນ .............................. ໑໐໒໓໖໘

ການຍື່ນຄຳຮ້ອງ ຂໍໃບອານຸຍາດຊົ່ວຄັ້ງ .......................... ໑໐໒໓໖໙

ການລົງທະບຽນ ໂດຍການລິເລີ້ມ ................................ ໑໐໒໓໖໙.໑

ການກວດສອບ ຊີວະປະວັດ ຄະດີອາຊະຍາກັມ ........................ ໑໐໒໓໗໐

ການຍົກເວັ້ນຄວາມຕ້ອງການຂອງ ການກວດສອບ ຊີວະປະວັດ ຄະດີອາຊະຍາກັມ .. ໑໐໒໓໗໐.໑

ການກວດສອບ ກ່ຽວກັບຄວາມປອດພັຍ ດ້ານອັຄຄີໄພ ..................... ໑໐໒໓໗໑

ອາຍຸການ ຂອງໃບອານຸຍາດຊົ່ວຄັ້ງ ຫລື ການຕໍ່ອາຍຸໃບອານຸຍາດ ............ ໑໐໒໓໘໓

ການໝົດອາຍຸ ຂອງການລົງທະບຽນ ............................... ໑໐໒໓໘໓.໑

ມາດຕາ ໔. ການກະທຳດ້ານປົກຄອງ

ການປະຕິເສດອອກໃບອານຸຍາດ .................................. ໑໐໒໓໙໑

ການຍົກເລີກ ຫລື ຍຶດໃບອານຸຍາດ ຫລື ການລົງທະບຽນ .................. ໑໐໒໓໙໓

ການຮ້ອງທຸກຂອງຜູ້ຖືໃບອານຸຍາດ ຫລື ລົງທະບຽນ ..................... ໑໐໒໓໙໔

ອຳນາດກວດກາ ............................................. ໑໐໒໓໙໕

ການຢ້ຽມຢາມສະຖານທີ່ ....................................... ໑໐໒໓໙໖

ມາດຕາ ໕. ກົດຣະບຽບທີ່ໃຊ້ບັງຄັບ (ສງວນໄວ້)

(ສາຣະບານ ຕໍ່)

ໝວດ

ມາຕຣາ ຜ. ມາດຕະການປະຈຳ

ຈຳນວນພາກສ່ວນພນັກງານ ແລະ ຄວາມສາມາດຮັບເອົານັກຮຽນ .......... ໑໐໘໔໓ຜ.໕
ການປະຕິບັດງານຂອງການເບິ່ງແຍງເດັກນ້ອຍຢູ່ກັບເຮືອນ ............... ໑໐໘໔໓ກ
ການຮັບເອົາເດັກນ້ອຍ .......................................... ໑໐໘໔໓ພ
ໃບບັນທຶກປະວັດການຂອງເດັກນ້ອຍ ............................ ໑໐໘໔໘໑
ສິດທິສ່ວນບຸກຄົນ ............................................... ໑໐໘໔໘໒

ມາຕຣາ ກ. ສະຖານທີ່ເບິ່ງແຍງເດັກນ້ອຍ (ສງວນໄວ້)

"ຄູ່ມືຂອງຜູ້ໃຊ້ສບັບນີ້ ໄດ້ເຮັດອອກມາ ສຳຫລັບເປັນເຄື່ອງມືໃນພາກປະຕິບັດ.
ຄູ່ມືນີ້ ບັນຈຸ :

(ກ) ກົດຣະບຽບທີ່ໄດ້ຖືກຮັບຮອງຈາກກະຊວງບໍຣິການສັງຄົມ (ເອສດີເອສເອສ) ເພື່ອໃຊ້ໃນການບໍຣິຫານຂອງຕົວແທນ, ຜູ້ຖືໃບອານຸຍາດ ແລະ ຫລືຜູ້ໄດ້ຮັບຜົລປະໂຍດ.

(ຂ) ກົດຣະບຽບທີ່ໄດ້ຖືກຮັບຮອງຈາກ ກະຊວງອື່ນໆທີ່ມີການພົວພັນ ກັບໂຄງການເອສດີເອສເອສ.

(ຄ) ຂໍ້ບັນຍັດຈາກປະມວນກົດຫມາຍອັນເຫມາະສົມທີ່ຄວບຄຸມ ການບໍຣິຫານຂອງໂຄງການ ເອສດີເອສເອສ ; ແລະ

(ງ) ຄຳຕັດສິນຂອງສານ

(ຈ) ການປະຕິບັດງານມາຕະຖານ ທີ່ເປັນຫລັກໃຫ້ແກ່ ພນັກງານເພື່ອປະເມີນຜົນ ຂອງການດຳ-ເນີນງານພາຍໃນໂຄງການ ເອສດີເອສເອສ.

ກົດຣະບຽບຂອງກະຊວງ ບໍຣິການສັງຄົມ ໄດ້ພິມໄວ້ໃນແບບຕົວຫນັງສືຕັ້ງ ດັ່ງທີ່ພິມໃນປະໂຍກນີ້.

ຕົວຫນັງສືພິມເນັ້ງ ໃຊ້ໃນການບົ່ງບອກວ່າແມ່ນກົດຫມາຍ, ກົດຣະບຽບຂອງກະຊວງອື່ນ, ແລະ ການປະຕິບັດງານອັນເປັນມາຕະຖານ ສຳຫລັບໃຊ້ໃນການປະເມີນຜົນ. ຈົ່ງເຂົ້າໃຈວ່າ ທັງສອງຢ່າງຄື ກົດຣະບຽບຂອງກະຊວງອື່ນໆ ແລະ ບັນດາຂໍ້ບັນຍັດ ແມ່ນສິ່ງຈຳເປັນຕ້ອງປະຕິບັດຕາມ, ບໍ່ແມ່ນສິ່ງຕາມໃຈຊອບ.

ຄຳຖາມຕ່າງໆ ທີ່ກ່ຽວຂ້ອງກັບຄູ່ມືຂອງຜູ້ໃຊ້ສບັບນີ້ ຈະຕ້ອງສົ່ງໄປຫາຫ້ອງການນະໂຍບາຍໂຄງການຂອງທ່ານ."

มาตรา ๑. มาตะภานທົ່ວໄປ ແລະ ການອະທິບາຍຄວາມໝາຍ

໑໐໔ມັ໔໑.໑ ການຍົກເວັ້ນໂດຍສະເພາະ

ຂໍ້ກຳນົດຕ່າງໆຂອງມາດຕຣາ ໑, ມາຕະການທົ່ວໄປ, ຈະບໍ່ຖືກໃຊ້ບັງຄັບ ໃນການເບີ່ງແຍງເດັກນ້ອຍຢູ່ກັບເຮືອນ.

໑໐໔ມັ໔໔. ການອະທິບາຍຄວາມໝາຍ

(ກ) "ຜູ້ໃຫຍ່" ຫລື "ຜູ້ແທນຜູ້ໃຫຍ່" ໝາຍເຖິງບຸກຄົນ ທີ່ມີອາຍຸ ໑໘ ປີຫລືແກ່ກວ່ານັ້ນ.

(ຂ) "ຜູ້ຮ້ອງຂໍ" ໝາຍເຖິງ ບຸກຄົນນຶ່ງ ຫລື ຫລາຍໆຄົນ ທີ່ຍື່ນຄຳຮ້ອງຂໍອານຸຍາດ ທຳການເບີ່ງແຍງເດັກນ້ອຍຢູ່ກັບເຮືອນ.

(ຄ) "ຜູ້ບໍຣິການຊ່ວຍ" ໝາຍເຖິງບຸກຄົນ ທີ່ມີອາຍຸຢ່າງຕ່ຳ ໑໔ ປີ ຊຶ່ງເປັນຜູ້ກ່ຽວຂ້ອງໂດຍກົງໃນການເບີ່ງແຍງເດັກນ້ອຍ ໃນຊ່ວງເວລາທີ່ເປີດບໍຣິການ ເບີ່ງແຍງເດັກນ້ອຍຢູ່ກັບເຮືອນ.

(ງ) "ຄວາມສາມາດໃນການບັນຈຸ" ໝາຍເຖິງຈຳນວນຫລາຍທີ່ສຸດ ຂອງເດັກນ້ອຍທີ່ຖືກອານຸຍາດໃຫ້ເບີ່ງແຍງແຕ່ລະເທື່ອ.

(ຈ) "ເດັກນ້ອຍ" ໝາຍເຖິງ ບຸກຄົນຜູ້ນຶ່ງ, ລວມທັງທາຣົກ, ຊຶ່ງບໍ່ທັນເຖິງ ອາຍຸ ໑໘ ປີ.

(ສ) "ປະກອບການຍື່ນຄຳຮ້ອງຢ່າງຮຽບຮ້ອຍ" ໝາຍຄວາມວ່າ ທຸກລາຍຣະອຽດ ແລະ ເອກກະສານທີ່ຕ້ອງການ ໄດ້ຖືກສົ່ງໃຫ້ກະຊວງ ຫລື ທ້ອງການອອກອານຸຍາດແລ້ວ ລວມທັງໃບຄຳຮ້ອງທີ່ຂຽນຄົບຖ້ວນ, ໃບກວດສອບກ່ຽວກັບຄວາມປອດພັຍ ດ້ານອັຄຄີໄພ ຖ້າວ່າຈຳນວນເດັກນ້ອຍທີ່ຈະບໍຣິການ ຫາກເກີນ ຜ ຄົນ, ແລະເຮືອນນັ້ນໄດ້ຜ່ານ ການກວດກາຮຽບຮ້ອຍແລ້ວ.

(ຊ) "ກະຊວງ" ໄດ້ຖືກອະທິບາຍ ຄວາມໝາຍ ໃນກົດຣະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍ ໝວດ ໑໔ຜ.ກກ.

ກົດຣະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍ ໝວດ ໑໔ຜ.ກກ:

"ກະຊວງ" ໝາຍເຖິງ ກະຊວງບໍຣິການສັງຄົມຂອງຣັຖ.

(ຍ) "ອະທິບໍດີ" ໄດ້ຖືກອະທິບາຍຄວາມໝາຍໃນກົດຣະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍ ໝວດ ໑໔ຜ.ກກ໐

ກົດຣະບຽບແຫ່ງ ສຸຂພາບແລະຄວາມປອດພັຍ ໝວດ ໑໔ຜ.ກກ໐ :

"ອະທິບໍດີ" ໝາຍເຖິງ ອະທິບໍດີຂອງກະຊວງ ບໍຣິການສັງຄົມ.

(ດ) "ການເບີ່ງແຍງເດັກຢູ່ກັບເຮືອນ" ໝາຍເຖິງການເບີ່ງແຍງຢ່າງເປັນປະຈຳ, ການປົກປັກຮັກສາ ແລະ ການດູແລແກ່ເດັກນ້ອຍ ໃນເຮືອນຂອງຜູ້ໃຫ້ບໍຣິການ, ສຳຫລັບຊ່ວງເວລາໜ້ອຍ - ກວ່າ ໒໔ ຊົ່ວໂມງຕໍ່ມື້ ໃນຂນະທີ່ພໍ່ແມ່ ຫລື ຜູ້ປົກຄອງຂອງເດັກນ້ອຍບໍ່ຢູ່.

(ຕ) "ທາຣົກ" ໝາຍເຖິງເດັກນ້ອຍ ທີ່ມີອາຍຸບໍ່ເຖິງ ໒ ປີ.

໑໐໔໓໔໔. ການອະທິບາຍຄວາມໝາຍ (ຕໍ່)

(ຖ) "ໃບອານຸຍາດ" ໝາຍເຖິງເອກກະສານອານຸຍາດ ເປັນລາຍລັກອັກສອນຈາກກະຊວງ ຫລື ຫ້ອງການອອກໃບອານຸຍາດ ເພື່ອໃຫ້ເປີດບໍຣິການ ເບິ່ງແຍງເດັກນ້ອຍຢູ່ກັບເຮືອນໄດ້.

(ທ) "ຜູ້ໄດ້ຮັບອານຸຍາດ" ຫລື "ຜູ້ລົງທະບຽນ" ໝາຍເຖິງຄົນຜູ້ໃຫຍ່ ທີ່ໄດ້ຮັບອານຸຍາດ ຫລື ໄດ້ລົງທະບຽນເປີດບໍຣິການ ເບິ່ງແຍງເດັກຢູ່ກັບເຮືອນ ແລະ ຜູ້ທີ່ກ່ຽວຂ້ອງໂດຍກົງໃນການເບິ່ງແຍງເດັກນ້ອຍ ໃນຊ່ວງເວລາບໍຣິການເບິ່ງແຍງເດັກນ້ອຍຢູ່ກັບເຮືອນ.

(ນ) "ຫ້ອງການອອກໃບອານຸຍາດ" ໝາຍເຖິງຫ້ອງການ ອອກໃບອານຸຍາດຂອງກະຊວງ, ກະຊວງສົງເຄາະຂອງແຂວງ, ຫລື ຫ້ອງການຣາຊການອື່ນ ທີ່ໄດ້ຮັບມອບສັນຫະ ຈາກ ກະຊວງບໍຣິການສັງຄົມ ດ້ວຍສັນຍາເພື່ອອອກໃບອານຸຍາດໃຫ້ແກ່ ສະຖານທີ່ບໍຣິການ ທີ່ຖືກຄັດເລືອກໃນທ້ອງທີ່.

(ບ) "ຜູ້ໃຫ້ການບໍຣິການ" ໝາຍເຖິງທຸກຄົນທີ່ອຳນວຍ ການບໍຣິການໃຫ້ແກ່ເດັກນ້ອຍໂດຍຖືກ - ຕ້ອງຕາມກົດຣະບຽບ ທີ່ກ່າວນີ້ ແລະລວມທັງຜູ້ທີ່ໄດ້ຮັບອານຸຍາດ, ຜູ້ລົງທະບຽນ, ຜູ້ຊ່ວຍບໍຣິການ ແລະ ຕົວແທນຂອງຜູ້ໃຫຍ່.

(ປ) "ການລົງທະບຽນ" ໝາຍເຖິງອານຸຍາດເປັນລາຍລັກອັກສອນ ຈາກກະຊວງ ຫລື ຫ້ອງການອອກໃບອານຸຍາດເພື່ອເປີດບໍຣິການ ເບິ່ງແຍງເດັກນ້ອຍຢູ່ກັບເຮືອນ ຊຶ່ງເປັນພາກສ່ວນນຶ່ງ - ຂອງການດຳເນີນໂຄງການ ທີ່ບົ່ງຢູ່ໃນກົດຣະບຽບ ແຫ່ງສຸຂພາບ ແລະຄວາມປອດພັຍໝວດ ໑໔໗.໖໔

## ມາດຕາ ໒ ການອອກໃບອະນຸຍາດ

**໑໐໒ມ໔ກ. ການດຳເນີນກິດຈະການ ໂດຍບໍ່ມີອະນຸຍາດ ຫລື ການລົງທະບຽນ** ໑໐໒ມ໔ກ

(ກ) ຖ້າຫ້ອງການອອກໃບອະນຸຍາດ ມີຫລັກຖານເຊື່ອວ່າ ການບໍລິການເບິ່ງແຍງເດັກນ້ອຍຫາກດຳເນີນໄປ ໂດຍບໍ່ມີອະນຸຍາດ ຫລື ການລົງທະບຽນ, ຫ້ອງການອອກໃບອະນຸຍາດຈະຕ້ອງ :

(໑) ດຳເນີນການ ກວດກາສະຖານທີ່ເພື່ອ :

ກ. ຕົກລົງວ່າເຮືອນເບິ່ງແຍງເດັກນ້ອຍນັ້ນ ໄດ້ດຳເນີນກິດຈະການໂດຍ ບໍ່ມີອະນຸຍາດ ຫລື ການລົງທະບຽນ.

ຂ. ຕົກລົງວ່າ ການສືບຕໍ່ໃນກິດຈະການຂອງສະຖານທີ່ ບໍລິການນັ້ນ ຈະເປັນອັນຕລາຍ ຫລືບໍ່ ໃຫ້ແກ່ສຸຂພາບ ແລະ ຄວາມປອດພັຍຂອງເດັກນ້ອຍທີ່ໄດ້ຮັບການບໍລິການ.

(໒) ແຈ້ງຢ່າງເປັນລາຍລັກອັກສອນ ໃຫ້ຜູ້ບໍລິການ ໂດຍບໍ່ມີໃບອະນຸຍາດຮູ້ເຖິງຂັ້ນດາເງື່ອນໄຂ ສຳຫລັບການອະນຸມັດ ໃບອະນຸຍາດ ຫລື ການລົງທະບຽນ.

(໓) ອອກຄຳເຕືອນ ຂອງການດຳເນີນງານທີ່ຜິດກົດໝາຍ ຖ້າກວດເຫັນ ແລະ ມີເອກກະສານຢັ້ງຢືນວ່າ ການສືບຕໍ່ກິດຈະການຂອງແຫ່ງບໍລິການຈະເປັນອັນຕລາຍ ໃຫ້ແກ່ສຸຂພາບ ແລະຄວາມປອດພັຍຂອງເດັກນ້ອຍ. ສະພາບການທີ່ເປັນອັນຕລາຍ ແກ່ສຸຂພາບແລະຄວາມປອດພັຍຂອງເດັກນ້ອຍ ຕ້ອງລວມທັງ, ບໍ່ແມ່ນແຕ່ຈະຈຳກັດແຕ່ :

ກ. ຫລັກຖານແຫ່ງການຝ່າຝືນຮ່າງກາຍ ແລະ ຈິດໃຈ

ຂ. ເດັກນ້ອຍຖືກປະປ່ອຍໄວ້ໂດຍບໍ່ມີຄົນເບິ່ງແຍງ ຫລື ປະປ່ອຍໄວ້ກັບຄົນບໍ່ເຖິງກະສຽນ

ຄ. ຫລັກຖານຢ່າງແຈ້ງຂາວ ຂອງການບໍ່ມີອະນາມັຍ

ງ. ເຄື່ອງປ້ອງກັນ ອັຄຄີພັຍ / ໄຟໄຫມ້

ຈ. ສະອາບນ້ຳ ຫລື ແຫລ່ງນ້ຳອື່ນໆ ທີ່ບໍ່ມີຮົ້ວອ້ອມ ຫລື ເຂົ້າເຖິງງ່າຍ.

ສ. ຕົ້ນໄມ້ທີ່ເປັນ ພິສ/ໄພ.

(໔) ອອກຄຳເຕືອນຂອງການດຳເນີນງານ ທີ່ຜິດກົດໝາຍ ຖ້າຜູ້ບໍລິການໂດຍບໍ່ມີອະນຸຍາດ ຫາກບໍ່ຍື່ນຄຳຮ້ອງຂໍ ໃບອະນຸຍາດ ຫລື ລົງທະບຽນ ພາຍໃນ ໑໔ ວັນທຳງານນັບແຕ່ວັນທີ ອອກຄຳເຕືອນເປັນຕົ້ນໄປ.

໑໐໔ມີ໕໘ ການຍົກເວັ້ນ ໃບອານຸຍາດ ໑໐໔ມີ໕໘

(ກ) ການຂໍອານຸຍາດ ຫລື ການລົງທະບຽນ ເປັນສິ່ງຈຳເປັນກ່ອນທີ່ຈະສາມາດ ດຳເນີນງານ ການບ້ຽງແຍງເດັກນ້ອຍຢູ່ກັບເຮືອນ ເວັ້ນເສັຽແຕ່ມີການບົ່ງໃວ້ໃນຫມວດ ໑໕໗ຜ.ກ໗໔ ຂອງກົດຣະບຽບ ແຫ່ງສຸຂພາບແລະຄວາມປອດພັຍ.

(໑) ເດັກນ້ອຍທີ່ໄດ້ຮັບການບ້ຽງແຍງນັ້ນ ແມ່ນມີສັມພັນທາງສາຍເລືອດ ຫລື ດ້ານການແຕ່ງດອງ ກັບຜູ້ທີ່ທຳການບ້ຽງແຍງ.

(໔) ເດັກນ້ອຍທີ່ໄດ້ຮັບການບ້ຽງແຍງນັ້ນແມ່ນ ມາຈາກຄອບຄົວອື່ນ ເພີ້ມໃສ່ເດັກນ້ອຍຂອງຜູ້ບໍຣິການເອງ.

(ມີ) ເຮືອນຫລັງນັ້ນ ໄດ້ຖືກຮັບຮູ້ຈາກຫມວດໂຮງຮຽນສຶກສາ.

(໕) ການບ້ຽງແຍງທີ່ອຳນວຍໃຫ້ແກ່ເດັກນ້ອຍ ແມ່ນພາກສ່ວນນຶ່ງ ຂອງການຕົກລົງແບບຮ່ວມມືຣະຫວ່າງພໍ່ແມ່ຂອງເດັກນ້ອຍ ເພື່ອບ້ຽງແຍງລູກຂອງເຂົາເຈົ້າ ໂດຍພໍ່ແມ່ຜູ້ນຶ່ງຫລືຫລາຍຄົນ, ເວລາການບ້ຽງແຍງນັ້ນ ຫາກບໍ່ມີການຈ່າຍເງິນມາພົວພັນ.

## ມາຕຣາ ມີ. ວິທີການ ຍື່ນໃບຄຳຮ້ອງ

໑໐໔ມີຜ໘ ໃບອານຸຍາດ ຫລື ການລົງທະບຽນ ໑໐໔ມີຜ໘

(ກ) ໃບອານຸຍາດ ຫລື ໃບລົງທະບຽນຈະຕ້ອງມີໃວ້ຢູ່ໃນສະຖານທີ່ສເມີ ເມື່ອເວລາຖືກຂໍກວດເບິ່ງ.

(ຂ) ໃບອານຸຍາດ ຫລື ໃບລົງທະບຽນ ບໍ່ອາດສາມາດໂອນໃຫ້ຜູ້ອື່ນ ຫລື ສະຖານທີ່ອື່ນໄດ້.

(ຄ) ທຸກຄົນທີ່ມີອາຍຸ ໑໘ ປີຫລືເກີນກ່ວານັ້ນອາດສາມາດຍື່ນຄຳຮ້ອງ ຂໍໃບອານຸຍາດ ຫລື ລົງ-ທະບຽນ ໂດຍບໍ່ມີການຈຳແນກ ອາຍຸ, ເພດ, ເຊື້ອຊາດ, ສາສນາ, ຜິວພັນ, ການສັງກັດພັກຝ່າຍການເມືອງ, ສັນຊາດເດີມ ພິການ ຫລື ຖານະໃນດ້ານການແຕ່ງງານ.

໑໐໔ມີຜ໙ ການຍື່ນຄຳຮ້ອງ ຂໍໃບອານຸຍາດຊົ່ວຄາວ ໑໐໔ມີຜ໙

(ກ) ເພື່ອຮ້ອງຂໍເອົາໃບອານຸຍາດ ເປີດບໍຣິການ ບ້ຽງແຍງເດັກນ້ອຍຢູ່ກັບເຮືອນ, ຜູ້ຮ້ອງຂໍຈະຕ້ອງຂຽນໃບຄຳຮ້ອງ ຕໍ່ກະຊວງ ຫລື ຫ້ອງການອອກໃບອານຸຍາດ, ຈະຕ້ອງຂຽນໃສ່ໃນຟອມ ທີ່ແຈກຢາຍ ຫລື ຮັບຮູ້ຈາກກະຊວງ.

(ຂ) ຜູ້ຮ້ອງຂໍຈະຕ້ອງ ໃຫ້ລາຍຣະອຽດຕ່າງໆ ດັ່ງຕໍ່ລົງໄປນີ້ຢ່າງຄົບຖ້ວນ ເວລາຍື່ນໃບຄຳຮ້ອງ:

(໑) ຊື່, ທີ່ຢູ່, ເລກໂທຣະສັບ ແລະ ສິ່ງຢັ້ງຢືນວ່າຜູ້ຮ້ອງຂໍ ມີອາຍຸ ໑໘ ປີຫລືເກີນກ່ວານັ້ນ.

(໔) ອາຍຸ ແລະ ຈຳນວນເດັກນ້ອຍ ທີ່ຈະໄດ້ຮັບການບໍຣິການ.

(ມີ) ຊື່ ແລະ ອາຍຸຂອງແຕ່ລະຄົນ ທີ່ຢູ່ໃນເຮືອນຫລັງທີ່ຈະເປີດບໍຣິການ.

(໔) ຄຳໃຫ້ການວ່າ ຜູ້ຮ້ອງຂໍຈະປະຕິບັດ ຖືກຕ້ອງຕາມທຸກລະບຽບການ ແລະ ກົດໝາຍ ທີ່ໃຊ້ບັງຄັບໃນການ ເບິ່ງແຍງເດັກນ້ອຍຢູ່ກັບເຮືອນ.

໑໐໔ນິຍົມ ການຍື່ນຄຳຮ້ອງຂໍ ໃບອານຸຍາດຂັ້ນຕົ້ນ (ຕໍ່) ໑໐໔ນິຍົມ

(໕) ລາຍລະອຽດທີ່ຕ້ອງການຈາກກົດລະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍໝວດ ໑໕ພາ.໕໔ (ບີ) ແລະ ໑໕ພາ.໕໔ (ເອ)-(ອີ)

ກົດລະບຽບແຫ່ງສຸຂພາບແລະຄວາມປອດພັຍ ໝວດ ໑໕ພາ.໕໔ (ບີ) ໄດ້ບົ່ງໄວ້ວ່າ : ບໍ່ມີເຮືອນໃດ ທີ່ຈະໄດ້ຮັບອານຸຍາດ ໃຫ້ຕັ້ງເປັນສູນໃຫຍ່ຂອງການເບິ່ງແຍງເດັກນ້ອຍຢູ່ກັບເຮືອນ ຫລັງຈາກວັນທີ ໑ ເດືອນກໍລະກົດ ໑໙໘໔, ເວັ້ນເສັຍແຕ່ວ່າ ຜູ້ບໍຣິການ ຫາກມີປະສົບການຢ່າງນ້ອຍນຶ່ງປີ ໃນລັກສະນະ ເປັນຜູ້ບໍຣິການຢ່າງຖືກຕ້ອງຕາມກົດ-ໝາຍ ຂອງສູນເບິ່ງແຍງເດັກນ້ອຍຢູ່ກັບເຮືອນ ຂນາດນ້ອຍ ຫລື ໃນລັກສະນະ ເຄີຍເປັນຜູ້ປົກຄອງ ສູນເບິ່ງແຍງເດັກນ້ອຍ ທີ່ມີອານຸຍາດຖືກຕ້ອງມາແລ້ວ. ອະທິບໍດີອາດຈະຍົກເວັ້ນ ເງື່ອນໄຂນີ້ ຖ້າຄົ້ນຄ້ວາເຫັນວ່າ ຜູ້ຍື່ນຄຳຮ້ອງຫາກມີປະສົບການພຽງພໍ.

ກົດລະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍ ໝວດ ໑໕ພາ.໕໔ (ເອ)-(ອີ) ໄດ້ບົ່ງໄວ້ວ່າ :

ກ. ຄຳໃຫ້ການຢັ້ງ ຢືນຢັນວ່າ ຜູ້ຍື່ນຄຳຮ້ອງມີຖານະການເງິນພຽງພໍເພື່ອເປີດ ບໍຣິການ ເບິ່ງແຍງເດັກນ້ອຍຢູ່ກັບເຮືອນໄດ້. ກະຊວງຈະບໍ່ຕ້ອງການລາຍລະອຽດ ໂດຍສະເພາະອື່ນໆອີກ ທີ່ກ່ຽວກັບການເງິນ.

ຂ. ຫລັກຖານຢັ້ງຢືນວ່າ ສູນນ້ອຍເບິ່ງແຍງເດັກນັ້ນ ມີເຄື່ອງດັບເພີງ ຫລືເຄື່ອງສັນຍານຄວັນໄຟ, ຫລືມີທັງສອງຢ່າງ ທີ່ຖືກຕ້ອງ ຕາມມາຕະຖານທີ່ທາງກົມດັບ - ເພີງ ໄດ້ບົ່ງໄວ້ຢູ່ໃນພາກຍ່ອຍ (ດີ) ຂອງໝວດ ໑໕ພາ.໕໖.

ຄ. ໃບແປະໂປ້ລາຍມື ຂອງຜູ້ບໍຣິການ ເຮືອນເບິ່ງແ ,ດັກນ້ອຍ ແລະ ຂອງໝົດທຸກຄົນຜູ້ໃຫຍ່ ທີ່ຢູ່ໃນເຮືອນຫລັງນັ້ນ.

ງ. ຫລັກຖານຂອງການກວດໃນເວລານັ້ນວ່າ ປາສຈາກພຍາດວັນນະໂຣຄ (ໂຣຄປອດແຫ້ງ) ສຳຫລັບໝົດທຸກຄົນຜູ້ໃຫຍ່ ທີ່ຢູ່ໃນເຮືອນດັ່ງກ່າວ ໃນຊ່ວງເວລາທີ່ເດັກນ້ອຍໄດ້ຮັບການເບິ່ງແຍງ.

ຈ. ລາຍລະອຽດແນວອື່ນ ອາດຈະຕ້ອງການຈາກກະຊວງ ເພື່ອການບໍຣິການເໝາະສົມແລະຄວາມເຂັ້ມງວດ ຂອງກົດລະບຽບ.

໑໐໔ມີຜພ ການຍື່ນຄຳຮ້ອງ ຂໍໃບອານຸຍາດ ຂັ້ນຕົ້ນ (ຕໍ່)

(ພ) ໃບແປະໂປ້ລາຍມື ຂອງຫມົດທຸກຄົນ ໄດ້ບົ່ງຢູ່ໃນກົດຣະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍ ຫມວດ ໑໔ໝພ.໘໗໑

ກົດຣະບຽບແຫ່ງ ສຸຂພາບແລະຄວາມປອດພັຍ ຫມວດ ໑໔ໝພ.໘໗໑ ໄດ້ບົ່ງໄວ້ໃນບາງສ່ວນວ່າ :

ນອກຈາກຜູ້ຍື່ນຄຳຮ້ອງ, ຂໍບັນຍັດຈະຕ້ອງຖືກປະຕິບັດ ຕໍ່ບຸກຄົນດັ່ງຕໍ່ໄປນີ້ :

ກ. ທຸກຄົນເວັ້ນຈາກເດັກນ້ອຍ, ທີ່ຢູ່ໃນສະຖານທີ່.

ຂ. ທຸກຄົນທີ່ໃຫ້ການຊ່ວຍເຫລືອ ແກ່ເດັກນ້ອຍໃນການເບິ່ງແຍງ ນຸ່ງຫົ່ມ ຫວີຜົມ ອາບນ້ຳ ຫລື ທຳອະນາມັຍສ່ວນຕົວ.

ຄ. ທຸກພນັກງານ ຫລື ຄົນຮັບຈ້າງ ທີ່ມີການພົວພັນເປັນປະຈຳກັບເດັກນ້ອຍ. ໃນການຕັດສິນວ່າຜູ້ໃດມີການພົວພັນເປັນປະຈຳນັ້ນ, ຄົນອາສາສມັກ ທີ່ຢູ່ໃນສະຖານທີ່ ຈະຕ້ອງຖືກຍົກເວັ້ນ - ນອກຈາກວ່າ ຜູ້ອາສາສມັກນັ້ນ ຫາກຖືກໃຊ້ເພື່ອແທນ ແລະ ເພີ້ມເຕີມພນັກງານໃນການບໍຣິການເບິ່ງແຍງໂດຍກົງ ແລະ ໃນການຄວບຄຸມການເບິ່ງແຍງຂອງເດັກນ້ອຍ. ໃນການຕັດ-ສິນວ່າ ຜູ້ໃດມີການພົວພັນເປັນປະຈຳ, ພນັກງານ ແລະ ຄົນຮັບຈ້າງພາຍໃຕ້ການຄວບຄຸມຂອງເຈົ້າຫນ້າທີ່ ປະຈຳສະຖານທີ່ ແລະ ບຸກຄົນຜູ້ທີ່ບໍ່ໄດ້ທຳການບໍຣິການ ເບິ່ງແຍງ ແລະ ຄວບຄຸມໂດຍກົງ ຫລື ຜູ້ທີ່ມີການພົວພັນບາງຄັ້ງບາງຄາວ ຫລື ບໍ່ເປັນປະຈຳກັບເດັກນ້ອຍຈະຕ້ອງຖືກຍົກເວັ້ນ. ເວລາບັນຈຸເຂົ້າເຮັດການ, ທຸກພນັກງານ ແລະ ຄົນຮັບຈ້າງ ທີ່ຖືກ - ຮຽກຮ້ອງໃຫ້ແປະໂປ້ລາຍມື ຈະຕ້ອງໄດ້ເຊັນຄຳໃຫ້ການກ່ຽວກັບໂທດ ອາຊຍາກັມກ່ອນແລະແປະໂປ້ລາຍມື. ໃບແປະໂປ້ລາຍມື ຈະຕ້ອງຖືກສົ່ງໃຫ້ຫ້ອງການ ອອກໃບອານຸຍາດ ພາຍ-ໃນ ໒໐ ວັນຕໍ່ຈາກການບັນຈຸ.

ງ. ຂໍບັງຄັບຫມວດນີ້ ບໍ່ໃຊ້ຕໍ່ ຄົນຜູ້ໃຫຍ່ອາສາສມັກ ຫລື ຄົນຜູ້ໃຫຍ່ພນັກງານ ທີ່ຜູ້ບໍຣິການ ບັນຈຸເຂົ້າຮັບໃຊ້ໃນພື້ນຖານ ບໍ່ເປັນປະຈຳ ສຳຫລັບນ້ອຍກ່ວາ ໑໐ ມື້ຕໍ່ເດືອນ, ໂດຍເປັນສິ່ງຈະແຈ້ງວ່າ ບຸກຄົນຜູ້ໃຫຍ່ເຫລົ່ານີ້ ຕ້ອງຢູ່ໃນການຄວບຄຸມເປັນປະຈຳ ຂອງຜູ້ໃຫຍ່ທີ່ມີເງື່ອນໄຂຖືກຕ້ອງຕາມຂໍບັງຄັບຂອງຫມວດນີ້.

໑໐໔ມີຜພ.໑ ການລົງທະບຽນ ໂຄງການລິເລີ່ມ ໑໐໔ມີຜພ.໑

(ກ) ທຸກຄົນທີ່ມີຄວາມປະສົງ ຢາກລົງທະບຽນ ເພື່ອເປີດບໍຣິການເບິ່ງແຍງເດັກນ້ອຍ ຢູ່ກັບເຮືອນຕາມຣະບຽບຂອງກົດຣະບຽບແຫ່ງ ສຸຂພາບແລະຄວາມປອດພັຍ ຫມວດ ໑໔ໝກ.ພ໔ ຈະຕ້ອງຍື່ນໃບຄຳຮ້ອງຕໍ່ກະຊວງ ຫລື ຫ້ອງການອອກໃບອານຸຍາດ ໂດຍໃຊ້ແບບຟອມທີ່ມີໃຫ້ ຫລື ຮັບຮູ້ຈາກກະຊວງ.

(ຂ) ຜູ້ຍື່ນໃບຄຳຮ້ອງຈະຕ້ອງແຈ້ງທຸກລາຍຣະອຽດ ທີ່ບົ່ງໄວ້ໃນກົດຣະບຽບແຫ່ງສຸຂພາບ ແລະຄວາມປອດພັຍ ຫມວດ ໑໔ໝກ.ພ໔ (ບ) ເວລາ ຍື່ນໃບຄຳຮ້ອງ.

໑໐໒ມີຜົມ.໑ ການລົງທະບຽນ ສໍາຫລັບໂລງການລິເລີ້ມ (ຕໍ່) ໑໐໒ມີຜົມ.໑

(ຄ) ການໃຫ້ຫຼາຍລາຍຣະອຽດທີ່ຕ້ອງການຈະຖືກ ພິຈາຣະນາວ່າ ແມ່ນການລົງທະບຽນຄົບຖ້ວນ, ຊຶ່ງເປັນອັນພຽງພໍ ເພື່ອອານຸຍາດ ໃຫ້ສືບຕໍ່ກິຈການ ເບິ່ງແຍງເດັກນ້ອຍຢູ່ກັບເຮືອນ.

(ງ) ການເບິ່ງແຍງເດັກນ້ອຍຢູ່ກັບເຮືອນ ທີ່ໄດ້ລົງທະບຽນ ຖືກຕ້ອງຕາມຂໍ້ບັງຄັບ ຂອງຫມວດນີ້ ຈໍາເປັນຈະຕ້ອງໄດ້ ປະຕິບັດຢ່າງເຂັ້ມງວດ ຕາມກົດຣະບຽບທີ່ບົ່ງໄວ້ ສໍາຫລັບການເບິ່ງແຍງເດັກນ້ອຍຢູ່ກັບເຮືອນ ທີ່ມີອານຸຍາດ.

໑໐໒ມີກ໐ ບັນທຶກຂອງການຕຣວດສອບວ່າ ປາສຈາກໂທດອາຊຍາກັມ ໑໐໒ມີກ໐

ຖ້າວ່າຜູ້ຍື່ນໃບຄໍາຮ້ອງ ຫລື ລົງທະບຽນ ບໍ່ສາມາດອໍານວຍຄໍາໃຫ້ການຕາມທີ່ຕ້ອງການ ຂອງກົດຣະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍ ຫມວດ ໑໕ໝກ.໕໒ (ບີ) ແລະ ໑໕ໝກ.໕໒ (ຊີ), ໃບອານຸຍາດຈະຖືກປະຕິເສດ, ຢຶດ ຫລື ຖອນຄືນ. ຖ້າວ່າຜູ້ຍື່ນຄໍາຮ້ອງ ຫລື ລົງທະບຽນ ຫາກມີບັນທຶກຕ້ອງໂທດອາຊຍາກັມມາກ່ອນ, ນອກເຫນືອໄປກ່ວາການລ່ວງລະເມີດກົດຈະຣາຈອນຂັ້ນນ້ອຍໆ, ດັ່ງທີ່ໄດ້ບົ່ງໄວ້ໂດຍສອດຄ່ອງກັບ ກົດຣະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍ ຫມວດ ໑໕ໝກ.໕໙ (ເອ), ໃບອານຸຍາດຈະຕ້ອງ ຖືກຢຶດ ເພື່ອສອດຄ່ອງກັບກົດຣະບຽບ ແຫ່ງສຸຂພາບ ແລະ ຄວາມປອດພັຍ ຫມວດ ໑໕ໝກ.໕໒ (ບີ). ສະຖານທີ່ນັ້ນຈະຕ້ອງ ໄດ້ຮັບຄໍາສັ່ງໃຫ້ຢຸດ ແລະ ຣະງັບການດໍາເນີນງານ ເພື່ອປະຕິບັດສອດຄ່ອງກັບກົດຣະບຽບ ແຫ່ງສຸຂພາບແລະຄວາມປອດພັຍ ຫມວດ ໑໕໒໘ (ດີ) ແລະ ທາງກະຊວງອາດຈະດໍາເນີນ ວິທີການທີ່ຖືກຕ້ອງອື່ນໆ ໂດຍສອດຄ່ອງກັບກົດຣະບຽບ ແຫ່ງສຸຂພາບແລະຄວາມປອດພັຍ ຫມວດ ໑໕໔໑ ແລະ/ຫລື ໑໕໔ມີ ຫລື ເອົາມາຕະການອື່ນທີ່ຈໍາເປັນ ລວມທັງການສັ່ງຕົວອັ້ນສານອາດຍາ ຫລື ສານຄະດີແພ່ງ.

໑໐໒ມີກ໐.໑ ການຍົກເວັ້ນ ຄວາມຕ້ອງການ ຂອງການຕຣວດສອບ ຊີວະປະວັດ ອາຊຍາກັມ ໑໐໒ມີກ໐.໑

(ກ) ຖ້າຫາກມີການຄົ້ນພົບວ່າ ຜູ້ຍື່ນຄໍາຮ້ອງ ຫລື ຜູ້ມີຊື່ລົງທະບຽນ ຫລືຜູ້ໃດຜູ້ນຶ່ງທີ່ຢູ່ໃນເຮືອນ ຫລືຢູ່ຢ່າງເປັນປະຈໍາໃນເຮືອນ ໃນຊົ່ວໂມງເວລາການເບິ່ງແຍງເດັກນ້ອຍ, ໄດ້ເຄີຍຕ້ອງໂທດອາຊຍາກັມ ນອກເຫນືອໄປກ່ວາຄະດີ ການລ່ວງລະເມີດກົດຈະຣາຈອນ ທີ່ມີຜົນສະທ້ອນເຖິງການປັບໃຫມ $ ໕໐.໐໐ ຫລື ຕໍ່າກ່ວານັ້ນ, ການຍື່ນຄໍາຮ້ອງຂໍ ໃບອານຸຍາດຈະໄດ້ຖືກປະຕິເສດ ຫລື ອານຸຍາດຈະໄດ້ຖືກຖອນຄືນ, ເວັ້ນເສັຍແຕ່ເງື່ອນໄຂ (໑) ຫລື (໒) ຂ້າງລຸ່ມນີ້ຫາກເປັນ ທີ່ອ້າງອີງ :

(໑) ບຸກຄົນຜູ້ນັ້ນ ໄດ້ຮັບການອະພັຍໂທດຢ່າງສົມບູນ ແລະ ຢ່າງບໍ່ມີເງື່ອນໄຂ ສໍາຫລັບການກະທໍາຜິດ, ຈາກຜູ້ປົກຄອງຣັຖ.

(ຕໍ່)

(໔) ຫລັງຈາກການຕຣວດເບິ່ງໃບບັນທຶກ ທ່ານອະທິບໍດີ ລົງຄວາມເຫັນວ່າ ບຸກຄົນດັ່ງກ່າວເປັນຄົນທີ່ມີຄວາມປະພຶດດີ ເຫມາະສົມກັບການອອກໃບອານຸຍາດໃຫ້. ສາຍເຫດຕ່າງໆທີ່ທ່ານອະທິບໍດີອາດຈະນຳມາພິຈາຣະນາ ເພື່ອອະນຸມັດ ໃບອານຸຍາດຈະຕ້ອງປະກອບດ້ວຍ, ບໍ່ແມ່ນຈະຈຳກັດແຕ່ :

ກ. ສະພາບເຣື່ອງຣາວຂອງການກະທຳຜິດ

ຂ. ເວລາທີ່ຜ່ານມາ ນັບແຕ່ການກະທຳຜິດໄດ້ຊູບັດຂຶ້ນ ແລະ ຈຳນວນຂອງການກະທຳຜິດ

ຄ. ສະຖານະການແວດລ້ອມ ຄະດີອາຊຍາກັມ ສແດງໃຫ້ເຫັນວ່າ ການກະທຳຜິດດັ່ງກ່າວຈະບໍ່ຊ້ຳຕື່ມອີກ.

ງ. ການດຳເນີນກິຈການຕ່າງໆ ພາຍຫລັງທີ່ໄດ້ຮັບໂທດຜ່ານມາ, ເຊັ່ນການປະກອບວຽກງານ, ການສຶກສາ ຫລື ການຮ່ວມໃນການປິ່ນປົວໂຕ ເປັນການຊີ້ບອກວ່າ ມີການກັບເນື້ອກັບໂຕ.

ຈ. ການອ້າງອີງ ເຖິງຄວາມປະພຶດດີຕ່າງໆ

ສ. ໃບຢັ້ງຢືນ ຂອງການກັບເນື້ອກັບໂຕ ຈາກສານສູງສຸດ.

໑໐໒ມີກ໑ ການຕຣວດສອບ ຄວາມປອດພັຍ ດ້ານອັຄຄີພັຍ ໑໐໒ມີກ໑

ການຕຣວດສອບ ຄວາມປອດພັຍ ດ້ານອັຄຄີພັຍ ຈາກກົມດັບເພີງ ເປັນສິ່ງຈຳເປັນທຸກໆ ສະຖານທີ່ບໍຣິການເບິ່ງແຍງເດັກນ້ອຍ ທີ່ໄດ້ຮັບອານຸຍາດເບິ່ງແຍງ ກ ຄົນຫລືຫລາຍກ່ວານີ້, ແລະມີເດັກນ້ອຍນຶ່ງຄົນ ຫລື - ຫລາຍກ່ວານັ້ນ ບໍ່ສາມາດຊ່ວຍຕົນເອງໄດ້ໃນກໍຣະນີສຸກເສີນ ເວລາຢູ່ໃນການເບິ່ງແຍງ ດັ່ງທີ່ໄດ້ບົ່ງໃວ້ໃນກົດຣະບຽບ ແຫ່ງສຸຂພາບແລະຄວາມປອດພັຍ ຫມວດ ໑ມີ໑ມີ໑ ແລະ ໑ມີ໑ມີ໑.ມີ

(໑) ກົດຣະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍ ຫມວດ ໑ມີ໑ມີ໑ ໄດ້ບົ່ງວ່າ :
"ຄົນທີ່ຊ່ວຍຕົນເອງບໍ່ໄດ້" ຫມາຍເຖິງບຸກຄົນທີ່ບໍ່ສາມາດ ໜີອອກຈາກຕຶກ ອາຄານໄດ້ດ້ວຍຕົນເອງ ໃນກໍຣະນີສຸກເສີນ. ນີ້ລວມທັງທຸກໆຄົນທີ່ບໍ່ສາມາດ, ຫລື ເຊື່ອວ່າບໍ່ມີຄວາມສາມາດ, ທາງດ້ານຮ່າງກາຍ ແລະ ມັນສມອງ, ມີປະຕິກິຣິຍາ ຕໍ່ວອດສັນຍານໄຟ ທີ່ຖືກຮັບຮູ້ໂດຍກົມດັບເພີງ, ຫລື ຄຳສັ່ງປາກເປົ່າກ່ຽວກັບ ອັນຕລາຍຂອງອັຄຄີພັຍ, ແລະບຸກຄົນທີ່ເອື່ອຍອີງໃສ່ແຕ່ເຄື່ອງມືຊ່ວຍເຊັ່ນວ່າ ໄມ້ຄ້ຳ ເຄື່ອງແອບຍ່າງ ແລະ ລໍ້ຊຸກ. ການຕົກລົງກ່ຽວກັບສະພາບຊ່ວຍຕົນເອງໄດ້ ຫລື ຊ່ວຍຕົນເອງບໍ່ໄດ້ ຂອງບຸກຄົນທີ່ມີການເສັຍຈິຕ ນັ້ນຈະຕ້ອງເຮັດຂຶ້ນໂດຍ ອະທິບໍດີ. ບໍຣິການສັງຄົມ ຫລື ຜູ້ແທນຂອງເພີ່ນ, ໂດຍການປຶກສາຫາລື ກັບ ອະທິບໍດີຂອງ ກົມຈິຕພັທນາ ຫລື ຜູ້ຕາງຫນ້າຂອງເພີ່ນ. ການຕົກລົງກ່ຽວກັບສະພາບຊ່ວຍຕົນເອງໄດ້ ຫລື ຊ່ວຍຕົນເອງບໍ່ໄດ້ ຂອງບຸກຄົນພິການອື່ນໆ ທີ່ນັບເຂົ້າຫລັງຈາກ ວັນທີ ໑ ເດືອນມົກກຣາ ໑໙໘໒ ເປັນຕົ້ນມາ, ຜູ້ຊຶ່ງບໍ່ມີການເສັຍຈິ., ຈະຕ້ອງເຮັດຂຶ້ນໂດຍ ອະທິບໍດີ ບໍຣິການສັງຄົມ, ຫລື ຜູ້ຕາງໜ້າຂອງເພີ່ນ.

(໒) ກົດຣະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍ ຫມວດ ໑ມີ໑໒ມີ ໄດ້ບົ່ງຢ່າງທົ່ວໄປວ່າ :
ການຕຣວດສອບຄວາມປອດພັຍ ດ້ານອັຄຄີພັຍ ຈະບໍ່ເປັນສິ່ງຕ້ອງການ ຖ້າເຮືອນບໍຣິການເບິ່ງແຍງເດັກນ້ອຍ ຫາກທຳການເບິ່ງແຍງສະເພາະ :
ກ. ເດັກນ້ອຍທີ່ຊ່ວຍຕົນເອງໄດ້ ໃນຈຳນວນ ຝ ຄົນ ຫລື ຕ່ຳກ່ວານັ້ນ, ແລະ/ຫລື
ຂ. ເດັກນ້ອຍທີ່ມີອາຍຸ ສອງປີ ຫລື ຕ່ຳກ່ວານັ້ນ.

໑໐໒ມີຊມີ ອາຍຸການຂອງ ໃບອານຸຍາດຊົ້ນຕົ້ນ ຫລື ການຕໍ່ອາຍຸໃບອານຸຍາດ ໑໐໒ມີຊມີ

(ກ) ອາຍຸການຂອງໃບອານຸຍາດຊັ້ນຕົ້ນ ຄວນຈະຕ້ອງໄດ້ແຈ້ງຢ່າງແນ່ນອນ ຕາມກົດຣະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍ ຫມວດ ໑໒ຜກ.໒໘.
ກົດຣະບຽບສຸຂພາບ ແລະ ຄວາມປອດພັຍ ຫມວດ ໑໒ຜກ.໒໘ ຣະບຸໂດຍທົ່ວໄປວ່າ :
ກ. ໃບອານຸຍາດຊັ້ນຕົ້ນ ຫລື ການຕໍ່ອາຍຸ ໃບອານຸຍາດສຳຫລັບເຮືອນບໍຣິການ ເບິ່ງແຍງເດັກຈະສິ້ນສຸດ ອາຍຸລົງໃນເວລາ ມີ ປີ ນັບແຕ່ວັນທີອອກໃບອານຸຍາດເປັນຕົ້ນໄປ.

(ຕໍ່)

ຂ. ຄຳຮ້ອງຂໍຕໍ່ອາຍຸ ຈະຕ້ອງໄດ້ປະກອບຍື່ນໃຫ່ມ ຕໍ່ກະຊວງ ຫລື ຫ້ອງການອອກໃບອານຸຍາດ ພາຍໃນ ៣໐ ວັນ ກ່ອນມື້ຫມົດອາຍຸ. ການລະເລີຍຕໍ່ການຍື່ນຄຳຮ້ອງ ສຳຫລັບຕໍ່ອາຍຸ ໃບອານຸຍາດ ໃນກຳນົດເວລາທີ່ຣະບຸໄວ້ນັ້ນ ຈະຕ້ອງສ້າງຜົນສະທ້ອນ ໃຫ້ໃບອານຸຍາດສິ້ນສຸດອາຍຸໄປ.

(ຂ) ໃບອານຸຍາດ ຈະຖືກຕໍ່ອາຍຸຢ່າງອັດຕະໂນມັດ ຖ້າຫາກຄຳຮ້ອງຂໍຕໍ່ອາຍຸໄດ້ປະກອບຍື່ນ ៣໐ ວັນກ່ອນມື້ຫມົດອາຍຸ ດັ່ງທີ່ໄດ້ບົ່ງໄວ້ ໃນກົດຣະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍ ຫມວດ ໑໔ພກ.໔໘

໑໐໔ມີຊູມີ.໑ ການຫມົດອາຍຸ ຂອງການລົງທະບຽນ ໑໐໔ມີຊູມີ.໑

ການລົງທະບຽນຂອງໂຄງການລິເລີ້ມ ຈະຫມົດອາຍຸໃນວັນທີ ໑ ມີກກຣາ ໑໙໘ມີ. ກະຊວງ ຫລື ຫ້ອງ-ການອອກໃບອານຸຍາດ ຈະແຈ້ງໃຫ້ຜູ້ຖືທະບຽນຮູ້ ດ້ວຍຈົດຫມາຍກ່ຽວກັບ ວັນທີຫມົດອາຍຸ ທີ່ຈະມາເຖິງຢ່າງນ້ອຍ ៦໐ ວັນກ່ອນມື້ສິ້ນສຸດ ອາຍຸ.

## ມາຕຣາ ໔. ການປະຕິບັດ ທາງຣາຊການ

໑໐໒໒ນັຜຈ ການປະຕິເສດ ໃບອານຸຍາດ ໑໐໒໒ນັຜຈ

(ກ) ໃນເມື່ອເງື່ອນໄຂຕ່າງໆ ສຳຫລັບການອອກອານຸຍາດ ຫາກບໍ່ຄົບຖ້ວນ, ທາງກະຊວງຈະໄດ້ປະຕິເສດ ຄຳຮ້ອງພາຍໃນ ໓໐ ວັນ ຫລັງຈາກໄດ້ຮັບໃບຄຳຮ້ອງສົມບູນ.

(ຂ) ຖ້າວ່າຄຳຮ້ອງຫາກຖືກປະຕິເສດ, ກົດຣະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍ ຫມວດ ໑໔ໝຜ.໘ກຈ ຈະຕ້ອງນຳມາປະຕິບັດ.

ກົດຣະບຽບ ແຫ່ງສຸຂພາບ ແລະ ຄວາມປອດພັຍ ຫມວດ ໑໔ໝຜ.໘ກຈ (ແອຟ) ຣະບຸວ່າ : ໃນທັນທີ ທັນໃດ ທີ່ມີການປະຕິເສດ ຄຳຮ້ອງຂໍອານຸຍາດ ຫລື ປຕົງສະເພາະ, ທາງກະຊວງຈະຕ້ອງແຈ້ງໃຫ້ຜູ້ຍື່ນໃບສມັກຊາບ ເປັນລາຍລັກອັກສອນ. ພາຍໃນ ໑໔ ວັນ ຫລັງຈາກກະຊວງໄດ້ສົ່ງຄຳສັ່ງ, ຜູ້ຍື່ນຄຳຮ້ອງຂໍອາດສາມາດ ຂຽນຄຳຮ້ອງຂໍ ອຸທອນຕໍ່ທາງກະຊວງ. ເມື່ອທາງກະຊວງໄດ້ຮັບ ຄຳຮ້ອງອຸທອນ ໃນຮູບການທີ່ຖືກຕ້ອງແລ້ວ ກໍຈະຈັດໃຫ້ມີການ ພິຈາຣະນາຄຳອຸທອນ. ການພິຈາຣະນາ ຈະຕ້ອງດຳເນີນໄປຢ່າງສອດຄ່ອງ ກັບມາຕຣາ ໔ (ເລີ່ມຕົ້ນແຕ່ຫມວດ ໑໑໔໐໐) ຂອງພາກຍ່ອຍ ນຶ່ງໃນພາກທີ ສາມຂອງຫົວຂໍ້ທີ ໒ ຂອງກົດຣະບຽບ ບໍຣິຫານ, ແລະໃນນັ້ນ ໄດ້ບົ່ງຫຼກອຳນາດຂອງກະຊວງ.

(ຄ) ຄຳຮ້ອງຂໍ ໃບອານຸຍາດຂັ້ນຕົ້ນ ຫລື ຕໍ່ອາຍຸໃບອານຸຍາດ ຈະບໍ່ຖືກປະຕິເສດ ຍ້ອນເຫດຜົນແນວດຽວວ່າ ຜູ້ຍື່ນໃບສມັກ ແມ່ນພໍ່ແມ່ ຜູ້ທີ່ເຄີຍໄດ້ທຸບຕີ ຫລື ຈະສືບຕໍ່ທຸບຕີ ລູກຊາຍ/ຍິງຂອງຕົນ, ຊຶ່ງການທຸບຕີນີ້ ບໍ່ຖືວ່າແມ່ນການຂົ່ມເຫັງເດັກນ້ອຍ ຕາມທີ່ໄດ້ບົ່ງໄວ້ໃນຫມວດ ໑໑໑ໝ໔, ພາກຍ່ອຍ (ຈີ) ຂອງກົດອາຊຍາກັມ, ຫລື ຫມວດ ໑໔ນັຈ.໔ (ຊີ) ຂອງກົດຣະບຽບ ສຸຂພາບ - ແລະ ຄວາມປອດພັຍ.

(໑) ຫມວດ ໑໑໑ໝ໔, ພາກຍ່ອຍ (ຈີ) ຂອງກົດອາຊຍາກັມ ຣະບຸວ່າ : ການຂົ່ມເຫັງເດັກ ຫມາຍເຖິງການທຳຮ້າຍຮ່າງກາຍ ທີ່ກະທຳໂດຍເຈຕນາ ຕໍ່ເດັກນ້ອຍຜູ້ນຶ່ງ ໂດຍບຸກຄົນນຶ່ງ. ການຂົ່ມເຫັງເດັກນ້ອຍ ຍັງມີຄວາມຫມາຍເຖິງ ການຂົ່ມຂື່ນຊຳເລົາເດັກນ້ອຍ ຫລື ການກະທຳ ຫລື ການລະເລີຍ ທີ່ບົ່ງຢູ່ໃນຫມວດ ໒ກຜ ໐ຂ (ຄວາມຮ້າຍກາດປ່າເຖື່ອນ ຫລື ການທຳໂທດຢ່າງບໍ່ມີແນວອະທິບາຍໄດ້ ຕໍ່ເດັກນ້ອຍ) ຫລື ຫມວດ ໒ກຜ ດີ (ການທຳຮ້າຍຮ່າງກາຍ ຫລື ການບາດເຈັບ). ການຂົ່ມເຫັງເດັກນ້ອຍຍັງມີຄວາມຫມາຍອີກວ່າ ການບໍ່ເອົາໃຈໃສ່ຕໍ່ເດັກນ້ອຍ ຫລື ການຝ່າຝືນຢູ່ພາຍໃນ ແລະນອກເຮືອນ ທີ່ໃຫ້ການເບິ່ງແຍງ.

(໒) ຫມວດ ໒ກຜ (໐ຂ) ຂອງກົດອາຊຍາກັມ ຣະບຸວ່າ :

(ຕໍ່)

ບຸຄຄະລະໃດນຶ່ງທີ່, ພາຍໃຕ້ສະຖານະການ ແລະ ສະພາບການຕ່າງໆທີ່ສາມາດສ້າງຄວາມບາດເຈັບອັນໃຫ່ຍຫລວງ ຫລື ຄວາມຕາຍໄດ້, ໄດ້ກະທຳ ຫລື ປະປ່ອຍ ໂດຍເຈຕະນາ ໃຫ້ເດັກນ້ອຍຄົນໃດຄົນນຶ່ງ ໄດ້ຮັບຄວາມທໍຣະມານ ຫລື ໄດ້ຮັບຄວາມເຈັບປວດທາງຮ່າງກາຍ ແລະ ຈິຕໃຈ ຢ່າງອະທິບາຍບໍ່ໄດ້ ແກ່ເດັກນ້ອຍຜູ້ນັ້ນ, ຫລືຜູ້ທີ່ມີການເບິ່ງແຍງ ຫລື ການປົກປັກຮັກສາ ເດັກນ້ອຍຜູ້ໃດຜູ້ນຶ່ງ ໄດ້ສ້າງ ຫລື ປະປ່ອຍ-ໂດຍເຈຕະນາ, ໃຫ້ເດັກນ້ອຍຜູ້ນັ້ນ ໄດ້ຮັບຄວາມບາດເຈັບ, ຫລື ໄດ້ສ້າງ ແລະປະປ່ອຍໂດຍເຈຕະນາ ໃຫ້ເດັກນ້ອຍຜູ້ນັ້ນຕົກຢູ່ໃນສະພາບ ທີ່ຈະນຳອັນຕລາຍ ມາສູ່ຮ່າງກາຍແລະສຸຂະພາບຂອງລາວ, ຈະໄດ້ຮັບໂທດໂດຍການກັກຂັງຕົວຢູ່ໃນຄຸກ ຂອງແຂວງບໍ່ເກີນ ນຶ່ງປີ, ຫລື ຢູ່ໃນເຮືອນຈຳຂອງຣັຖເປັນເວລາ ໒, ໓ ຫລື ໔ ປີ.

ບຸຄຄະລະໃດນຶ່ງທີ່, ພາຍໃຕ້ສະຖານະການ ແລະ ສະພາບການຕ່າງໆ ທີ່ສາມາດສ້າງຄວາມບາດເຈັບອັນໃຫຍ່ຫລວງ ຫລື ຄວາມຕາຍໄດ້, ໄດ້ກະທຳ ຫລື ປະປ່ອຍໂດຍ-ເຈຕະນາ ໃຫ້ເດັກນ້ອຍໃດນຶ່ງ ໃຫ້ໄດ້ຮັບຄວາມທໍຣະມານ, ຫລືໄດ້ສ້າງຄວາມເຈັບປວດທາງຮ່າງກາຍ ແລະ ຈິຕໃຈຢ່າງອະທິບາຍບໍ່ໄດ້ ແກ່ເດັກນ້ອຍຜູ້ນັ້ນ, ຫລືຜູ້ທີ່ມີການເບິ່ງແຍງ ແລະ ປົກປັກຮັກສາ ເດັກນ້ອຍໃດນຶ່ງ, ໄດ້ສ້າງຫລືປະປ່ອຍໂດຍເຈຕະນາ ໃຫ້ເດັກນ້ອຍຜູ້ນັ້ນ ຕົກຢູ່ໃນສະພາບ ທີ່ຈະນຳອັນຕລາຍມາສູ່ຮ່າງກາຍ ແລະສຸຂະພາບຂອງລາວ, ຈະ ຖືກຕັດສິນໂທດ ອາຊຍາກັມຊັ້ນຕົ້ນ.

໑໐໒໓໖໑ ການປະຕິເສດ ໃບອານຸຍາດ (ຕໍ່) ໑໐໒໓໖໑

(໓) ໝວດ ໒໗໓ (ດີ) ຂອງກົດອາຊະຍາກັມ ຣະບຸ :
ບຸຄຄະລະຜູ້ໃດ ທີ່ໂດຍເຈຕນາໄດ້ສ້າງ ຄວາມທຳຮ້າຍຮ່າງກາຍ ຫລື ບາດເຈັບອັນຮ້າຍກາດ ແລະ ໄຮ້ມະນຸສທັມ ແກ່ເດັກນ້ອຍໃນເງື່ອນໄຂ ທີ່ບໍ່ອາດຫລົງລືມໄດ້ ຈະໄດ້ຖືກກ່າວຫາໂທດ ອາຊະຍາກັມຊັ້ນສອງ ແລະ ເມື່ອມີການຕັດສິນຈະໄດ້ຖືກລົງໂທດ ໂດຍການກັກຂັງຕົວ ຢູ່ໃນເຮືອນຈຳຂອງຣັຖ ໃນເວລາ ໒, ໓ ຫລື ໔ປີ ຫລື ໃນຄຸກຂອງແຂວງ ບໍ່ເກີນນຶ່ງປີ.

(໔) ໝວດ ໑໔໓໑.໔ (ຊີ) ຂອງກົດຣະບຽບແຫ່ງ ສຸຂພາບ ແລະ ຄວາມປອດພັຍ ຣະບຸວ່າ :
ການຂົ່ມເຫັງເດັກນ້ອຍ ໝາຍເຖິງ ສະພາບການ ທີ່ເຮັດໃຫ້ເດັກນ້ອຍ ໄດ້ຮັບຄວາມທໍຣະມານຍ້ອນເຍື່ອງນຶ່ງ ຫລື ຫລາຍກ່ວານັ້ນ ຂອງສິ່ງທີ່ກ່າວຕໍ່ລົງໄປນີ້ :

ກ. ການສ້າງຄວາມບາດເຈັບອັນຮ້າຍແຮງ ໂດຍເຈຕະນາແກ່ຮ່າງກາຍຂອງເດັກນ້ອຍ.
ຂ. ສ້າງຄວາມເຈັບປວດຍ້ອນການ ຕັ້ງແກ້ງ ບໍ່ເອົາໃຈໃສ່ ຫລື ການລ້ຽງອາຫານການກິນບໍ່ດີ, ຫລື ຂົ່ມຂືນຊຳເລົາ.
ຄ. ປະປ່ອຍໃຫ້ຂາດ ສຸຂາພິບານ ພື້ນຖານ.
ງ. ສ້າງຄວາມບາດເຈັບໂດນເຈຕະນາ ແກ່ຈິຕໃຈ, ການບົວຣະບັດລະເລີຍ, ຫລືການບົວຣະບັດບໍ່ດີ ແກ່ເດັກນ້ອຍທີ່ມີອາຍຸ ຫລຸດ ໑໘ ປີ ໂດຍບຸກຄົນທີ່ມີຄວາມຮັບຜິດຊອບຕໍ່ສຸຂພາບຂອງເດັກ ທີ່ສແດງອອກໃຫ້ເຫັນວ່າ ສຸຂພາບ ຫລື ຄວາມສຸຂສະບາຍຂອງເດັກນ້ອຍ ໄດ້ຖືກທຳຮ້າຍ ຫລື ຂົ່ມຂູ່, ດັ່ງທີ່ໄດ້ບົ່ງໄວ້ ຢ່າງສອດຄ່ອງກັບກົດຣະບຽບທີ່ ທ່ານອະທິບໍດີ ບໍຣິການສັງຄົມ ໄດ້ວາງອອກ.
ຈ. ທຸກການກະທຳ ທີ່ເຮັດໃຫ້ເກີດມີ ການຝ່າຝືນ ສິດທິ ຫລື ຮ່າງກາຍ, ຈິຕໃຈ ຫລື ຄວາມສຸຂສະບາຍ ດ້ານທັມມະຈາຣິຍາ ຂອງເດັກນ້ອຍ ຫລື ຈະເປັນອັນຕລາຍ ແກ່ສຸຂພາບໃນປະຈຸບັນ ແລະ ໃນອະນາຄົດຂອງເດັກນ້ອຍ, ແກ່ເງື່ອນໄຂຂອງການເຕີບໃຫຍ່ ຂຍາຍຕົວປົກກະຕິ, ຫລື ຄວາມອາດສາມາດເພື່ອເປັນຕົວຕົນເອງ.

(໕) ບໍ່ມີຂໍ້ຈຳກັດແນວໃດ ທີ່ຈະໃຊ້ບັງຄັບຕໍ່ ຜູ້ມີໃບອານຸຍາດ ຫລື ຜູ້ມີຊື່ຢູ່ໃນໃບອານຸຍາດ ຍ້ອນເຫດຜົນແນວດຽວວ່າ ຜູ້ມີໃບອານຸຍາດ ໄດ້ຮັບຮູ້ຢ່າງເປັນລາຍລັກອັກສອນ ຫລື ໂດຍປາດເປົ່າວ່າຕົນເຄີຍປະຕິບັດ ກາຍະໂທດ, ຊຶ່ງບໍ່ຖືວ່າແມ່ນ ການຂົ່ມເຫັງເດັກນ້ອຍ ຕາມທີ່ບົ່ງຢູ່ໃນໝວດ ໑໑໑໖໔, ພາກຍ່ອຍ (ຈີ) ຂອງກົດອາຊະຍາກັມ, ຫລື ໝວດ ໑໔໓໑.໔ (ຊີ) ຂອງກົດຣະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍ, ຕໍ່ລູກຂອງຕົນເອງ.

(ຕໍ່)

(໑) ທຸກເວລາ ຖ້າພໍໄດ້, ຜູ້ມີໃບອານຸຍາດ ບໍ່ຄວນຈະປະຕິບັດ ກາຍະໂທດ ແກ່ລູກຂອງຕົນ ເອງ ຕໍ່ໜ້າເດັກນ້ອຍຜູ້ອື່ນ.

໑໐໔ມັຜມັ ການຍົກເລີກ ຫລື ຢຶດໃບອານຸຍາດ ຫລື ການລົງທະບຽນ ໑໐໔ມັຜມັ

(ກ) ທາງກະຊວງ ຈະມີສິດທຳການຢຶດ ຫລື ສັ່ງຍົກເລີກທຸກໃບອານຸຍາດ ຕາມທີ່ໄດ້ບົ່ງໄວ້ໃນກົດຣະບຽບ ແຫ່ງສຸຂພາບ ແລະ ຄວາມປອດພັຍ ໝວດ ໑໔ຜຝ.໒໘໔

(໑) ກົດຣະບຽບ ແຫ່ງສຸຂພາບ ແລະ ຄວາມປອດພັຍ ໝວດ ໑໔ຜຝ.໒໘໔ ໄດ້ຣະບຸໂດຍທົ່ວໄປວ່າ : ສິ່ງຕໍ່ໄປນີ້ ແມ່ນພື້ນຖານໃຊ້ສຳຫລັບການຢຶດ ຫລື ສັ່ງຍົກເລີກ :

ກ. ການລ່ວງລະເມີດຂອງຜູ້ຖືໃບອານຸຍາດ ຕໍ່ຂໍ້ບັນຍັດໃດນຶ່ງ ຂອງກົດຣະບຽບເບິ່ງແຍງເດັກນ້ອຍ ຫລືຕໍ່ຫລັກການ ແລະ ກົດຣະບຽບຕ່າງໆ ທີ່ໄດ້ວາງອອກໃນຂອບເຂດຂອງກົດຣະບຽບ ດັ່ງກ່າວ.

ຂ. ການຊ່ວຍເຫລືອ, ຍຸແຍ່, ຫລື ປະປ່ອຍໃຫ້ມີການລ່ວງລະເມີດ ຂໍ້ບັນຍັດໃດນຶ່ງຂອງກົດຣະບຽບ ເບິ່ງແຍງເດັກນ້ອຍ ຫລື ຂອງຫລັກການ ແລະ ກົດຣະບຽບຕ່າງໆ ທີ່ໄດ້ວາງອອກ ໃນຂອບເຂດຂອງກົດຣະບຽບດັ່ງກ່າວ.

ຄ. ດຳເນີນການບໍຣິການ ຫລື ຮັກສາສະຖານທີ່ ເບິ່ງແຍງເດັກນ້ອຍ ແບບເປັນພັຍແກ່ສຸຂພາບ, ທັມມະຈາຣິຍາ, ຄວາມສຸຂສະບາຍ ຫລື ຄວາມປອດພັຍຂອງບຸກຄົນໃດບຸກຄົນນຶ່ງ ທີ່ເປັນຜູ້ບໍຣິການ ຫລື ຜູ້ໄດ້ຮັບການບໍຣິການ ຈາກສະຖານທີ່ກໍຕາມ, ຫລື ຂອງຊຸມຊົນຂອງຣັຖຄາລີຟໍຣເນັຽ.

ງ. ຄຳຕັດສິນລົງໂທດ ຈາກສານຕໍ່ຜູ້ຖືໃບອານຸຍາດ, ຫລື ບຸກຄົນອື່ນທີ່ໄດ້ບົ່ງຢູ່ໃນໝວດ ໑໔ຜຝ.໒ກ໑ ຫມື່ນອື່ນ ບໍ່ວ່າໃນເວລາໃດກໍຕາມ ໃນຊ່ວງເວລາທີ່ຖືໃບອານຸຍາດສຳຫລັບການກໍອາຊະຍາກັມ ທີ່ໄດ້ບົ່ງໄວ້ໃນໝວດ ໑໔ຜຝ.໒ກ໑.

(໔) ກົດຣະບຽບ ແຫ່ງ ສຸຂພາບ ແລະ ຄວາມປອດພັຍ ໝວດ ໑໔ຜຝ.໒ກ໑ ໄດ້ຣະບຸໃນບາງສ່ວນວ່າ :

ກ. ທາງກະຊວງ ຈະທຳການພິຈາຣະນາ ໃນທຶກໂທດອາຊະຍາກັມ ເພື່ອລົງຄວາມເຫັນວ່າ ຜູ້ທີ່ຖືໃບອານຸຍາດ ຫລື ບຸກຄົນໃຫຍ່ຜູ້ອື່ນ ທີ່ຖືກຈາະຈົງ ເຄີຍໄດ້ຖືກຕັດສິນລົງໂທດ ສຳຫລັບອາຊະຍາກັມ ຫລື ບໍ່ ນອກເຫນືອໄປກ່ວາ ການລ່ວງລະເມີດ ກົດຈະຣາຈອນຂັ້ນນ້ອຍໆ.

ຂ. ທາງກະຊວງໄດ້ ອະທິບາຍ ການລ່ວງລະເມີດ ກົດຈະຣາຈອນຂັ້ນນ້ອຍໆ ວ່າແມ່ນການລ່ວງລະເມີດ ທີ່ຮັດໃຫ້ມີການປັບໃໝ $ ໔໐.໐໐ ຫລືນ້ອຍກ່ວານັ້ນ.

(ຝ) ກົດຣະບຽບ ແຫ່ງສຸຂພາບ ແລະ ຄວາມປອດພັຍ ໝວດ ໑໔ຜຝ.໒໘ຝ ຣະບຸວ່າ :

(ຕ)

ທ່ານອະທິບໍດີ ອາດຈະທຳການຢຶດ ທຸກໃບອານຸຍາດ, ໃບທະບຽນ ຫລື ໃບປາຕັງພິເສດ ກ່ອນທີ່ຈະມີການ ອຸທອນ ໃນເມື່ອ, ໃນຄວາມເຫັນຂອງທ່ານອະທິບໍດີ, ການກະທຳນັ້ນ ເປັນການຈຳເປັນ ເພື່ອປົກປັກຮັກສາ ເດັກນ້ອຍ ຄົນໃດຄົນນຶ່ງ ໃນສະຖານທີ່ເບິ່ງແຍງ ເດັກນ້ອຍ ຕໍ່ການຝ່າຝືນຮ່າງກາຍ ຫລື ຈິດໃຈ, ການປ່ອຍປະລະເລີຍ ຫລື ທານອື່ນໆ ອື່ນໆ ຢ່າງຮ້າຍແຮງຕໍ່ສຸຂພາບ ຫລື ຄວາມປອດພັຍ. ທ່ານອະທິບໍດີ ຈະໄດ້ແຈ້ງ ໃຫ້ຜູ້ ຖືໃບອານຸຍາດ, ຜູ້ທີ່ມີຊື່ລົງທະບຽນ ຫລື ຜູ້ຖືໃບປາຕັງພິເສດ ໃຫ້ຮູ້ເຖິງການຢຶດໃບອາ- ນຸຍາດ ຊົ່ວຄາວ ແລະ ວັນທີ ທີ່ຈະເລີ້ມການຖືກຢຶດ ແລະ ໃນເວລາດຽວກັນນັ້ນ ຈະໄດ້ ແຈ້ງໃຫ້ຮູ້ເຖິງຂໍ້ກ່າວຫາ. ເມື່ອໄດ້ຮັບຈົດໝາຍ ປ້ອງກັນຕົວຕໍ່ຂໍ້ກ່າວຫາ ຈາກຜູ້ຖື ໃບ ອານຸຍາດ, ມີຊື່ລົງທະບຽນ ຫລື ຜູ້ຖືໃບປາຕັງພິເສດ, ທ່ານອະທິບໍດີ, ພາຍໃນເວລາ ໑໔ ວັນ, ຈະໄດ້ຈັດໃຫ້ມີການພິຈາຣະນາຄຳອຸທອນຂັ້ນ ແລະ ການພິຈາຣະນາຈະຕ້ອງ ມີໄວທີ່ຈະໄວໄດ້, ແຕ່ບໍ່ໃຫ້ເກີນ ໓໐ ວັນ ຫລັງຈາກໄດ້ຮັບໜັງສືອຸທອນ. ການຢຶດໃບ ອານຸຍາດຊົ່ວຄາວນັ້ນ ຈະມີປະສິດທິພາບໃຊ້ໄດ້ຈົນກ່ວາ ການພິຈາຣະນາຄຳອຸທອນ ສຳ ເຣັດລົງ ແລະ ທ່ານອະທິບໍດີ ໄດ້ເຣັດຄຳຕົກລົງສຸດທ້າຍ ກ່ຽວກັບຄວາມເໝາະສົມ. ຢ່າງໃດກໍຕາມ, ການຢຶດໃບອານຸຍາດຊົ່ວຄາວ ຈະຖືວ່າຕົກໄປ ຖ້າທ່ານອະທິບໍດີ ທາກລະ- ເລີຍ ບໍ່ເອົາຄຳຕົກລົງກ່ຽວກັບ ການເໝາະສົມພາຍໃນ ໓໐ ວັນຫລັງຈາກການ ພິຈາ ຣະນາ ຄຳອຸທອນຄັ້ງທຳອິດ ໄດ້ສິ້ນສຸດລົງໄປ.

໑໐໘ມັນ໔ ການຮ້ອງທຸກຂອງຜູ້ຖື ໃບອານຸຍາດ ຫລື ຜູ້ມີຊື່ລົງທະບຽນ ໑໐໘ມັນ໔

(ກ) ຜູ້ຖືໃບອານຸຍາດ ຫລື ຜູ້ມີຊື່ລົງທະບຽນ ແຕ່ລະຄົນຈະຕ້ອງມີສິດ, ໂດຍປາສຈາກການລຳອຽງ ຫລື ການກະທຳແບບແບ່ງແຍກພັກພວກ ຈາກຫ້ອງການອອກໃບອານຸຍາດ, ຍື່ນຍົກຂຶ້ນສເນີຕໍ່ ອົງການອອກໃບອານຸຍາດ ທຸກການກະທຳ ຫລື ຄວາມປະພຶດຂອງຜູ້ຕາງໜ້າ ຂອງອົງການ ທີ່ ລາວເຊື່ອວ່າ ແມ່ນການປະຕິບັດ ໄປໃນທາງຜິດຂອງກິດຣະບຽບ ເຫລົ່ານີ້ ຫລື ການໃຊ້ມາຕ ການ ດັ່ງກ່າວແບບປ່ຽນແປງໃຈງ່າຍ.

(ຂ) ຜູ້ຖືໃບອານຸຍາດ ຫລື ຜູ້ມີຊື່ລົງທະບຽນ ຈະຕ້ອງມີສິດ ທຳການຮ້ອງທຸກ ຕໍ່ຫ້ອງການອອກໃບ ອານຸຍາດ ກ່ຽວກັບການທົບທວນເບິ່ງ ທຸກບັນຫາທີ່ບໍ່ເຂົ້າໃຈກັນ.

໑໐໘ມັນ໕ ເຈົ້າໜ້າທີ່ກວດກາ ໑໐໘ມັນ໕

(ກ) ສອດຄ່ອງກັບຂໍ້ບັງຄັບ ຂອງກິດຣະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍ ໝວດ ໑໔ພກ.໕໕ :

(໑) ຜູ້ຖືໃບອານຸຍາດຈະຕ້ອງ ອານຸຍາດໃຫ້ ຫ້ອງການອອກໃບອານຸຍາດ ທຳການກວດກາ ສະຖານທີ່ ເພື່ອໃຫ້ຖືກຕ້ອງຕາມ ຫລື ເພື່ອປ້ອງກັນການລ່ວງລະເມີດ ກົດໝາຍ ຫລືກົດ ຣະບຽບຂອງການເບິ່ງແຍງເດັກນ້ອຍຢູ່ກັບເຮືອນ ໃນຊ່ວງໂມງທຳງານທັມມະດາຂອງສະ ຖານທີ່ ຫລື ໃນເວລາໃດກໍໄດ້ ຕາບໃດທີ່ມີການບໍຣິການ ການເບິ່ງແຍງເດັກນ້ອຍ ຢູ່ໃນ ສະຖານທີ່ແຫ່ງນັ້ນ.

(໒) ຜູ້ຖືໃບອານຸຍາດ ຈະຕ້ອງອານຸຍາດໃຫ້ຫ້ອງການ ອອກໃບອານຸຍາດ ກວດກາ ທຸກພາກສ່ວນ ຂອງສະຖານທີ່ ທີ່ເປັນບ່ອນໃຊ້ ບໍຣິການ ການເບິ່ງແຍງເດັກນ້ອຍ ຫລື ບ່ອນທີ່ເດັກນ້ອຍ ເຂົ້າເຖິງ.

໑໐໘ມັນ໖ ການຢ້ຽມຢາມ ສະຖານທີ່ ໑໐໘ມັນ໖

(ກ) ການຢ້ຽມຢາມສະຖານທີ່ ເບິ່ງແຍງເດັກນ້ອຍຢູ່ກັບເຮືອນ ທີ່ໄດ້ຮັບອານຸຍາດແລ້ວນັ້ນ ຈະຕ້ອງ ໄດ້ເຮັດຂຶ້ນຢ່າງສອດຄ່ອງ ກັບກິດຣະບຽບແຫ່ງ ສຸຂພາບ ແລະ ຄວາມປອດພັຍ ໝວດ ໑໔ພກ.໕໕

ກິດຣະບຽບ ແຫ່ງ ສຸຂພາບແລະຄວາມປອດພັຍ ໝວດ ໑໔ພກ.໕໕ ຣະບຸໂດຍທົ່ວໄປວ່າ : ບໍ່ມີການຢ້ຽມຢາມສະຖານທີ່ ຫລື ການຢ້ຽມຢາມສະຖານທີ່ ໂດຍບໍ່ໄດ້ແຈ້ງໃຫ້ຮູ້ ກ່ອນລ່ວງໜ້າ ຫລື ການກວດສະຖານທີ່ ຈະເຮັດຂຶ້ນໄດ້ ເວັ້ນເສັຍແຕ່ວ່າ ຕາມທີ່ໄດ້ຣະບຸໄວ້ໃນໝວດນີ້ :

(໑) ການຢ້ຽມຢາມສະຖານທີ່ ຈະຕ້ອງໃຫ້ມີກ່ອນ ຈະອອກໃບອານຸຍາດຂັ້ນຕົ້ນ ໃຫ້ແກ່ຜູ້ຍື່ນ ຄຳຮ້ອງ

(ຕໍ່)

(໒) ການຢ້ຽມຢາມ ໂດຍບໍ່ໄດ້ແຈ້ງໃຫ້ຮູ້ກ່ອນລ່ວງໜ້າ ຈະຕ້ອງໄດ້ມີ ສຳຫລັບການຕໍ່ອາຍຸຂອງໃບອານຸຍາດ.

(ມ) ທາງກະຊວງ ຫລື ຫ້ອງການອອກໃບອານຸຍາດ ຈະທຳການຢ້ຽມຢາມ ໂດຍບໍ່ມີການແຈ້ງລ່ວງໜ້າ ບົນພື້ນຖານຂອງການຮ້ອງຟ້ອງ ແລະ ການຢ້ຽມຢາມ ເພື່ອຕິດຕາມດັ່ງທີ່ໄດ້ຣະບຸໃວ້ ໃນກົດຣະບຽບແຫ່ງສຸຂພາບ ແລະ ຄວາມປອດພັຍ ໝວດ ໑໔ພກ.໔ຜ

(໔) ນອກເໜືອຈາກການຢ້ຽມຢາມ ສະຖານທີ່ ຫລື ການຕຣວດສະຖານທີ່ ທີ່ອານຸຍາດໃນໝວດນີ້ແລ້ວ ທາງກະຊວງຍັງຈະທຳການ ຢ້ຽມຢາມໂດຍບໍ່ຕ້ອງແຈ້ງລ່ວງໜ້າອີກ ໃນອັດຕຣາສ່ວນ ໑໐ % ຂອງຈຳນວນສະຖານທີ່ທັງໝົດ ທີ່ບໍຣິການເບິ່ງແຍງເດັກນ້ອຍຢູ່ກັບເຮືອນ ທີ່ໄດ້ຮັບອານຸຍາດ ພາຍໃຕ້ມາຕຣານີ້. ການຢ້ຽມຢາມໂດຍບໍ່ແຈ້ງລ່ວງໜ້ານັ້ນ ອາດສາມາດເຮັດໄດ້ທຸກເວລາ, ນັບລວມທັງຕອນ ທີ່ກຳລັງຮ້ອງຂໍຕໍ່ໃບອານຸຍາດໃໝ່.

(ຂ) ການຢ້ຽມຢາມ ສະຖານທີ່ເບິ່ງແຍງເດັກນ້ອຍຢູ່ກັບເຮືອນ ທີ່ໄດ້ລົງທະບຽນນັ້ນ ຈະຕ້ອງກະທຳຂຶ້ນໂດຍ ຖືກຕ້ອງຕາມກົດຣະບຽບ ແຫ່ງສຸຂພາບ ແລະ ຄວາມປອດພັຍ ໝວດ ໑໔ພກ.ຜ໒ (ດີ) ແລະ (ອີ).

ມາຕຣາ ໔. (ສງວນໃວ້)

ມາຕຣາ ໖. ມາຕການປະຈຳ

໑໐໒໔໑໖.໔ ຈຳນວນພາກສ່ວນພນັກງານ ແລະ ຄວາມສາມາດຮັບເອົານັກຮຽນ

(ກ) ຈຳນວນເດັກນ້ອຍສູງສຸດ, ລວມທັງລູກຂອງຜູ້ຖືໃບອານຸຍາດເອງ ທີ່ມີອາຍຸຕ່ຳກ່ວາ ໑໒ ປີ, ທີ່ວ່າຈະໄດ້ຮັບການເບິ່ງແຍງຢູ່ໃນເຮືອນ ເວລາບໍ່ມີຜູ້ຊ່ວຍ ບໍຣິການນັ້ນ ຈະຕ້ອງແມ່ນ ອັນໃດອັນນຶ່ງດັ່ງນີ້ :

(໑) ທາຣົກ (ເດັກອ່ອນ) ໔ ຄົນ.

(໒) ເດັກນ້ອຍ ໖ ຄົນ, ຊຶ່ງໃນຈຳນວນນີ້ ບໍ່ໃຫ້ມີທາຣົກ ເກີນ ໓ ຄົນ.

(ຂ) ຈຳນວນເດັກນ້ອຍສູງສຸດ, ລວມທັງລູກຂອງຜູ້ຖືໃບອານຸຍາດ ແລະ ຂອງຜູ້ຊ່ວຍບໍຣິການ ຕ່ຳກ່ວາ ໑໒ ປີ, ທີ່ຈະໄດ້ຮັບການເບິ່ງແຍງ ຢູ່ໃນເຮືອນເວລາ ມີຜູ້ຊ່ວຍບໍຣິການ ຈະຕ້ອງ - ແມ່ນ ໑໒ ຄົນ, ຊຶ່ງໃນຈຳນວນນີ້ ບໍ່ໃຫ້ມີ ທາຣົກເກີນ ໔ ຄົນ.

(ຄ) ສະຖານທີ່ບໍຣິການເບິ່ງແຍງເດັກນ້ອຍຢູ່ກັບເຮືອນນັ້ນ ຈະຕ້ອງມີຄວາມອາດສາມາດຮັບເອົາເດັກນ້ອຍໄດ້ ໑໒ ຄົນ ຖ້າວ່າຈຳນວນອັດຕຣາສ່ວນ ພນັກງານຫາກຖືກຕ້ອງ.

(ງ) ຄວາມອາດສາມາດ ທີ່ໄດ້ບົ່ງຢູ່ໃບອານຸຍາດ ຈະຕ້ອງແມ່ນຈຳນວນ ສູງສຸດຂອງເດັກນ້ອຍ ທີ່ຈະໄດ້ຮັບການເບິ່ງແຍງ.

໑໐໒໔໑໗ ການປະຕິບັດງານ ຂອງການເບິ່ງແຍງເດັກນ້ອຍຢູ່ກັບເຮືອນ.

(ກ) ຜູ້ຖືໃບອານຸຍາດ ຫລື ຜູ້ມີຊື່ລົງທະບຽນ ຈະຕ້ອງປະຈຳຢູ່ເຮືອນ ແລະ ຮັບປະກັນວ່າເດັກນ້ອຍໄດ້ຮັບການດູແລຢູ່ຕລອດເວລາ ໃນຊ່ວງເວລາທີ່ເດັກນ້ອຍ ໄດ້ຮັບການບໍຣິການຢູ່, ເວັ້ນເສັຍແຕ່ວ່າ ເມື່ອມີສະຖານະການບັງຄັບໃຫ້ຜູ້ກ່ຽວຫນີອອກໄປຊົ່ວຄາວ - ຜູ້ຖືໃບອານຸຍາດ ຫລື ຜູ້ທີ່ມີຊື່ລົງທະບຽນ ຈະຕ້ອງຈັດຫາຜູ້ໃຫຍ່ເປັນຕົວແທນ ເພື່ອເບິ່ງແຍງ ແລະ ຄວບຄຸມເດັກນ້ອຍໃນເວລາທີ່ ຜູ້ກ່ຽວບໍ່ຢູ່ - ການຫນີອອກໄປຊົ່ວຄາວນີ້ ຈະຕ້ອງບໍ່ໃຫ້ເກີນ ອັດຕຣາສ່ວນ ໒໐% ຂອງຈຳນວນຊົ່ວໂມງ ທີ່ສະຖານທີ່ ທຳການດູແລເດັກນ້ອຍແຕ່ລະມື້.



ERIC Full Text Provided by ERIC

(ຕໍ່)

(ຂ) ເຮືອນທີ່ເປີດບໍລິການ ຈະຕ້ອງຮັກສາໃຫ້ສອາດ ແລະ ເປັນລະບຽບດີ, ພ້ອມທັງໃຫ້ມີຄວາມອຸ່ນ ແລະ ການຖ່າຍເທອາກາດ ທັງນີ້ເພື່ອຄວາມປອດພັຍ ແລະ ຄວາມສອວກສບາຍ.

(ຄ) ເຮືອນຈະຕ້ອງມີ ໂທຣະສັພໄວ້ບໍລິການ

(ງ) ເຮືອນຈະຕ້ອງ ອຳນວຍໃຫ້ມີເຄື່ອງຫລິ້ນ, ອຸປກອນການຫລິ້ນ ແລະ ເຄື່ອງມືອັນບໍ່ເປັນອັນຕລາຍ.

(ຈ) ເວລາເດັກນ້ອຍຄົນໃດ ຄົນນຶ່ງສແດງອອກມາໃຫ້ເຫັນເຖິງອາການ ບໍ່ສບາຍເດັກນ້ອຍຄົນນັ້ນຕ້ອງຖືກແຍກອອກຈາກເດັກນ້ອຍຄົນອື່ນໆ ແລະ ອາການເຈັບຕ້ອງຈຳແນກອອກໃຫ້ຮູ້. ຖ້າວ່າ ອາການເຈັບນັ້ນແມ່ນ ພຍາດຕິດແປດ ເດັກທີ່ເຈັບນັ້ນຈະຕ້ອງຖືກແຍກອອກຈາກເດັກຄົນອື່ນໆ ຈົນກ່ວາຣະດັບການຕິດແປດຂອງພຍາດນັ້ນຈະຜ່ານພົ້ນໄປ,

(ສ) ຖ້າວ່າມີອາຫານ ທີ່ນຳມາຈາກເຮືອນຂອງເດັກ, ແອບ ຫລື ກັບໃສ່ອາຫານນັ້ນ ຈະຕ້ອງໄດ້ຂຽນຊື່ເດັກນ້ອຍໃສ່ປ້າຍຕິດໄວ້ ແລະ ເກັບມ້ຽນໄວ້ຢ່າງຖືກຕ້ອງ ຫລືເອົາບັນຈຸໄວ້ໃນຕູ້ເຢັນ.

(ຊ) ເຮືອນບໍລິການຈະຕ້ອງ ປາສຈາກການເພພັງ ຫລື ສະພາບການທີ່ ອາດຈະນຳອັນຕລາຍມາສູ່ເດັກ. ຄວາມຣະມັດຣະວັງ ໃນດ້ານຄວາມປອດພັຍ ຈະຕ້ອງລວມທັງສິ່ງດັ່ງຕໍ່ໄປນີ້, ແຕ່ບໍ່ແມ່ນ ຈະຈຳກັດ ແຕ່ :

໑໐໒໔ຈກ ການປະຕິບັດງານຂອງການເບິ່ງແຍງເດັກນ້ອຍຢູ່ກັບເຮືອນ ໑໐໒໔ຈກ

(໑) ເຕົາໄຟ ແລະ ເຄື່ອງເຮັດອາຍອຸ່ນ ແບບເປີດໜ້າ ຄວນຈະຕ້ອງມີແຜ່ນຕາໜ່າງກັ້ນໄວ້ ເພື່ອປ້ອງກັນບໍ່ໃຫ້ເດັກນ້ອຍເຂົ້າເຖິງໄດ້. ໃນເຮືອນຈະຕ້ອງມີເຄື່ອງມອດໄຟ ແລະ ເຄື່ອງສັນຍານຄວນໄຟ ຫລືທັງສອງຢ່າງ, ທີ່ໄດ້ມາຕຖານວາງອອກໂດຍ ກົມດັບເພີງຂອງຣັຖ.

(໒) ເຄື່ອງເຮັດອາຍອຸ່ນທີ່ໃຊ້ແກສ ຄວນຈະຕ້ອງມີລົມລ່ວງດີ ແລະ ຕິດຕັ້ງຢ່າງຖາວອນ.

(໓) ໃນບ່ອນທີ່ ເດັກນ້ອຍອາຍຸຕ່ຳກ່ວາ ໔ ປີຖືກເບິ່ງແຍງ, ຂັ້ນໃດທຸກບ່ອນຈະຕ້ອງມີພະນັກ ຫລື ປິດ-ອ້ອມໄວ້.

(໔) ຢາເບື່ອ, ສະບູ, ສ່ວນປະສົມທຳຄວາມສອາດ, ຢາທຸກຊນິດ, ປືນ ແລະ ເຄື່ອງຂອງປະເພດ ທີ່ຈະເປັນອັນຕລາຍອື່ນໆ ທີ່ເດັກນ້ອຍຈະຍັ້ງເຖິງ ຄວນຈະຕ້ອງເກັບມ້ຽນໄວ້ໃນບ່ອນທີ່ເດັກນ້ອຍເຂົ້າ-ເຖິງບໍ່ໄດ້.

(ກ) ບ່ອນເກັບມ້ຽນຢາເບື່ອ, ປືນ ແລະ ອາວຸດທີ່ເປັນອັນຕລາຍອື່ນໆ ຄວນຈະຕ້ອງໃສ່ກຸນແຈໄວ້.

(ຂ) ແທນທີ່ຈະໃສ່ກຸນແຈບ່ອນເກັບມ້ຽນປືນໄວ້. ຜູ້ຖືໃບອານຸຍາດ ອາ.ຈະໃຊ້ເຄື່ອງລັອກໄກ ຫລືເອົາກະສອບລູກປືນອອກໄວ້ບ່ອນອື່ນ.

໑. ກະສອບລູກປືນຄວນຈະຕ້ອງ ເອົາມ້ຽນແລະໃສ່ກຸນແຈໄວ້ຕ່າງຫາກ ກັບປືນ.

(ຄ) ລູກປືນຄວນຈະຕ້ອງເກັບມ້ຽນ ແລະ ໃສ່ກຸນແຈໄວ້ຕ່າງຫາກ ກັບປືນ.

(໕) ທຸກສະອາບນ້ຳທີ່ຈະລົງໃນດິນ ຄວນຈະຕ້ອງມີຮົ້ວອ້ອມ ທີ່ມີລວງສູງຢ່າງນ້ອຍ ໔ ຟຸດ ຫລືເຄື່ອງ-ປົກປິດ ທີ່ຖືກກວດກາ ແລະ ຮັບຮອງຈາກຫ້ອງການ ອອກໃບອານຸຍາດ. ຮົ້ວອ້ອມສະນັ້ນ ຄວນຈະຕ້ອງເຮັດໃນກຳນອງ ທີ່ບໍ່ບັງຈາກສາຍຕາ, ບໍ່ໃຫ້ເດັກນ້ອຍປີນໄດ້ງ່າຍ ແລະໃຫ້ມີໄລປິດເອງ ຢູ່ເບື້ອງເທິງຂອງປະຕູ. ຖ້າໃຊ້ຝາປົກສະ, ຝານັ້ນຄວນຈະຕ້ອງແຂງແຮງພຽງພໍ ເພື່ອຮັບປະກັນນ້ຳໜັກຂອງຄົນໃຫ່ຍ ໄດ້ຢ່າງເຕັມປ່ຽມ.

(໖) ເດີ່ນຫລິ້ນນອກເຮືອນຈະຕ້ອງຖືກ ຫລືວ່າລ້ອມຮົ້ວ ຫລືວ່າ ເບິ່ງແຍງໂດຍຜູ້ຖືໃບອານຸຍາດ ຫລື ຜູ້ທີ່ໃຫ້ຄວາມເບິ່ງແຍງ.

(໗) ບັດທີ່ບອກລາຍຣະອຽດ ເມື່ອເວລາສຸກເສີນ ຈະຕ້ອງຖືກຮັກສາໄວ້ສຳຫລັບ ເດັກນ້ອຍແຕ່ລະຄົນ ແລະໃນນັ້ນຈະຕ້ອງມີຊື່ ຄົບຖ້ວນຂອງເດັກນ້ອຍ, ເລກໂທຣະສັພ ແລະ ສະຖານທີ່ຂອງພໍ່ແມ່ ຫລືຜູ້ຮັບຜິດຊອບອື່ນໆ ເພື່ອຕິດຕໍ່ໃນເວລາທີ່ເກີດເຫດສຸກເສີນ, ຊື່ແລະເລກໂທຣະສັພຂອງ ທ່ານໝໍປະຈຳຕົວເດັກນ້ອຍ ແລະ ຄຳອານຸຍາດຈາກພໍ່ແມ່ໃຫ້ແກ່ຜູ້ຖືໃບອານຸຍາດ ຫລື ຜູ້ທີ່ມີຊື່ລົງທະບຽນ ເພື່ອນຳເອົາເດັກໄປຮັກສາພຍາບານ ໃນກໍຣະນີສຸກເສີນ.

(ຕໍ່)

(ຊ) ສະຖານທີ່ບໍລິການເບິ່ງແຍງເດັກນ້ອຍ ທຸກໆແຫ່ງຄວນຈະມີແບບແຜນ ເພື່ອປະຕິບັດເວລາເກີດພັຍທັມມະຊາຕ ທີ່ຂຽນໃສ່ແບບຟອມ ທີ່ໄດ້ຮັບຄວາມເຫັນດີ ຈາກຫ້ອງການອອກໃບອານຸຍາດ. ເດັກນ້ອຍທຸກຄົນ, ບໍ່ກ່າວເຖິງ ອາຍຸ ແລະ ຂີດຂັ້ນຄວາມສາມາດ, ຜູ້ໃຫ້ການເບິ່ງແຍງ ແລະ ຜູ້ຊ່ວຍ, ແລະ ສະມາຊິກອື່ນໆ ໃນຄອບຄົວຈະຕ້ອງ ໄດ້ຮຽນຮູ້ເຖິງ ພາລະໜ້າທີ່ຂອງພວກເຂົາ ພາຍໃຕ້ແຜນຫລົບພັຍທັມມະຊາຕ. ເວລາເດັກນ້ອຍຄົນໃໝ່ຖືກບັນຈຸເຂົ້າຕື່ມ, ບໍ່ກ່າວເຖິງ ອາຍຸ ແລະ ຂີດຂັ້ນຄວາມສາມາດ, ພວກເຂົາຈະຕ້ອງໄດ້ຖືກບອກສອນ ຢ່າງທັນທີກ່ຽວກັບ ພາລະໜ້າທີ່ຂອງເຂົາຕາມທີ່ໄດ້ບົ່ງໄວ້ ໃນແຜນຫລົບພັຍທັມມະຊາຕ.

## ໑໐໒໔໑໙ ຫລັກການ ກ່ຽວກັບການບັນຈຸ ໑໐໒໔໑໙

(ກ) ພາຍໃນ ໓໐ ວັນທີໄດ້ຮັບເທື່ອທຳອິດ ຈາກທາງກະຊວງ ວັນນະກັມຕ່າງໆ ກ່ຽວກັບການປ້ອງກັນການຂົ່ມເຫງເດັກນ້ອຍ, ຜູ້ຖືໃບອານຸຍາດ ຈະຕ້ອງແຈກຢາຍ ວັນນະກັມນັ້ນໃຫ້ພໍ່ແມ່ຂອງເດັກນ້ອຍ, ທຸກໆຄົນ ທີ່ໄດ້ຮັບການເບິ່ງແຍງ ຢູ່ໃນສະຖານທີ່ແຫ່ງນັ້ນ.

(໑) ຜູ້ຖືໃບອານຸຍາດ ຄວນຈະຕ້ອງຮ້ອງຂໍໃຫ້ ພໍ່ແມ່ເຊັນຊື່ ແລະ ລົງວັນທີໃສ່ໃນໃບຮັບ ອັນໃດອັນນຶ່ງ ໃຫ້ວ່າພໍ່ແມ່ໄດ້ຮັບ ແລະ ໄດ້ອ່ານວັນນະກັມນັ້ນ.

## ໑໐໒໔໒໑ ໃບບັນທຶກຂອງເດັກ ໑໐໒໔໒໑

(ກ) ຜູ້ຖືໃບອານຸຍາດ ຄວນຈະຕ້ອງ ເກັບຮັກສາໄວ້ຢູ່ໃນສະຖານທີ່ບໍຣິການ ໃບຮັບທີ່ມີລາຍເຊັນ ແລະ ວັນທີ ຈາກພໍ່ແມ່ຂອງເດັກ ທີ່ຮັບຮູ້ວ່າຕົນໄດ້ຮັບວັນນະກັມກ່ຽວກັບ ການປ້ອງກັນການຂົ່ມເຫງເດັກນ້ອຍ ຕາມທີ່ໄດ້ບົ່ງໄວ້ໃນໝວດ ໘໘໐ຜ໘.

(໑) ຖ້າຫາກພໍ່ແມ່ບໍ່ຍອມເຊັນຊື່ ໃສ່ໃນໃບຮັບກ່ຽວກັບວັນນະກັມນັ້ນ, ໃບລາຍງານສະເພາະບັນທານີ້, ລົງວັນທີ, ມີຊື່ ແລະ ເລກໂທຣະສັພຂອງພໍ່ແມ່, ຄວນຈະຕ້ອງເກັບໄວ້ກັບໃບຮັບ.

(໒) ໃບຮັບທີ່ມີລາຍເຊັນ ແລະ ໝາຍວັນທີ ແລະ ໃບລາຍງານຄວນຈະຕ້ອງເກັບຮັກສາໄວ້ຢ່າງນ້ອຍ ໓ ປີ ຫລັງຈາກການສິ້ນສຸດ ການບໍຣິການແກ່ເດັກນ້ອຍ.

## ໑໐໒໔໒໓ ສິດທິ ສ່ວນບຸຄຄົນ ໑໐໒໔໒໓

(ກ) ເດັກແຕ່ລະຄົນ ທີ່ໄດ້ຮັບການບໍຣິການ ຈາກສະຖານທີ່ເບິ່ງແຍງເດັກນ້ອຍຢູ່ກັບເຮືອນ ມີສິດທິຈຳນວນນຶ່ງ ທີ່ບໍ່ສາມາດຍົກເວັ້ນ ຫລື ລ່ວງລະເມີດ ຈາກຜູ້ຖືໃບອານຸຍາດ ຫລື ຜູ້ທີ່ມີຊື່ລົງທະບຽນ ໄດ້ໂດຍການອ້າງອີງວ່າ ໄດ້ຮັບຄວາມສົມຍອມ ຫລື ອານຸຍາດຈາກພໍ່ແມ່. ສິດທິເຫລົ່ານີ້ ແມ່ນນັບລວມ, ບໍ່ແມ່ນຈະຈຳກັດແຕ່ສິ່ງ ຕໍ່ໄປນີ້ :

(໑) ໄດ້ຮັບການປະຕິບັດຢ່າງມີກຽດ ໃນການພົວພັນຂອງເຂົາ/ລາວ ກັບພນັກງານ ແລະ ບຸຄຄົນອື່ນໆ.

(໒) ໄດ້ຮັບບ່ອນພັກເຊົາ ທີ່ສດວກ ສບາຍ, ເຄື່ອງໃຊ້ ແລະ ອຸປກອນຕ່າງໆ ທີ່ປອດພັຍ ແລະ ຖືກຕ້ອງຕາມຫລັກອານາມັຍ.

(໓) ໄດ້ຖືກ ຜູ້ຖືໃບອານຸຍາດ ແຈ້ງໃຫ້ພໍ່ແມ່ຂອງຕົນຊາບ ກ່ຽວກັບຂໍ້ບັງຄັບ ຂອງກົດໝາຍວ່າດ້ວຍການຮ້ອງທຸກ ຫລືຕໍ່ວ່າຕໍ່ຂານ ແລະ ຣະບຽບການ ສຳຫລັບການບັນທຶກ ຄວາມຕໍ່ວ່າ ທີ່ຖືວ່າເປັນຄວາມລັບ, ລວມທັງ ບໍ່ແມ່ນແຕ່ຈະຈຳກັດ ແຕ່ທີ່ຢູ່ ແລະ ເລກໂທຣະສັພຂອງຫ້ອງການທີ່ອອກໃບອານຸຍາດເທົ່ານັ້ນ.





ERIC Full Text Provided by ERIC

(ຕໍ່)

(໔) ບໍ່ໄດ້ຮັບການລົງໂທດ ທາງດ້ານຮ່າງກາຍ ທີ່ຜິດປົກກະຕິ, ການຫຍໍ້ຫຍັນ, ການຂົ່ມເຫັງ ທາງດ້ານຈິດໃຈ ຫລື ການລົງໂທດໃນຮູບແບບ ທີ່ພົວພັນເຂົ້າໃນການຢູ່ກິນປະຈຳວັນ ເຊັ່ນ ວ່າ ການກິນ, ການນອນ ແລະ ການອານາມັຍ

(ຂ) ພໍ່ແມ່, ຜູ້ດູແລທີ່ເປັນທາງການ ຫລື ຜູ້ຕາງໜ້າທີ່ໄດ້ຮັບອານຸຍາດ ຂອງເດັກນ້ອຍ ທີ່ໄດ້ຮັບການ ເບິ່ງແຍງ ຈະຕ້ອງໄດ້ຮັບເອກະສານ ຮຽນຮູ້ ແລະ ລາຍລະອຽດຂອງຜູ້ອຸ່ນໃຊ້ ຈາກຜູ້ຖືໃບອານຸຍາດ ຫລື ຜູ້ທີ່ມີຊື່ລົງທະບຽນ. ເອກະສານດັ່ງກ່າວ ແມ່ນພິມເຜີຍແຜ່ ໂດຍກະຊວງ ແລະແຈກ ຢາຍໃຫ້ແກ່ຜູ້ຖືໃບອານຸຍາດ ແລະ ຜູ້ທີ່ມີຊື່ລົງທະບຽນ ໂດຍຫ້ອງການ ອອກໃບອານຸຍາດ.

ມາດຕາ ກ. ສະຖານທີ່ເບິ່ງແຍງເດັກນ້ອຍ (ສງວນໄວ້)



ERIC Full Text Provided by ERIC

## ການເບິ່ງແຍງເດັກນ້ອຍຢູ່ກັບເຮືອນ

(ຕົວຢ່າງ ແບບຟອມ : ໃບບັນທຶກ ອາຊະຍາກັມ)

STATE OF CALIFORNIA — HEALTH AND WELFARE AGENCY

DEPARTMENT OF SOCIAL SERVICES

**FAMILY DAY CARE**
**CRIMINAL RECORD STATEMENT**

**INSTRUCTIONS:** *This form must be completed by each individual over the age of 18 who resides in the proposed Family Day Care Home or would function as a Caregiver, Assistant or co-Caregiver in the Family Day Care Home. Submit with fingerprint cards to licensing agency.*

Have you been convicted of a crime, other than a minor traffic violation for which the fine was $50.00 or less?

☐ Yes ☐ No

If yes, please provide the licensing agency with a signed statement indicating the nature and circumstances of the crime(s).

*I declare under penalty of perjury that I have read and understand the information contained on this sheet and that my responses and accompanying attachments are true and correct.*

| SIGNATURE | DATE |
|---|---|
| | |

LIC 279A (8/82) (PERSONAL)



ERIC Full Text Provided by ERIC

(ຕົວຢ່າງ ແບບຟອມ : ຄຳຮ້ອງຂໍ ໃບອານຸຍາດ ເພື່ອເບິ່ງແຍງເດັກອ່ອນຢູ່ກັບເຮືອນ)

STATE OF CALIFORNIA – HEALTH AND WELFARE AGENCY

DEPARTMENT OF SOCIAL SERVICES

# APPLICATION FOR FAMILY DAY CARE LICENSE

*INSTRUCTIONS: THIS FORM IS INTENDED FOR USE BY APPLICANT(S) TO OPERATE A FAMILY DAY CARE HOME. TYPE OR PRINT CLEARLY.*

## IDENTIFYING INFORMATION

NAME ______________________ OVER 18 YEARS OLD ☐ YES ☐ NO

ADDRESS ______________________

TELEPHONE ( )

## OTHERS IN HOME

| NAME | AGE | RELATIONSHIP |
| --- | --- | --- |
| | | |
| | | |
| | | |
| | | |
| | | |
| | | |

## OPERATIONAL INFORMATION

REQUESTED CAPACITY ______________________

I/WE HEREBY CERTIFY THAT I/WE:

A. Have sufficient financial resources to maintain the standards of service required by statutes and regulations to operate a family day care home. *(initial application only)*

B. Have attached fingerprint cards for myself/ourselves. *(initial application only)*

C. Have attached evidence of a negative tuberculosis clearance for all care providers. *(initial application only)*

D. Have a fire extinguisher and/or a smoke detector device in my/our family day care home which meets standards established by the State Fire Marshal *(initial and renewal application)*

E. Have submitted or attached fingerprint cards for all other adults that reside in my/our family day care home. *(initial and renewal application)*

F. Accept responsibility to comply with Health and Safety Code and regulations concerning licensing. *(initial and renewal application)*

*I/WE DECLARE UNDER PENALTY OF PERJURY THAT THE STATEMENTS ON THIS APPLICATION AND ON THE ACCOMPANYING ATTACHMENTS ARE CORRECT TO MY/OUR KNOWLEDGE.*

APPLICANT SIGNATURE ______________________ DATE ________

APPLICANT SIGNATURE ______________________ DATE ________

LIC 279 (8/85)

# ສິ່ງແວດລ້ອມ ກ່ຽວກັບການລ້ຽງເດັກ



ບົດຮຽນທີ່ ກ.

ການຈັດແຈງບ້ານເຮືອນຂອງທ່ານ.

ກ. ການຈັດແຈງບ້ານເຮືອນຂອງທ່ານ ມີຢູ່ສອງວິທີເຊັ່ນ :

໑. ຖ້າເຫັນວ່າເຮືອນຂອງທ່ານປອດໄພ ແລະ ສອາດດີສຳຫລັບເດັກນ້ອຍ ກໍປ່ອຍໄປຕາມສະພາບເກົ່າ.

໒. ຈັດແຈງສະຖານທີ່ຫລາຍຄືກັບບ່ອນລ້ຽງເດັກ ຫລື ໂຮງຮຽນໃຫ້ມີບ່ອນຫລິ້ນສຳຫລັບເດັກນ້ອຍ

ຂ. ບໍ່ຈຳເປັນຈະຕ້ອງໃຊ້ເງິນຫລາຍໃນການຊື້ເຄື່ອງອຸປກອນ ແລະ ເຄື່ອງຕົບແຕ່ງສະຖານທີ່.

໑. ໃຫ້ໃຊ້ເຄື່ອງທີ່ມີຢູ່ໃນເຮືອນມາດັດແປງເອົາ ຈະເປັນການດີ

໒. ລອງໄປຊອກຊື້ຕາມ ຕລາດເລ, ເຄື່ອງຂອງຂາຍຢູ່ຕາມບ້ານເຮືອນ garage sale, ບ່ອນແຈກເຄື່ອງເພື່ອການກູ້ສືບ, ຮ້ານຂາຍເຄື່ອງ Pic & Save ຫລືເວລາໝູ່ເພື່ອນຍື່ນເຄື່ອງເກົ່າຖິ້ມ ແລະ ຂໍແຜ່ຕາມບ້ານເຮືອນທີ່ຮູ້ຈັກກັນ.

໓. ພໍ່ແມ່ຂອງເດັກນ້ອຍເອົາມາໃຫ້.

໔. ບ່ອນໃຫ້ຍືມຂອງຫລິ້ນເດັກນ້ອຍ ແລະ ບ່ອນໃຫ້ບໍຣິການກ່ຽວກັບເຄື່ອງຂອງທີ່ໃຊ້ໃນສະຖານທີ່ບ່ອນລ້ຽງເດັກ.

໕. ເຮັດເອົາເອງເຊັ່ນ ບ່ອນໃສ່ປຶ້ມ, ບ່ອນໃສ່ເຄື່ອງຫລິ້ນ ແລະ ອື່ນໆ

ຄ. ກະຕຽມບ່ອນ ຫລື ສະຖານທີ່ວ່າຈະໃຫ້ເດັກນ້ອຍກິນ, ນອນ ແລະ ພັກຜ່ອນຢູ່ໃສ ?

໑. ມີຢູ່ສອງຢ່າງທີ່ໄດ້ເລີ່ມກ່ຽວກັບ ການບໍຣິການເຊັ່ນ :

ກ. ທ່ານຢູ່ໃນສະຖານທີ່ບ່ອນລ້ຽງເດັກ ກໍເພື່ອໃຫ້ຄວາມຮັກສາເບິ່ງແຍງແກ່ເດັກນ້ອຍ, ພໍ່ແມ່ຂອງເຂົາມີໜ້າທີ່ຈະຕ້ອງສັງເກດເບິ່ງວ່າທ່ານມີເຄື່ອງໃຊ້ສອຍຕ່າງໆໃນການທີ່ຈະເບິ່ງ-ການບ້ຽງລ້ຽງລູກຂອງເຂົາເຈົ້າຫລືບໍ່ ? (ຖ້າເດັກເກີດໃໝ່ ຈະຕ້ອງມີ ໄດເປີ້, ເຂົ້າ-ແປ້ງ, ເຈ້ຍເຊັດກົ້ນ, ຜ້າກັນເປື້ອນ (ອ້ອມນ້ອຍ) ແກ້ວນ້ຳ-ແກ້ວນົມ, ເສື້ອຜ້າສຳຫລັບປ່ຽນຕ່າງໆ) ສິ່ງເຫລົ່ານີ້ ພໍ່ແມ່ຈະຕ້ອງຈັດຫາມາໃຫ້ທ່ານ.

ຂ. ທ່ານ ບໍ່ແມ່ນຈະເບິ່ງແຍງແຕ່ເດັກນ້ອຍເທົ່ານັ້ນ ແຕ່ຍັງມີໜ້າທີ່ອຳນວຍຄວາມສດວກແກ່ພໍ່ແມ່ຂອງເດັກນ້ອຍນຳອີກ ເຊັ່ນ : (ຖ້າທ່ານມີເດັກນ້ອຍເກີດໃໝ່ ທ່ານກໍຄວນຈັດຫາສິ່ງເຫລົ່ານີ້ມາໄວ້ເຊັ່ນ : ໄດເປີ້, ເຈ້ຍເຊັດກົ້ນ, ເຂົ້າແປ້ງ, ຜ້າກັນເປື້ອນ (ອ້ອມ) ແລະເສື້ອຜ້າສຳຫລັບໃຊ້ປ່ຽນ.)

໒. ການກິນອາຫານ ຄວນເບິ່ງວ່າເດັກນ້ອຍຜູ້ນັ້ນກິນອາຫານພິເສດບໍ່ ? ເພາະເດັກນ້ອຍບາງຄົນກິນອາຫານບາງຢ່າງບໍ່ໄດ້ ຍ້ອນອາການແພ້ ຫລື ທາດບໍ່ຮັບ.

໓. ການນອນພັກຜ່ອນ (ແລ້ວແຕ່ຄວາມຕ້ອງການຂອງພໍ່ແມ່ ຖ້າເປັນໄປໄດ້ ເຊັ່ນວ່າຢາກໃຫ້ລູກຂອງເຂົາເຈົ້ານອນພັກຜ່ອນ ນັ້ນຈັກຊົ່ວໂມງ ?).

໗. ຂໍ້ສຳຄັນຄວນພິຈາຣະນາ ເພື່ອການປະຢັດເງິນ ແລະ ເວລາໃນການດຳເນີນງານ.

໑. ເຄື່ອງຫລິ້ນ ເສື້ອຜ້າ ແລະ ປຶ້ມຄວນຈະເອົາໄວ້ໃນບ່ອນທີ່ຕ່ຳ ຫລື ຢູ່ໃນຣະດັບສາຍຕາຂອງ ເດັກນ້ອຍເພື່ອໃຫ້ເຂົາເຈົ້າຢິບເອົາດ້ວຍຕົນເອງ.

໒. ເຄື່ອງໃຊ້ ຈານ ຈອກກິນນ້ຳທີ່ເຮັດດ້ວຍເຈ້ຍ ຫລື ສິ່ງຂອງທີ່ເຮັດດ້ວຍປຣາສຕິກ ເຊັ່ນໄມ້ທູ່ ຈານກິນເຂົ້າ ແລະ ຈອກທີ່ໃຊ້ແລ້ວ ຄວນເອົາຖິ້ມເລີຍ.

໓. ເຄື່ອງໃຊ້ໃນເຮືອນຄົວສຳຫລັບໃຫ້ເດັກນ້ອຍໃຊ້ ເຊັ່ນຖ້ວຍ ຈານ ຄວນຈະເປັນ ປຣາສຕິກ ທີ່ໃຊ້ງ່າຍແລະປອດພັຍແກ່ເດັກນ້ອຍ.

໔. ໄດເປີ້ ແລະ ເຈ້ຍເຊັດມືຕ່າງໆ ທີ່ໃຊ້ແລ້ວຄວນເອົາຖິ້ມເລີຍ.

໕. ເສື້ອຜ້າສຳຫລັບປ່ຽນຂອງເດັກນ້ອຍ ຄວນໃຫ້ມີພຽງພໍສຳຫລັບອາທິດນຶ່ງ ຫລື- ຢ່າງນ້ອຍຈະຕ້ອງມີໄວ້ຊຸດນຶ່ງສຳຫລັບປ່ຽນແຕ່ລະມື້.

THE RIGHT INGREDIENTS

Pacific Oaks College
Pasadena, CA.
May 1974

ສິ່ງທີ່ອ່ອນນຸ່ມສຳລັບໃຫ້ເດັກນ້ອຍໃຊ້ ເຊັ່ນ

- ຜ້າພົມປູ
- ໝອນໝູນ
- ເບາະຍາວ ແລະ ເຄື່ອງໃຊ້ໃນເຮືອນທີ່ສດວກສບາຍ
- ດິນຊາຍ
- ຫຍ້າ
- ສັດທີ່ມີຂົນອ່ອນ ສຳລັບອຸ້ມ
- ຕັກສຳລັບນັ່ງ
- ການກອດຮັດ (ອຸ້ມ)

ຢູ່ໃນບ້ານເຮືອນ ນອກຈາກສິ່ງເຫຼົ່ານີ້ແລ້ວກໍຍັງມີສິ່ງທີ່ອ່ອນນຸ່ມຢູ່ອີກຫລາຍຢ່າງ ເຊັ່ນ

ຄວາມແຕກຕ່າງໃນຕົວຂອງບຸຄົນ ເຊັ່ນ

- ຄວາມສັງຄົມເປັນໝູ່
- ເວລາຫລິ້ນ ຫລື ການຫລິ້ນຜູ້ດຽວ
- ຫລິ້ນກັບໝູ່ ທີ່ສນິດສນົມກັນ
- ຫລິ້ນກັບໝູ່ກຸ່ມນ້ອຍຄົນ
- ຫລິ້ນກັບໝູ່ທີ່ເປັນກຸ່ມຕັ້ງແຕ່ ໕ ຄົນຂຶ້ນໄປ (ເຊັ່ນການສັງສັນ ແລະ ເວລານັ່ງຟັງ ການເລົ່ານິທານ ຫລື ອ່ານໜັງສືຕ່າງໆ ຢູ່ຫ້ອງສມຸດ)

ການສົນທະນາ ຫລື ພົບປະກັບຜູ້ໃຫຍ່.

- ກັບຜູ້ໃດຜູ້ນຶ່ງ
- ຜູ້ໃຫຍ່/ຫລືຈຳພວກທີ່ມີອາຍຸ ແຕກຕ່າງກັນ
- ຜູ້ຊາຍ/ຜູ້ຍິງ
- ຄວາມແຕກຕ່າງກ່ຽວກັບ ເຜົ່າພັນ ແລະ ພື້ນຖານວັທນະທັມ
- ຄວາມແຕກຕ່າງກ່ຽວກັບ ອາຊີບ

ເຄື່ອງຂອງໃຊ້ ຕ່າງໆ

ການເຄື່ອນໄຫວຂອງຮ່າງກາຍ

ການອອກເຫື່ອແຮງ ເພື່ອເຮັດໃຫ້ກ້າມເນື້ອໃຫຍ່ແຂງແຮງ

- ການຈອງ ໂຫນໄປ-ມາ
- ການປ່າຍປີນ ປີນຂຶ້ນ-ລົງ

- ການຖີບຣົຖ ສາມລໍ້
- ການເຕັ້ນເຊືອກ

ການອອກເຫື່ອແຮງ ເພື່ອເຮັດໃຫ້ກ້າມເນື້ອຂນາດກາງ ແຂງແຮງ

- ການຫລິ້ນກາຍຍະກັມ/ຫລິ້ນສແດງລະຄອນ
- ການກໍ່ສ້າງ ແລະ ກິຈກັມການຕິດຕັ້ງຕ່າງໆ

ການອອກເຫື່ອແຮງ ເພື່ອເຮັດໃຫ້ກ້າມເນື້ອຂນາດນ້ອຍ ແຂງແຮງ

- ການນັ່ງຢ່າງບໍ່ເໜັງບໍ່ຕີງ ເຊັ່ນ :

  ການນັ່ງອ່ານໜັງສື

  ການນັ່ງແຕ້ມຮູບຕ່າງໆ

  ການນັ່ງທາສີ ແຕ້ມສີ

ການກິຈກັມຕ່າງໆ

ການສແດງແນວຄວາມຄິດຄວາມເຫັນອອກມາຢ່າງເປີດເຜີຍ

- ສິ່ງເຫລົ່ານີ້ ຈະບໍ່ມີຄຳຕອບທີ່ຖືວ່າຜິດ/ບໍ່ຖືກ ເຊັ່ນວ່າ :

  ການແຕ້ມຮູບ

  ການທາສີ ຣະບາຍສີ

  ການເອົາດິນໜຽວມາປັ້ນເປັນຮູບຕ່າງໆ

  ການຖີບຣົຖ ສາມລໍ້

  ການເອົາດິນຊາຍມາກໍ່ຂຶ້ນເປັນຮູບຕ່າງໆ

ສິ່ງທີ່ໃຊ້ຄວາມຊຳນານ ຫລື ໃຊ້ຝີມື ໃນການກໍ່ສ້າງຕ່າງໆ

- ສິ່ງເຫລົ່ານີ້ເດັກນ້ອຍຈະຕ້ອງຮູ້ຈັກວິທີເຮັດ ຈຶ່ງຈະປະກອບເຄື່ອງມືນັ້ນຖືກຕ້ອງໄດ້

  ການເອົາຮູບທີ່ເປັນຊິ້ນສ່ວນມາຕໍ່ປະກອບເຂົ້າກັນ

  ການຮຽນຂຽນຕົວໜັງສື ໃນພຍັນຊະນະ

  ການຍິງບ່ວງເຂົ້າກະຕ່າ

  ການເຕັ້ນເຊືອກ

ສ່ວນປະກອບຕ່າງໆ

- ສ່ວນປະກອບໃນການຫລິ້ນທີ່ມີຄວາມຕື່ນເຕັ້ນ ແລະ ຄວາມສົນໃຈຂອງເດັກນ້ອຍ ເຊັ່ນ

  ໝວກ (ໃສ່ຫົວ)

  ກະເປົ໋າຫິ້ວ

  ເຄື່ອງຕັດເຂົ້າໜົມ

  ເຈ້ຍເຊັດມື ເປັນກໍ້

  ເອົາໂຕວັດປຣາສຕິກ ມາລ້ອນກັນເປັນແຖວ

  ຟອງສະບູອາບນ້ຳ

  ຮູບຕ່າງໆທີ່ເດັກນ້ອຍເອົາມາຈຸ່ມໃນຟອງສະບູ ແລ້ວເປົ່າໃຫ້ເປັນຮູບຕ່າງໆ

  ກະຕ່າໃສ່ໝາກເລັ່ນທີ່ເປັນປຣາສຕິກ

  ບ່ວງທີ່ເປັນປ່ອງ

ຄວາມປອດພັຍ

ມີໂອກາດທີ່ພວກເຮົາຈະມີການທົດສອບເດັກນ້ອຍ ໃນການສ່ຽງພັຍ ແລະ ຄວາມກ້າຫານຂອງເຂົາເຈົ້າບໍ່ ?

ການຮຽນຮູ້ກ່ຽວກັບການເຄື່ອນໄຫວ ພາກສ່ວນຕ່າງໆຂອງຮ່າງກາຍ ເຊັ່ນ

- ການຫ້ອຍໂຫນ ໂຍນຕົວ ຈອງໄປ-ມາ
- ການໃຊ້ນ້ຳໜັກຕົວໃຫ້ທ່ຽງໃນການຂີ່ຣົຖຖີບ
- ການເຂົ້າ-ອອກ ຕາມປ່ອງແລະປະຕູ

ບ່ອນພິເສດສ່ວນຕົວ

ບ່ອນພິເສດ ທີ່ເຈົ້າສາມາດດັດແປງ ປະດິດຂຶ້ນມາ ເພື່ອເປັນບ່ອນທີ່ໄປຫລິ້ນ ຫລື ໄປລີ້ ຢູ່ຜູ້ດຽວ.

ຄວາມກະຈ່າງແຈ້ງ

ແຕ່ລະບ່ອນທີ່ເດັກນ້ອຍຫລິ້ນ ຈະຕ້ອງເປັນຂອບເຂດທີ່ຈຳກັດບໍ່ ? ເຊັ່ນ :

- ບ່ອນທີ່ມີສຽງດັງ ຟົດນັນ
- ບ່ອນທີ່ງຽບສົງບ
- ບ່ອນທີ່ຮົກເຮື້ອ ເປື້ອນເປິະ
- ບ່ອນທີ່ຈັດນຽບຮຽບຮ້ອຍ ແລະ ຣະມັດຣະວັງ

ການຈັດແຈ່ງສະຖານທີ່ດັ່ງກ່າວ ໄດ້ຊ່ວຍໃຫ້ທ່ານມີບ່ອນຫລິ້ນ ທີ່ທ່ານຕ້ອງການບໍ່ ?



ERIC
Full Text Provided by ERIC

ຂໍ້ສເນີກ່ຽວກັບ ຊີວະປະວັດສຸຂພາບ ສຳຫລັບເດັກນ້ອຍເກີດໃຫມ່

ແລະ ເດັກໃຫຍ່

(ຈະຕ້ອງແມ່ນ ຜູ້ປົກຄອງ ເທົ່ານັ້ນ ເປັນຜູ້ກອກຂໍ້ຄວາມໃນໃບສມັກນີ້)

* ສຳຫຼັບເດັກນ້ອຍເກີດໃຫມ່ ເທົ່ານັ້ນ.

ຊື່ເດັກນ້ອຍ : ______________________ ວັນເກີດ ____________ ວັນທີ່ ____________

ກ. <u>ສຸຂພາບ</u>

໑. ເດັກນ້ອຍຮູ້ສຶກວ່າ ມີສຸຂພາບດີຢູ່ທຸກໆເວລາບໍ່ ? ແມ່ນ ________ ບໍ່ແມ່ນ ________

໒. ປັດຈຸບັນ ເດັກນ້ອຍໄດ້ກິນຢາບໍ່ ? (ຕົວຢ່າງຢາ Aspirin , ຢາຖ່າຍທ້ອງ, ຢາໄວຕາມິນຕ່າງໆ)
ແມ່ນ ________ ບໍ່ແມ່ນ ________
ຖ້າຫາກ <u>ແມ່ນ</u> ໃຫ້ອະທິບາຍ : (ກິນຢາຫຍັງ ?) ____________________
ເປັນຫຍັງ ຈຶ່ງກິນ ? ____________________

໓. ໃນປີຫນຶ່ງ ເດັກນ້ອຍຜູ້ນັ້ນ ໄດ້ເກີດມີໂຣຄຕິດຕໍ່ບໍ່ ? ກ່ຽວກັບຫູ ຫລາຍກວ່າ ໓ ເທື່ອບໍ່ ?
ແມ່ນ ________ ບໍ່ແມ່ນ ________

໔. ທ່ານມີຄວາມເປັນຫ່ວງ - ກັງວົນ ກ່ຽວກັບການຟັງ/ຫູ ຂອງລູກຂອງທ່ານ ບໍ່ ?
ແມ່ນ ________ ບໍ່ແມ່ນ ________

໕. ໃນປີຫນຶ່ງ ເດັກນ້ອຍຜູ້ນັ້ນ ໄດ້ເກີດເປັນຫວັດ, ເຈັບຄໍ ແລະ ເປັນໄຂ້ຫລາຍກວ່າ ໓ ເທື່ອຕໍ່ປີບໍ່ ?
ແມ່ນ ________ ບໍ່ແມ່ນ ________

໖. ທ່ານມີຄວາມເປັນຫ່ວງ - ກັງວົນ ກ່ຽວກັບສາຍຕາ ຂອງລູກຂອງທ່ານບໍ່ ?
ແມ່ນ ________ ບໍ່ແມ່ນ ________

໗. ເດັກນ້ອຍຜູ້ນີ້ ໄດ້ໄປຫາ ທ່ານຫມໍພິເສດບໍ່ ? ແມ່ນ ________ ບໍ່ແມ່ນ ________
ຖ້າແມ່ນ, ແມ່ນຜູ້ໃດ ? ____________ ເປັນຫຍັງ ? ____________

໘. ທ່ານຄວນຈະກະກຽມ ວິທີໃດສຳຫລັບການດູແລ ລູກຂອງທ່ານ - ເດັກນ້ອຍສາມາດກາຍເປັນໄຂ້ຂຶ້ນມາໄດ້ ໃນເວລາ ທີ່ຢູ່ໃນສະຖານທີ່ບ່ອນລ້ຽງເດັກນ້ອຍ ? ____________________
____________________

໙. ລູກຂອງທ່ານ ເປັນຄົນເສັຽອົງຄະ ບໍ່ ? ແມ່ນ ________ ບໍ່ແມ່ນ ________
ຖ້າແມ່ນ ໃຫ້ອະທິບາຍ ____________________

໑໐. ມີອາການເຈັບໄຂ້ ຫລື ພຍາດຢ່າງອື່ນບໍ່ ? ແມ່ນ ________ ບໍ່ແມ່ນ ________
ຖ້າແມ່ນ ພຍາດຊນິດໃດ ? ____________________

໑໑. ລູກຂອງທ່ານ ເຄີຍຖືກເຂົ້ານອນໂຮງຫມໍ ບໍ່ ? ແມ່ນ ________ ບໍ່ແມ່ນ ________
ຖ້າແມ່ນ ເປັນຍ້ອນຫຍັງ ? ____________________

໑໒. ເດັກນ້ອຍຜູ້ນັ້ນ ໄດ້ຖືກອຸບັດຕິເຫດ ຫລື ຖືກຢາເບື່ອມາກ່ອນບໍ່ ? ແມ່ນ ________ ບໍ່ແມ່ນ ________
ຖ້າແມ່ນ ຊນິດໃດ ? ____________________

໑໓. ເດັກນ້ອຍຜູ້ນັ້ນ ມີນິສັຍ ກັດ ຫຍ້ຳ ແທນ ສິ່ງຕ່າງໆບໍ່ ? ເຊັ່ນ ສີດຳ ສີຂາວ ອູ ຂອບປະຕູ ຂອບປ່ອງຢ້ຽມ ຝາເຮືອນ ຫລື ດິນບໍ່ ? ແມ່ນ ________ ບໍ່ແມ່ນ ________

ERIC Full Text Provided by ERIC

໑໔. ລູກຂອງທ່ານໄດ້ມີອາການ ດັ່ງກ່າວນີ້ ຫລືບໍ່ ? ກະຣຸນາຂີດວົງກົມອ້ອມ.

- ເກີດກ່ອນກຳນົດ
- ຄວາມບົກພ່ອງໃນການເກີດ / ການຖືກບາດເຈັບໃນຕອນເກີດ
- ການຊັກດິ້ນ / ໝົດສະຕິ
- ການແພ້ ທາດບໍ່ຮັບຢາ, ອາກາດຈຸ້ນດທີ່ບໍ່ຕິດແປດ, ຕຸ່ມເປັນແຜ່ນຕາມຮ່າງກາຍ, ຢາ, ອາຫານທີ່ບໍ່ອາດຈະກິນທານໄດ້, ໃຈຊຸ່ມດິ້ນບວງເປັນຕົວຮ້ອນ ແລະ ຫາຍໃຈຫອບ, ຫາຍໃຈຫນັກ ແລະ ສຽງດັງຮືດໆ (ຫາຍໃຈຫອບ) ພຍາດເປັນຫືດ, ເຜິ້ງຕອດ. ໃຫ້ອະທິບາຍອາການດັ່ງກ່າວ ຖ້າມີ : ______________________

______________________________________________

## ໒. ການສັງເກດ ຈິວະປະວັດ ການຈະເຣີນເຕີບໂຕ

ທ່ານປ່ອຍໃຈ ລູກຂອງທ່ານວິທີໃດ ? ______________________

ເຄື່ອງຫລິ້ນຊນິດໃດ ທີ່ລູກຂອງທ່ານມັກຫລາຍ ? ______________________

ກິຈກັມ ຊນິດໃດ ທີ່ລູກຂອງທ່ານມັກຫລາຍ ? ______________________

ທ່ານໃຊ້ ພາສາໃດຢູ່ໃນບ້ານເຮືອນ ? ______________________

## ໓. ການນອນ

ທ່ານມີ ວິທີພິເສດ ທີ່ຊ່ວຍໃຫ້ລູກຂອງທ່ານນອນ ບໍ່ ? ______________________

______________________________________________

* ລູກຂອງທ່ານ ໃຫ້ ເວລາທີ່ໄປນອນ ບໍ່ ? ແມ່ນ ________ ບໍ່ແມ່ນ ________

ລູກຂອງທ່ານ ມັກນອນເວລາໃດ ?

ກາງຄືນ : ຈາກ ____________ ຫາ ____________

ກາງເວັນ : ຈາກ ____________ ຫາ ____________

ຕອນແລງ : ຈາກ ____________ ຫາ ____________

* ລູກຂອງທ່ານມັກນອນ ຂວ້ນທ້ອງລົງບໍ່ ________ ນອນແຄງຂ້າງ ________ ນອນຫງາຍ ________
* ລູກຂອງທ່ານ ມັກນອນແບບສງົບບໍ່ ? ແມ່ນ ________ ບໍ່ແມ່ນ ________

ລູກຂອງທ່ານຕ້ອງການຜ້າຫົ່ມບໍ່ ? ແມ່ນ ________ ບໍ່ແມ່ນ ________

ລູກຂອງທ່ານຕ້ອງການເຄື່ອງຫລິ້ນບໍ່ ? ແມ່ນ ________ ບໍ່ແມ່ນ ________

## ໔. ການປ້ອນນົມ

* ເດັກນ້ອຍຫຼຸ້ນ ລ້ຽງດ້ວຍນົມແມ່ ບໍ່ ? ແມ່ນ ________ ບໍ່ແມ່ນ ________
* ລ້ຽງດ້ວຍກວດນົມບໍ່ ? ແມ່ນ ________ ບໍ່ແມ່ນ ________
* ກວດນົມຊນິດໃດ ? ______________________
* ຫົວນົມດູດ ຊນິດໃດ ? ______________________
* ນ້ຳນົມຊນິດໃດ ? ______________________
* ເດັກນ້ອຍຫຼຸ້ນ ຕ້ອງການເຮັດໃຫ້ເອີ້ມບໍ່ ? ແມ່ນ ________ ບໍ່ແມ່ນ ________

ລູກຂອງທ່ານ ກິນອາຫານຕາມລາຍການ ທີ່ສເນີໄວ້ບໍ ? (ຫລືຕາມກຳນົດເຈາະຈົງ)

| | ນ້ຳໝາກໄມ້ | ອາຫານ | ນ້ຳນົມ/ສູດຊນິດໃດ |
|---|---|---|---|
| ອາຫານເຊົ້າ | ________ | ________ | ________ |
| ອາຫານທ່ຽງ | ________ | ________ | ________ |
| ອາຫານວາງ | ________ | ________ | ________ |

ລູກຂອງທ່ານ ມີບັນຫາໃນການປ້ອນອາຫານບໍ່ ? ແມ່ນ ________ ບໍ່ແມ່ນ ________

ຖ້າແມ່ນ, ບັນຫາ ຊນິດໃດ ? ________________________________

໗. ການໄປຫ້ອງນ້ຳ

ລູກຂອງທ່ານ ໄປຖ່າຍຫນັກເລື້ອຍບໍ່ ? ________________________________

ການປາກົດຕົວ ໃນການຖ່າຍຫນັກ ________________________________

ທ່ານໄດ້ສອນການໃຊ້ຫ້ອງນ້ຳ ໃຫ້ລູກຂອງທ່ານບໍ່ ? ແມ່ນ ________ ບໍ່ແມ່ນ ________

ທ່ານໄດ້ໃຊ້ພາສາ (ຄວາມເວົ້າ) ແນວໃດສຳຫລັບການໄປຍ່ຽວ ________________

ການໄປຖ່າຍຫນັກເດ ________________________________

ພວກເຂົາໄດ້ໃຊ້ຕັ່ງນັ່ງ (ງ່ຽງ) ຖ່າຍບໍ່ ? ແມ່ນ ________ ບໍ່ແມ່ນ ________

ລູກຂອງທ່ານ ໄດ້ຖືກພາອອມກັດບໍ່ ? ແມ່ນ ________ ບໍ່ແມ່ນ ________

ຖ້າແມ່ນ, ປິ່ນປົວແນວໃດ ? ________________________________



ERIC
Full Text Provided by ERIC

# ຄວາມປອດພັຍຂອງບ້ານເຮືອນ



81

ບົດຮຽນທີ ໙.

## ການພິສູດຂອງຄວາມປອດພັຍ

ກ. ຄວາມສຳຄັນ ກ່ຽວກັບຄວາມປອດພັຍ.

໑. ແຕ່ລະເດືອນ ອຸບັດຕິເຫດເກີດຂຶ້ນ ເຮັດໃຫ້ເດັກນ້ອຍທີ່ມີອາຍຸຕ່ຳກວ່າ ໕ ປີເສັຍຊີວິດຍ້ອນປະມານ ໔໐໐ ຄົນ (ສຳຫລັບປີນຶ່ງ ຫລາຍກວ່າ ໔໐໐໐ ກວ່າຄົນ) ພວກເຮົາຈະເຫັນໄດ້ວ່າຕົວເລກຂອງການຕາຍຂອງເດັກນ້ອຍສູງຫລາຍກວ່າ ການຕາຍດ້ວຍໂຣຄພຍາດອັນຕຣາຍແຮງ ຊຶ່ງລວມແລ້ວ ມີໂຣຄພຍາດອັນຕຣາຍແຮງຢູ່ ຜີ ຊນິດ.

໒. ສາເຫດຂອງການເຈັບ ຊຶ່ງມັກຈະເກີດຂຶ້ນເລື້ອຍໆ ຢູ່ໃນບ້ານເຮືອນມາຈາກ.

ກ. ໄຟໄໝ້

ຂ. ຢາພິດ – ຢາເບື່ອ

ຄ. ຕົວແຕກ ສ່ວນໃຫຍ່ຈະມັກເກີດຈາກ ການລົ້ມ ຂອງເດັກນ້ອຍ.

ງ. ຕາມທັມມະຊາດແລ້ວ ເດັກນ້ອຍມັກຢາກຈະທົດເລ່ນກັບສິ່ງຕ່າງໆ

໑. ມັກຢາກຊອກຄົ້ນເບິ່ງທຸກຢ່າງທີ່ໃກ້ຕົວເຂົາ

໒. ມັກຈະໃຊ້ມືຊ່ວຍໃນການຈັບບາຍ ສິ່ງຕ່າງໆເພື່ອຊ່ວຍໃນການຮຽນຮູ້

໓. ມັກບາຍ, ຊີມ ແລະ ມັກຈະໃຊ້ປະສາດທຸກສ່ວນໃນການຮຽນຮູ້ ແລະເຂົ້າໃຈກັບສິ່ງຕ່າງໆ

໔. ເດັກນ້ອຍທີ່ຍັງບໍ່ທັນໃຫຍ່ພຽງພໍ ບໍ່ມີຄວາມຮູ້ສຶກກັບສິ່ງຕ່າງໆ ແລະ ບໍ່ມີການຍັບຍັ້ງ ຫລືບັງຄັບຕົວເອງ ເພື່ອຫລີກເວັ້ນບໍ່ເຮັດໃຫ້ ຕົວເຂົາເອງໄດ້ຮັບອັນຕລາຍ

໕. ຜູ້ເບິ່ງແຍງ ຈະຕ້ອງເບິ່ງແຍງ ບໍ່ໃຫ້ເຂົາໄດ້ຮັບບາດເຈັບ.

ຈ. ການຕາຍດຶກນ້ຳ (ຈົມນ້ຳຕາຍ)

໑. ອາດຈະເກີດຈາກຫົວສ້ວມຖ່າຍ, ຈາກອ່າງນ້ຳ, ຈາກອ່າງນ້ຳ (ສະ) ຂອງເດັກນ້ອຍແລະ ສະນ້ຳໃຫຍ່ຂອງທ່ານເອງ ແລະ ກັບຂອງຄົນທີ່ຢູ່ຂ້າງບ້ານ

໒. ເຖິງວ່າຈະມີຮົ້ວອ້ອມໄວ້ແລ້ວກໍຕາມ ທ່ານຄວນຕື່ນຕົວສເມີແລະຮູ້ຈັກບ່ອນຫລິ້ນ ຂອງເດັກນ້ອຍ

໓. ເດັກນ້ອຍສາມາດຕົກລົງຫົວສ້ວມໄດ້ ແລະ ບໍ່ສາມາດຈະຊ່ວຍດຶງຕົວເອງຂຶ້ນມາຈາກຫົວສ້ວມໄດ້. ທ່ານທີ່ດີບໍ່ຄວນເປີດປະຕູຫ້ອງນ້ຳໄວ້ໃນເມື່ອໃຊ້ຫ້ອງນ້ຳແລ້ວ. ໃນເມື່ອທ່ານມີ ເດັກນ້ອຍທີ່ກຳລັງເລີ່ມຄານ ແລະ ກຳລັງຈັບລຸກຂຶ້ນຢືນໄດ້ ຂໍໃຫ້ຈື່ໄວ້ສເມີວ່າ ເດັກນ້ອຍ (ສຳການ) ກໍຄວນສັງເກດຄືກັນເຊັ່ນການທີ່ເຂົາໄປໃຊ້ຫ້ອງນ້ຳແລ້ວ ຫລັງຈາກນັ້ນເຂົາ ກໍຈະ ບໍ່ປິດປະຕູສ້ວມໄວ້ຄືເກົ່າ.

ຂ. ການພິສູດຂອງຄວາມປອດພັຍ

໑. ອູ່ນອນຂອງເດັກນ້ອຍ

ກ. ຈະຕ້ອງຈັດບ່ອນທີ່ເຫັນວ່າມີຄວາມປອດພັຍສຳຫລັບເດັກນ້ອຍທີ່ເກີດໃໝ່ ທີ່ຈະໃຊ້ເປັນບ່ອນພັກຜ່ອນຂອງເຂົາເຈົ້າ.

ຂ. ໄມ້ດ້ວຂອງອູ່ຈະຕ້ອງຫ່າງກັນປະມານ ໒ ໓/໘ ນິ້ວ ຫລືວ່າໃຊ້ຜ້າຢາງຟອງນ້ຳ ທີ່ມີເຊືອກຢູ່ ໕ ເສັ້ນຜູກມັດຕິດຢູ່ກັບອູ່ນອນໃຫ້ແໜ້ນໜາ.

ຄ. ຟອງນ້ຳຈະຕ້ອງສູງປະມານ ໒ ນິ້ວມີຈາກເສື່ອນອນແລະ ຂ້າງອູ່

ງ. ເສື່ອນອນທີ່ມີຂນາດຕ່ຳ ຖ້າຫາກວ່າເດັກນ້ອຍຢືນຂຶ້ນສູງປະມານ ໑/໕ ນິ້ວແລ້ວ ໝາຍຄວາມວ່າ ເດັກນ້ອຍນັ້ນໃຫຍ່ກວ່າອູ່ແລ້ວ

ຈ. ໃຫ້ກວດເບິ່ງບ່ານພັບ, ສະປິງ, ແນວທັບ (ກອນ) ນອດຕ່າງໆທີ່ມັນອາດຈະຫລວມແລະຫລຸດອອກມາຍອນວາການເໜັງຕີງຂອງເດັກນ້ອຍ.

໒. ອູ່ຫລັບ

ກ. ໄມ້ຄອກອູ່ຈະຕ້ອງຫ່າງກັນ ໒ ໓/໘ ນິ້ວ

ຂ. ໄມ້ຄອກຕອງໃຫຍແລະມີຣະຍະຫ່າງກັນພໍທີ່ຈະບໍ່ໃຫ້ ນິ້ວມື ຫລື ກະດູກຂອງເດັກນ້ອຍຄາໄດ້.

ຄ. ໃຫ້ລອກບ່ານພັບໄວ້ໃຫ້ແໜ້ນ, ບໍ່ໃຫ້ມັນໂຍກຍາຍເຂົ້າຫາກັນໄດ້ ແລະ ໃຫ້ເອົາຝາຫາງເທິງຂຶ້ນ, ຖ້າອູ່ມັນພັບຈະເປັນເຫດໃຫ້ເດັກນ້ອຍ ຫາຍໃຈບໍ່ອອກ.

ງ. ບໍ່ໃຫ້ເອົາເຄື່ອງຫລິ້ນເຂົ້າໄປໃນອູ່ນອນຂອງເດັກນ້ອຍ ເພາະເດັກນ້ອຍອາດຈະໃຊ້ປີນຂຶ້ນຢືນແລະ ຈະສາມາດຕົກອອກຈາກອູ່ນັ້ນໄດ້.

ຈ. ເຄື່ອງຫລິ້ນບໍ່ໃຫ້ມີຄວາມຍາວເກີນກວ່າ ໑໒ ນິ້ວ, ຊຶ່ງເດັກນ້ອຍອາດຈະເອື້ອມມາຫລິ້ນເຄື່ອງຄໍໄດ້.

ສ. ເມື່ອເດັກນ້ອຍໃຫຍ່ ພໍນັ່ງໄດ້ແລ້ວນັ້ນ ຄວນຣະວັງໃ..ການແຂວນເຄື່ອງຫລິ້ນຕ່າງໆຢູ່ເທິງອູ່.

໓. ເຄື່ອງແອບຢາງ

ກ. ວົງກົມ (ຕີນ) ຂອງເຄື່ອງແອບຢາງ ຈະຕ້ອງກວ້າງພໍ - ແຂງແຮງ ແລະແໜ້ນໜາດີ

ຂ. ທ່ານຈະຕ້ອງເບິ່ງແຍງຢູ່ຕລອດເວລາ ບໍ່ຄວນປ່ອຍໃຫ້ເດັກນ້ອຍຢູ່ຕາມລຳພັງ

ຄ. ໃນເມື່ອທ່ານກຳລັງເຮັດວຽກບ້ານຢູ່. ຢ່າໄດ້ໃຊ້ອູ່ຫລິ້ນ ຫລື ບ່ອນຂັງເດັກນ້ອຍໄວ້ຜູດຽວ

ງ. ໃຫ້ເອົາໄມ້ ຫລື ເຄື່ອງກັ້ນຫົວຂຶ້ນໃດທຸກໆບ່ອນໄວ້.

ຈ. ໃຫ້ເບິ່ງແຍງເດັກນ້ອຍ ບໍ່ໃຫ້ຖືກຕຳ ຫລື ວາດດຶງເອົາສິ່ງຂອງ ທີ່ເປັນອັນຕລາຍຕົກລົງມາຖືກຕົວຂອງເຂົາເຈົ້າ.

ສ. ຣະວັງບໍ່ໃຫ້ເດັກນ້ອຍລົ້ມ ເອົາຫົວປັກລົງມາ

ຊ. ເຄື່ອງແອບຢາງສມັຍເກົ່າ ແບບຂາກວຍກັນນັ້ນ ມັກຈະເຮັດໃຫ້ເດັກນ້ອຍລົ້ມ ແລະຫນີບມືຂອງເຂົາເລື້ອຍໆ.

໔. ຕັ່ງສູງສຳຫລັບເດັກນ້ອຍ

ກ. ຄວນໃຊ້ສາຍຮັດແອວຂອງເດັກນ້ອຍໄວ້ທຸກເທື່ອທີ່ໃຊ້

ຂ. ໃຫ້ລອກຖາດສຳຫລັບໃສ່ເຄື່ອງກິນ ຂອງເດັກນ້ອຍໃຫ້ແໜ້ນ ແລະເວລາທີ່ລອກນັ້ນໃຫ້ຣະວັງນິ້ວມືຂອງເດັກນ້ອຍທີ່ນັ່ງຢູ່ເທິງຕັ່ງ.

ຄ. ທ່ານຈະຕ້ອງເຝົ້າແລະເບິ່ງແຍງເດັກນ້ອຍຢູ່ຕລອດເວລາ ຢ່າໃຫ້ເດັກນ້ອຍຢູ່ຕາມລຳພັງ.

໕. ຕັ່ງນັ່ງຂອງເດັກນ້ອຍເກີດໃໝ່

ກ. ວົງກົມ (ຕີນ) ຂອງຕັ່ງນັ່ງຂອງເດັກນ້ອຍຈະຕ້ອງກວ້າງພໍ ແລະ ແໜ້ນໜາດີ.

ຂ. ສຳຫລັບແນວຮອງນັ່ງຂອງເດັກນ້ອຍຈະຕ້ອງຢູ່ໃນສະພາບດີ ແລະ ບໍ່ຫລຸດອອກມາໄດ້.

ຄ. ຂາຕັ່ງ (ຕີນ) ນັ້ນຈະຕ້ອງມີຢາງຮອງທາງພື້ນ ເພື່ອບໍ່ໃຫ້ຕັ່ງນັ້ນຍາຍອອກຈາກທີ່ໄດ້.

ງ. ໃຫ້ໃຊ້ສາຍຮັດເດັກນ້ອຍທຸກໆເທື່ອທີ່ນັ່ງຢູ່ຮັດຕົວຂອງເດັກນ້ອຍໄວ້.

ຂໍ້ສັງເກດ : ກ່ຽວກັບເຄື່ອງອຸປກອນ ຫລື ເຄື່ອງຫລິ້ນຕ່າງໆຂອງເດັກນ້ອຍຕ້ອງກວດເບິ່ງເລື້ອຍໆວ່າສີທານັ້ນ ບໍ່ມີສ່ວນປະສົມຂອງ ຂົກວ, ບໍ່ມີຂອບຫລືຫລ່ອມຄົມ ແລະ ນອດຕ່າງໆທັນແໜ້ນໜາດີບໍ່.

83

ຜ. ຄວາມປອດພັຍ ເວລາຢູ່ໃນຣົຖຍົນ.

ເດັກນ້ອຍພິການຍ້ອນການເກີດອຸບັດຕິເຫດທາງຣົຖຍົນ ມີຫລາຍກວ່າທີ່ເດັກນ້ອຍເກີດມາແບບພິການມາແຕ່ກຳເນີດ.

" ອຸບັດຕິເຫດທາງຣົຖຍົນເປັນສາເຫດອັນດັບນຶ່ງໃນການຕາຍຂອງເດັກນ້ອຍ ຊຶ່ງຫລາຍກວ່າການຕາຍຊຶ່ງເກີດຈາກໂຣຄຕ່າງໆ ເຊັ່ນໂຣຄມະເລງໃນເສັ້ນເລືອດ, ໂຣຄເຍື່ອຫຸ້ມສມອງອັກເສບ, ຫລື ໂຣຄໄຂ້ສັນຫລັງອັກເສບ, ເປັນເປ້ຍຫລອຍ, ໂຣຄຫົວໃຈ ຫລືໂຣຄເຍື່ອຫຸ້ມການເນື້ອອັກເສບ. ຢູ່ໃນຣັຖແຄລີຟໍເນັຍ ເດັກນ້ອຍທີ່ຕາຍຍ້ອນເກີດອຸບັດຕິເຫດ ທາງຣົຖຍົນມີຫລາຍກວ່າ ໒໐໐ ຄົນຕໍ່ປີ. ແລະມີຫລາຍກວ່າ ໒໐,໐໐໐ ກວ່າຄົນທີ່ຖືກບາດເຈັບ ຫລາຍຄົນພິການ ແລະ ເສັຍໂສມຕລອດຊີວິດ. ເປັນສິ່ງທີ່ໜ້າເສັຍໃຈ ເພາະວ່າ ໘ ໃນຈຳນວນ ໑໐ ຄົນຂອງເດັກນ້ອຍທີ່ຕາຍ ຫລື ບາດເຈັບຍ້ອນເກີດອຸບັດຕິເຫດ ແຕ່ກໍ່ສາມາດປ້ອງກັນໄດ້ດ້ວຍການຮັດສາຍແອວ " (ຈາກບົດຂຽນໃນປຶ້ມ "ທ່ານຈະໃຫ້ຂອງຂວັນອັນລ້ຳຄ່າ ແກ່ເດັກນ້ອຍໄດ້ຫລືບໍ່)

" ໃນເວລາ ສິບເຈັດປີທີ່ຜ່ານມາ ຂ້າພະເຈົ້າບໍ່ເຄີຍໄດ້ແກ້ສາຍຮັດແອວ ອອກຈາກຄົນຕາຍຍ້ອນອຸບັດຕິເຫດຈາກຣົຖຍົນຈັກເທື່ອເລີຍ" ນີ້ແມ່ນຄຳເວົ້າຂອງເຈົ້າໜ້າທີ່ຕຳຣວດຄົນນຶ່ງຂອງກຳແພງເມືອງລອສ ອັງເຈລີສ ທີ່ເວົ້າກ່ຽວກັບ ອຸບັດຕິເຫດຣົຖຍົນ ແລະ ສາຍຮັດແອວ.

ກ. ຕັ່ງນັ່ງຂອງຣົຖຈະຕ້ອງຖືກຕ້ອງຕາມມາຕຖານຂອງຄວາມປອດພັຍ

ຂ. ກົດໝາຍໃໝ່ຂອງຣັຖ ໄດ້ບົ່ງໄວ້ວ່າເດັກນ້ອຍທີ່ມີອາຍຸຕ່ຳກວ່າ ໔ ປີ ຫລື ມີນ້ຳໜັກຕ່ຳກວ່າ ໔໐ ປອນຈະຕ້ອງໃຊ້ຕັ່ງນັ່ງພິເສດຂອງເດັກນ້ອຍ ເວລາຂີ່ຣົຖ.

ຄ. ບໍ່ຄວນໃຊ້ສາຍຮັດແອວສາຍດຽວກັບເດັກນ້ອຍ ໒ ຄົນ, ຫລືວ່າຜູ້ໃຫຍ່ຊຶ່ງເດັກນ້ອຍນັ່ງຢູ່ເທິງຕັກ.

ງ. ໃຫ້ເດັກນ້ອຍນັ່ງຢູ່ເບາະທາງຫລັງຣົຖ ດີກວ່າຈະໃຫ້ເດັກນ້ອຍນັ່ງຢູ່ທາງຂ້າງໜ້າ ແປະຜູ້ຂັບຣົຖ.

ຈ. ບໍ່ຄວນເອົາເດັກນ້ອຍນັ່ງຢູ່ເທິງຕັກ.

ສ. ຢ່າໄດ້ໃຫ້ເດັກນ້ອຍນັ່ງຢູ່ທາງຫລັງຣົຖ ( Station Wagon) ຫລືທ້າຍຣົຖກະບະເປີດຫລັງຄາ (Pick-up Truck).

ຊ. ທຸກໆຄົນທີ່ນັ່ງຢູ່ໃນຣົຖ ຈະຕ້ອງຮັດສາຍແອວ.

ກ. ວິທີປ້ອງກັນການລົ້ມ.

ກ. ບ້ານເຮືອນຕ້ອງໃຫ້ມີແສງສວ່າງພຽງພໍ

ຂ. ພື້ນເຮືອນຈະຕ້ອງບໍ່ໃຫ້ມື່ນພະລາດ

ຄ. ພົມປູພື້ນເຮືອນຈະຕ້ອງແຈບດີ ຫລື ຕອກຕະປູໃຫ້ແໜ້ນ

ງ. ພື້ນເຮືອນບໍ່ໃຫ້ມີຜ້າເສດ ຫລື ສິ່ງຕ່າງໆຍັ່ງຍາຍໄວ້.

ຈ. ບໍ່ຄວນເອົາຕັ່ງໄປໄວ້ໃກ້ປ່ອງຢ້ຽມທີ່ນອນຫລາຍ ເພາະເດັກນ້ອຍອາດສາມາດປີນຂຶ້ນເອງໄດ້.

ສ. ຢ່າໃຫ້ເດັກນ້ອຍຫລິ້ນຢູ່ໃກ້ຂອບ ປ່ອງຢ້ຽມທີ່ມີຕານາງ.

ຊ. ໃຫ້ກັ້ນທີ່ວ້ຽນໄດ ທຸກບ່ອນ

ຍ. ໃຫ້ໃຊ້ເຄື່ອງຮັດແອວ ທຸກໆເທື່ອ.

໑. ຢ່າປ່ອຍເດັກນ້ອຍເກີດໃໝ່ໄວ້ຜູ້ດຽວ,(ແມ່ນແຕ່ຊົ່ວຣະຍະນຶ່ງກໍຕາມ)ຢ່າຫັນຫລັງໃສ່)!!!

ເພາະພຽງວິນາທີດຽວເທົ່ານັ້ນ ເດັກນ້ອຍກໍຈະສາມາດຕົກລົງຈາກຕຽງນອນ,

ຈາກໂຕະຕັ່ງສູງ ຫລືວ່າຈາກບ່ອນຕ່າງໆໄດ້.

໒. ຖ້າຫາກທ່ານຈະຍ່າງໄປບ່ອນໃດບ່ອນນຶ່ງໃຫ້ອູ້ມເອົາເດັກນ້ອຍໄປນຳ ຫລືວ່າເອົາເດັກນ້ອຍໄປໄວ້ຢູ່ໃນບ່ອນທີ່ປອດພັຍເສັຽກ່ອນ.

ຊ. ເຄື່ອງເບື່ອເມົາ.

ກ. ໃຫ້ໃສ່ກຸນແຈຕູ້ທີ່ເກັບເຄື່ອງເບື່ອເມົາ, ນ້ຳຢາຊັກເຄື່ອງ ຫລືວ່າມັນຣົດໄວ້ຢູ່ໃນບ່ອນຕູ້ສູງຊຶ່ງເດັກນ້ອຍບໍ່ສາມາດຈະຢັ່ງເອົາເຖິງໄດ້. ເຖິງແມ່ນວ່າເດັກນ້ອຍຈະເອົາຕັ່ງຂຶ້ນປີນເອົາກໍຕາມ.

໑. ຢ່າໄດ້ເອົາເຄື່ອງເບື່ອເມົາມາໃຊ້ປົນກັບເຄື່ອງໃຊ້ທີ່ໃສ່ເຄື່ອງກິນ

໒. ເດັກນ້ອຍຈະເກັບເຄື່ອງທຸກສິ່ງ ແລະ ທຸກຢ່າງເຂົ້າໃສ່ໃນປາກ ເຖິງວ່າມັນຈະບໍ່ມີຣົສແຊບ ຫລື ກິນບໍ່ໄດ້ກໍຕາມ.

໓. ຖ້າຫາກທ່ານກຳລັງທຳຄວາມສະອາດບ້ານເຮືອນ ໃຊ້ນ້ຳຢາຕ່າງໆ ຫລັງຈາກທີ່ທ່ານທຳຄວາມສະອາດແລ້ວຈະອອກຈາກຫ້ອງນັ້ນໄປ ໃຫ້ຖືນ້ຳຢາຕ່າງໆອອກໄປພ້ອມ ຢ່າປະໄວ້ໃນຫ້ອງນັ້ນອີກ.

໔. ປ້າຍ ຫ້ອງການຄວບຄຸມຢາເບື່ອ :

San Diego Regional Poison Center
UCSD Medical Center
225 Dickinson St, H-925
San Diego, CA. 92103-9981

ຂ. ຢາປົວພຍາດຕ່າງໆ

໑. ປັນຫາສ່ວນໃຫຍ່ແມ່ນເກີດຂຶ້ນຈາກຢາ ແອສໄພຣິນ ແລະ ຢາແກ້ຫວັດ (ເພາະທຸກໆເຮືອນມັກມີຢາຈຳພວກນີ້ ໄວ້ປະຈຳບ້ານ).

໒. ຈົ່ງໃຊ້ຝາອັດ ນິຣະພັຍ ອັດກ່ອງຢາຕລອດເວລາເພື່ອຄວາມປອດພັຍຂອງເດັກນ້ອຍ

໓. ຕິດປ້າຍລາຍການຕ່າງໆຂອງຢາ ຢ່າງຖືກຕ້ອງ.

໔. ຢ່າໄດ້ກິນຢາຢູ່ຕໍ່ໜ້າເດັກນ້ອຍ ແລະ ບໍ່ຄວນບອກເດັກນ້ອຍວ່າ ຢາຄືເຂົ້າໜົມ ຫລືວ່າຢາມີຣົສແຊບ. ທ່ານບໍ່ຕ້ອງກັງວົນໃນເມື່ອເດັກນ້ອຍປະຕິເສດ ບໍ່ຢາກກິນຢາ.

ຄ. ຕົ້ນໄມ້ທີ່ເປັນພິດເບື່ອເມົາ - - ໃຫ້ກວດເບິ່ງເດີນບ້ານຂອງທ່ານວ່າມີຕົ້ນເບື່ອ, ກົກດອກຍີ່ໂຖ ແລະ ຕົ້ນໄມ້ທີ່ເປັນພິດອື່ນໆບໍ່ ? ແລ້ວນຳເອົາລາຍການຕົ້ນໄມ້ນັ້ນມາປຽບທຽບໃສ່ລາຍຊື່ປະເພດຕົ້ນໄມ້ທີ່ເປັນພິດ ຊຶ່ງພິມເຜີຍແຜ່ໂດຍ ສູນກາງຄວບຄຸມຢາເບື່ອ.

ງ. ອາຫານເປັນພິດ.

໑. ໃຫ້ຮັກສາຄວາມສະອາດແລະອານາມັຍຂອງເຮືອນຄົວ ບໍ່ຈຳເປັນຈະຕ້ອງເຖິງກັບມີການຕົ້ມ

໒. ການທຳຄວາມສະອາດຕ່າງໆໃນບ້ານເຮືອນໂດຍທົ່ວໆໄປໃຫ້ໃຊ້ : ນ້ຳຢາຊັກຜ້າ Chlorine Bleach ໒ ບ່ວງແກງປະສົມໃສ່ນ້ຳ ໑ ແກລລອນ ເພື່ອລ້າງແລະທຳຄວາມສະອາດ ເຄື່ອງຫລິ້ນຂອງເດັກນ້ອຍ ດ້ວຍການສີດໃສ່ ແລະ ຕາກໃຫ້ແຫ້ງດີ.

ຂໍ້ສັງເກດ : ຫ້າມປະສົມນ້ຳຢາຊັກເຄື່ອງ ( bleach ) ໃສ່ກັບເຄມີຢ່າງອື່ນເດັດຂາດ ເພາະມັນອາດຈະເກີດເປັນ ແກສ LETHAL . ພ້ອມດຽວກັນໃຫ້ແອບເປັນຄົນມີນິສັຍມັກອ່ານ ຄຳແນະນຳຕົວໜັງສືນ້ອຍໆທີ່ບອກໄວ້ຢູ່ໃນປ້າຍຕິດກວດຢາຂອງເຄື່ອງໃຊ້ຕ່າງໆ ເພື່ອໃຫ້ຮູ້ເຖິງການປະຕິບັດ ແລະ ຄວາມປອດພັຍ.

ມ. ໃຊ້ຫລັກການປຸງອາຫານໃຫ້ຖືກຕ້ອງຕາມຫລັກອານາມັຍ

ກ. ກ່ອນປຸງອາຫານໃຫ້ທຳຄວາມສອາດມື ແລະ ເຄື່ອງໃຊ້ຕ່າງໆເສັຽກ່ອນ

ຂ. ເກັບອາຫານໄວ້ຢູ່ບ່ອນມີອາກາດເຢັນ--ອາຫານທີ່ປະໄວ້ຂ້າງນອກປະມານ ໔ ຊົ່ວໂມງກໍຈະບູດໄດ້ ຈົ່ງລະວັງຈຳພວກນ້ຳໃສສລັດ, ໄຂ່ ແລະ ອື່ນໆ...

ຄ. ຢ່າໄດ້ໃຊ້ເຄື່ອງທ່ອນໂທມະ ແລະ ບູດ ຖ້າສົງສັຍວ່າມັນບູດໃຫ້ເທຖິ້ມເສັຽ ຜູ້ທີ່ເຄີຍເບື່ອອາຫານຈະເຫັນດີໃນການແນະນຳນີ້.

ງ. ອາຫານຄວນປິດໄວ້ໃຫ້ດີ

ຂໍ້ສັງເກດ : ອາຫານທີ່ປະໄວ້ນອກຕູ້ເຢັນ ເຖິງ ໔ ຊົ່ວໂມງອາຫານນັ້ນຈະບູດໄດ້.

ຈ. ຖ້າຫາກເດັກນ້ອຍກິນອາຫານເບື່ອເມົາ ຢ່າໄດ້ລໍຖ້າຈົນມີອາການເກີດຂຶ້ນ ໃຫ້ໂທຣະສັພທາ ສູນກາງຄວບຄຸມຢາເບື່ອ ໝາຍເລກ : 294-6000.
(ທາງສູນກາງຈະມີນາຍພາສາໃຫ້ແກ່ທ່ານ)

ສ. ຢູ່ບ້ານເຮືອນຄວນຈະມີຢາ Syrup of Ipecac ໄວ້ໃນກໍຣະນີທີ່ເກີດກິນຂອງເບື່ອເມົາຂຶ້ນມາ.

໑. ທ່ານທີ່ຄວນຈະມີໄວ້ຫລາຍໆຂວດ ເພາະຢາຂວດນຶ່ງໃຊ້ໄດ້ເທື່ອດຽວ ທ່ານອາດຈະໄດ້ໃຊ້ຫລາຍໆຂວດພ້ອມກັນ ຖ້າຫາກມີເດັກນ້ອຍເກີດເບື່ອເມົາຂຶ້ນມາພ້ອມໆກັນ.

໒. ຢ່າໃຊ້ຢາຂົ້ນດຸ້ນໂດຍທີ່ບໍ່ໄດ້ຮັບຄຳແນະນຳຈາກສູນກາງຄວບຄຸມຢາເບື່ອ ຫລື ທ່ານໝໍເສັຽກ່ອນ

໓. ໃຫ້ກວດເບິ່ງວັນທີ່ຢູ່ເທິງຂວດຢາ, ຄຸນນະພາບແລະອາຍຸຂອງຢາ.

ຜ. ອາການສມັກ ຫລິ້ນເຄື່ອງຄາລໍ

ກ. ຈະເກີດຂຶ້ນແກ່ເດັກນ້ອຍທີ່ມີອາຍຸຕັ້ງແຕ່ ໗ ເດືອນຂຶ້ນໄປຫາ ໒ ປີ.

໑. ໃຫ້ເອົາເຄື່ອງຂອງທີ່ເປັນຊິ້ນນ້ອຍໆໜີຫ່າງອອກຈາກເດັກນ້ອຍ

໒. ເຂັມຂັດເສື້ອຜ້າເປັນອັນຕລາຍຕໍ່ຊີວິດເດັກນ້ອຍຫລາຍທີ່ສຸດ

໓. ເຄື່ອງຫລິ້ນ Legos ຊິ້ນດູກກັນ, ແລະເຄື່ອງຫລິ້ນເກມ ແນວເປັນຊິ້ນໆ, ເຄື່ອງຫລິ້ນທີ່ມີຮູບຕ່າງໆເຊັ່ນເຄື່ອງໃຊ້, ໄມ້ຂີດໄຟ, ຣົຖຫລິ້ນນ້ອຍໆເປັນອັນຕລາຍຫລາຍ ບາງທີອາດຈະເຮັດໃຫ້ເດັກນ້ອຍເສັຽຊີວິດຍອນກໍໄດ້.

໔. ໝາກຖົ່ວດິນ; ເຂົ້າດອກແຕກ, ທົ່ວການໂດ, ໝາກອະງຸ່ນ, ໝາກແອບເປິ້ລ, ຊີ້ນໝູເຄັມສາມຊັ້ນ ແລະອາຫານຕ່າງໆທີ່ຄ້າຍຄືກັນນັ້ນ ເປັນອາຫານທີ່ເດັກນ້ອຍຫຍ້ຳຍາກ ຈົ່ງສອນໃຫ້ເດັກນ້ອຍຫຍ້ຳອາຫານໃຫ້ແຫລກແລ້ວຈຶ່ງກືນກິນ.

ຂ. ເດັກນ້ອຍທີ່ມີອາຍຸ ໓ ປີຫາ ໗ ປີ.

໑. ເປັນສິ່ງທີ່ບໍ່ໜ້າເຊື່ອທີ່ເດັກນ້ອຍ ໃຫຍ່ແດ່ແລ້ວຍັງເອົາສິ່ງຂອງຕ່າງໆຍັດເຂົ້າປາກດັງເອງ ເຊັ່ນ ນອດ, ກຽວທັນ, ແລະສິ່ງຂອງແນວອື່ນທີ່ເຮັດດ້ວຍເຫລັກ.

໒. ອາຫານ--ເດັກນ້ອຍໃຫຍ່ແດ່ແລ້ວ ເກັ່ງໃນການຈັບເອົາສິ່ງຂອງເຄື່ອງກິນເຂົ້າໃສ່ປາກ ແລ້ວແລ່ນອອກໄປຫລິ້ນ ສິ່ງທີ່ໄດ້ກ່າວມາຂ້າງເທິງນີ້ ມີບາງຢ່າງທີ່ຈະເຮັດໃຫ້ຄາຄໍເດັກນ້ອຍໄດ້ງ່າຍ.



ERIC Full Text Provided by ERIC

໑໐. ໄຟໄໝ້-ໄຟລວກ.

ກ. ໄຟໄໝ້ສ່ວນຫລາຍມັກຈະເກີດຂຶ້ນຢູ່ໃນເຮືອນຄົວ ດັ່ງນັ້ນຢ່າໃຫ້ເດັກນ້ອຍເຂົ້າໄປໃກ້ໃນສະຖານທີ່ ໂດຍສະເພາະເວລາທີ່ທ່ານກຳລັງເຮັດກິນຢູ່.

ຂ. ຮັກສາຫລືເຮັດແນວກັ້ນເຮືອນຄົວຫລືບ່ອນເຕົາໄຟ, ເຄື່ອງອາຍຮ້ອນເຕົາອົບ, ເຕົາຣີດຜ້າ ໂລມອັນພົ້ນໄຟຟ້າແລະອື່ນໆ.

ຄ. ປິ່ນດ້າມຂອງໝໍ້ຕົ້ມ, ໝໍ້ຈືນແລະຈອງເຂົ້າໄປທາງດ້ານຫລັງຂອງເຕົາ, ພະຍາຍາມໃຊ້ເຕົາໄຟທີ່ຢູ່ທາງໃນ ແລະເກັບເອົາສິ່ງທີ່ມີຄວາມຮ້ອນເຂົ້າໄປໄວ້ທາງໃນໆ ເພື່ອປ້ອງກັນບໍ່ໃຫ້ເດັກນ້ອຍຢື້ເອົາໄດ້

ງ. ມ້ຽນສາຍໄຟສຳລັບໝໍ້ຕົ້ມນ້ຳກາເຟ ແລະເຄື່ອງໄຟຟ້າແນວອື່ນໆໄວ້ໃຫ້ດີ ຫລືບ່ອນເດັກນ້ອຍຢື້ເອົາບໍ່ໄດ້.

ຈ. ບ່ອນເປີດເຕົາໄຟແລະເຕົາອົບຈະຕ້ອງຢູ່ບ່ອນທີ່ເດັກນ້ອຍຢື້ເອົາບໍ່ເຖິງ ຖ້າຫາກທ່ານມີເດັກນ້ອຍດື້ບອກບໍ່ຟັງຄວາມຢູ່ໃນເຮືອນ ທ່ານຈະຕ້ອງເອົາແນວທັບປິດເປີດນັ້ນອອກ ເມື່ອເວລາທີ່ທ່ານບໍ່ໃຊ້ເຕົານັ້ນ.

ສ. ໃຫ້ເກັບມ້ຽນສິ່ງທີ່ມີຄວາມຮ້ອນໄວ້ໄກຈາກເດັກນ້ອຍ ຢ່າອູ້ມເດັກນ້ອຍແລະຖືຖ້ວຍຮ້ອນໆໃນເວລາດຽວກັນເພາະມັນອາດຈະລວກເດັກນ້ອຍໄດ້.

ຊ. ໃຫ້ຕັ້ງຄວາມຮ້ອນຂອງໝໍ້ຕົ້ມນ້ຳໃນ ໑໒໐ ເດີກຣີ ຢ່າຕັ້ງສູງກວ່ານັ້ນ

໑. ເດັກນ້ອຍກຳລັງຄານຈະສາມາດຄານໄປເປີດນ້ຳຮ້ອນໃນອ່າງໄດ້.

໒. ນ້ຳຕົ້ມທີ່ຮ້ອນຫລາຍຈະບໍ່ເປັນອັນຕະລາຍໃນການເຮັດໃຫ້ໜັງຂອງເດັກນ້ອຍໂພງໄດ້

ຍ. ເຄື່ອງມອດໄຟຈະຕ້ອງຫ້ອຍໄວ້ຢູ່ໃນເຮືອນຄົວ ຫລືວ່າບ່ອນທີ່ທ່ານຈະໄດ້ຈັບມາໃຊ້ໄດ້ໃນທັນທີທັນໃດ

ດ. ເຄື່ອງຈັບຄວັນໄຟໃຫ້ກວດເບິ່ງທຸກໆເດືອນວ່າ ທຸກຢ່າງຍັງຢູ່ໃນສະພາບດີບໍ່ ?

ຕ. ວາງແຜນແກ້ໄຂເຫດການລ່ວງໜ້າໄວ້ໃນກໍລະນີທີ່ເກີດໄຟໄໝ້ໃຫ້ຝຶກຊ້ອມເດັກນ້ອຍທີ່ຕຽມເຂົ້າໂຮງຮຽນ ແລະເດັກນ້ອຍຈຳໃຫ້ແດ່ ໃຫ້ເຮັດຄືການຫລິ້ນເກມ ແຕ່ໃຫ້ບອກເດັກນ້ອຍເຖິງຄວາມສຳຄັນຂອງເຫດການທີ່ເກີດຂຶ້ນ.

໑໑. ອັນຕະລາຍທີ່ເກີດມາຈາກເຮືອນຄົວ.

ກ. ຈອກແກ້ວ, ມີດພ້າແລະແນວອື່ນໆເປັນອັນຕະລາຍຕໍ່ເດັກນ້ອຍ ໃຫ້ເກັບເອົາສິ່ງເຫລົ່ານັ້ນອອກຈາກແຄມໂຕະຫລືເທິງຂຽງ

ຂ. ສິ່ງທີ່ມີຄົມເຊັ່ນ ມີດພ້າຄວນເກັບໄວ້ທາງໃນຂອງລິ້ນຊັກ

ຄ. ຢ່າໃຫ້ເດັກນ້ອຍໃຊ້ຈານດິນຫລືຈອກແກ້ວໃນການກິນອາຫານ

ງ. ຈົ່ງລະວັງກ່ຽວກັບສາຍໄຟຟ້າ

ຈ. ເຄື່ອງຈັກລ້າງຖ້ວຍຊາມໃຫ້ເບິ່ງລັກວ່າ ມີມີດແຫລມຫລືຈອກແກ້ວຢູ່ທາງໃນບໍ່? ເພາະເດັກນ້ອຍຈະສາມາດເປີດເອົາໄດ້ງ່າຍ

໑໒ . ຄວາມປອດພັຍກ່ຽວກັບຫູກະຕາ ແລະເຄື່ອງຫລິ້ນອື່ນໆ

ກ. ເຄື່ອງຫລິ້ນຂອງເດັກນ້ອຍໃຫ້ກວດເບິ່ງເລື້ອຍໆກ່ຽວກັບສະພາບການວ່າໄດ້ມີຂອບຫລືຄົມພົ້ນອອກມີບ່ອນແຕກຫັກຫລືສ່ວນປະກອບຫລຸດຫລວມແລະອື່ນໆບໍ່?



ERIC Full Text Provided by ERIC

ຂ. ເຄື່ອງຫລິ້ນແບບເປົ່າແລະແບບດູດ (ຫົວນົມປອມ) ຂະໜາດ ໒x໑ ໑/໒"

໑. ໃຫ້ກວດເບິ່ງວ່າຫົວນົມທີ່ເດັກນ້ອຍດູດຢູ່ໃນປາກນັ້ນມີຮູບໍ?

໒. ໃຫ້ກວດເບິ່ງຫົວດູດວ່າຢູ່ໃນສະພາບດີພໍທີ່ຈະບໍ່ຫລຸດເຂົ້າໄປໃນຮູຄໍຂອງເດັກນ້ອຍ

ຄ. ກ່ອນຈະຊື້ເຄື່ອງຫລິ້ນຊະນິດໃດຊະນິດໜຶ່ງໃຫ້ເດັກນ້ອຍ. ພວກທ່ານຈະຕ້ອງພິຈາລະນາໃຫ້ດີເຖິງຮ່າງກາຍແລະອາຍຸຂອງເດັກນ້ອຍກ່ອນ. ເຄື່ອງຫລິ້ນທຸກຢ່າງບໍ່ແມ່ນຈະໃຊ້ໃຫ້ເດັກນ້ອຍຫລິ້ນໄດ້ທຸກຄົນ ມັນຈະຕ້ອງຂຶ້ນຢູ່ກັບອາຍຸແລະຮ່າງກາຍຂອງເດັກນ້ອຍເທົ່ານັ້ນ.

ງ. ເຄື່ອງຫລິ້ນຢູ່ເດີ່ນບ້ານ

໑. ສຳລັບໂອນຊ້າຂອງເດັກນ້ອຍ ພະຍາຍາມຢ່າໃຊ້ແປ້ນໄມ້ແລະໜັກສຳລັບບ່ອນນັ່ງ. ໃຫ້ໃຊ້ແປ້ນທີ່ພັບໄດ້

໒. ຢ່າໃຊ້ບ່ວງຫລືປ່ອງ ທີ່ມີຂະໜາດ ໕ ນິ້ວ ຫາ ໑໐ ນິ້ວ ເພາະມັນຈະເຮັດໃຫ້ຕົວຂອງເດັກນ້ອຍຄາໄດ້ໃນເວລາທີ່ເຂົ້າຫລິ້ນຢູ່

໓. ຢ່າໃຫ້ເຄື່ອງຫລິ້ນເຄື່ອນໄຫວຫລືຢູ່ໃກ້ກັນ ພະຍາຍາມໃຫ້ຢູ່ຫ່າງກັນປະມານ ໖ ຟຸດ ຈະເປັນການດີ

໔. ພະຍາຍາມຢ່າໃຊ້ເຄື່ອງຫລິ້ນທີ່ມີຄົມ, ຫລຸດຫລົ່ນ, ມີສົນ, ມີດນ້ອຍທີ່ຍື່ນອອກມາ.

໕. ໃຫ້ລະວັງບາງພັບຂອງເຄື່ອງຫລິ້ນຈະໜີບເສື້ອຜ້າ, ໜີບນິ້ວມືແລະໜີບຜົມຂອງເດັກນ້ອຍ

໖. ໃຫ້ກວດເບິ່ງວ່າ ເຄື່ອງຫລິ້ນຂອງເດັກນ້ອຍຕັ້ງຢູ່ໃນເດີ່ນທີ່ຮາບພຽງດີ ແລະແໜ້ນໜາດີພໍສົມຄວນບໍ່ ?

໗. ໃຫ້ສອນເດັກນ້ອຍກ່ຽວກັບກົດລະບຽບວ່າດ້ວຍຄວາມປອດໄພຂອງການຫລິ້ນຢູ່ເດີ່ນນອກເຮືອນ

໘. ກະຖັງດິນຊາຍ

ກ. ຢ່າເອົາດິນຊາຍໃສ່ໃນອ່າງປຣາສຕິກ ກະຖັງຄວນຈະຕັ້ງຢູ່ເທິງໜ້າດິນ ເພື່ອຈະເຮັດໃຫ້ດິນຊາຍໄຫລຊຶມໄດ້.

ຂ. ກະຖັງດິນຊາຍຈະຕ້ອງມີຝາປິດໄວ້ໃຫ້ດີ ດິນຊາຍເປັນສິ່ງທີ່ເກີດເຊື້ອໂຣກໄດ້ງ່າຍ ໂດຍສະເພາະກ່ຽວກັບໂຣກຜິວໜັງຕ່າງໆ ແລະນອກຈາກນັ້ນແມວກໍຈະມັກໄປຖ່າຍໃສ່ກະຖັງດິນຊາຍນັ້ນອີກ.

໙. ກົດລະບຽບຂອງການປອດໄພ.

ກ. ຢ່າອຸ້ມເອົາເດັກນ້ອຍຂຶ້ນຫລິ້ນເທິງເຄື່ອງຫລິ້ນ ຖ້າຫາກເດັກນ້ອຍຂຶ້ນເອງບໍ່ໄດ້.

ຂ. ຈົ່ງອະນຸຍາດໃຫ້ເດັກນ້ອຍຂຶ້ນບ່ອນທີ່ເຂົາສາມາດຂຶ້ນຫລິ້ນໄດ້ດ້ວຍຕົນເອງເຂົາເທົ່ານັ້ນ.

໑໓. ອັນຕະລາຍທີ່ເກີດຂຶ້ນມາຈາກໄຟຟ້າ.

ກ. ຈົ່ງໃຊ້ຫົວສຽບອັດຮູໄຟຟ້າ ມີຝາອັດຊະນິດໜຶ່ງຊຶ່ງອັດຮູໄດ້ທຸກບ່ອນ.

ຂ. ຈົ່ງຈັດເຄື່ອງເຮືອນຕ່າງໆເຊັ່ນ ໂຕະ ຕັ້ງໃຫ້ບັງຮູໄຟຟ້າໄວ້ ຖ້າເປັນໄປໄດ້.

ຄ. ສາຍໄຟຟ້າຢ່າໃຫ້ມັນຫ້ອຍລົງມາຢູ່ບ່ອນທີ່ເດັກນ້ອຍຈະສາມາດດຶງເອົາມາຫຍ້ຳໄດ້.

ງ. ໃຫ້ຈື່ໄວ້ສະເໝີວ່າ ຢ່າໄດ້ໃຊ້ເຄື່ອງໄຟຟ້າຢູ່ໃກ້ນ້ຳ.

໑໔. ປະຕູກະຈົກ.

ກ. ໃຊ້ກາເຄື່ອງໝາຍຫລືເທບຕິດໄວ້ໃນປະຕູກະຈົກ ລະຫວ່າງສາຍຕາຂອງເດັກນ້ອຍ.

ຂ. ຖ້າເປັນໄປໄດ້ໃຫ້ເອົາເຄື່ອງເຟີນີເຈີບັງໜ້າປະຕູໄວ້.

ຄ. ຖ້າເປັນໄປໄດ້ໃຫ້ເອົາຕາໜ່າງກັນກະຈົກໄວ້.

໑໔. ສະລອຍນ້ຳ.

ກ. ໃຫ້ເຮັດຮົ້ວທີ່ສອງເທັນໄດ້ສູງປະມານ ໕ ຟຸດ ແລະມີກອນລັອກເອງໄດ້

ຂ. ອ່າງອາບນ້ຳຂອງເດັກນ້ອຍ ຖ້າບໍ່ໃຊ້ໃຫ້ເທນ້ຳອອກໃຫ້ໝົດແລະຄວນຈະມີແນວກັ້ນໄວ້.

ຄ. ຢ່າໃຫ້ເດັກນ້ອຍຢູ່ໃນເຮືອນຫລືຢູ່ໃກ້ສະນ້ຳພຽງລຳພັງ ພຽງແຕ່ ໒-໓ ວິນາທີເທົ່ານັ້ນ ເດັກນ້ອຍກໍຈະສາມາດຕົກລົງໄປໃນນ້ຳໄດ້.
( ສິ່ງສຳຄັນກໍຄື ເຫດການເຫລົ່ານີ້ມັກເກີດຂຶ້ນເລື້ອຍໆ. )

໑໕. ເຄື່ອງອາວຸດ.

ກ. ປືນຈະຕ້ອງມ້ຽນໄວ້ໃນຕູ້ ແລະໃສ່ກຸນແຈໄວ້ໃຫ້ເອົາລູກປືນອອກຈາກກອງ.

ຂ. ປືນຍາວທີ່ບໍ່ໃຊ້ໃຫ້ເອົາສລັກອອກ.

ຄ. ຢ່າເກັບປືນແລະລູກກະສຸນປືນໄວ້ໃນບ່ອນດຽວກັນ.

ງ. ມີດຫລືດາບທີ່ມີຄົມແຫລມ ໃຫ້ລັອກໃສ່ກຸນແຈໄວ້.

໑໗. ຕູ້ເຢັນ– ຖ້າບໍ່ໃຊ້ໃຫ້ເອົາປະຕູມັນອອກໄວ້–ຫລືອັດໃສ່ກຸນແຈລັອກໄວ້ໃຫ້ດີ (ບໍ່ແມ່ນອັດໄວ້ລາງ– ໃນເວລາທີ່ບໍ່ໃຊ້.)

໑໘. ຖົງຢາງປລາສຕິກ( ໂດຍສະເພາະແມ່ນຖົງທີ່ເອົາມາຈາກບ່ອນຊັກແຫ້ງ ) ເປັນອັນຕລາຍຕໍ່ເດັກນ້ອຍ ແລະສາມາດເຮັດໃຫ້ເຂົາຫາຍໃຈບໍ່ໄດ້ ຖ້າເອົາມາຫລິ້ນ ເມື່ອທ່ານຈະເອົາຖົງນັ້ນຖິ້ມໃຫ້ມັດເປັນຂອດເສັຍກ່ອນ ຫ້າມໃຊ້ໄປປູບ່ອນນອນ .

໑໙. ເຄື່ອງຕັດຫຍ້າ: ຢ່າໃຫ້ເດັກນ້ອຍເຂົ້າໄປໃກ້ໃນເວລາທີ່ຕັດຫຍ້າ ເພາະຢ້ານເຄື່ອງທີ່ຕົກຢູ່ພື້ນຫຍ້ານັ້ນຟົ້ງໄປຖືກເຂົາເຈົ້າ.

໒໐. ເດີ່ນຫລິ້ນຄວນຈະມີຮົ້ວກັ້ນ: ນອກຈາກຈະໃຫ້ຄວາມປອດພັຍແກ່ເດັກນ້ອຍແລ້ວ ທ່ານກໍສາມາດສະບາຍໃຈອີກ.

ກ. ສິ່ງທີ່ຄວນຮູ້.

໑. ເຖິງແມ່ນວ່າບ້ານເຮືອນຂອງທ່ານຈະປອດພັຍແກ່ເດັກນ້ອຍເທົ່າໃດກໍຕາມ ທ່ານກໍຄວນເບິ່ງແຍງເດັກນ້ອຍຕື່ມອີກ ໂດຍສະເພາະເດັກນ້ອຍທີ່ມີອາຍຸ ຕ່ຳກວ່າ ໔ ປີລົງມາ ເພາະພວກເຂົາຍັງບໍ່ສາມາດຢູ່ຜູ້ດຽວໄດ້ ພວກທ່ານຄວນຈະຈື່ໄວ້ວ່າເດັກນ້ອຍສ່ວນຫລາຍຖືອຸດົມຄະຕິວ່າ " ມີຄວາມພະຍາຍາມຢູ່ບ່ອນໃດ ຄວາມສຳເຣັດກໍຢູ່ບ່ອນນັ້ນ."

໒. ຄວນຈັດແຈງບ້ານເຮືອນຂອງທ່ານໃຫ້ຢູ່ໃນລັກສະນະທີ່ທ່ານຈະສາມາດເຫັນແລະໄດ້ຍິນກັບສິ່ງຕ່າງໆທີ່ເກີດຂຶ້ນ. ບ້ານເຮືອນບາງຫລັງກໍປັບປຸງແລະເໝາະສົມກັບລັກສະນະຂອງບ່ອນລ້ຽງເດັກນ້ອຍ ແລະບາງບ້ານເຮືອນກໍເປັນການຍາກທີ່ຈະເຮັດໄດ້ຕາມຄວາມຕ້ອງການ.

໓. ເດັກນ້ອຍອາດຈະອະນຸຍາດໃຫ້ອອກໄປຫລິ້ນທາງນອກໄດ້ ແຕ່ທ່ານຈະຕ້ອງເປັນຄົນເບິ່ງແຍງໃນເວລາທີ່ເຂົາຫລິ້ນຢູ່ທາງນອກ ນິສັຍໃຈຄໍຂອງເດັກນ້ອຍພ້ອມດ້ວຍອາຍຸຂອງເຂົາເຈົ້າ ເປັນສິ່ງທີ່ຄວນພິຈາຣະນາວ່າຄວນຈະຕັດສິນໃຈໃຫ້ເຂົາຫລິ້ນຢູ່ທາງນອກຜູ້ດຽວໄດ້ຫລືບໍ່ ?

໔. ສອນເດັກນ້ອຍໃຫ້ຮູ້ຈັກກົດລະບຽບກ່ຽວກັບຄວາມປອດພັຍ.

ກ. ສອນໃຫ້ເດັກນ້ອຍເຂົ້າໃຈວ່າ ເປັນຫຍັງພວກເຂົາເຈົ້າຈະຕ້ອງປະຕິບັດກັບກົດລະບຽບເຫລົ່ານີ້.

ຂ. ກ່ຽວກັບກົດລະບຽບເຫລົ່ານີ້ໃຫ້ໃຊ້ຕົວຢ່າງເຊັ່ນ ຕຸກກະຕາ, ການເລົ່ານິທານເຣື່ອງຈິງໃຫ້ເຂົາຟັງ ຫລືຫລິ້ນເກມທີ່ມີຮູບຕ່າງໆກ່ຽວກັບຄວາມປອດພັຍນັ້ນ.

ບົດຮຽນທີ່ ໗.

## ຫົວຂໍ້ທີ່ຈະສົນທະນາ ຫລື ປຶກສາຫາລື

## ເຄື່ອງອຸປກອນ ໃນການລ້ຽງເດັກນ້ອຍ

ກ. ວັດຖຸປະສົງ ຂອງການປະຊຸມເທື່ອນີ້.

໑. ເພື່ອເນັ້ນໜັກກ່ຽວກັບຄວາມປອດພັຍ ຂອງອຸປກອນຕ່າງໆ ພ້ອມທັງການໃຊ້ເຄື່ອງອຸປກອນເຫລົ່ານັ້ນຢ່າງຖືກຕ້ອງ.

໒. ສະແດງໃຫ້ເຫັນຈາກຂອງຈິງ ເພື່ອຊີ້ໃຫ້ເຫັນເຖິງຈຸດອັນຕລາຍຕ່າງໆຂອງເຄື່ອງອຸປກອນ.

໓. ເພື່ອກ່າວເຖິງ ສະຖິຕິຂອງອຸບັດຕິເຫດ ແລະ ການເສັຽຊີວິດຈາກການໃຊ້ເຄື່ອງອຸປກອນຕ່າງໆເຫລົ່ານັ້ນ.

ຂ. ອຸປກອນທີ່ຈະກວດສອບເບິ່ງ.

໑. ອູ່ນອນ ແລະ ອູ່ຫິ້ວ

໒. ອູ່ນັ່ງຫລິ້ນ

໓. ຕັ່ງສູງ

໔. ລໍ້ຊຸກ (ລໍ້ຍູ້)

໕. ເຄື່ອງພາແອບຍ່າງ

໖. ຮົ້ວອ້ອມ

໗. ງ່ຽງ ຫລື ຕັ່ງນັ່ງ (ສຳຫລັບຖ່າຍ)

໘. ຕູ້ເຄື່ອງຫລິ້ນ/ຫີບເຄື່ອງຫລິ້ນທີ່ດຶງອອກ ດຶງເຂົ້າໄດ້

໙. ເຄື່ອງຫລິ້ນ ຕຸກກະຕາ

໑໐. ໂອນຊາ/ໝາກຕະລຸດ/ໝາກເດື່ອງດ່າງ.

ຄ. ການສະແດງໃຫ້ເຫັນກ່ຽວກັບ ຄວາມປອດພັຍ ແລະ ອັນຕລາຍຈາກອຸປກອນຕ່າງໆ (ສະແດງຕາມລຳດັບ ທີ່ກ່າວໄວ້ໃນຂໍ້ ຂ.)

ງ. ຄຳເຕືອນ : ການຊື້ເຄື່ອງອຸປກອນ (ເກົ່າ) ທີ່ຖືກໃຊ້ມາແລ້ວ.

໑. ໃຫ້ກວດເບິ່ງຢ່າງລະອຽດ ກ່ຽວກັບລັກສະນະຂອງຄວາມປອດພັຍຂອງເຄື່ອງອຸປກອນນັ້ນ

໒. ຢ່າຊື້ເຄື່ອງອຸປກອນທີ່ມີຊິ້ນສ່ວນທີ່ແຕກຫັກ ຫລື ຂອບອັນແຫລມຄົມ.

໓. ຢ່າຊື້ອຸປກອນ ທີ່ບໍ່ແຂງແຮງໝັ້ນຄົງ ຫລື ງ່ຽງ (ຕັ່ງບໍ່ທ່ຽງ) ຢ່າໄດ້ຄິດແຕ່ວ່າໄດ້ໃນລາຄາຖືກ.

໔. ຫລີກເວັ້ນຈາກການໃຊ້ເຄື່ອງອຸປກອນ ທີ່ບໍ່ຖືກຕ້ອງຫລືບໍ່ເໝາະສົມກັບສະພາບການ ເຊັ່ນ : ຊື້ລໍ້ຍູ້ ເພື່ອເອົາມາເຮັດຕັ່ງນັ່ງກິນເຂົ້າ. ຊື້ເອົາແນວອູ່ນເດັກນ້ອຍທຳມະດາໄປໃຊ້ຕ່າງຕັ່ງຂອງເດັກນ້ອຍຢູ່ໃນຣົຖ.

ຈ. ຄວາມສຳຄັນ ຂອງການສອນຫລັກຄວາມປອດພັຍແກ່ເດັກນ້ອຍ.

໑. ຄິດຄົ້ນຫາ ວິທີຫລິ້ນເພື່ອສອນຫລັກຄວາມປອດພັຍ ແກ່ເດັກນ້ອຍ.

໒. ໃຫ້ເດັກນ້ອຍທຸກໆຄົນ ມີສ່ວນຮ່ວມແລະຫລິ້ນນຳ

ບົດຮຽນທີ່ ຜ.

## ປົກ ປ້ອງ ລູກ ຂອງ ພວກ ທ່ານ



ແຕ່ລະປີມີເດັກນ້ອຍເສັຽຊີວິດຍ້ອນອຸບັດຕິເຫດຢູ່ໃນເຮືອນ ຫລາຍກວ່າການຕາຍຍ້ອນໂຣກຕ່າງ ລວມກັນ.

ຈົ່ງເບິ່ງແຍງລູກຂອງທ່ານເວລາເຂົາເຈົ້າຫລິ້ນ ຈະບໍ່ມີສິ່ງໃດທີ່ຈະປ້ອງກັນອຸບັດຕິເຫດໄດ້ດີກວ່າ ການຄວບຄຸມເບິ່ງແຍງເດັກນ້ອຍຢ່າງຣະມັດຣະວັງ !!

(ແປແລະລຽບລຽງມາຈາກ)

U. S. Consumer Product Safety Commission
Washington, D.C. 20207

# ອັນຕຣາຍຕ່າງໆທີ່ມີຢູ່ໃນເຮືອນ

- ໃຫ້ຮູ້ວ່າສິ່ງທີ່ຈະເຮັດໃຫ້ມີອັນຕຣາຍນັ້ນມັນຢູ່ບ່ອນໃດ ເຊັ່ນຈຳພວກຢາກິນ ນ້ຳຢາຊັກເຄື່ອງ ນ້ຳຢາລ້າງເຕົາ ແລະນ້ຳຢາລະບາຍທໍ່ນ້ຳ,ນ້ຳຢາປະສົມສີແລະນ້ຳຢາຂັດເງົາ ໃຫ້ຊອກເອົາແນວທີ່ບັນຈຸຢູ່ໃນກ່ອງຫລືຂວດທີ່ເດັກນ້ອຍເປີດບໍ່ໄດ້ ຢ່າເກັບມັນສິ່ງເຫລົ່ານີ້ຢູ່ກ້ອງບ່ອນລ້າງຖ້ວຍ ຫລືບ່ອນທີ່ຫລຽວເຫັນໄດ້ງ່າຍ ໃນການຣັກສາໃຫ້ໃສ່ກຸນແຈເກັບມັນໄວ້ໃນບ່ອນທີ່ປອດພັຍ ແລະເດັກນ້ອຍບໍ່ເຫັນ ແລະຈັບເອົາບໍ່ໄດ້.

- ມ້ຽນຖົງປຣາສະຕິກບາງໆເຊັ່ນ ຖົງໃສ່ເສື້ອຜ້າຈາກຮ້ານຊັກເຄື່ອງ, ຖົງໃສ່ຜັກແລະຖົງຫມາກໄມ້ ແລະຖົງຂີ້ເຫຍື້ອໄວ້ໃນບ່ອນທີ່ປອດພັຍ ຢ່າໃຊ້ຜ້າປຣາສະຕິກປູບ່ອນນອນຫລືຫມອນເພາະມັນອາດຈະປົກຫລືຕິດຫນ້າເດັກນ້ອຍ ແລ້ວເຮັດໃຫ້ຫາຍໃຈບໍ່ໄດ້.

- ຫາຫົນທາງປ້ອງກັນສາເຫດທີ່ຈະເຮັດໃຫ້ເກີດໄຟຟ້າຊ໊ອດ ໃຫ້ເອົາຝາອັດ ອັດຮູປລັກໄຟອັນໃດທີ່ບໍ່ໄດ້ໃຊ້ ແລະຖອດສາຍເຄື່ອງມ້ວນຜົມຫລືເປົ່າຜົມອອກຈາກຮູປລັກສຽບໃນເມື່ອເຊົາໃຊ້ ເຄີຍມີເດັກນ້ອຍຕາຍຍ້ອນໄຟຟ້າຊອດເພາະເຄື່ອງເປົ່າຜົມ ຫລືມ້ວນຜົມທີ່ບໍ່ຖອດສາຍອອກຈາກຮູປລັກສຽບນັ້ນ ຕົກລົງໄປໃນອ່າງນ້ຳຫລືອ່າງລ້າງຫນ້າທີ່ເດັກນ້ອຍກຳລັງໃຊ້ຢູ່.



## ເຄື່ອງອຸປະກອນທີ່ໃຊ້ໃນການລ້ຽງເດັກ

- ມີເຄື່ອງອຸປະກອນທີ່ໃຊ້ໃນການລ້ຽງເດັກນ້ອຍຫລາຍແນວທີ່ສາມາດໃຊ້ໄດ້ດີ ແລະອາດຈະເກັບມ້ຽນໄວ້ເພື່ອໄວ້ໃຊ້ໃນອະນາຄົດ ເມື່ອທ່ານເລືອກຊື້ເອົາອຸປະກອນເຫລົ່ານີ້ ບໍ່ວ່າແນວໃໝ່ຫລືຂອງທີ່ເຄີຍໃຊ້ມາແລ້ວ ໃຫ້ກວດເບິ່ງຄວາມແຂງແຮງແລະໝັ້ນຄົງຂອງເຄື່ອງເຫລົ່ານັ້ນກ່ອນເລືອກເອົາແນວໃດ ໝັ້ນສົນເຫລັກຕະປູກ່ຽວຫລືເຫລັກສະລັກພົ້ນອອກມາຫລືແຜ່ນເຫຼັກທີ່ໃຊ້ຮັດຫລືຕິດຕໍ່ຂອບສ່ວນເຄື່ອງອຸປກອນເຂົ້າກັນນັ້ນ ມີຂອບຄົມແລະປາຍແຫລມ ນອກຈາກນັ້ນອຸປກອນ ທີ່ມີຊິ້ນສ່ວນນ້ອຍນ້ອຍລົງຫລືເຂົ້າອອກ ຄືກັນກັບມີດຕັດ ຊຶ່ງຈະເປັນອັນຕະລາຍແກ່ເດັກນ້ອຍແລະອຸປກອນທີ່ອອກແບບລວດລາຍທີ່ເປັນບ່ວງ ຫລືສ່ວນໂຄ້ງ ຊຶ່ງເດັກນ້ອຍອາດຈະເອົາຄໍໄປຫ້ອຍ ຫລື ຄາໄດ້ ບໍ່ຄວນຈະເລືອກຊື້ສິນຄ້າເອົາມາໃຊ້

- ຕັ່ງສູງແລະລໍ້ຍູ້ ຈະຕ້ອງມີສາຍຮັດ ໃຫ້ຊອກເລືອກເອົາສາຍຮັດແນວທີ່ຮັດແລະແກ້ອອກໄດ້ງ່າຍ ເພື່ອທ່ານຈະໄດ້ໃຊ້ສະບາຍແລະຖືກຕ້ອງແຕ່ລະເທື່ອ.

- ເມື່ອໃຊ້ອູ່ຫລືນທີ່ເປັນຕາໜ່າງ ອູ່ນອນທີ່ຫົວໄປມາໄດ້ ຕ້ອງຣະວັງຢ່າເອົາຝາລົງ ມັນອາດຈະເປັນອັນຕະລາຍຢ່າງຮ້າຍແຮງຕໍ່ເດັກນ້ອຍທີ່ເກີດໃໝ່ໄດ້ ເພາະວ່າຝາຕາໜ່າງ ຈະເປັນຖົງ (ໂຕງໂລງ) ເດັກນ້ອຍອາດຈະກິ້ງໄປມາ ແລ້ວຮັດຕົວເດັກນ້ອຍເຮັດໃຫ້ຫາຍໃຈບໍ່ໄດ້.

- ໃຊ້ເຄື່ອງທີ່ແອບເດັກນ້ອຍທີ່ດຢ່າງໃນບ່ອນທີ່ເປັນພື້ນລຽບ ຂອບຂອງພື້ນປູພົ້ນ ພົ້ນເຈັດ ຫລືຂອບປະຕູຈະເຮັດໃຫ້ເດັກນ້ອຍລົ້ມໄດ້ ເວລາພາເດັກນ້ອຍແອບຍ່າງ ໃຫ້ເອົາພົ້ນເຈັດອອກ ແລະເອົາຝາກັ້ນທີ່ວຂັ້ນໄດໄວ້ ເພາະເດັກນ້ອຍອາດຈະຕົກລົງມາໄດ້.

- ຖ້າຫາກວ່າເອົາອູ່ນອນ ຫລື ອູ່ຫລິ້ນໄວ້ໃກ້ກັບປ່ອງຢ້ຽມ ຕ້ອງເບິ່ງວ່າເຊືອກສຳຫລັບດຶງອັດຜ້າກັ້ງຈະບໍ່ຢູ່ໃກ້ຈົນເດັກນ້ອຍຈັບເອົາໄດ້ ຢ່າເອົາເຊືອກ ຫລື ຢ່າງແຂນ (ຫ້ອຍເຄື່ອງ ເຊັ່ນຂອງຫລິ້ນ ຫລື ຖົງໃສ່ເຄື່ອງປ້ອນ) ໄວ້ອ້ອມອູ່ຫລິ້ນ ຫລື ອູ່ນອນ ເພາະເດັກນ້ອຍອາດຈະຈັບເອົາເຊືອກ ຫລື ຢ່າງນັ້ນມາຮັດຄໍເຈົ້າຂອງ ແລ້ວເຮັດໃຫ້ຊອກຕາຍໄດ້.

- ເມື່ອເດັກນ້ອຍເລີ່ມຫັດຄານ ແລະ ຊອກຄົ້ນ ເຂົາເຈົ້າອາດຈະຄາຢູ່ປ່ອງຫລືຮູ ບ່ອນນັ້ງບ່ອນ ໃດກໍໄດ້ ຢ່າງຄືນກໍເອົາຄໍໄປຄາຢູ່ເທິງ ໄມ້ກັ້ນປະຕູ (ທີ່ເອົາໄມ້ດ້ວນມາເຮັດ ເວລາອັດທາງເທິງເປັນໂຕ ວີ.ຫລາຍໂຕຕິດກັນ) ຫລືບາງຄືນໄກໄປຄາຢູ່ຕາມໄມ້ ທີ່ເຮັດເປັນລວດລາຍ ທີ່ເອົາມາເຮຍໃຫ້ມັນງາມກໍມີ.

- ຢ່າແຂວນຂັ້ນທີ່ວນົມດູດ ຫລື ແນວໃດແນວນຶ່ງໃສ່ຄໍເດັກນ້ອຍ ເພາະເຊືອກ ຫລື ສາຍທີ່ຄ້ອງຄໍນັ້ນອາດຈະບິດຝັ້ນແໜ້ນເຂົ້າ ຫລື ວ່າສົ້ນເຊືອກໄປຄາຢູ່ແຈເສົາອູ່ ຫລື ບ່ອນໃດບ່ອນນຶ່ງແລ້ວຈະເຮັດໃຫ້ມັນຮັດຄໍ ແລ້ວຫາຍໃຈບໍ່ອອກ.

໙໐

ເຄື່ອງຫລິ້ນ, ຫີບໃສ່ເຄື່ອງຫລິ້ນ ແລະ ປ້າຍທີ່ຕິດຢູ່ໃນເຄື່ອງຫລິ້ນ

- ເກັບມ້ຽນສິ່ງຂອງທີ່ນ້ອຍໆໄວ້ ຢ່າໃຫ້ເດັກນ້ອຍຢູ່ຈັບເອົາໄດ້ ເຄື່ອງຫລິ້ນນ້ອຍໆ ແລະເຄື່ອງຫລິ້ນ ທີ່ມີຊິ້ນສ່ວນປະກອບນ້ອຍໆ ທີ່ຖອດອອກໄດ້ນັ້ນ ອາດເປັນອັນຕະລາຍ ເພາະເດັກນ້ອຍອາດຈະປ້ອນເຂົ້າປາກແລ້ວ ກືນລົງທ້ອງ ຫລືຄາຄໍອັດຫລອດລົມຫາຍໃຈ ຫລື ເອົາຍັດເຂົ້າຮູຫູ ຫລືດັງກໍໄດ້. ຈົ່ງກວດເບິ່ງວ່າ ເຄື່ອງຫລິ້ນນັ້ນບໍ່ແຕກ ຫລືບໍ່ອ່ອນຕົວຫລຸດອອກຈາກກັນ ແລະມີຊິ້ນສ່ວນນ້ອຍໆ ທີ່ເດັກນ້ອຍອາດຈະກືນກິນ ແລະ ສູດດົມເຂົ້າຮູດັງ ແມ່ນແຕ່ເຄື່ອງທີ່ເຮົາເຫັນ ແລະ ໃຊ້ຢູ່ປະຈຳເຊັ່ນ ເງິນຫລຽນ, ເຂັມກັດ, ກະດຸມ ຫລື ຖ່ານໄຟສາຍນ້ອຍໆ.

- ເມື່ອເລືອກຊື້ເຄື່ອງຫລິ້ນ ໃຫ້ອ່ານເບິ່ງປ້າຍວ່າເຄື່ອງຫລິ້ນຂອງເດັກນ້ອຍອາຍຸຈັກປີ ເຊັ່ນຕົວຢ່າງເອົາຂຽນວ່າ :
"ສຳຫລັບເດັກນ້ອຍ ອາຍຸ ໓ ຫາ ໕ ປີ" ເຄື່ອງຫລິ້ນບາງຢ່າງທີ່ເຮັດໃຫ້ເດັກນ້ອຍທີ່ມີອາຍຸຫລາຍຫລິ້ນ ອາດຈະມີຊິ້ນສ່ວນປະກອບທີ່ນ້ອຍໆ ຊຶ່ງອາດຈະເປັນອັນຕະລາຍແກ່ເດັກນ້ອຍທີ່ມີອາຍຸຕ່ຳໄດ້.

- ຖ້າຫາກຕູ້ເກັບເຄື່ອງ, ຫີບ ຫລື ກ່ອງຢ່າງອື່ນທີ່ໃຊ້ເກັບມ້ຽນ ເຄື່ອງຫລິ້ນມີຝາອັດ ຫີບນີ້ແນວຄ້ຳ ໃຫ້ເອົາຝາອັດອອກ ເພາະຝາອາດຈະຫລົ່ນທັບຕົວ ຫລື ຄໍຂອງເດັກນ້ອຍນ້ອຍໄດ້ ເຄີຍມີເດັກນ້ອຍຫລາຍຄົນຕາຍ ແລະ ໄດ້ຮັບບາດເຈັບຢ່າງໜັກ ຍ້ອນເຫດນີ້ມາແລ້ວ. ຊອກໃຊ້ຕູ້ທີ່ມີແນວຄ້ຳບໍ່ວ່າຈະຢູ່ໃນລັກສະນະໃດ ຫລືວ່າຊອກເອົາແນວທີ່ມີຝາອັດຢູ່ໄປຢູ່ມາ ຫລື ແນວທີ່ມີຝາບາງໆ ແລະຍົກອອກ ຍົກເຂົ້າໄດ້.





94

ບົດຮຽນທີ ໑໐ ແລະ ໑໑

## ການກວດເບິ່ງສະຖານທີ່

| ແມ່ນ | ບໍ່ແມ່ນ | ບໍ່ກ່ຽວ | |
|---|---|---|---|
| | | | ຈະຕ້ອງມີໃບບັນທຶກການຕິດໂທດທາງອາຊຍາກັມສຳລັບຜູ້ໃຫຍ່ທຸກຄົນ ທີ່ຢູ່ໃນສະຖານທີ່ ບ່ອນລ້ຽງເດັກ. |
| | | | ຈະຕ້ອງມີໃບກວດພຍາດປອດ ສຳລັບຜູ້ໃຫຍ່ທີ່ມີອາຍຸ ໑໘ ປີຂຶ້ນໄປ. |
| | | | ເຈົ້າຂອງໃບອານຸຍາດ ຈະຕ້ອງຢູ່ໃນສະຖານທີ່ບ່ອນລ້ຽງເດັກ ຢ່າງຕ່ຳ ໘໐ ເປີເຊັນຂຶ້ນໄປ. |
| | | | ຜູ້ຊ່ວຍໃນການລ້ຽງເດັກນ້ອຍຈະຕ້ອງ ແມ່ນຜູ້ໃຫຍ່ |
| | | | ບ້ານເຮືອນຈະຕ້ອງສອາດ ແລະ ຈັດໃຫ້ເປັນຣະບຽບ |
| | | | ອາຍຮ້ອນ ແລະ ການຣະບາຍອາກາດຈະຕ້ອງມີພຽງພໍ. |
| | | | ຈະຕ້ອງມີໂທຣະສັພ |
| | | | ເຄື່ອງຫລິ້ນ ຕລອດທັງການຫລິ້ນຈະຕ້ອງບໍ່ເປັນອັນຕຣາຍຕໍ່ເດັກນ້ອຍ. |
| | | | ແຍກເດັກນ້ອຍທີ່ ບໍ່ສບາຍອອກຈາກຜູ້ອື່ນ. |
| | | | ໃຫ້ຂຽນປ້າຍຕ່າງໆໃສ່ກັບເຄື່ອງກິນ ຫລື ເກັບໃສ່ຕູ້ເຢັນໄວ້. |
| | | | ບ້ານເຮືອນຈະຕ້ອງຢູ່ໃນສພາບດີ ບໍ່ມີບ່ອນຫັກເພ ແລະ ບໍ່ເປັນອັນຕຣາຍຕໍ່ເດັກນ້ອຍ. |
| | | | ຕ້ອງມີຕານ່າງກັ້ນເຕົາໄຟ ຫລື ບ່ອນໃດທີ່ເປັນອັນຕຣາຍຕໍ່ເດັກນ້ອຍ. |
| | | | ຈະຕ້ອງມີເຄື່ອງມອດໄຟ ຫລື ເຄື່ອງສັນຍານໄຟ. |
| | | | ສັດລ້ຽງ : ຈະຕ້ອງໄດ້ຮັບການສັກຢາປ້ອງກັນທຸກຢ່າງ. |
| | | | ເຄື່ອງທຳຄວາມອົບອຸ່ນ (ຮີຕເຕີ້) ທີ່ເຮັດດ້ວຍແກສ ຈະຕ້ອງມີບ່ອນຣະບາຍອາກາດ ແລະ ຕິດຕັ້ງຢ່າງແໜ້ນໜາ. |
| | | | ຈະຕ້ອງມີເຄື່ອງກັ້ນຮົ້ວ ຫລື ອັນໃດສຳລັບເດັກນ້ອຍທີ່ມີອາຍຸຕ່ຳກ່ວາ ໔ ປີ. |
| | | | ຢາເບື່ອ, ສະບູຊັກຜ້າ, ເຄື່ອງທຳຄວາມສອາດ ແລະ ຢາປົວພຍາດຕ່າງໆຈະຕ້ອງເກັບໄວ້ໃນບ່ອນທີ່ເດັກນ້ອຍບໍ່ເອື້ອມບໍ່ໄດ້ ຫລື ໃສ່ຕູ້ລ໊ອກກຸນແຈໄວ້. |
| | | | ສະອາບນ້ຳທຸກໆບ່ອນ :<br>໑. ຈະຕ້ອງມີຮົ້ວກັ້ນສະນ້ຳໄວ້ໃຫ້ສູງປະມານ ໔ ຟຸດ, ບໍ່ໃຫ້ບັງສາຍຕາ ແລະ ບໍ່ໃຫ້ເດັກນ້ອຍປີນຂຶ້ນໄດ້.<br>໒. ຫລືວ່າ ແນວປົກສະ ທີ່ຕ້ອງໜາ, ແຂງແຮງແລະທົນທານຕໍ່ນ້ຳໜັກຂອງຄົນຜູ້ໃຫຍ່ໄດ້. |
| | | | ສະລ້ຽງປາ, ອ່າງອາບນ້ຳ ແລະແຫລ່ງນ້ຳທຸກແຫ່ງ ຈະຕ້ອງມີຮົ້ວ ຫລື ຝາກັ້ນໄວ້. |
| | | | ບ່ອນຫລິ້ນນອກເຮືອນຈະຕ້ອງມີຮົ້ວ ຫລືວ່າເບິ່ງແຍງໂດຍຜູ້ລ້ຽງດູ ເວລາຫລິ້ນຢູ່ນອກເຮືອນ. |
| | | | ປືນແລະອາວຸດ ທີ່ເປັນອັນຕຣາຍ ຈະຕ້ອງເກັບໃສ່ກຸນແຈໄວ້. |
| | | | ຈະຕ້ອງມີແຜນການກ່ຽວກັບການເກີດເຫດສຸກເສີນ. |
| | | | ຈະຕ້ອງມີແຜນການກ່ຽວກັບໄຟວິບັດຢ່າງຄົບຖ້ວນ. |

ໃບອານຸຍາດແບບໃຫຍ່ - ຜູ້ຊ່ວຍ :

ຊື່ : ______________ ການກວດພຍາດປອດ : ______________

ວັນເດືອນປີເກີດ : ______________ ການພິມລາຍມື : ______________

ໃບກວດຄວາມປອດໄພກ່ຽວກັບໄຟ (ໝາຍເອົາອັນນຶ່ງ) :

ໃບອານຸຍາດແບບໃຫຍ່ : ______________ ໃບອານຸຍາດແບບຈຳກັດ : ______________

ອື່ນໆ : ______________________________

ໃບທົບທວນ ການຕຣວດບ່ອນລ້ຽງເດັກຢູ່ກັບເຮືອນ

໑. ການກວດກາບ້ານເຮືອນຈະຕ້ອງ ໄດ້ທົບທວນຢູ່ບ້ານເຮືອນຜູ້ກ່ຽວ.

໒. ໃບຕຣວດພຍາດປອດ ສຳຫລັບຜູ້ໃຫຍ່ທຸກໆຄົນ ຊຶ່ງອາສັຍຢູ່ໃນບ້ານເຮືອນຂອງບ່ອນລ້ຽງເດັກ ທີ່ໄດ້ຮັບ ອານຸຍາດນັ້ນ, ຈະຕ້ອງມີ.

໓. ຜູ້ໃຫຍ່ທີ່ອາສັຍຢູ່ໃນເຮືອນ ຈະຕ້ອງໄດ້ມີການແປະໂປ້ລາຍມືໃບນຶ່ງ.

໔. ການລ້ຽງເດັກບໍ່ໃຫ້ເກີນກຳນົດທີ່ໄດ້ບົ່ງໄວ້.

໕. ຖ້າຫາກລ້ຽງເດັກນ້ອຍເກີນກ່ວາ ໗ ຄົນ ຫລື ເດັກອ່ອນ (ທາຣົກ) ໕ ຄົນຈະຕ້ອງມີຜູ້ຊ່ວຍ.

໖. ຖ້າຫາກລ້ຽງເດັກນ້ອຍເກີນກ່ວາ ໗ ຄົນ ຫລື ເດັກນ້ອຍທີ່ບໍ່ສາມາດຍ່າງໄດ້ ຫລື ເດັກນ້ອຍ ຈຳພວກປັນຍາອ່ອນ ຈະຕ້ອງມີການຕຣວດກາ ກ່ຽວກັບເຮືອງສາຍໄຟ.

໗. ທ່ານແລະຜູ້ຊ່ວຍ ຈະຕ້ອງຢູ່ໃນສະຖານທີ່ບ່ອນລ້ຽງເດັກ ໃນເວລາທີ່ເດັກນ້ອຍກຳລັງມາ ຫລື ຢູ່ໃນສະຖານທີ່.

໘. ບ້ານເຮືອນຈະຕ້ອງສອາດ ແລະ ຈັດໃຫ້ເປັນຣະບຽບ, ຂາຍຮ້ອນ ແລະ ເຄື່ອງຣະບາຍອາກາດ ຈະຕ້ອງມີຕິດຕັ້ງ ໃຫ້ຖືກຕ້ອງ.

໙. ຈະຕ້ອງມີໂທຣະສັພ.

໑໐. ເຄື່ອງຫລິ້ນ ຕຣອດເຖິງ ເຄື່ອງຫລິ້ນ ແລະ ເຄື່ອງໃຊ້ ຈະຕ້ອງບໍ່ເປັນອັນຕຣາຍ ຕໍ່ເດັກນ້ອຍ.

໑໑. ແຍກເດັກນ້ອຍທີ່ບໍ່ສບາຍອອກຈາກ ເດັກນ້ອຍຜູ້ອື່ນ.

໑໒. ໃຫ້ຂຽນປ້າຍຕ່າງໆໃສ່ແອບເຄື່ອງກິນ ທີ່ເດັກນ້ອຍຖືມາຈາກບ້ານເຮືອນ ໃຫ້ຖືກຕ້ອງ ແລະເກັບ ໃສ່ໄວ້ໃນຕູ້ເຢັນ.

໑໓. ໃຫ້ເອົາເຄື່ອງເບື່ອເນົ່າ, ຢາ ແລະ ແນວອື່ນໆ ທີ່ເປັນອັນຕຣາຍ, ພາຊະນະຫນີອອກຈາກ- ເດັກນ້ອຍ.

໑໔. ຢູ່ໃນສະຖານທີ່ ຈະຕ້ອງມີເຄື່ອງມອດໄຟ ແລະ ເຄື່ອງສັນຍານໄຟ.

໑໕. ເຕົາໄຟ ແລະ ເຄື່ອງທຳຄວາມອົບອຸ່ນ ຈະຕ້ອງມີຕານ່າງກັ້ນໃຕ້ຖືກຕ້ອງ.

໑໖. ຖ້າຫາກເບິ່ງແຍງເດັກນ້ອຍທີ່ມີອາຍຸ ໕ ປີລົງມາ ຈະຕ້ອງມີເຄື່ອງກັ້ນຫົວຂັ້ນໄດ.

໑໗. ບ່ອນໃດມີສະນ້ຳຈະຕ້ອງມີເຄື່ອງກັ້ນ ຫລື ເອົາຫນີອອກຫ່າງຈາກເດັກນ້ອຍ.

໑໘. ບ່ອນຫລິ້ນນອກບ້ານຈະຕ້ອງມີຮົ້ວ ຫລື ຕ້ອງເບິ່ງແຍງຫາກເດັກນ້ອຍຫລິ້ນຢູ່ທາງນອກ.

໑໙. ປືນແລະອາວຸດ ທີ່ເປັນອັນຕຣາຍ ຈະຕ້ອງເກັບໃສ່ກຸນແຈໄວ້.

໒໐. ຈະຕ້ອງມີໃບລາຍຣະອຽດສຸກເສີນຂອງເດັກນ້ອຍແຕ່ລະຄົນ.

໒໑. ໃຫ້ຜູ້ປົກຄອງເຊັນໃບອານຸຍາດ ຂອງການສຸກເສີນ.

໒໒. ຈະຕ້ອງມີແຜນການ ກ່ຽວກັບເຫດສຸກເສີນ ສຳຫລັບພນັກງານ ແລະ ເດັກນ້ອຍ.

໒໓. ການອານຸຍາດໃຫ້ເຂົ້າໄປປ້ຽມຢາມ ໃນເວລາເຮັດການ.

໒໔. ຈັດຫາເຄື່ອງໃຊ້ທີ່ປອດພັຍ ແຫນັ້ນຫນາ, ເຫມາະສົມ ແລະ ໃຊ້ງ່າຍ.

໔໕. ພໍ່ແມ່ ຫລື ຜູ້ປົກຄອງ ມີສິດຕິຕຽນ ຂອງການດຳເນີນງານ.

໔໖. ຈະບໍ່ມີການທຳໂທດທາງຮ່າງກາຍ ຫລື ທາງຈິດໃຈ ຫລື ແຊກຊອກສຳຫລັບການ ເປັນຢູ່ແຕ່ລະມື້.

໔໗. ແຈກຢາຍຂ່າວ ຫລື ເອກກະສານຕ່າງໆໃຫ້ແກ່ພໍ່ແມ່ຊາບ.

໔໘. ໃຫ້ຜູ້ປົກຄອງເຊັນຫນັງສື ຢັ້ງຢືນວ່າ ເຣື່ອງການກົດຂີ່ຂົ່ມເຫັງເດັກ.

97

# ອາຫານການກິນ ສໍາຫລັບການລ້ຽງເດັກນ້ອຍ



ບົດຮຽນທີ ໑໒.

## ເຄື່ອງບຳລຸງຮ່າງກາຍທີ່ຖືກຕ້ອງ

ກ. ຈົ່ງເລືອກກິນແຕ່ອາຫານທີ່ເປັນປະໂຍດ ແກ່ຮ່າງກາຍຂອງທ່ານເທົ່ານັ້ນ

ຂ. ການກິນອາຫານຫລາຍຢ່າງ ເປັນທາງທີ່ເຮັດໃຫ້ ໄດ້ຮັບຜົນປະໂຍດແກ່ຮ່າງກາຍຢ່າງຄົບຖ້ວນ ເພື່ອຈະກິນອາຫານໃຫ້ຖືກຕ້ອງ ຕາມຫລັກອານາໄມ ຈົ່ງເລືອກກິນອາຫານ ໔ ຈຳພວກນີ້ ເປັນສ່ວນປະກອບ ເຊັ່ນ :

໑. ຈຳພວກນົມ
໒. ຈຳພວກຊີ້ນ
໓. ຈຳພວກໝາກໄມ້ ຫລື ຜັກສົດ
໔. ຈຳພວກທີ່ເປັນເມັດ ເປັນແກ່ນ ເປັນໃບຕ່າງໆ

ຄ. ການຮຽນຮູ້ ກັບສິ່ງທີ່ມີປະໂຍດ ໃນຈຳພວກອາຫານຕ່າງໆເປັນສິ່ງທີ່ສຳຄັນຕໍ່ຮ່າງກາຍ ສິ່ງທີ່ມີປະໂຍດ ໃນການບຳລຸງຮ່າງກາຍ ເປັນທີ່ຮູ້ຈັກກັນຢູ່ແລ້ວ ມີຢູ່ປະມານ ໕໐ ຈຳພວກ. ສ່ວນໃຫຍ່ທີ່ເປັນຫລັກເຊັ່ນ:

໑. ຈຳພວກໂປຣຕີນ ຈຳພວກທີ່ແທນໂປຣຕີນ (ຈຳພວກທີ່ບໍ່ແມ່ນຊີ້ນ ຈຳພວກເປັນເມັດ ອາຫານຈຳພວກນົມ ຈະຊ່ວຍໃນລະບົບການຖ່າຍ ແລະ ຫລຸດໄຂມັນລົງ ໂດຍທີ່ບໍ່ເຮັດໃຫ້ຄ່າຂອງໂປຣຕີນ - ຫລຸດລົງ).
໒. ໄຂມັນ - ຖ້າຫາກມີຢູ່ໃນອາຫານຫລາຍ ກໍບໍ່ເປັນການດີ
໓. ອາຫານຈຳພວກແປ້ງ - ມີນ້ຳຕານນ້ອຍ ມີເນື້ອຫລາຍ
໔. ນ້ຳ
໕. ທາດແຮ່ຕ່າງໆ
໖. ວິຕາມິນ ຕ່າງໆ

ງ. ຈົ່ງຫລີກເວັ້ນ ຫລື ຈຳກັດອາຫານ ທີ່ມີນ້ຳຕານຫລາຍ, ໄຂມັນ, ເກືອ ແລະອາຫານຈຳພວກທີ່ມີສ່ວນປະສົມເພີ່ມເຕີມ ທີ່ບໍ່ເປັນປະໂຍດຕໍ່ຮ່າງກາຍ - ສຳຄັນຫລາຍທີ່ສຸດ ໃຫ້ອ່ານປ້າຍຕິດກ່ອງບັນຈຸ.

ຈ. ສິ່ງທີ່ຄວນຮູ້ :

໑. ເດັກນ້ອຍທີ່ຢູ່ໃນເຮືອນຂອງທ່ານ ຈະຕ້ອງໄດ້ກິນອາຫານຢ່າງດີ ໗໐% ຂຶ້ນໄປຕາມຄວາມຕ້ອງການຂອງຮ່າງກາຍໃນ ໒໔ ຊົ່ວໂມງທີ່ຢູ່ໃນສະຖານທີ່ບ່ອນລ້ຽງເດັກ.
໒. ບັນຍາກາດອົບອຸ່ນ ແລະ ສບາຍໃຈໃນການກິນອາຫານ ກໍເປັນສິ່ງທີ່ມີປະໂຍດແກ່ຮ່າງກາຍຂອງເດັກນ້ອຍເຊັ່ນດຽວກັນ.
໓. ຢ່າບັງຄັບໃຫ້ເດັກນ້ອຍ ກິນອາຫານ ຖ້າຫາກເຂົາບໍ່ຢາກກິນ.
໔. ການຮຽນຮູ້ຂອງການກິນອາຫານ ຂອງຄອບຄົວ ເດັກນ້ອຍຈະຊ່ວຍແກ້ໄຂບັນຫາບາງຢ່າງໄດ້.
໕. ທ່ານຕ້ອງຮູ້ຈັກວ່າເດັກນ້ອຍແພ້ອາຫານຊະນິດໃດເຊັ່ນ (ນົມ, ເບຍແຂງ, ໝາກຖົ່ວດິນ, ນ້ຳມັນເບີ ແລະອື່ນໆ) ເພາະມັນອາດຈະເປັນອັນຕລາຍຕໍ່ສຸຂພາບຂອງເດັກນ້ອຍ.

99

ບົດຮຽນທີ ໑໒.

## ຄຳແນະນຳກ່ຽວກັບຄວາມສຳຄັນຂອງອາຫານ

ໃຫ້ຂຽນລາຍການຂອງອາຫານທີ່ມີປະໂຍດ, ຣາຄາຖືກ, ເຮັດງ່າຍ ແລະ ເດັກນ້ອຍມັກກິນ ເຊັ່ນ :

<u>ຈຳພວກຊີ້ນ</u>

໑.

໒.

໓.

໔.

໕.

໖.

໗.

<u>ຈຳພວກໄຂ່</u>

໑.

໒.

໓.

໔.

໕.

<u>ຈຳພວກປາ</u>

໑.

໒.

໓.

໔.

໕.

໖.

໗.

<u>ຈຳພວກເຂົ້າ/ໝາກຖົ່ວ ແລະພືດຕ່າງໆ</u>

໑.

໒.

໓.

໔.

໕.

໖.

໗.

<u>ຈຳພວກເປັດ - ໄກ່</u>

໑.

໒.

໓.

໔.

໕.

໖.

໗.

# ເຄື່ອງບຳລຸງຮ່າງກາຍສຳຫລັບການລ້ຽງເດັກນ້ອຍ

ການຈັດອາຫານທີ່ມີປະໂຍດ ເປັນສ່ວນທີ່ສຳຄັນຢ່າງນຶ່ງ ຂອງຜູ້ທີ່ຮັບລ້ຽງເດັກນ້ອຍ. ເດັກນ້ອຍຜູ້ທີ່ໄດ້ກິນອາຫານ ໃນເວລາທີ່ຈະຮູ້ສຶກມີຄວາມອົບອຸ່ນ. ເດັກນ້ອຍ ທີ່ໄດ້ກິນອາຫານດີ ມີໂອກາດທີ່ຈະຈະເຣີນເຕີບໂຕໄດ້ຢ່າງສົມບູນ. ການທີ່ໄດ້ກິນອາຫານດີໃນຣະຫວ່າງທີ່ຢູ່ໃນ ສະຖານທີ່ລ້ຽງເດັກນ້ອຍເປັນສິ່ງທີ່ສຳຄັນ ເພາະວ່າຮ່າງກາຍຂອງເຂົາເຈົ້າຕ້ອງການ ສິ່ງທີ່ບຳລຸງຮ່າງກາຍ ໕໐ ເປີເຊັນຂຶ້ນໄປຕລອດ ໒໔ ຊົ່ວໂມງ ທີ່ຢູ່ໃນຄວາມດູແລຂອງທ່ານ.

<u>ອາຫານເຊົ້າ</u> : ເດັກນ້ອຍຜູ້ທີ່ມາຮອດເຮືອນຂອງທ່ານໃນຕອນເຊົ້າ ຄວນຈະຕ້ອງໄດ້ກິນອາຫານເຊົ້າສເມີ ຫລືວ່າອາຫານປະເພດອື່ນໆກໍ່ໄດ້ທີ່ທົດແທນ ອາຫານເຊົ້າ.

<u>ອາຫານວ່າງ</u> : ເນື່ອງຈາກວ່າ ເດັກນ້ອຍບໍ່ມັກກິນອາຫານຫລາຍແຕ່ລະຄາບ ເພາະສັ້ນ ອາຫານວ່າງຈຶ່ງເປັນສ່ວນປະກອບທີ່ສຳຄັນໃນການບຳລຸງຮ່າງກາຍ ແຕ່ລະວັນຂອງເດັກນ້ອຍ ຫລືວ່າ ໒໕% ຂອງຄວາມຕ້ອງການຂອງຮ່າງກາຍ.

<u>ອາຫານທ່ຽງ</u> : ເປັນອາຫານປະຈຳມື້ຂອງເດັກນ້ອຍບາງຄົນ ແລະ ຄວນຈະເຕັມໄປດ້ວຍອາຫານທີ່ປະກອບດ້ວຍໂປຣຕີນ ເຊັ່ນ : ຊີ້ນງົວ, ໄກ່, ປາ, ໄຂ່, ເນີຍ, ນ້ຳນົມ ແລະ ໝາກໄມ້ ຫລື ນ້ຳໝາກໄມ້. ເດັກນ້ອຍສ່ວນຫລາຍຕ້ອງການກິນນ້ຳປະມານ ໕ ຈອກຕໍ່ມື້.

<u>ການລື່ນເລີງໃນການກິນອາຫານ</u>

ເວລາກິນອາຫານເປັນສິ່ງທີ່ລື່ນເລີງສຳຫລັບເດັກນ້ອຍທີ່ມີຄວາມຫິວ. ເດັກນ້ອຍທີ່ມີຄວາມເມື່ອຍແລະການຕື່ນເຕັ້ນຫລາຍເກີນໄປ ຈະບໍ່ມັກຢາກກິນເຂົ້າ ດັ່ງນັ້ນຈຶ່ງພຍາຍາມຊ່ວຍເຮັດໃຫ້ເຂົາເຈົ້າໄດ້ພັກຜ່ອນ ແລະ ທຳຄວາມສອາດກ່ອນກິນອາຫານ.

- ອາຫານທີ່ໜ້າກິນ ຄວນຈະຕັກໃຫ້ເທື່ອລະໜ້ອຍ ແຕ່ກໍ່ບອກໃຫ້ເດັກນ້ອຍຮູ້ວ່າ ອາຫານຍັງມີຫລາຍອີກຢູ່.
- ໃຫ້ເດັກນ້ອຍມີໂອກາດເລືອກອາຫານດ້ວຍຕົນເອງ ຫລື ກິນຕາມໃຈຊອບ ອານຸຍາດໃຫ້ເຂົາເຈົ້າໄດ້ໃຊ້ມືຈັບອາຫານກິນ ຖ້າຫາກແມ່ນແນວທີ່ໃຊ້ມືຈັບກິນໄດ້.
- ໃຫ້ມີການສົນທະນາ ທີ່ໜ້າສົນໃຈ ຫລື ມີບັນຍາກາດອັນມ່ວນຊື່ນ.
- ໃຫ້ຍອມຮັບ ແລະ ອະພັຍໂທດ ໃນການຜິດພາດຂອງການກິນອາຫານ (ເຮັດເຄື່ອງກິນເຮື້ຍ...) ໂດຍຖືເສັຍວ່າເປັນສ່ວນນຶ່ງຂອງການຮຽນຮູ້ ແລະຈະເຣີນເຕີບໂຕ.
- ໃຫ້ໂອກາດແກ່ເດັກນ້ອຍສຳຫລັບຜູ້ທີ່ກິນອາຫານຊ້າ ການເລັ່ງລັດຈະເປັນການທຳລາຍ ຄວາມລື່ນເລີງໃນການກິນອາຫານ.

<u>ນ້ຳແກງ, ນ້ຳຊຸບ ອາຫານຈຳພວກແປ້ງ ແລະ ເຂົ້າຈີ່ໃສ່ຊີ້ນ</u>

ອາຫານທີ່ດີ ເປັນສິ່ງທີ່ມີປະໂຍດແກ່ຮ່າງກາຍຫລາຍ ຈຶ່ງຫລີກເວັ້ນອາຫານທີ່ມີຣາຄາແພງ ຢ່າໃຫ້ເດັກນ້ອຍກິນແຕ່ເຂົ້າຈີ່ໃສ່ຊີ້ນເປັນປະຈຳ ທ່ານຈະແປກໃຈວ່າ ອາຫານຈຳພວກແປ້ງນັ້ນຖືກເອົາເຂົ້າຈີ່ໃສ່ຊີ້ນ ແລະ ເດັກນ້ອຍກໍ່ມັກກິນ. ນ້ຳແກງຕ່າງໆກໍ່ບໍ່ເປັນການພຽງພໍສຳຫລັບການກິນອາຫານທ່ຽງ ເພາະມັນບໍ່ມີໂປຣຕີນ. ສຳຫລັບລາຍການອາຫານທ່ຽງ, ອາຫານວ່າງ ແລະ ເຄື່ອງດື່ມຕ່າງໆທີ່ພິມຢູ່ໃນໜ້າຕໍ່ໄປນັ້ນ ເປັນການຄັດເລືອກ ເອົາມາເວົ້າສູ່ຟັງແຕ່ບາງສ່ວນເທົ່ານັ້ນ ເພາະວ່າສິ່ງເຫລົ່ານັ້ນມີປະໂຍດແກ່ຮ່າງກາຍຫລາຍ ແລະຣາຄາກໍ່ຖືກອີກ. ພວກເຮົາຫວັງວ່າທ່ານຄົງຈະມັກທີ່ຈະທົດລອງອາຫານບາງຢ່າງ ເຖິງແມ່ນວ່າທ່ານຈະບໍ່ເຄີຍໄດ້ຍິນ ຫລືໄດ້ຊີມມາກ່ອນກໍ່ຕາມ.

SNACK TIME SUGGESTIONS.

SNACKS are an important part of the child's diet.

PROTEIN is added in:

Hard cooked eggs
Chunks of tuna, cheese
Leftover roast
Celery sticks, stuffed with peanut butter, tuna

VITAMIN C: in strawberrries, tomatoes, citrus fruits, melons

VITAMIN A: in dark green or bright yellow fruits & vegetables

Arrange carrot cticks
green pepper rings
chunks of lettuce
raw caulifloweretttes
celery sticks or cucumber slices
on a plate served with a dip make from cottage cheese, mixed with onion salt, celery salt & chives.

Or try: cottage cheese mixed with crushed pineapple or tuna and mayonnaise

VITAMIN B: whole wheat grain and breads, dairy products and nuts; milk shakes (try 6 oz. milk, ½ banana, whirled in blender)

## TRY THESE SNACK COMBINATIONS

- Cheese fingers with apple juice
- Banana milk shake with buttered toast squares
- Peanut butter sandwich quarters, milk, fresh apple wedges
- Fruit jello, milk
- Bean dip, tortilla pieces, milk
- Open face tuna sandwich quarters, fruit juice punch
- Cold cereal with milk and plumped raisins
- Celery stuffed with peanut butter, and milk
- Orange chiller, buttered rye bread squares

## ອາຫານທີ່ມີປະໂຫຍດແກ່ຮ່າງກາຍ

ຕາຕະລາງນີ້ໄດ້ກ່າວເຖິງກ່ຽວກັບອາຫານທີ່ມີປະໂຫຍດແກ່ຮ່າງກາຍ ວ່າເປັນຫຍັງພວກເຮົາຈຶ່ງຕ້ອງການກິນອາຫານຈຳພວກນີ້. ທ່ານຈະໄດ້ເຂົ້າໃຈວ່າອາຫານທຸກຢ່າງ ເປັນປະໂຫຍດແກ່ຮ່າງກາຍທັງນັ້ນ ນອກຈາກຈະໄດ້ຊ່ວຍໃຫ້ທ່ານໄດ້ຮັບການບຳລຸງຮ່າງກາຍໃຫ້ຖືກຫລັກອະນາໄມແລ້ວ ຍັງຈະຊ່ວຍໃຫ້ທ່ານມີຮ່າງກາຍອ້ວນທ້ວນສົມບູນ ແລະ ແຂງແຮງດີ.

| ອາຫານ | ແຫລ່ງສຳຄັນທີ່ໄດ້ມາ | ເປັນຫຍັງພວກເຮົາຈຶ່ງຕ້ອງການ |
|---|---|---|
| **PROTEIN**  | ໑. ສ້າງແລະຮັກສາເນື້ອໜັງ<br>໒. ເປັນສ່ວນປະກອບອັນສຳຄັນຂອງນ້ຳຍ່ອຍອາຫານ ຮໍໂມນ ແລະນ້ຳທີ່ບຳລຸງລ້ຽງຮ່າງກາຍ<br>໓. ສ້າງພະລັງແລະເຮັດໃຫ້ມີກຳລັງກາຍ | ໂປຣຕີນ ມີຄຸນນະພາບສູງໃນການສ້າງແລະຮັກສາເນື້ອໜັງ ຈະຫາໄດ້ຈາກຈຳພວກຊີ້ນ ເປັດ ໄກ່ ປາ ເຄື່ອງທະເລ ໄຂ່ ນົມແລະເນີຍແຂງ. ຄຸນນະພາບຂອງລົງມາຈະຫາໄດ້ຈາກ ໝາກຖົ່ວ ໃບໝາກຖົ່ວ ແລະ ແກ່ນໝາກໄມ້ຕ່າງໆ. ຄຸນນະພາບທີ່ຕ່ຳລົງມາຈະຫາໄດ້ຈາກ ອາຫານທີ່ເຮັດດ້ວຍເຂົ້າ ເຂົ້າຈີ່ ຜັກສົດ ແລະ ໝາກໄມ້ຕ່າງໆ |
| **CALCIUM**  | ໑. ສ້າງກະດູກ ແລະ ແຂ້ວ<br>໒. ຊ່ວຍໃຫ້ເລືອດຢຸດໄວ (ເມື່ອມີບາດແຜ)<br>໓. ຊ່ວຍໃຫ້ເສັ້ນປະສາດ, ກ້າມເນື້ອ ແລະ ຫົວໃຈ ທຳງານເປັນປົກກະຕິ | ຈະຫາໄດ້ຈາກອາຫານຈຳພວກນົມ ເນີຍ-ແຂງ, ເປັນເນີຍ ເປັນແອບແລະກະແຣມ ຜັກຈຳພວກເປັນໃບຂຽວ ຜັກກະລ່ຳປີ ຜັກທີ່ມີໃບຍົກ ຜັກກາດຂາວ ແລະ ຜັກກາດ-ອ່ອນ. |
| **IRON**  | ໑. ປະສົມກັບໂປຣຕີນ ເພື່ອສ້າງເຮໂມໂກຣບິນ ຊຶ່ງເປັນເມັດເລືອດແດງ ອັນເປັນຕົວນຳອອກຊີເຈັນ ໄປສູ່-ກ້າມເນື້ອ, ສມອງແລະສ່ວນອື່ນໆໄປລ້ຽງຮ່າງກາຍ<br>໒. ຊ່ວຍແຊລຂອງຮ່າງກາຍໃຫ້ໃຊ້ອອກຊີເຈັນ. | ຈະຫາໄດ້ຈາກຕັບ ໝາກໄຂ່ຫລັງ ຫອຍນາງລົມ ຊີ້ນຕິດມັນ ໄຂ່ແດງ ໝາກຖົ່ວແຫ້ງ ໃບຜັກທີ່ມີສີຂຽວແກ່ ໝາກໄມ້ແຫ້ງ ອາຫານທີ່ເປັນເມັດ ເຂົ້າຈີ່ແລະເຊຣີໂອລ. |
| **IODINE**  | ໑. ຊ່ວຍຕ່ອມໄທຣອຍ ຢູ່ໃນຄໍຫອຍ ໄດ້ປະຕິບັດງານຕາມປົກກະຕິ. (ຕ່ອມໄທຣອຍ ຄວບຄຸມການເຕີບໂຕຂອງຮ່າງກາຍ). | ຈະຫາໄດ້ຈາກ ເກືອທະເລ ປາທະເລ ແລະ ອາຫານທະເລຕ່າງໆ. |
| **VITAMIN A**  | ໑. ຊ່ວຍປັບປຸງແສງສາ ໃນບ່ອນທີ່ມີແສງສວ່າງບໍ່ພຽງພໍ<br>໒. ຊ່ວຍໃຫ້ຜິວໜັງກ້ຽງ ແລະ ນຸ່ມນວນດີ<br>໓. ຊ່ວຍໜັງທາງໃນປາກ ດັງ ຄໍ ແລະລະບົບການຍ່ອຍໃຫ້ຢູ່ໃນສະພາບດີ ແລະ ຕ້ານທານຕໍ່ການຕິດເຊື້ອໂຣຄ.<br>໔. ຊ່ວຍສົ່ງເສີມ ການຈະເຣີນເຕີບໂຕໄວ. | ຈະຫາໄດ້ຈາກຕັບ ຜັກທີ່ມີໃບສີຂຽວແກ່ແລະສີເຫລືອງ ຜັກຈຳພວກເປັນໃບ ຫົວແຄຣອດ ໝາກອຶ ມັນດາງ ໝາກບວບ ໝາກຟ້າງ ໝາກແຕງສຸກ ເນີຍແຂງທີ່ເຮັດຈາກໄຂ່ມັນສັດ. |

| | | |
|---|---|---|
| **THIAMIN**  | ໑. ຊ່ວຍແຊລຂອງຮ່າງກາຍຮັບເອົາ ພລັງງານຈາກອາຫານ<br>໒. ຊ່ວຍເຮັດໃຫ້ເສັ້ນປະສາດຢູ່ໃນສະພາບດີ<br>໓. ຊ່ວຍສົ່ງເສີມຣະບົບການກິນ ແລະ ການຍ່ອຍອາຫານ. | ຈະຫາໄດ້ຈາກອາຫານຈຳພວກຊີ້ນ ຫມາກຫົວໃຈ ໄຂ່ຫລັງ ຕັບ ຖົ່ວແດງ ເມັດຜັກ ແກ່ນຫມາກໄມ້ ແລະອາຫານທີ່ເຮັດດ້ວຍເມັດເຂົ້າ ເຂົ້າຈີ່ແລະໃນຫມາກໄມ້ບາງຢ່າງ. |
| **VITAMIN C**  | ໑. ຊ່ວຍເຮັດໃຫ້ແຊລຂອງຮ່າງກາຍຢູ່ໃນສະພາບດີ ແລະ ຊ່ວຍເຮັດໃຫ້ຫລອດເລືອດແຂງແຮງຂຶ້ນ<br>໒. ຊ່ວຍໃຫ້ບາດແຜດີໄວ<br>໓. ຊ່ວຍໃນການສ້າງແຂ້ວແລະກະດູກໃຫ້ແຂງແຮງດີ | ຈະຫາໄດ້ຈາກຫມາກແຕງ ຫມາກກ້ຽງໃຫຍ່ ຫມາກກ້ຽງນ້ອຍ ຫມາກສະຕໍເບີຣີ່ ດອກກະຫລ່ຳປີ ຖົ່ວງອກ ຫົວກະຫລ່ຳປີ ຜັກໃບຍິກ ແລະຫມາກເຜັດແດງໃຫຍ່ ຜັກກາດຂີວ ແລະ ຜັກກາດຂຽວ ມັນຝຣັ່ງ ແລະຫມາກເລັ່ນ |
| **RIBOFLAVIN**  | ໑. ຊ່ວຍແຊລໃນການໃຊ້ອອກຊີເຈັນ ເພື່ອເອົາພລັງງານມາຈາກອາຫານ<br>໒. ຊ່ວຍໃຫ້ຫນ່ວຍຕາ ມີສຸຂພາບດີ<br>໓. ຊ່ວຍໃຫ້ຜິວຫນັງຢູ່ບໍຣິເວັນປາກ ແລະ ດັງ ກ້ຽງ-ຣະອຽດດີ. | ຈະຫາໄດ້ຈາກອາຫານຈຳພວກ ນົມ ຕັບ ຫມາກໄຂ່ຫລັງ ຫມາກຫົວໃຈ ຊີ້ນໄຂ່ ແລະ ຫມາກໄມ້ທີ່ມີສີຂຽວແກ່. |
| **NIACIN**  | ໑. ຊ່ວຍແຊລຂອງຮ່າງກາຍໃຊ້ອອກຊີເຈັນ ເພື່ອສ້າງພລັງງານ<br>໒. ຊ່ວຍໃຫ້ຜິວຫນັງ ລີ້ນ ຣະບົບການຍ່ອຍອາຫານ ຣະບົບຂອງເສັ້ນປະສາດ ມີສຸຂພາບແຂງແຮງດີ | ຈະຫາໄດ້ຈາກອາຫານຈຳພວກ ຕັບ ແປ້ງຫມັກ ຊີ້ນ ເປັດ ໄກ່ ໃບຜັກສີຂຽວ ຫມາກຖົ່ວດິນ ແລະເນີຍປະສົມ ຫມາກຖົ່ວຕ່າງໆ ໃບຜັກແລະຫມາກໄມ້ ເຂົ້າຈີ່ ແລະອາຫານທີ່ເຮັດດ້ວຍເມັດເຂົ້າຕ່າງໆ. |
| **VITAMIN D**  | ໑. ຊ່ວຍເພີ່ມສ້າງພລັງງານ<br>໒. ຊ່ວຍຮ່າງກາຍໃນການໃຊ້ໄຂມັນ<br>໓. ຊ່ວຍເກັບ ໂປຣຕີນ ເພື່ອຈະໄວ້ໃຊ້ໃນການສ້າງ ແລະສ້ອມແຊມຮ່າງກາຍ | ຈະຫາໄດ້ຈາກອາຫານຈຳພວກແປ້ງ ເຂົ້າຈີ່ ອາຫານທີ່ເຮັດດ້ວຍເມັດເຂົ້າ ຫມາກສາລີ ເຂົ້າປົ້ນ ມັນຝຣັ່ງ ເຂົ້າ ເສັ້ນປະປາກັດຕີ ມັກກາໂຣນີ ເສັ້ນເຝີ ນ້ຳຕານ ນ້ຳອ້ອຍ ນ້ຳເຊື່ອມ ແລະສິ່ງທີ່ມີຣົສຫວານຕ່າງໆ |
| **CARBOHYDRATES**  | ໑. ຊ່ວຍຮ່າງກາຍໃນການໃຊ້ ຄາລຊຽມ ແລະ ຟົສໂຟ-ຣັສ ເພື່ອສ້າງແຂ້ວແລະກະດູກໃຫ້ແຂງແຮງ ຊຶ່ງເປັນສິ່ງສຳຄັນ ສຳຫລັບເດັກນ້ອຍທີ່ກຳລັງເຕີບໂຕ ແລະ ແມ່ຍິງທີ່ກຳລັງຖືພາ ແລະ ເວລາທີ່ລ້ຽງລູກດ້ວຍນ້ຳນົມ | ຈະຫາໄດ້ຈາກອາຫານຈຳພວກ ນົມ ຕັບປາ ອາຫານທີ່ປະກອບໄປດ້ວຍ ໄວຕາມິນ ດີ. ເຊັ່ນນົມສົດ ແສງແດດກໍ່ສາມາດສ້າງໄວຕາ-ມິນດີ ຈາກຄໍເຣສເຕໂຣ ຢູ່ໃນຜິວຫນັງ. |
| **FATS**  | ໑. ສ້າງພລັງງານຈາກອາຫານ ໃນລັກສະນະທີ່ເປັນຫນ່ວຍຫລືເປັນກ້ອນ ໃນການຊັ່ງນ້ຳຫນັກຂອງໄຂມັນທີ່ສາມາດສ້າງພລັງງານສອງເທົ່າຂອງຄາໂບໄຮເດຣດ<br>໒. ບາງສ່ວນກໍ່ຊ່ວຍສ້າງນ້ຳກົດ ໄຂມັນທີ່ສຳຄັນຕໍ່ຮ່າງກາຍ.<br>໓. ຊ່ວຍຮ່າງກາຍໃຊ້ພລັງຈາກອາຫານອື່ນໆ | ຈະຫາໄດ້ຈາກໄຂມັນແລະນ້ຳມັນຄົວກິນ ເນີຍ ນ້ຳມັນພືດ ມາກາຣີນ ນ້ຳມັນສລັດ ແລະ ນ້ຳມັນອື່ນໆ |

| | | |
|---|---|---|
| **WATER**  | ໑. ເປັນສ່ວນປະກອບທີ່ສຳຄັນຂອງທຸກໆແຊລ ແລະຂອງແຫລວໃນຮ່າງກາຍ.<br>໒. ເປັນຜູ້ນຳສິ່ງທີ່ມີປະໂຍດໄປສູ່ຮ່າງກາຍ ແລະນຳເອົາຂອງເສັຍອອກຈາກແຊລໃນຮ່າງກາຍ<br>໓. ຊ່ວຍໃນການຍ່ອຍອາຫານ ແລະ ດູດຊຶມເອົາອາຫານຕ່າງໆ.<br>໔. ຊ່ວຍເຮັດໃຫ້ຄວາມຮ້ອນຄວາມໜາວໃນຮ່າງກາຍຢູ່ໃນສະພາບປົກກະຕິ. | |

105

# ສຸຂພາບ ອານາມັຍແລະການເຈັບໄຂ້
# ຕ່າງໆຂອງເດັກ





ERIC

ບົດຮຽນທີ່ ໑໓

## ການຮັກສາເວລາເຈັບໄຂ້

ກ. ຂໍ້ມູນກັບຄວາມຕ້ອງການ.

ຂ. ທາງດ້ານກົດໝາຍ - ຕາມກົດລະບຽບແລ້ວ ອັງກິດ ກໍມີພຽງແຕ່ວ່າ :

"ເມື່ອເດັກນ້ອຍສະແດງອາການເຈັບໄຂ້ອອກມາ ເຂົາຜູ້ນັ້ນຈະຕ້ອງຖືກແຍກອອກຈາກໝູ່ ຖ້າຫາກວ່າ ເປັນໂຣຄຕິດຕໍ່ກັນ ຈະຕ້ອງໄດ້ແຍກອອກຈາກໝູ່ຈົນກວ່າອາການນັ້ນຈະເຊົາ" ນີ້ຄືກົດລະບຽບຂອງ ສະຖານທີ່ຮັບລ້ຽງເດັກນ້ອຍ. ເລີ່ມໃຊ້ມາແຕ່ວັນທີ ໑໑.໔ກ.ກຊ.

໑. ສິ່ງທີ່ທ່ານສາມາດປະຕິບັດໄດ້ ເຖິງແມ່ນວ່າຈະເປັນການຍາກ ຫລື ບໍ່ມັກປະຕິບັດ ໃນກໍຣະນີ ທີ່ເກີດຂຶ້ນເປັນໝູ່ (ສະຖານທີ່ ແລະ ເວລາເປັນສິ່ງສຳຄັນ ທີ່ຈະຕ້ອງນຳມາພິຈາຣະນາ).

໒. ເດັກນ້ອຍທີ່ ບໍ່ສະບາຍ ບໍ່ມັກຈະແຍກຈາກຜູ້ອື່ນ.

ຄ. ການແຍກ (ບ່ອນຢູ່) ແຕກຕ່າງກັນ ຂຶ້ນກັບອາການເຈັບໄຂ້.

໑. ການແຍກໝາຍຄວາມວ່າ ໃຫ້ຢູ່ຫ່າງຈາກຜູ້ອື່ນ ບໍ່ໄດ້ໝາຍຄວາມວ່າຈະຕ້ອງໃຫ້ເດັກນ້ອຍຜູ້ນັ້ນຢູ່ຫ້ອງ ອື່ນຜູ້ດຽວ ໂດຍບໍ່ໃຫ້ເຫັນ ແລະ ບໍ່ໄດ້ຍິນສິ່ງຕ່າງໆທີ່ເກີດຂຶ້ນ.

໒. ແນວຄວາມຄິດນີ້ ສາມາດຕີຄວາມໝາຍໄດ້ກວ້າງ ການຕີຄວາມໝາຍຂອງທ່ານຂຶ້ນກັບວ່າທ່ານແຍກ ເດັກນ້ອຍອອກຈາກໝູ່ຍັງ ເຊັ່ນຕົວຢ່າງຂ້າງລຸ່ມນີ້ - ຄວນຈະເອົາການຮັກສາໂດຍຢຸດຢາມາເປັນ ແນວທາງໃນການແຍກເດັກນ້ອຍ.

ກ. ບໍ່ຈຳເປັນຕ້ອງແຍກ : ຖ້າຫາກມີອາການແພ້ຢາ ເຊັ່ນຕົວຢ່າງ ເປັນໂຣຄຫືດ, ໄຂ້ຕົວຮ້ອນ ແລະຫາຍໃຈຫອບ, ຂີ້ມູກໄຫລ, ອອກຕຸ່ມ ແລະ ເປັນຜື່ນຄັນ.

ຂ. ແຍກເລັກນ້ອຍ : (ໝາຍຄວາມວ່າ ບໍ່ໃຫ້ກອດຈູບ ຫລືວ່າ ຫລິ້ນເຄື່ອງຫລິ້ນຮ່ວມກັນ ແລະ ໃຊ້ຜ້າເຊັດໜ້າຮ່ວມກັນ) ໂຣຄເຫລົ່ານີ້ໄດ້ແກ່ ການເປັນຫວັດ, ໄອ, ຫູອັກເສບ, ໂຣຄຫລອດລົມ ອັກເສບ/ຫລົມຫາຍໃຈອັກເສບ ແລະ ພະຍາດປອດບວມ.

ຄ. ຈຳເປັນຕ້ອງແຍກ : (ແຍກອອກຫ່າງຈາກເດັກນ້ອຍຜູ້ອື່ນ) ໂຣຄເຫລົ່ານີ້ໄດ້ແກ່ ຫວັດລົງຄໍ, ພະຍາດຂີ້ກາກ, ໝາກສຸກ (ຖ້າຫາກເດັກນ້ອຍເຫລົ່ານີ້ ເປັນພະຍາດເຊັ່ນດຽວກັນ ບໍ່ຈຳເປັນ ຕ້ອງແຍກ).

ງ. ບໍ່ໃຫ້ຮັບເອົາເດັກນ້ອຍ ທີ່ເປັນໂຣຄເຫລົ່ານີ້ເຊັ່ນ : ພະຍາດຕັບ, ໝາກສຸກ, ມີເຫົາ (ເພື່ອ ປ້ອງກັນບໍ່ໃຫ້ເດັກນ້ອຍເຫລົ່ານີ້ ຕິດພະຍາດນີ້).

ຈ. ການພິຈາຣະນາ : ໃນການພິຈາຣະນາ ສ່ວນໃຫຍ່ແລ້ວທ່ານຕ້ອງຖືເອົາ ການຢູ່ດີຂອງເດັກນ້ອຍ ສ່ວນຫລາຍທີ່ຢູ່ໃນຄວາມດູແລຂອງທ່ານ. ຖ້າຫາກທ່ານເລືອກເອົາການລ້ຽງເດັກນ້ອຍທີ່ບໍ່ສະບາຍ (ໄຂ້) ທ່ານຈະສາມາດປະຕິບັດໜ້າທີ່ການໄດ້ດີບໍ່ຫລືບໍ່ ? ທັງດ້ານຮ່າງກາຍແລະຈິດໃຈ.

- ການລ້ຽງເດັກນ້ອຍທີ່ບໍ່ສະບາຍ ຕ້ອງໃຊ້ເວລາແລະເຮັດວຽກຫລາຍຂຶ້ນກວ່າປົກກະຕິ.
- ໃຫ້ຄວາມຮັກຢ່າງທະນຸຖະນອມກວ່າຫລາຍກວ່າເດັກນ້ອຍທັມມະດາ.
- ຂຶ້ນກັບວ່າເດັກນ້ອຍເປັນໂຣຄຊະນິດໃດ ແລະ ທ່ານຈະເບິ່ງແຍງເດັກນ້ອຍຜູ້ນັ້ນຊະນິດໃດ. ເດັກນ້ອຍຜູ້ອື່ນອາດຈະບໍ່ໄດ້ຮັບການເອົາໃຈໃສ່ຈາກທ່ານ ສຳຫລັບທາງກາຍແລະຈິດໃຈ ໂດຍຮວມ ໂດຍສະເພາະເດັກນ້ອຍເກີດໃໝ່.
- ຖ້າຫາກວ່າ ຜູ້ຮັບລ້ຽງເດັກນ້ອຍບໍ່ເຄີຍ ຫລືວ່າ ບໍ່ມັກໃນການລ້ຽງເດັກນ້ອຍທີ່ບໍ່ສະບາຍ ເຂົາຜູ້ນັ້ນ ຈະເກີດຄວາມກະວົນກະວາຍໃຈ ແລ້ວຈະເຮັດໃຫ້ການເບິ່ງແຍງເດັກນ້ອຍຄົນ ອື່ນ ບໍ່ໄດ້ດີພຽງພໍ.

ປ. ຣະດັບຄວາມມັກ (ສບາຍ) ຂອງຜູ້ຮັບລ້ຽງເດັກນ້ອຍ

ກ. ມີປະສົບປະການໃນການລ້ຽງເດັກນ້ອຍ ທີ່ບໍ່ສບາຍ.

ຂ. ບໍ່ມີປະສົບປະການ

ຄ. ນິດບາດ ແລະ ທ່າທີຂອງທ່ານກໍ່ມີຄວາມສຳຄັນ.

໔. ບັນຫາທາງດ້ານອາຣົມ

ກ. ການເບິ່ງແຍງເດັກນ້ອຍ ທີ່ມີຄວາມກົດດັນທາງດ້ານອາຣົມ ແລະ ມີບັນຫາໃນການຈເຣີນເຕີບໂຕຂອງຮ່າງກາຍ ກໍ່ຄືກັນກັບການລ້ຽງເດັກນ້ອຍທີ່ບໍ່ສບາຍ.

ຂ. ບາງຄັ້ງຜູ້ລ້ຽງເດັກນ້ອຍ ຈະຕ້ອງໃຊ້ເວລາຫລາຍເປັນພິເສດ ແກ່ເດັກນ້ອຍຜູ້ນຶ່ງແລະກໍ່ໃຫ້ເວລານ້ອຍແກ່ເດັກນ້ອຍອີກຜູ້ນຶ່ງ ໃນເວລາໃດເວລານຶ່ງ ແລະ ໝົດພື້ນຂອງການຄົ້ນນີ້ ອາດຈະບໍ່ແມ່ນຍອມຄວາມເຈັບເປັນກໍ່ໄດ້.

ງ. ສິ່ງທີ່ກ່ຽວຂ້ອງ : (ຫ່ວງໃຍ)

໑. ເດັກນ້ອຍຈະມີຄວາມຮູ້ສຶກຢ່າງໃດ ?

໔. ການຮັບລ້ຽງເດັກນ້ອຍທີ່ບໍ່ສບາຍ ຈະບໍ່ເປັນການເຮັດໃຫ້ສຸຂພາບຂອງເດັກນ້ອຍຜູ້ອື່ນຢູ່ໃນຂັ້ນອັນຕລາຍບໍ ?

ກ. ພຍາດຕິດຕໍ່ສ່ວນຫລາຍ (ເຊື້ອ virus ຫລື bacteria ແລະເຊື້ອ culprit ) ມີຣະຍະພັກໂຕຢ່າງຕ່ຳ ໒໔ ຊົ່ວໂມງ ຊຶ່ງໃນຣະຍະນີ້ ອາດຈະບໍ່ມີອາການໄຂ້ປາກົດໃຫ້ເຫັນ

ຂ. ເດັກນ້ອຍຜູ້ອື່ນອາດຈະເກີດຕິດເຊື້ອກ່ອນ ທີ່ຈະຮູ້ວ່າເດັກນ້ອຍຜູ້ນັ້ນເປັນໄຂ້.

ຄ. ເດັກນ້ອຍຈະຕິດໂຣຄ ຫລື ບໍ່ ? ສ່ວນນຶ່ງຂຶ້ນກັບຣະບົບການຕໍ່ຕ້ານເຊື້ອໂຣຄຂອງແຕ່ລະຄົນ.

ງ. ໃນສະຖານທີ່ລ້ຽງເດັກນ້ອຍຢູ່ໃນເຮືອນ ສ່ວນຫລາຍມີການກອດການຈູບ

ຈ. ແລະນອກນັ້ນ ຈາກການສຶກສາສແດງໃຫ້ເຫັນວ່າ ເດັກນ້ອຍທີ່ຢູ່ໃນຂັ້ນຕຽມເຂົ້າໂຮງຮຽນ ຈະເອົາເຄື່ອງຫລິ້ນ ຫລື ນິ້ວມືເຂົ້າປາກ ຄິດສະເລັ່ຍແລ້ວທຸກໆ ໓໔ ວິນາທີ.

ສ. ມີການແຜ່ຫຼາຍເຊື້ອໂຣຄ

ຊ. ເຊື້ອໂຣຄຕິດເຂົ້າມາໃນເຮືອນ ບໍ່ແມ່ນມາຈາກແຕ່ເດັກນ້ອຍຜູ້ອື່ນເທົ່ານັ້ນ ພໍ່ແມ່ແມ່ນກໍ່ນຳເອົາເຊື້ອໂຣຄຈາກໂຮງການຂອງເຂົາເຈົ້າ ມາຕິດຕໍ່ໃຫ້ລູກໄດ້ຄືກັນ.

ຂໍ້ສັງເກດ : ບໍ່ມີໃຜຈະສາມາດບອກໄດ້ວ່າເດັກນ້ອຍຈະສາມາດຕິດເຊື້ອໂຣຄຈາກເດັກນ້ອຍຜູ້ທີ່ບໍ່ສບາຍ ແລະຖ້າຫາກວ່າເຂົາເຈົ້າຕິດຈະມີຜົລຮ້າຍແຮງຊໍ່າໃດ ເດັກນ້ອຍຜູ້ນຶ່ງ ຕິດເຊື້ອໄຂ້ຫວັດ ອາດຈະມີອາການ ນ້ຳມູກໄຫລ ແລະ ບໍ່ມີອາການອື່ນປາກົດຂຶ້ນແກ່ເດັກນ້ອຍ ອີກຜູ້ນຶ່ງທີ່ຕິດເຊື້ອໂຣຄໄຂ້ຫວັດຈາກບ່ອນດຽວກັນ ອາດຈະເປັນໂຣຄທໍ່ຫາຍໃຈ (ຫລອດລົມ) ອັກເສບ ແລະ ກາຍເປັນໂຣຄປອດບວມພາຍຫລັງກໍ່ໄດ້.

ຖ້າຫາກວ່າຢູ່ໃກ້ເດັກນ້ອຍເປັນໂຣຄຕິດຕໍ່ກັນຊໍ່າໃດ ກໍ່ຈະມີໂອກາດຕິດໂຣຄຫລາຍຂຶ້ນຊໍ່ານັ້ນ. ຖ້າຫາກວ່າມີການຍົກຍ້າຍເດັກນ້ອຍຜູ້ບໍ່ສບາຍນັ້ນອອກຈາກສະຖານທີ່ ບ່ອນລ້ຽງເດັກໂດຍທັນທີທັນໃດ ໂອກາດທີ່ເຊື້ອໂຣຄຈະຣະບາດອາດຈະມີນ້ອຍ ແຕ່ເຖິງຢ່າງໃດກໍ່ຕາມ ກໍ່ເປັນການຮັບປະກັນບໍ່ໄດ້.

ເດັກນ້ອຍທີ່ບໍ່ສບາຍ ຢູ່ໃນຂັ້ນທີ່ບໍ່ເຜີຍແຜ່ເຊື້ອໂຣຄ ແຕ່ວ່າຍັງມີອາການໄຂ້ຢູ່ ໃນກໍຣະນີ້ ທ່ານຈະຍອມຮັບເອົາເດັກນ້ອຍຜູ້ນັ້ນໄວ້ໃນສະຖານທີ່ ຫລືບໍ່ ?

ສ. ຕ້ອງມີການປ້ອງກັນຮັກສາ ສິ່ງເຫຼົ່ານີ້ຈຳເປັນຈະຕ້ອງມີ ແຕ່ບໍ່ໄດ້ໝາຍຄວາມວ່າ ການຣະບາດຂອງເຊື້ອໂຣຄຈະບໍ່ເກີດຂຶ້ນ.

໑. ຄວາມສະອາດ

ກ. ໃຫ້ເດັກນ້ອຍລ້າງມື.

ຂ. ຜູ້ທີ່ຮັບລ້ຽງເດັກນ້ອຍຈະຕ້ອງລ້າງມືທຸກໆເທື່ອ ຫລັງຈາກການປ່ຽນຜ້າ ໄດເປີ້, ເຊັດດັງ ແລະ ກ່ອນຈັດອາຫານ.

໒. ໃຫ້ໃຊ້ເຄື່ອງໃຊ້ຂອງໃຜລາວໃນການກິນ, ການດື່ມ, ໝອນໜູນ, ຊາປູ ແລະ ຜ້າຫົ່ມ.

໓. ອາກາດສົດ, ອາຫານມີຄຸນນະພາບດີ ແລະ ໃຫ້ທຸກໆຄົນໄດ້ຮັກການພັກຜ່ອນພຽງພໍ.

໔. ຈຸດໃຫຍ່ ໒ ທາງທີ່ເຊື້ອໂຣຄຣະບາດ (ຈາກໜັງສື : Medical Forum MAY 1983. Day Care and Contagious. Dr. D. GOLDMANN.)

ກ. ຣະບົບການຫາຍໃຈທາງເທິງ/ການອັກເສບໃນລຳຄໍ - ເຊື້ອໂຣຄຈະເຜີຍແຜ່ໂດຍການຕິດຕໍ່ ໂດຍກົງດ້ວຍນ້ຳລາຍ ຫລື ການຢູ່ໃກ້ກັບບຸກຄົນທີ່ເປັນໄຂ້ຊຶ່ງກຳລັງເວົ້າ, ອາການຈາມ ແລະ ອາການໄອ.

ຂ. ໂຣຄກ່ຽວກັບກະເພາະແລະລຳໄສ້ອັກເສບ ເຊື້ອໂຣຄຈະເຜີຍແຜ່ໄດ້ດ້ວຍ ມືທີ່ຖືກອາຈົມ (ຂີ້) ແລ້ວໄປຖືກປາກຂອງຜູ້ອື່ນ ຈະເປັນພຽງແຕ່ຈຳນວນນ້ອຍດຽວກໍສາມາດເຮັດໃຫ້ຕິດເຊື້ອໂຣຄນີ້ໄດ້.

ຊ. ອາການ.

໑. ຈາມ, ໄອ ແລະ ຂີ້ມູກໄຫລ

ກ. ອາການຂອງການເປັນຫວັດ ( virus ຫລື bacteria ) )

ຂ. ອາການແພ້ຕ່າງໆ - ສ່ວນຫລາຍມີ ໒໔ % ຂອງອາການແພ້ທີ່ອະເມຣິກັນກຳລັງປະສົບຢູ່ໃນຂັ້ນປະຈຸບັນ ແລະ ບາງສ່ວນຂອງອາການແພ້ຕ່າງໆ

ຄ. ອາການຂີ້ມູກໄຫລ (ຍ້ອຍ) ມີນ້ຳເມືອກຂຸ້ນດໍໃສໆ ຍ້ອຍອອກມາ ຄ້າຍຄືກັບໃນເວລາທີ່ເດັກນ້ອຍທີ່ກຳລັງເລັ່ມມີແຂ້ວງອກ ແລະ ກັບເດັກນ້ອຍທີ່ມີອາການແພ້ນ້ຳມູກຕ່າງໆ.

ງ. ນ້ຳເມືອກ (ຂຸ່ນຄືສີເຫລືອງແກ່ ຫລື ສີຂຽວ) ຈະສາມາດບອກໃຫ້ຮູ້ເຖິງເຊື້ອໂຣຄຣະບາດ.

໒. ອາການໄຂ້.

ກ. ອາການຄວາມຮ້ອນຕ່າງໆ ຈະສາມາດແຕກຕ່າງກັນເປັນທັມມະດາ ແລະຫລາຍເດີກຣີຂອງອາການຮ້ອນ ແຕລະອາການ.

ຂ. ເດັກນ້ອຍບາງຄົນ ຈະສາມາດມີຄວາມອ່ອນແອ (ອ່ອນເພັຍ) ໃນການທີ່ມີໄຂ້ຂຶ້ນສູງ ເຖິງແມ່ນວ່າອາການໄຂ້ ຈະມີໜ້ອຍຫລາຍກໍຕາມ.

ຄ. ເດັກນ້ອຍທີ່ກຳລັງເລັ່ມອອກແຂ້ວ ບາງຄົນກໍຈະມີອາການໄຂ້ (ຕົວຮ້ອນ) ຂຶ້ນເລັກນ້ອຍ

ງ. ຄວາມກົດດັນ, ການຕື່ນເຕັ້ນ, ການຫລິ້ນ ກິຈກັມຕ່າງໆ ຈະສາມາດເຮັດໃຫ້ເກີດຄວາມຮ້ອນຂຶ້ນມາໄດ້.

ຈ. ອາການຄວາມຮ້ອນທີ່ຕ່ຳກວ່າທັມມະດາ ຈະສາມາດບອກໃຫ້ຮູ້ເຖິງ ຄວາມສຳຄັນຂອງການເຈັບໄຂ້.

109

໓. ອາການຮາກ.

ກ. ຜູ້ຮັບລ້ຽງເດັກນ້ອຍຫລາຍຄົນຈະບໍ່ຮັບເອົາເດັກນ້ອຍທີ່ບໍ່ສະບາຍ ເຊັ່ນມີອາການຮາກ ແລະ ປະຕິເສດ ບໍ່ຍອມຮັບເອົາເດັກນ້ອຍນັ້ນ.

ຂ. ອາການຮາກ ໂດຍສະເພາະແມ່ນເດັກນ້ອຍເກີດໃໝ່ ແລະ ບໍ່ສາມາດຈະຍ່ອຍອາຫານນັ້ນໄດ້.

ຄ. ອາການ ແລະ ພຶດຕິການຕ່າງໆ ຈະສາມາດແຕກຕ່າງກັນໄດ້.

໔. ການຖອກທ້ອງ ລົງທ້ອງ.

ກ. ຈະບໍ່ມີການທ້ອງໃນຫຍັງເລີຍ ແລະ ຈະບໍ່ມີການຮຸນແຮງເຖິງຂັ້ນອັນຕລາຍ

ຂ. ເນື່ອງມາຈາກແຂ້ວຂຶ້ນ ຫລືວ່າຮ່າງກາຍປ່ຽນແປງ ເພາະກິນອາຫານໃໝ່.

ຄ. ການປ່ຽນແປງລາຍການປະຈໍາວັນ ຈະສາມາດເຮັດໃຫ້ເກີດອາການທ້ອງເສັຍ (ຖ່າຍທ້ອງ)

໕. ການຖ່າຍເຈັບຈຸກ.

ກ. ຈະສາມາດເຮັດໃຫ້ເດັກນ້ອຍເກີດຄວາມບໍ່ສະບາຍ

ຂ. ຈະເປັນການຮ້າຍແຮງທີ່ສຸດ

ຄ. ຈະບໍ່ເປັນການໜ້າວິຕົກແຕ່ຢ່າງໃດທີ່ເດັກນ້ອຍ ບໍ່ໃຫ້ຄວາມຮ່ວມໄມ້ຮ່ວມມື.

໖. ຫິດ, ໂຣຄລົມ ແລະ ແມ່ທ້ອງເສັ້ນດ້າຍ.

ກ. ເປັນການແຜ່ພາຍໄດ້ງ່າຍຫລາຍ ຈາກເດັກນ້ອຍຜູ້ນຶ່ງ ຕໍ່ໃສ່ເດັກນ້ອຍຜູ້ນັ້ນ.

ຂ. ການຮັກສາ, ກິນຢາ ແລະ/ຫລື ຄວາມສອາດມິດສົດເປັນສິ່ງຈໍາເປັນທີ່ສຸດ.

ຄ. ເປັນການລໍາບາກສໍາຫລັບການປິ່ນປົວ ແລະ ຂຶ້ນຢູ່ກັບສະພາບການເປັນຢູ່ຂອງແຕ່ລະກຸ່ມ

໗. ພະຍາດຂີ້ກາກ.

໘. ມື, ຕີນ ແລະ ປາກເປັນພະຍາດ

໙. ພະຍາດຂີ້ກາກ (ແບບແຜ່ພາຍໄປຕາມຕົວ ແລະຕິດຕໍ່ກັນໄວ)

໑໐. ເປັນພະຍາດໃນວັຍເດັກ.

ຄໍາແນະນໍາ : ທ່ານໝໍ/ທ່ານໝໍປະຈໍາບ້ານ (ຄອບຄົວ) ແມ່ນຜູ້ໃຫ້ຄໍາແນະນໍາ ແລະຈຸດຊ່ວຍເຫຼືອເຖິງທ່ານນັ້ນ ແຕ່ວ່າຜູ້ເປັນພໍ່ແມ່ ແລະຜູ້ປົກຄອງຄວນຈະໃຫ້ຄວາມສົນໃຈກ່ຽວກັບສຸຂພາບຂອງເດັກນ້ອຍຢ່າງເປັນພິເສດ.

ຍ. ຢຸກຢາກິນ.

໑. ຜູ້ຮັບລ້ຽງເດັກນ້ອຍຈະຕັ້ງໃຈເອົາຢາໃຫ້ເດັກນ້ອຍກິນ - ເພື່ອສຸຂພາບຂອງເຂົາເຈົ້າ.

໒. ຈະຕ້ອງໄດ້ຮັບຄໍາອານຸຍາດຈາກພໍ່ແມ່ ແລະ ທ່ານໝໍແນະນໍາເຖິງນັ້ນ ກ່ອນທີ່ຈະເອົາຢາໃຫ້ເດັກນ້ອຍກິນ.

໓. Anti-biotics ຈະໃຫ້ເດັກນ້ອຍກິນແຕ່ສະເພາະ ໑໐ ມື້ເທົ່ານັ້ນ - ເຖິງແມ່ນວ່າອາການໄຂ້ຈະຫາຍໄປແລ້ວກໍຕາມ.

໔. American Association of Pediatricians ບໍ່ສາມາດຈະໃຫ້ຄວາມແນະນຳໃຫ້ໃຊ້ຢາ Aspirin ສຳລັບຜ່ອນຄວາມໄຂ້ລົງ - ທາງທີ່ດີຄວນຈະໃຊ້ຢາຂະນານທີ່ບໍ່ມີຢາ Aspirin (Non-aspirin) ປົນຢູ່ນັ້ນ - ເຖິງຢ່າງໃດກໍດີ ອາການໄຂ້ກໍຈະເບົາບາງລົງຕລອດເຖິງພຍາດທີ່ເກີດຂຶ້ນພ້ອມໆກັນ. ເປັນທີ່ຮູ້ຈັກກັນຢູ່ແລ້ວວ່າ ຢາ Aspirin ມັກຈະເປັນເຫດໃຫ້ຕັບ, ເສັ້ນປຣະສາດ ເກີດຄວາມເຕັ້ນຜິດປົກກະຕິ ແລະທຳໜ້າທີ່ບໍ່ພຽງພໍ.

໕. ຢ່າເອົາຢາ ທີ່ທ່ານໝໍສັ່ງໃຫ້ເດັກນ້ອຍຜູ້ນຶ່ງ ແລ້ວເອົາໄປໃຫ້ຜູ້ອື່ນກິນ ເພາະວ່າການສັ່ງຢານັ້ນຈະສະເພາະແຕ່ເດັກນ້ອຍ ແລະນ້ຳໜັກຂອງເຂົາເທົ່ານັ້ນ ເຖິງແມ່ນວ່າເດັກນ້ອຍຈະມາຈາກຄອບຄົວດຽວກັນກໍຕາມ.

ຄ. ມາຕະຖານ.

໑. ເດັກນ້ອຍຈະມີຄວາມສາມາດ ທີ່ຈະເຮັດໜ້າທີ່ "ການເປັນຢູ່ຢ່າງໝວດໝູ່" ຈະສາມາດເບິ່ງແຍງຍາມເຈັບໄຂ້, ເຖິງແມ່ນວ່າເດັກນ້ອຍຈະເປັນໂຣຄຕິດຕໍ່ກໍຕາມ ແຕ່ຍັງສາມາດທີ່ຈະເຂົ້າຮ່ວມໝວດໝູ່ (ຫຼິ້ນ) ໄດ້.

໒. ຖ້າເຮົາຈະໃຊ້ຄຳວ່າເປັນໂຣຄຕິດຕໍ່ສຳລັບການປະຕິເສດ ບໍ່ຮັບລ້ຽງເດັກນ້ອຍ - ແຕ່ໃຫ້ເຂົ້າໃຈວ່າການເຈັບໄຂ້ ແລະ ອາການຕ່າງໆຈະແຜ່ຫຼາຍໃຫ້ແກ່ເດັກນ້ອຍຜູ້ອື່ນໄດ້ - ແຕ່ທ່ານຄວນອະທິບາຍຢ່າງແຈ່ມແຈ້ງໃຫ້ຜູ້ປົກຄອງຊາບ.

ໃຫ້ຈຳໄວ້ວ່າ : ທ່ານຈະຕ້ອງໃຫ້ການຣະວັງລ່ວງໜ້າ ເພື່ອປ້ອງກັນການແຜ່ຫຼາຍຂອງພຍາດ ຫຼື ເຊື້ອໂຣຄ - ເພື່ອໃຫ້ຜູ້ປົກຄອງຕຽມໃຈ ແລະ ກໍເພື່ອຄວາມສະດວກໃນການໄປຫາໝໍ ແລະ ຈະບໍ່ເສັຍເວລາຂໍລາພັກການ ໂດຍສະເພາະຖ້າຫາກທ່ານບໍ່ສາມາດຈະດູແລເດັກນ້ອຍທີ່ບໍ່ສບາຍ.

໓. ການສແດງອອກທາງດ້ານຄວາມປະພຶດ ແລະ ຄວາມຕ້ອງການຂອງເດັກນ້ອຍທີ່ມີສຸຂພາບດີ ແລະ ເດັກນ້ອຍທີ່ບໍ່ສບາຍ ຈະມີຄວາມແຕກຕ່າງກັນຫຼາຍ.

໔. ວິທີການຊ່ວຍແກ້ໄຂໃນການຕັດສິນໃຈ ທີ່ຈະຮັບລ້ຽງເດັກນ້ອຍ ແລະ ຄວາມໝາຍຂອງຄຳເວົ້າດັ່ງນີ້ "ການເຈັບໄຂ້""ພຍາດອາດຈະຕິດຕໍ່ກັນໄດ້" ແລະ "ອາການຕິດຕໍ່ຂອງພຍາດ" ຂໍໃຫ້ເຂົ້າໃຈວ່າມັນມີຫຼາຍຄວາມໝາຍ "ສພາບພຍາດອາດຕິດຕໍ່ກັນໄດ້" ຊຶ່ງກໍເປັນໜ້າວິຕົກທີ່ຈະເກີດຂຶ້ນໃນບ້ານເຮືອນຕ່າງໆ.

ງ. ຄອບຄົວ ຂອງຜູ້ຮັບລ້ຽງເດັກ.

໑. ລູກຂອງຜູ້ຮັບລ້ຽງເດັກ - ແມ່ນຜູ້ໃດທີ່ຈະເບິ່ງແຍງໃນເວລາທີ່ເຂົາເຈົ້າບໍ່ສບາຍ. ເດັກນ້ອຍຜູ້ນັ້ນ ຈະຕ້ອງຢູ່ບ້ານໃນຍາມເຂົາເຈົ້າບໍ່ສບາຍບໍ ?

໒. ໃນເວລາຜູ້ຮັບລ້ຽງເດັກນ້ອຍບໍ່ສບາຍ.

ກ. ທ່ານຈະປິດກິຈການຂອງທ່ານ ທຸກໆເວລາໃນຍາມທີ່ທ່ານເປັນຫວັດ, ເຈັບຄໍ ຫຼື ເປັນໄຂ້ຫວັດບໍ ?

ຂ. ຜູ້ປົກຄອງຈະຕ້ອງໄວ້ໃຈ ແກ່ຜູ້ລ້ຽງເດັກຊຶ່ງຈະສາມາດຮັບລ້ຽງລູກເຂົາໄດ້.

ຄ. ຜູ້ຮັບລ້ຽງເດັກ ບາງທີອາດຈະຮັບລ້ຽງເດັກຕໍ່ໄປ ຈົນກວ່າຈະໝົດຄວາມສາມາດ.

໓. ກໍຣະນີອາດຈະເປັນໄປໄດ້ບໍ ? ທີ່ທ່ານຈະປິດກິຈການທຸກໆເທື່ອໃນເວລາທີ່ທ່ານ ແລະ ລູກຂອງທ່ານບໍ່ສບາຍ.

111

ຖ. ຜົລການສລຸບ.

໑. ຄວາມຮັບຜິດຊອບຂອງຜູ້ຮັບລ້ຽງເດັກ - ຖ້າຫາກເດັກນ້ອຍເກີດເຈັບຂຶ້ນມາໃນມື້ນັ້ນ ທ່ານຄິດວ່າຈະເບິ່ງແຍງຕໍ່ໄປ ໃຫ້ຮອງໄປຫາພໍ່ແມ່ຂອງເດັກນ້ອຍ ແລະໃຫ້ເຂົາເປັນຜູ້ຕັດສິນໃຈເອົາເອງ.

ຂໍ້ຄວາມທີ່ຄວນຈຳ : ມັນມີຫລາຍຢ່າງຂອງການສແດງອອກມາ ຂອງຄວາມບໍ່ສບາຍຂອງເດັກນ້ອຍ ໃນເມື່ອຫາກເດັກນ້ອຍບໍ່ສບາຍ ຜູ້ລ້ຽງດູ ບໍ່ຄວນຈະລອງຫລິ້ນແບບທ່ານໝໍ ຫລືວ່າຫລິ້ນເປັນຕົວແທນຂອງພໍ່ແມ່.

໒. ຄວາມຮັບຜິດຊອບຂອງຜູ້ປົກຄອງ.

ຜູ້ຮັບລ້ຽງເດັກນ້ອຍ ມີສິດທິ ແລະ ຄວາມຮັບຜິດຊອບໃນການປະຕິເສດທີ່ຈະບໍ່ຮັບລ້ຽງເດັກນ້ອຍ ຖ້າຫາກພໍ່ແມ່ຂອງເດັກນ້ອຍ ບໍ່ເອົາໃຈໃສ່ໃນການເຈັບໄຂ້ປ່ອຍປະລະເລີຍ ແລະ ພຍາດເລົ່ານັ້ນກໍ່ຈະກັບຄືນມາອີກ.

໓. ໃຫ້ແນ່ໃຈ ແລະ ອະທິບາຍ ຂໍ້ຄວາມຕ່າງໆໃຫ້ຜູ້ປົກຄອງຊາບ ກ່ອນທີ່ທ່ານຈະເຊັນໃບສັນຍາລົງໄປ.

ຂໍໃຫ້ຕອບຄຳຖາມເຫລົ່ານີ້ໃຫ້ຜູ້ປົກຄອງຊາບ :

໑. ເມື່ອຍາມເດັກນ້ອຍບໍ່ສບາຍ ທ່ານຈະຮັບລ້ຽງບໍ່ ?

໒. ຢູ່ໃນຂອບເຂດໃດ ?

໓. ແລະ ຢູ່ໃນສພາບ ແລະ ເງື່ອນໄຂອັນໃດ ?

# ສິ່ງທີ່ຄວນຮູ້ !!

ໜັງສືບັນທຶກຂອງການສັກຢາປ້ອງກັນໂຣຄຕ່າງໆຂອງຣັຖຄາລີຟໍເນັຽ ໄດ້ມີໄວ້ໃຫ້ທ່ານຢູ່ຕາມຫ້ອງການຂອງທ່ານໝໍ ຫລື ຄລີນິກຕ່າງໆ. ໃຫ້ສອບຖາມລາຍຣະອຽດ ຫລື ຖືໄປພ້ອມທຸກໆເທື່ອ ທີ່ທ່ານໄປສັກຢາປ້ອງກັນໂຣຄ.




ກົດໝາຍຂອງຣັຖຄາລີຟໍເນັຽໄດ້ອະນຸມັດໃຫ້ແກ່ເດັກນ້ອຍ ຈະຕ້ອງມີການສັກຢາປ້ອງກັນໂຣຄຕ່າງໆເຊັ່ນ : ໂປລີໂອ, ໂຣຄຄໍຕີບ, ໂຣຄໄອຫອບ, ໂຣຄເຕຕາໂນສ, ໂຣຄອອກຫັດ, ໂຣຄຄາງໃດ ແລະ ໂຣຄໝາກສຸກໝາກໃສ ກ່ອນຈະເອົາເດັກນ້ອຍໄປຈົດຊື່ເຂົ້າໂຮງຮຽນ ສຳຫລັບໂຮງຮຽນທັມມະດາ ຫລື ໂຮງຮຽນມໍເສດ. ໃນກໍຣະນີທີ່ມີການຍົກເວັ້ນ ກໍເນື່ອງມາຈາກເຫດຜົນຂອງຜູ້ກ່ຽວ ຫລື ການແພ້ສັກຢາເປັນຕົ້ນເຫດ.

ການສັກຢາປ້ອງກັນໂຣຄຕ່າງໆ ໄດ້ມີລາຍຣະອຽດຢູ່ໃນປຶ້ມ. ນອກທ່ານຈະຕ້ອງໄດ້ເສັຽຄ່າທຳນຽມ $ ໔.00 ສຳຫລັບການສັກຢາປ້ອງກັນໂຣຄ ຕໍ່ຜູ້ນຶ່ງຂອງ ກົມສາທາຣະນະສຸຂທົ່ວໄປ. ລາຍຣະອຽດກ່ຽວກັບການສັກຢາປ້ອງກັນເຫລົ່ານີ້ ມີຢູ່ຕາມປຶ້ມໂທຣະສັພ ພາຍໃຕ້ການຄວບຄຸມຂອງກຳແພງນະຄອນເມືອງ ແຊນດິເອໂກ. ໃຫ້ໂທຣະສັພໄປນັດພົບ ກ່ອນໄປສັກຢາປ້ອງກັນໂຣຄຕ່າງໆ.


COUNTY OF SAN DIEGO
BOARD OF SUPERVISORS

Tom Hamilton — District 1
Paul W. Fordem — District 2
Roger Hedgecock — District 3
Jim Bates — District 4
Paul Eckert — District 5


COUNTY OF SAN DIEGO

# ທ່ານ ແລະ ລູກຂອງທ່ານ ໄດ້ສັກຢາ ປ້ອງກັນໂຣຄ ເຫລົ່ານີ້ ໄວ້ຄົບຖ້ວນໝົດແລ້ວບໍ?

Your child will need these immunizations...

| | at 2 months | 3 - 4 months | 4 - 6 months | 15 months | 16-18 months | 4 - 6 years |
|---|---|---|---|---|---|---|
| DPT | ✓ | ✓ | ✓ | | ✓ | ✓ |
| Polio | ✓ | ✓ | | | ✓ | ✓ |
| MMR | | | | ✓ | | |



ERIC

# ສັງລວມ ກ່ຽວກັບການສັກຢາປ້ອງກັນໂຣຄ

| ການສັກຢາປ້ອງກັນໂຣຄ | ຄຳອະທິບາຍກ່ຽວກັບພຍາດຕ່າງໆ | ກຳນົດ-ເວລາ ຂອງການສັກຢາ | ປະຕິກິຣິຍາ ຫລັງຈາກສັກຢາປ້ອງກັນໂຣຄ |
|---|---|---|---|
| ໂປລີໂອ - ຊະນິດຢອດທາງປາກ | ພຍາດນີ້ເຮັດໃຫ້ຣະບົບເສັ້ນປະສາດເສັຽເຖິງກັບເປັນເປ້ຽ-ຫລອຍ ເສັຽອົງຄະໄປຕລອດຊີວິດ ຫລື ບາງທີກໍເຖິງແກ່ຄວາມຕາຍ. | ຈະສັກໃຫ້ເດັກນ້ອຍ ທີ່ມີອາຍຸຕັ້ງແຕ່ ໒ ເດືອນ ຂຶ້ນໄປຫາ ໑໘ ປີ. ສັກເທື່ອທຳອິດ ໒ ຄັ້ງຫ່າງກັນ ໖ ຫາ ໘ ອາທິດ. ສັກເທື່ອທີສາມ ໖ ຫາ ໑໒ ເດືອນຫລັງຈາກທີ່ສັກເທື່ອທີ ໒ ແລ້ວ. ສັກເທື່ອທີ ໔ ກ່ອນເດັກນ້ອຍຈະເຂົ້າໂຮງຮຽນ. | ຕາມປົກກະຕິແລ້ວ ຈະບໍ່ມີປະຕິກິຣິຍາຢ່າງໃດເກີດຂຶ້ນ ຫລັງຈາກທີ່ໄດ້ມີການສັກຢາປ້ອງກັນເຫລົ່ານີ້ແລ້ວ, ແລະກໍມີການສ່ຽງໄພນ້ອຍທີ່ສຸດ (ຈາກຈຳນວນ ໜຶ່ງໃນສີ່ລ້ານຄົນ) ຫລັງຈາກທີ່ໄດ້ຢັກຢາຈຳພວກນີ້ແລ້ວ ຈະເຮັດໃຫ້ເກີດເປັນ ເປ້ຍ-ຫລອຍໄດ້ ບຸກຄົນທີ່ບໍ່ທັນໄດ້ມີການສັກຢາເຫລົ່ານີ້ແລ້ວ. |
| ພຍາດຄໍຕີບ, ພຍາດໄອຫອບ ແລະ ເຕຕານົສ -- ສັກລວມກັນ | <u>ພຍາດຄໍຕີບ</u><br>ເປັນພຍາດຕິດຕໍ່ແລະສາມາດທຳລາຍຊີວິດຜູ້ໃຫຍ່ແລະເດັກໄດ້ ຊຶ່ງເປັນເຫດໃຫ້ຫລົ້ມຫາຍໃຈເກີດມີແນວເບື່ອມາໃຫ້ຫົວໃຈວາຍ ແລະເສັຍເສັ້ນປະສາດ ມີໜຶ່ງໃນຈຳນວນສິບຄົນຕາຍຍ້ອນພຍາດນີ້<br><u>ພຍາດໄອຫອບ</u><br>ພຍາດນີ້ເປັນເຫດໃຫ້ມີອາການໄອຢ່າງຮ້າຍແຮງ ແລະຫລັງຈາກມີອາການໄອແລ້ວຫອບ ສາມາດແຊກແຊງຣະບົບການຫາຍໃຈ ແລະເປັນພຍາດຮ້າຍແຮງສຳຫລັບເດັກນ້ອຍ. | ສັກໃຫ້ເດັກນ້ອຍທີ່ມີອາຍຸ ໖ ອາທິດເຖິງ ໖ ປີ.<br>ສັກ ໓ ເທື່ອທຳອິດ : ໑ ຫາ ໒ເດືອນຫ່າງກັນ.<br>ສັກເທື່ອທີ ໔: ໖ ຫາ ໑໒ ຫລັງຈາກທີ່ສັກເທື່ອທີສາມແລ້ວ.<br>ສັກເທື່ອທີ ໔ : ເວລາເດັກນ້ອຍຈະໄປເຂົ້າໂຮງຮຽນ ຫລື ກ່ອນເດັກນ້ອຍຈະຮອດ ໒ ປີ. | ຕາມປົກກະຕິແລ້ວ ເດັກນ້ອຍຈະມີອາການໄຂ້ເລັກນ້ອຍ ແລະອາການປວດຕ່າງໆຣະຫວ່າງ ໘ ຫາ ໒໔ ຊົ່ວໂມງ ອາການໄຂ້ຈະມີຢູ່ໃນຣະຫວ່າງ ໒໔ ຊົ່ວໂມງ, ອາການໃຄບວມ ແລະແດງຈະປາກົດຂຶ້ນຢູ່ຮອບບໍຣິເວນບ່ອນສັກຢາແລະຈະປາກົດຢູ່ຣະຫວ່າງ ໒ ຫາ ໓ ມື້. ມີໜຶ່ງໃນຈຳນວນ ເຈັດພັນຄົນເທົ່ານັ້ນ ທີ່ມີອາການຮ້າຍແຮງ ແລະມີໄຂ້ຂຶ້ນສູງ, ເປັນວິງ-ວຽນ ຫລືອາການເຈັບ-ທ້ອງຕ່າງໆ, ເດັກນ້ອຍຈະຮ້ອງໄຫ້ແອວເປັນຫລາຍໆ ຊົ່ວໂມງ. |
| ພຍາດເຕຕານົສ/ພຍາດຄໍຕີບ | <u>ພຍາດເຕຕານົສ</u><br>ເປັນພຍາດທີ່ເຈັບປວດໄປຕາມກ້າມເນື້ອ, ຄາງແລະຄໍ, ມີຄົນຕາຍຫລາຍກ່ຽວກັບພຍາດນີ້. | ສັກໃຫ້ເດັກນ້ອຍທີ່ມີອາຍຸຕັ້ງແຕ່ ໗ ປີຂຶ້ນໄປ ຫລື ຫລາຍກວ່ານັ້ນ.<br>ສັກສອງຄັ້ງທຳອິດ : ໑ ຫາ ໒ ເດືອນຫ່າງກັນ.<br>ສັກຄັ້ງທີສາມ : ໖ ຫາ ໑໒ ເດືອນຫລັງຈາກສັກເທື່ອທີສາມ. Booster ທຸກໆ໑໐ປີ | ປະຕິກິຣິຍາ ເຊັ່ນດຽວກັນກັບພຍາດຄໍຕີບ |

| ການສັກຢາປ້ອງກັນໂຣຄ | ຄຳອະທິບາຍກ່ຽວກັບພຍາດຕ່າງໆ | ກຳນົດ-ເວລາ ຂອງການສັກຢາ | ປະຕິກິຣິຍາ ຫລັງຈາກສັກຢາປ້ອງກັນໂຣຄ |
|---|---|---|---|
| ພຍາດໝາກສຸກ ໝາກໃສ | ພຍາດນີ້ຈະເປັນຕຸ່ມ ເປັນປ່ານລາມໄປທົ່ວຮ່າງກາຍ ຈະມີອາການໄຂ້ສູງ ໄອ ແລະ ແດງຕາມຕົນຕົວ ຕາຈະມີນ້ຳ, ມີເດັກນ້ອຍຫລາຍຄົນ ກາຍເປັນຄົນຫູໜວກ ຕາບອດ ຫລື ສມອງເສັຍຍ້ອນພຍາດເຫລົ່ານີ້ | ສັກໃຫ້ເດັກນ້ອຍທີ່ມີອາຍຸ ໑໔ ເດືອນ ຂຶ້ນໄປ ຫລື ຫລາຍກວ່ານັ້ນ. ສັກເທື່ອແລກ : ສັກໃຫ້ເທື່ອດຽວເທົ່ານັ້ນ ແລະ ບໍ່ຕ້ອງສັກ booster ເພີ່ມເຕີມອີກ. | ພຍາດເຫລົ່ານີ້ ຈະຂຍາຍຕົວແລະແຜ່ພາຍໄປຄ້າຍໆຄືກັນກັບໄຂ້ອອກໝາກແດງ, ເປື່ອຍໄປຕາມຕົວຕົນ ປະມານ ໕ ຫາ ໑໐ ມື້, ຈະມີອາການໄຂ້, ຂີ້ມູກໄຫລ, ຕາແດງ, ໄອ ແລະອາການເປື່ອຍຕາມຮ່າງກາຍ ກໍຈະຕົກເກັດແລະແຫ້ງໄປເອງ. |
| ພຍາດໝາກສຸກ ໝາກໃສ | ຄ້າຍໆຄືກັບພຍາດຢູ່ຂ້າງເທິງ ຕ່າງແຕ່ວ່າບໍ່ມີອາການຮ້າຍແຮງເທົ່າພຍາດນັ້ນ, ຈະມີອາການປວດແລະໃຄ່ຢູ່ຕາມຂໍ້ ຂໍ້ຕີນ ຈະເຮັດໃຫ້ທົນທວາຍຢູ່ຍາກ ຈະສາມາດແຜ່ພາຍໃຫ້ແກ່ເດັກນ້ອຍທີ່ຢູ່ໃນທ້ອງ ຫລື ໃຫ້ແກ່ແມ່ມານ (ຖືພາ) | ສັກໃຫ້ແກ່ເດັກນ້ອຍທີ່ມີອາຍຸ ໑໔ ເດືອນຂຶ້ນໄປຫລືຫລາຍກວ່ານັ້ນ. ສັກເທື່ອດຽວ : ບໍ່ຕ້ອງສັກ booster ເພີ່ມເຕີມອີກ. | ພຍາດນີ້ເປັນເຫດໃຫ້ເກີດມີຕຸ່ມຜື່ນຄັນໄປຕາມຮ່າງກາຍຫລືວ່າມີອາການບວມໃຄ່ຂອງລູກຫມູ່ຢູ່ຂ້າງຫູ ປະມານ ໑ ຫາ ໒ ອາທິດ; ຫລັງຈາກທີ່ໄດ້ສັກຢາປ້ອງກັນພຍາດນີ້ແລ້ວ ຈະມີອາການປວດຕາມຂໍ້ຕໍ່ ຫລື ມືນມື ຫລື ຕີນປະມານ ໒ ມື້ ຫາ ໑໐ ມື້. |
| ພຍາດຄາງໃຄ່ | ພຍາດນີ້ເປັນເຫດໃຫ້ເກີດໃຄ່ບວມລູກຫມູອ່ອນນວມ, ຈະມີໄຂ້ ຫູບໍ່ໄດ້ຍິນ, ຮະບົບເສັ້ນປະສາດເສັຽ ອາການຫັນຄົນກໍ່ຈະປາກົດຂຶ້ນໃຫ້ແກ່ຜູ້ທີ່ກຳລັງຖືພາ ໒໔% ເປີເຊັນ. | ສັກໃຫ້ແກ່ເດັກນ້ອຍທີ່ມີອາຍຸ ໑໔ ເດືອນຂຶ້ນໄປຫລືຫລາຍກວ່ານັ້ນ. ສັກເທື່ອດຽວ : ບໍ່ຕ້ອງສັກ booster ເພີ່ມເຕີມອີກ | ບາງກໍຣະນີ ອາການໃຄ່ບວມຂອງລູກຫມູ່ຕ່າງໆ ກໍຈະເກີດຂຶ້ນ. |
| ພຍາດໝາກສຸກ ໝາກໃສ (ສັກຢາລວມກັນ) | ພຍາດໝາກສຸກ ໝາກໃສ (ໃຫ້ເບິ່ງຕາມຂ້າງເທິງນັ້ນ) | ສັກໃຫ້ແກ່ເດັກນ້ອຍທີ່ມີອາຍຸ ໑໔ ເດືອນຂຶ້ນໄປຫລືຫລາຍກວ່ານັ້ນ. ສັກເທື່ອດຽວ : ບໍ່ຕ້ອງສັກ booster ເພີ່ມເຕີມອີກ. | ພຍາດຈຳພວກນີ້ ຄ້າຍໆຄືກັນກັບພຍາດໝາກສຸກ ໝາກໃສທົ່ວໄປ. |
| ພຍາດໝາກສຸກ ໝາກໃສ/ຄາງໃຄ່ (ສັກຢາລວມກັນ) | ພຍາດໝາກສຸກ ໝາກໃສ/ຄາງໃຄ່ (ໃຫ້ເບິ່ງຕາມຂ້າງເທິງນັ້ນ) | ສັກໃຫ້ແກ່ເດັກນ້ອຍທີ່ມີອາຍຸ ໑໔ ເດືອນຂຶ້ນໄປຫລືຫລາຍກວ່ານັ້ນ. ສັກເທື່ອດຽວ : ບໍ່ຕ້ອງສັກ booster ເພີ່ມເຕີມອີກ. | ພຍາດນີ້ເຫລົ່ານີ້ຄືກັນກັບ ພຍາດໝາກສຸກ ໝາກໃສ |







ERIC

| ພະຍາດຕ່າງໆ | ອາການເຈັບປ່ວຍ | ການປິ່ນປົວ | ວິທີແນະນຳຕ່າງໆ |
|---|---|---|---|
| ພະຍາດຄາງໃຄ່<br><br>ຫລີກເວັ້ນໄດ້ດ້ວຍການສັກຢາປ້ອງກັນພະຍາດ | ໑. ມີໄຂ້, ໜາວສັ່ນ, ເຈັບຫົວ ແລະ ປວດຕາມກ້າມເນື້ອ<br>໒. ພາຍໃນ ໒໔-໒໘ ຊົ່ວໂມງ, ຈະມີອາການເຈັບປວດ ບໍລິເວັນ ຫູແລະຄາງກະໄຕ.<br>໓. ມີອາການໃຄ່ຢູ່ຂ້າງໜ້າຫູທາງເບື້ອງນຶ່ງ ຫລືທັງສອງເບື້ອງ ຈະປາກົດຢູ່ ໑ ຫາ ໓ ມື້.<br>໔. ຈະມີອາການ ບໍ່ຢາກກິນອາຫານ ແລະປວດຕາມຂໍ່ຕ່າງໆ<br>໕. ການໃຄ່ບວມຈະປາກົດຂຶ້ນທີລະເລັກລະນ້ອຍ ແລະຈະຫາຍໄປພາຍໃນ ໓ ຫາ ໗ ມື້.<br>໖. ອາການໃຄ່ບວມຂອງລູກອັນທະ(ໝາກ) ຈະປາກົດຂຶ້ນໃນອາການເຈັບຂອງ ຜູ້ຊາຍ (ຜູ້ໃຫຍ່ແລະເດັກ). | ໑. ເພື່ອບັນເທົາອາການປວດຄວນກິນ ຢາແອສໄພຣິນ ຫລື ຢາໄທລາໂນລ ແລະທັບດ້ວຍນ້ຳອຸ່ນ ຫລື ນ້ຳເຢັນ<br>໒. ຄວນນອນພັກຜ່ອນຫລາຍໆ<br>໓. ຄວນກິນອາຫານອ່ອນ. ຫລີກເວັ້ນຈາກໝາກໄມ້ ແລະ ນ້ຳໝາກໄມ້ ທີ່ມີລົດສົ້ມ.<br>໔. ໃຫ້ປຶກສານຳທ່ານໝໍ | ໑. ພະຍາດນີ້ອາດຈະຕິດຕໍ່ກັນໄດ້ຣະຫວ່າງ ໒ ຫາ ໓ ວັນ ກ່ອນອາການໃຄ່ຕ່າງໆ ຈະເກີດຂຶ້ນ.<br>໒. ຕາມປົກກະຕິແລ້ວ ຈະມີອາການດັ່ງກ່າວ ໑໖ ຫາ ໑໘ ມື້ຫລືເຖິງ ໓ ອາທິດ.<br>໓. ຈະປາກົດຂຶ້ນແຕ່ເທື່ອດຽວເທົ່ານັ້ນ ຂອງແຕລະບຸກຄົນ.<br>໔. ຄວນຈະມີການກວດ ອະໄວຍະວະ (ໝາກ) ຢ່າງລະອຽດທັງຜູ້ໃຫຍ່ ແລະ ເດັກຊາຍ ເພື່ອປ້ອງກັນການເປັນໝັນ ແລະສະມັດຖະພາບທາງເພດ. |
| ໄຂ້ພິສ ອອກຕຸ່ມມູນໜ້ານ | ໑. ຈະມີອາການໄຂ້, ເຈັບຫລັງ ແລະຮາກ | ໑. ໃຫ້ນອນພັກຜ່ອນໃນເວລາທີ່ມີໄຂ້ | ໑. ໄຂ້ອອກຕຸ່ມມູນໜ້ານ ເປັນໂຣດທີ່ຕິດຕໍ່ກັນໄວເຕັມທີ, ຈະມີອາການໄຂ້ ຫາຍໃຈຝືດປະມານ ໒ ຫາ ໓ ມື້. |

111



ERIC Full Text Provided by ERIC

| ພຍາດຕ່າງໆ | ອາການເຈັບປ່ວຍ | ການປິ່ນປົວ | ວິທີແນະນຳຕ່າງໆ |
|---|---|---|---|
| (ໄຂ້ມີສ ອອກຕຸ່ມນູ່ນໜ່ານ) | ໒. ຕຸ່ມສີແດງອ່ອນຈະປາກົດຂື້ນ. ຕຸ່ມນັ້ນຈະປຽກແລະຄາຍຄືກັນກັບກະດາດ-ຊາຍ ຈະມີຢູ່ຣະຫວ່າງ ໑໒ ຫາ ໔໘ ຊົ່ວໂມງ ຈະແຜ່ພາຍໄປຕາມລຳຄໍ, ຂ້ແຣ, ແອບແຂາ, ຂາອ່ອນ(ພັບ) ໜ້າ ແລ້ວຈະຄ່ອຍຈາງໄປແລະມີວົງຂາວອອກອ້ອມຕຸ່ມນັ້ນ ປາກແລະລີ້ນຈະແດງແລະໃຄບວມ ຈະມີສີຂາວໆ ປາກົດຢູ່ລີ້ນ ແລະມີຕຸ່ມນ້ອຍໆປະປົນຢູ່ ເຂົາເອີ້ນວ່າ "ລີ້ນໝາກສະໂຕເບີຣີ" | ໒. ໃຫ້ແຍກເດັກນ້ອຍ ທີ່ບໍ່ສະບາຍອອກຫ່າງຈາກກັນນຶ່ງວັນ ແລະ ຫລັງ-ຈາກທີ່ເດັກຜູ້ນັ້ນ ໄດ້ເລີ້ມກິນຢາແລ້ວ. | ໒. ອາການຈະປາກົດຢູ່ ໒ ຫາ ໔ ມື້ ຫລື ໑ ຫາ ໗ ມື້. ຖ້າຫາກຜູ້ໃດທີ່ຖືກເປັນໄຂ້ອອກຕຸ່ມນີ້ແລ້ວ ຄວນຈະໄປປຶກສາທ່ານໝໍ. |
| | ໓. ຕາມປົກກະຕິແລ້ວຕຸ່ມນັ້ນຈະປາກົດຢູ່ປະມານ ໗ ມື້. | ໓. ເວລາເດັກນ້ອຍເກີດມີໄຂ້ ໃຫ້ກິນຢາໄທຣານອລ ຫລື ແອສໄພຣິນ ຢາອົງຕິໄບໂອຕິກ ໃຊ້ສຳຫລັບຂ້າເຊື້ອໂຣຄບັກເຕີເຣັຽ. ສ່ວນຫລາຍແລ້ວຄົນນິຍົມໃຊ້ແຕ່ ຢາເປນີຊີລີນເທົ່ານັ້ນ. ສ່ວນຢາອົງຕິໄບໂອຕິກຈະຕ້ອງໃຊ້ຫລືກິນຕິດຕໍ່ກັນຕລອດເຖິງ ໑໐ມື້ ເພື່ອຂ້າເຊື້ອໂຣຄບັກເຕີເຣັຽ. | |
| | | ໔. ຈະຕ້ອງເອົາເດັກນ້ອຍໄປຫາທ່ານໝໍ ພາຍໃນ ໒ ຫາ ໔ ອາທິດ ເພື່ອກວດເບິ່ງສຸຂພາບຂອງເດັກນັ້ນ ອາການເຫລົ່ານີ້ອາດຈະພາໃຫ້ເກີດມີຫູອັກເສບ ມີບັນຫາທາງດ້ານໝາກໄຂ່ຫລັງ ຫລືເປັນພຍາດປອດອັກເສບ | |





ERIC Full Text Provided by ERIC

| ພຍາດຕ່າງໆ | ອາການເຈັບປ່ວຍ | ການປິ່ນປົວ | ວິທີແນະນຳຕ່າງໆ |
|---|---|---|---|
| ໄອຫອບ - ໄອກົ້ນ<br><br>ຫລີກເວັ້ນໄດ້ດ້ວຍການສັກຢາປ້ອງກັນພຍາດ | ໑. ຖ້າຫາກຮູ້ວ່າຕົວເອງ ບໍ່ສບາຍພາຍໃນ ໓ ຫາ ໘ ອາທິດແລະມີອາການສາມຢ່າງນີ້.<br>ຂັ້ນທຳອິດ : ມີອາການເປັນຫວັດແລ້ວໄອນ້ອຍແລະຈະໜັກຂຶ້ນໃນອາທິດທີສອງ<br>ຂັ້ນທີສອງ : ຈະມີອາການໄອສັ້ນໆ ໜ້າຕາແດງຫລືແຫລເຂົ້າ ອາການໄອທີ່ປາກົດຂຶ້ນມີລັກສນະຫອບໆ ຫລັງຈາກທີ່ມີອາການໄອແລ້ວບາງທີກໍມີອາການຮາກ ອາການອ່ອນເພັຽ ມັກຈະເກີດແກ່ເດັກນ້ອຍ ຈະມີອາການໄອປະມານ ໔ ຫາ ໔ ນີ້ ຫລືເຖິງ ໑ ອາທິດ.<br>ຂັ້ນທີສາມ : ອາການໄອຫອບແລະຮາກຈະເປັນປົກກະຕິລົງພາຍໃນ ໒ ຫາ ໓ ອາທິດ. | ໑. ຄວນໃຫ້ເດັກນ້ອຍພັກຜ່ອນ ຫລືນອນຢູ່ໃນບ່ອນນອນ.<br>໒. ເມື່ອບໍ່ຢາກໃຫ້ອາການໄອກຳເລີບຂຶ້ນ ຈຶ່ງພຍາຍາມຫລີກເວັ້ນຈາກການຕື່ນເຕັ້ນຫລາຍເກີນໄປ, ດູດຢາ ຫລືການປ່ຽນແປງຂອງອາກາດ ຕ່າງໆ.<br>໓. ການໃຫ້ເດັກນ້ອຍ ກິນອາຫານເທື່ອລະນ້ອຍເປັນການດີທີ່ສຸດ ໃຫ້ປ້ອນເຂົ້າເດັກນ້ອຍຕື່ມອີກຫລັງຈາກທີ່ເດັກນ້ອຍໄດ້ຮາກອອກແລ້ວ.<br>໔. ເດັກນ້ອຍຜູ້ທີ່ເປັນພຍາດນີ້ ຈະຕ້ອງໄດ້ແຍກອອກຈາກສະມາຊິກຄອບຄົວຄົນອື່ນໆ. ເດັກນ້ອຍທີ່ມີອາຍຸຕ່ຳກວ່າ ໒ ປີລົງມາບໍ່ຄວນໃຫ້ເຂົ້າໄປຫຍຸ້ງກ່ຽວກັບຄົນເຈັບ ຊຶ່ງຕ່າງກັນກັບເດັກນ້ອຍທີ່ມີອາຍຸ ໔ ປີ ທີ່ເຂົ້າເຈົ້າມີຄວາມສາມາດຕ້ານທານກັບເຊື້ອໂຣຄນີ້ໄດ້. ພຍາດໄອຫອບ ມັກຈະເກີດແກ່ເດັກນ້ອຍທີ່ມີອາຍຸຕ່ຳກວ່າ ໑ ປີ ແລະຮ້າຍແຮງເຖິງກັບເສັຽຊີວິດຍ້ອນພຍາດນີ້. | ໑. ເດັກນ້ອຍຈະເກີດມີອາການຢາກກິນຫວາຍ ຢູ່ຣະຫວ່າງ ກ ນີ້ຫລັງຈາກທີ່ອາການເຈັບໄດ້ປາກົດຂຶ້ນເຖິງ ໓ ຫາ ໔ ອາທິດຫລັງຈາກອາການໄອໄດ້ມີຂຶ້ນ.<br>໒. ອາການໄອຈະມີຢູ່ ຣະຫວ່າງ ໔ ຫາ ໒໑ ມື້.<br>໓. ພຍາດໄອຫອບນີ້ ເປັນພຍາດທີ່ຕິດຕໍ່ແລະແຜ່ພາຍໄວທີ່ສຸດ ດ້ວຍການໄອແລະຈາມຂອງຄົນເຈັບ. ໃຫ້ລາວມີທຸກໆເທື່ອກ່ອນຈະໃຊ້ເຄື່ອງຕ່າງໆ |



ERIC
Full Text Provided by ERIC

## ອາການຮາກ ແລະ ລົງທ້ອງ (ຖອກທ້ອງ)

| ພະຍາດຕ່າງໆ | ອາການເຈັບປ່ວຍ | ການປິ່ນປົວ | ຄຳແນະນຳພິເສດ |
|---|---|---|---|
| ອາການ ຮາກ | ໑. ມັກຈະເກີດຂຶ້ນເລື້ອຍໆຫລັງຈາກກິນອາຫານ<br>໒. ການສັງເກດໃນການເສັຍນ້ຳ (ຂາດນ້ຳ) ໃນຮ່າງກາຍຂອງເດັກນ້ອຍ :<br>ກ. ຕາແຫ້ງ ແລະ ຕາລອຍ<br>ຂ. ທາງໃນຂອງປາກແຫ້ງ<br>ຄ. ຜິວໜັງແຫ້ງຄືກະດາດ<br>ງ. ການບໍ່ໄປຖ່າຍເບົາ ຫລື ມີຈຳນວນນ້ຳຍ່ຽວນ້ອຍຜິດປົກກະຕິ.<br>ຈ. ອາການຮ້ອງໄຫ້ຂອງເດັກນ້ອຍບໍ່ມີນ້ຳຕາ.<br>ສ. ມັກນອນຫລາຍແລະບໍ່ມີການເໜັງຕີງ. | ໑. ເອົານ້ຳໃຫ້ເດັກນ້ອຍກິນເລື້ອຍໆ<br>໒. ຫ້າມບໍ່ໃຫ້ກິນຂອງແຂງ ໃຫ້ກິນແຕ່ແນວເປັນນ້ຳ ເທົ່ານັ້ນ.<br>໓. ໃຫ້ເອົານ້ຳເຢັນໃຫ້ເດັກນ້ອຍກິນ ນ້ຳຮ້ອນຈະເຮັດໃຫ້ທ້ອງເສັຍຕື່ມ<br>໔. ໃຫ້ໃຊ້ນ້ຳກ້ອນ, ນ້ຳອັດລົມ, ໂຄລ່າ ຫລື 7 UP. ທີ່ມີຄວາມເຢັນເອົາໃຫ້ເດັກນ້ອຍກິນເທື່ອລະເລັກລະນ້ອຍ.<br>໕. ໃຫ້ເອົານ້ຳອຸ່ນ ຫລື ສິ່ງທີ່ແຫລວໆ ໃຫ້ເດັກນ້ອຍກິນຕື່ມອີກ.<br>໖. ຫ້າມບໍ່ໃຫ້ເອົານ້ຳນົມໃຫ້ເດັກນ້ອຍກິນເດັດຂາດ ເພາະມັນອາດຈະເຮັດໃຫ້ທ້ອງຂອງເດັກນ້ອຍເສັຍຕື່ມອີກ. | ໑. ໃຫ້ຮ້ອງໄປປຶກສາທ່ານໝໍຂອງທ່ານເລື້ອຍໆ ກ່ຽວກັບອາການຮາກຂອງເດັກນ້ອຍເພື່ອປ້ອງກັນ ບໍ່ໃຫ້ນ້ຳໃນຮ່າງກາຍເສັຍ.<br>໒. ແລະສຳຫລັບອາການຮາກທີ່ມີເລືອດຕິດອອກມາກໍ່ເຊັ່ນດຽວກັນ ຄວນຮ້ອງໄປປຶກສາທ່ານໝໍ. |

****************************************

| | | | |
|---|---|---|---|
| ອາການ ຖອກທ້ອງ (ລົງທ້ອງ ຫລື ຂີ້ຊຸ) | ໑. ມີອາການຖ່າຍເລື້ອຍໆ ຖ່າຍມີນ້ຳ<br>໒. ຈະມີອາການເສັຍນ້ຳໃນຮ່າງກາຍຄືກັນກັບອາການຮາກ. | ໑. ໃຫ້ເອົານ້ຳໃສ ໃຫ້ເດັກນ້ອຍກິນເທື່ອລະນ້ອຍ.<br>໒. ຫ້າມບໍ່ໃຫ້ເອົານ້ຳນົມ ແລະ ນ້ຳໝາກໄມ້ໃຫ້ເດັກນ້ອຍກິນ ເພາະມັນຈະເຮັດໃຫ້ອາການຖອກທ້ອງໜັກຕື່ມອີກ. | ໑. ນ້ຳໃສງທີ່ເດັກນ້ອຍກິນລົງໄປນັ້ນຈະລ້າງທ້ອງໂດຍບໍ່ມີການປ່ຽນສີ. ຖ້າຫາກທ່ານເອົານ້ຳອຸ່ນສີແດງໃຫ້ກິນ ມັນຈະຄ້າຍຄືກັນກັບເລືອດ.<br>໒. ໃຫ້ຫລີກເວັ້ນຈາກ ນ້ຳຫລືອຸ່ນຈະພວກສີແດງ ເພື່ອທ່ານຈະບໍ່ໄດ້ກັງວົນ ກ່ຽວກັບສີຂອງອາຈົມ (ຂີ້) ທີ່ຖ່າຍອອກມາ. |



ERIC Full Text Provided by ERIC

| ພຍາດຕ່າງໆ | ອາການເຈັບປ່ວຍ | ການປິ່ນປົວ | ຄຳແນະນຳພິເສດ |
| --- | --- | --- | --- |
| ອາການ ຖອກທ້ອງ (ລົງທ້ອງ ຫລື ຂີ້ຊຸ) ຕໍ່ | ມີ. ອາການຖ່າຍ ຈະມີເລືອດ ຫລືມີ ນ້ຳເມືອກປົນຢູ່ກັບອາຈົມນັ້ນ. | ມີ. ຖ້າຫາກເດັກນ້ອຍທີ່ມີອາຍຸຕ່ຳກວ່າ ໒ ປີ ຫລືນ້ອຍກວ່ານັ້ນ ມີອາການ ດັ່ງກ່າວ ໃຫຣອງໄປຫາທ່ານຫມໍ ທັນທີ. | ມີ. ບໍ່ມີຢາຄັ້ນໃດ ຈະປິ່ນປົວກ່ຽວກັບ ອາການຖອກທ້ອງນັ້ນໄດ້ ໃຫຣອງ ໄປຫາທ່ານຫມໍຂອງທ່ານ. |

115



ERIC
Full Text Provided by ERIC

## ອາການເປັນໄຂ້, ເຈັບຄໍ, ເປັນຫູນອງ, ແລະ ອາການເປັນຫວັດທັມມະດາຕ່າງໆ

| ພະຍາດຕ່າງໆ | ອາການເຈັບປ່ວຍ | ການປິ່ນປົວ | ຄຳແນະນຳພິເສດ |
| --- | --- | --- | --- |
| ອາການໄຂ້ | ໑. ຖ້າຫາກມີຄວາມຮ້ອນຂອງຮ່າງກາຍ ເກີນກວ່າ ໑໐໐ ດີກຣີແລ້ວ - ບໍ່ແມ່ນຕົວຮ້ອນທັມມະດາ.<br>໒. ອາການຮ້ອນຂອງຮ່າງກາຍ ໑໐໑ ຫາ ໑໐໔ ຂອງອາການໄຂ້ຂອງເດັກນ້ອຍ ທີ່ຢູ່ໃນວັຍ ໒ ຫາ ໓ ປີໄດ້ບົ່ງບອກເຖິງ ອາການເຈັບຕ່າງໆເຊັ່ນ : ຫູ. ຄໍ ແລະ ອະວັຍະວະຕ່າງໆ<br>໓. ເດັກນ້ອຍຈະສແດງອາການຫົນຫວຍແລະ ຢູ່ຍາກ ກອງກັບອາການເຈັບອອກມາ ຖ້າຫາກລູກຂອງທ່ານ ມີອາການງວງ-ນອນ ຫລື ບໍ່ສົນໃຈກັບສິ່ງຕ່າງໆ ຫລື ປຸກໃຫ້ລຸກຍາກ, ຈົ່ງໄດ້ຮອງໄປຫາທ່ານຫມໍຂອງທ່ານ.<br>໔. ບໍ່ຢາກກິນເຂົ້າ ຫລື ບໍ່ຍອມແຕະຕ້ອງ ອາຫານ. | ໑. ໃຫ້ເອົາຢາແກ້ໄຂ້ ໄທຣານອລ ຂອງ ເດັກນ້ອຍໃຫ້ ເດັກນ້ອຍກິນເພື່ອບັນເທົາ ອາການໄຂ້.<br>໒. ໃຫ້ແກ້ເສື້ອຜ້າຂອງເດັກນ້ອຍອອກ<br>໓. ໃຫ້ເອົາຜ້າຊຸບນ້ຳເຊັດຕາມຕົນຕົວຂອງ ເດັກນ້ອຍ. ຫ້າມບໍ່ໃຫ້ເອົາເຫລົ້າຫລື ເຄມີອື່ນໆເຊັດເດັດຂາດ.<br>໔. ໃຫ້ເອົານ້ຳໃຫ້ເດັກນ້ອຍກິນເທື່ອລະ ເລັກ ເທື່ອລະນ້ອຍ. | ໑. ຈະມີອາການເຈັບຕາມຮ່າງກາຍ<br>໒. ໃຫ້ແທກບາຫລອດ ຢ່າງສມ່ຳສເມີ ເມື່ອເວລາແທກບາຫລອດນັ້ນ ໃຫ້ປະ ໄວ້ປະມານ ໓ ວິນາທີ.<br>໓. ຖ້າຫາກອາການໄຂ້ຍັງມີຢູ່ພາຍໃນ ໑໔ ຊົ່ວໂມງ ໃຫ້ຮອງໄປປຶກສາກັບທ່ານ ຫມໍທັນທີ. ສຳຫລັບເດັກນ້ອຍທີ່ມີອາຍຸ ຕ່ຳກວ່າ ໔ ເດືອນ ໃຫ້ເອົາໄປຫາທ່ານ ຫມໍ ໂດຍດ່ວນ. |
| ອາການເຈັບຄໍ | ໑. ເຈັບປວດ ທາງໃນຮູຄໍ<br>໒. ຮັດໃຫ້ກືນອາຫານຍາກ<br>໓. ລູກຫມູຢູ່ຂ້າງແຈຫູ ໃຄ່.<br>໔. ຢູ່ທາງໃນຮູຄໍແດງ ແລະມີຕຸ່ມຢູ່ອ້ອມໆ. | ໑. ໃຫ້ໄປຫາທ່ານຫມໍ<br>໒. ໃຫ້ກິນຢາ ອັງຕິໄບໂອຕິກ<br>໓. ໃຫ້ກິນຢາ ໄທຣານອລ ເພື່ອລຶດອາການໄຂ້ ແລະ ປວດ. | ໑. ການສົ່ງຕົວຢ່າງນ້ຳເມືອກຢູ່ໃນຮູຄໍໄປ ກວດອາດຈະເປັນສິ່ງທີ່ຈຳເປັນ.<br>໒. ຄວນເອົາຢາ ອັງຕິໄບໂອຕິກໃຫ້ກິນ. ໃຫ້ກິນຕາມຈຳນວນ ເຖິງແມ່ນວ່າເດັກນ້ອຍຈະມີອາການດີຂຶ້ນແລ້ວກໍຕາມ. |

117

| ພະຍາດຕ່າງໆ | ອາການເຈັບປ່ວຍ | ການປິ່ນປົວ | ຄຳແນະນຳພິເສດ |
|---|---|---|---|
| ຫູອັກເສບ/ຫູໜອງ | ໑. ເດັກນ້ອຍມັກຈະດຶງຫູຂອງຕົນເອງ<br>໒. ເດັກນ້ອຍມັກຈະໃຫ້ແອວ ແລະ ບອກເຖິງອາການເຈັບຕ່າງໆ<br>໓. ເດັກນ້ອຍຈະຮ້ອງໄຫ້ ຖ້າຫາກອາການນັ້ນ ຮ້າຍແຮງ. | ໑. ໃຫ້ເອົາເດັກນ້ອຍໄປຫາທ່ານໝໍ<br>໒. ໃຫ້ເອົາ ອັງຕິໄບໂອຕິກ ໃຫ້ເດັກນ້ອຍກິນ<br>໓. ໃຫ້ໃຊ້ຢາຢອດຫູ<br>໔. ໃຫ້ເອົາຢາ ໄທຣານອລ ໃຫ້ເດັກນ້ອຍກິນ. | ໑. ໃຫ້ເອົາເດັກນ້ອຍໄປຫາທ່ານໝໍປົວຫູໂດຍສະເພາະ<br>໒. ອາການເປັນຫວັດຂອງເດັກນ້ອຍກໍຈະປາກົດຂຶ້ນ<br>໓. ຄວນເອົາຢາ ອັງຕິໄບໂອຕິກ ໃຫ້ເດັກນ້ອຍກິນຕາມກຳນົດທີ່ທ່ານໝໍໄດ້ສັ່ງໃຫ້ ເຖິງແມ່ນວ່າ ອາການຂອງເດັກນ້ອຍຈະດີຂຶ້ນແລ້ວກໍຕາມ. |
| ອາການເປັນຫວັດ | ໑. ນ້ຳມູກໄຫລ<br>໒. ມີອາການຈາມ<br>໓. ອາການຕັນດັງ<br>໔. ອາການໄອ<br>໕. ອາການໄຂ້ຈະມີສູງ ໑໐໐° ຫາ ໑໐໓°<br>໖. ເດັກນ້ອຍຈະມີອາການຮາກ<br>໗. ຫ້າມບໍ່ໃຫ້ເອົາເຄື່ອງຕ່າງໆໃຫ້ເດັກນ້ອຍຫລິ້ນ ນອກຈາກເຂົາຈະສາມາດຫລິ້ນເອງໄດ້.<br>໘. ຮູດັງລອກ ເປັນເກັດ<br>໙. ເດັກນ້ອຍຈະບໍ່ຢາກກິນເຂົ້າ. | ໑. ໃຫ້ເອົາຢາໄທຣານອລໃຫ້ເດັກນ້ອຍກິນ.<br>໒. ໃຫ້ໃຊ້ຢາຢອດດັງ<br>໓. ໃຫ້ເອົາຢາແກ້ໄອ ໃຫ້ເດັກນ້ອຍກິນ<br>໔. ສຳຫລັບດັງລອກໃຫ້ເອົານ້ຳມັນໄວເຊລີນທາ.<br>໕. ໃຫ້ເອົາອາຍນ້ຳໃຫ້ເດັກນ້ອຍຮົມ<br>໖. ໃຫ້ເອົານ້ຳໝາກກ້ຽງ, ນ້ຳດື່ມ ແລະ ນ້ຳແກງຕ່າງໆໃຫ້ເດັກນ້ອຍກິນ.<br>໗. ໃຫ້ເດັກນ້ອຍນອນພັກຜ່ອນຫລາຍເທົ່າທີ່ຈະຫລາຍໄດ້. | ໑. ອາການເປັນຫວັດເປັນພະຍາດ ທີ່ຕິດຕໍ່ໄວ ເຊື້ອໄວຣັດ ແຜ່ພາຍຕໍ່ເນື່ອງກັນໄວ<br>໒. ບຸກຄົນທີ່ເກີດເປັນຫວັດ ຈະແຜ່ເຊື້ອໂຣດໃຫ້ແກ່ຜູ້ອື່ນ ໄວທີ່ສຸດ |

| <u>ພຍາດຕ່າງໆ</u> | <u>ອາການເຈັບປ່ວຍ</u> | <u>ການປິ່ນປົວ</u> | <u>ຄຳແນະນຳພິເສດ</u> |
| --- | --- | --- | --- |
| ພຍາດຂີ້ກາກ | ໑. ຈະມີຕຸ່ມໃສໆຢູ່ຕາມພິວໜັງເປື່ອຍ ແລະເປັນເກີດ<br>໒. ຫ້າມເຂົ້າໄປຫລິ້ນໃກ້ພຸ່ມໄມ້<br>໓. ພຍາດນີ້ຈະເກີດຂຶ້ນຢູ່ອ້ອມດັງ ແລະປາກກອນ | ໑. ໃຫ້ໄປປຶກສາທ່ານໝໍທັນທີ<br>໒. ໃຫ້ເອົາຢາ ປາຈິດຣາຈິນ ທາ ຫລື ແຊ່ນ້ຳຮ້ອນ ຈະເປັນການດີ<br>໓. ໃຫ້ເອົາ ເປນີຊີລີນທາຕຸ່ມ ເພື່ອ ເຮັດໃຫ້ບາດແຜຫາຍໄວ.<br>໔. ໃຫ້ຕັດເລັບມືເດັກນ້ອຍໃຫ້ສັ້ນ. | ໑. ພຍາດນີ້ເກີດຈາກຂີ້ຝຸ່ນ ເປັນໂຣກທີ່ ຕິດຕໍ່ ແລະ ມັກເກີດຂຶ້ນເລື້ອຍໆ<br>໒. ພຍາດນີ້ສາມາດແຜ່ພາຍໄປໃຫ້ເດັກນ້ອຍ ຜູ້ອື່ນໄວ.<br>໓. ຄວນລ້າງມື ແລະໃຫ້ຣະມັດຣະວັງເວລາ ທີ່ເຂົ້າໄປໃກ້ຄົນທີ່ເປັນພຍາດນີ້. |
| ພຍາດເຫົາ | ໑. ຈະມີອາການຄັນຢູ່ຕາມໜັງຫົວ ລຳຄໍ ແລະ ໃບຫູ<br>໒. ອາດຈະມີອາການໄຂ້<br>໓. ເຫົາຈະກັດແລະເຮັດຂວາຍວິຂາວ ຢູ່ຕາມລຳຄໍ<br>໔. ຈະສາມາດເຫັນເຫົາຢູ່ຕາມເສື້ອຜ້າ ແລະຜ້າປູ່ບ່ອນນອນ<br>໕. ຕຸ່ມຄັນມັກຈະປາກົດຂຶ້ນ ຢູ່ບ່ອນອ່ອນໆ ຕ່າງໆທຸກມຸມ. | ໑. ໃຫ້ໄປປຶກສາທ່ານໝໍໂດຍດ່ວນ<br>໒. ໃຫ້ໃຊ້ນ້ຳຢາຂ້າເຫົາ Kwell ສະຜົມປະມານ ໔-໑໐ ນາທີ. ໃຫ້ສະຕື່ມອີກ ນຶ່ງອາທິດຕໍ່ມາ<br>໓. ໃຫ້ໃຊ້ຢາ Kwell ທາໄປທົ່ວ ຕາມຮ່າງກາຍ.<br>໔. ໃຫ້ຊັກເຄື່ອງແລະຜ້າປູ່ບ່ອນນອນ ດ້ວຍນ້ຳຮ້ອນ ແລະ ໃຫ້ແຊ່ໄວ້ໃນ ນ້ຳຮ້ອນ, ໃຫ້ໃຊ້ນ້ຳຢາ Kwell ໃຫ້ເຮັດຕື່ມອີກ ໃນນຶ່ງອາທິດຕໍ່ມາ<br>໕. ໃຫ້ເອົາເດັກນ້ອຍໄວ້ບ້ານ ຈົນກວ່າ ເຫົາຈະໝົດ ຫລືຫລັງຈາກທີ່ມີການ ປິ່ນປົວດັ່ງແລ້ວ. | ໑. ເຫົາຈະປາກົດຢູ່ຕາມເສື້ອຜ້າ ແລະຕາມ ປົກກະຕິແລ້ວ ພົບຢູ່ຕາມຜິວໜັງ<br>໒. ໃຫ້ປຶກສາຄອບຄົວວ່າ ຄວນຈະເຮັດ ແນວໃດ ?<br>໓. ເປັນການດີທີ່ສຸດ ຖ້າຫາກຄອບຄົວຂອງ ທ່ານ ພາກັນຂ້າເຫົາໝົດທຸກຄົນ. |





ERIC Full Text Provided by ERIC

## ແມ່ທ້ອງປາກຂໍ, ໂຣຄຄັນ, ຂີ້ກາກ, ແລະ ເຫົາ

| ພຍາດຕ່າງໆ | ອາການເຈັບປ່ວຍ | ການປິ່ນປົວ | ຄຳແນະນຳພິເສດ |
|---|---|---|---|
| ແມ່ທ້ອງປາກຂໍ | ໑. ຈະມີອາການນອນກັດແຂ້ວກາງຄືນ<br>໒. ຈະຍ່ຽວໃສ່ບ່ອນນອນ<br>໓. ຈະມີປູ່ອ້ອມຮູກົ້ນ<br>໔. ໃຫ້ກວດເບິ່ງຮູກົ້ນຂອງລູກທ່ານເລື້ອຍໆ ໂດຍໃຊ້ໂຄມໄຟສາຍເບື້ອງເບິ່ງຫລັງ ຈາກທີ່ເຂົ້ານອນແລ້ວ ໒ ຫາ ໓ ຊົ່ວໂມງ, ເມື່ອກວດເບິ່ງພຍາດປາກຂໍ. | ໑. ໃຫ້ຮ້ອງໄປຫາທ່ານໝໍຂອງທ່ານ<br>໒. ທ່ານໝໍຈະເປັນຜູ້ສັ່ງຢາໃຫ້ຄົນເຈັບ<br>໓. ໃຫ້ຕັດເລັບມືຂອງເດັກນ້ອຍໃຫ້ສັ້ນ<br>໔. ໃຫ້ເດັກນ້ອຍອາບນ້ຳຝັກບົວ ຫ້າມ ບໍ່ໃຫ້ອາບແບບນັ່ງແຊ່ໃນອ່າງນ້ຳ<br>໕. ໃຫ້ຊັກເສື້ອຜ້າຂອງເດັກນ້ອຍແລະ ຜ້າປູທີ່ນອນທຸກວັນ | ໑. ບໍ່ຕ້ອງແຍກເດັກນ້ອຍອອກຈາກໝູ່ແຕ່ຢ່າງໃດ<br>໒. ໃຫ້ກວດເບິ່ງທຸກຄົນທີ່ຢູ່ຮ່ວມເຮືອນດຽວກັນ<br>໓. ຈະມີ ໕ ຫາ ໑໕ % ຂອງພົລເມືອງທົ່ວໄປທີ່ມີແມ່ທ້ອງປາກຂໍ.<br>໔. ພຍາດນີ້ບໍ່ເປັນພັຍແກ່ສັງຄົມແຕ່ຢ່າງໃດ<br>໕. ການກວດເບິ່ງພຍາດອີກແບບນຶ່ງ ໄດ້ໃຊ້ ເທບຕິດຕາມບໍຣິເວນຮູກົ້ນ ເພື່ອຕິດເອົາໄຂ່ ຂອງແມ່ທ້ອງແລ້ວໄປສ່ອງເບິ່ງດ້ວຍກ້ອງ "ຈຸລທັສ" ອີກເທື່ອນຶ່ງ. |
| ໂຣຄຄັນ | ໑. ຕຸ່ມຈະຄັນຂຶ້ນເລື້ອຍໆ ແລະເປັນວົງກົມ ລົງໄປຫາແຂນສອກ, ຂໍ້ແຂນ, ບ່ອນ ສາຍແອວຮັດ, ກົ້ນແລະອະວັຍວະ ຕ່າງໆ.<br>໒. ສຳຫລັບເດັກນ້ອຍອາດຈະເກີດຕາມຫົວ ຄໍ, ຝ່າມື ແລະ ຝ່າຕີນ<br>໓. ອາການຄັນຍິ່ງທະວີຂຶ້ນ ໃນຕອນກາງຄືນ<br>໔. ຕຸ່ມນ້ຳໃສ ຈະມີຂຶ້ນຢູ່ຕາມຫວ່າງນິ້ວມື ນິ້ວຕີນ. | ໑. ໃຫ້ຮ້ອງໄປຫາທ່ານໝໍທັນທີ<br>໒. ໃຫ້ທາຢາ ຄໂຣຕາມີຕົນ ໄປຕາມ ຮ່າງກາຍ<br>໓. ທຳການຮັກສາລ້ຳຄືນອີກໃນ ໒໔ ຊົ່ວໂມງ | ໑. ພຍາດນີ້ເກີດມາຈາກໝູ<br>໒. ຄົນທຸກຊົນຊັ້ນອາດຈະເປັນໂຣຄນີ້ໄດ້<br>໓. ເອົາບາງສ່ວນຂອງຜິວໜັງໄປສ່ອງເບິ່ງ ຢູ່ໃນ "ກ້ອງຈຸລທັສ"<br>໔. ໃຫ້ຫລີກເວັ້ນຈາກການສັມຜັດທາງຜິວໜັງ ຂອງຜູ້ທີ່ເປັນພຍາດນີ້. |

| ພຍາດຕ່າງໆ | ອາການເຈັບປ່ວຍ | ການປິ່ນປົວ | ຄຳແນະນຳພິເສດ |
|---|---|---|---|
| ພຍາດໄຂ້ໝາກແດງ (ອອກຫັດ ເຢັຍຣະມັນ) ປ້ອງກັນໄດ້ດ້ວຍການສັກຢາປ້ອງກັນພຍາດ | ໑. ພຍາດນີ້ໄຂ້ບອມເປັນກ່ອນ ອ່ອນໆ ແລະມີໄຂ້ຄືກັນກັບເປັນຫວັດ.<br>໒. ຕຸ່ມຈະມີສີແດງອ່ອນຄ້າຍໆດອກກຸຫລາບ ຮາບພຽງຫລືເປັນວົງພຽງເລັກນ້ອຍ ຄ້າຍຄືຕຸ່ມພື່ນດິນ ຈະປາກົດຂຶ້ນຢູ່ໜ້າກ່ອນແລະຕໍ່ລົງໄປຫາຄໍ ຈະລາມລົງໄປຢ່າງວ່ອງໄວສູ່ໜ້າເອິກ, ຫລັງແລະແຂນຂາ. ຈະປາກົດຢູ່ ໔- ມື້ແລະອາການເຫລົ່ານີ້ຈະຫາຍໄປເອງ. | ໑. ພຍາດນີ້ຫາຍງ່າຍ ແລະ ບໍ່ຈຳເປັນຕ້ອງຮັກສາກໍໄດ້ ຖ້າບໍ່ຈຳເປັນ.<br>໒. ໃຫ້ເອົາຢາ ໄທຣານອລ ໃຫ້ເດັກນ້ອຍກິນ ແລະໃຫ້ເຂົາໄດ້ພັກຜ່ອນຫລາຍໆ. | ໑. ອາການເຫລົ່ານີ້ຈະປາກົດຢູ່ຣະຫວ່າງ ໑ ອາທິດກ່ອນທີ່ຕຸ່ມຈະພົ້ນ ແລະ ຫລັງຈາກ ໕ ວັນຕຸ່ມນັ້ນກໍຈະຫາຍໄປເອງ.<br>໒. ອາການດັ່ງກ່າວຈະປາກົດຢູ່ຣະຫວ່າງ ໑໔ ຫາ ໒໑ ມື້.<br>໓. ຜູ້ຍິງທີ່ຖືພາ ໓ ເດືອນແລກທີ່ບໍ່ໄດ້ມີການສັກຢາປ້ອງກັນ ມີການສ່ຽງພັຍຫລາຍແລະຕິດໂຣຄນີ້ໄດ້ງ່າຍ. ເປັນການກະທົບກະເທືອນໃຫ້ແກ່ເດັກທີ່ຢູ່ໃນທ້ອງ ຫລື ເດັກນ້ອຍເກີດໃໝ່. ອາດຈະເປັນພຍາດນີ້ໄປຈົນເຖິງ ໑໘ ເດືອນ ຫລື ຫລາຍກວ່ານັ້ນ. |
| ພຍາດອອກຫັດ | ໑. ຈະມີອາການໄຂ້ຂຶ້ນສູງ<br>໒. ຕາແດງ ມີນ້ຳ ແລະຍາມທີ່ເບິ່ງແສງໄປກໍບໍ່ໄດ້ (ເຫລືອມຕາ)<br>໓. ເດັກນ້ອຍຈະເກີດມີຄວາມກະວົນກະວາຍ, ຢູ່ຍາກ ແລະ ກິນຫວາຍ<br>໔. ຈະເກີດມີອາການມຶນເມົາ, ຮາກ, ຕາມປົກກະຕິແລ້ວຈະມີອາການປວດຕາມການເນື້ອຕ່າງໆແລະປວດຫົວ.<br>໕. ຕຸ່ມສີແດງຈະປາກົດຂຶ້ນຢູ່ທີ່ໜ້າຕາກ່ອນ, ຫູ, ຕີນຜົມ, ໜ້າຜາກ ແລະ ຄໍ, ແລ້ວຈະແຜ່ຜາຍລົງໄປທົ່ວຕາມຮ່າງກາຍຕລອດຈົນເຖິງປາຍຕີນ.<br>໖. ອາການເຫລົ່ານີ້ຈະປາກົດຂຶ້ນຫລາຍກວ່າເກົ່າໃນມື້ທີ ໔.<br>໗. ອາການໄຂ້ທີ່ມີຢູ່ຢ່າງບໍ່ເບົາບາງອາດບົ່ງເຖິງພຍາດແນວອື່ນແຊກແຊງ. | ໑. ໃຫ້ເອົາຢາ ໄທຣານອລໃຫ້ເດັກນ້ອຍກິນເພື່ອລົດຄວາມໄຂ້, ດື່ມນ້ຳຫລາຍ ແລະນອນພັກຜ່ອນ.<br>໒. ໃຫ້ຫລີກເວັ້ນຈາກແສງໄຟ ຖ້າຫາກມີການແນມແສງໄຟໃຫ້ໃຊ້ນ້ຳອຸ່ນໆລ້າງຕາ<br>໓. ໃຫ້ໃຊ້ເຈ້ຍ ຫລື ຜ້າອັດປາກ ຣະຫວ່າງການຫາຍໃຈ ເພື່ອປ້ອງກັນການຕິດຕໍ່<br>໔. ຈະຕ້ອງປ້ອງກັນເດັກນ້ອຍໂດຍການແຍກອອກຈາກກັນໄວ້.<br>໕. ໃຫ້ທ່ານໝໍປະຈຳຂອງທ່ານກວດເບິ່ງສຸຂພາບຂອງເດັກນ້ອຍໃຫ້ສມ່ຳສເມີ ສຳຫລັບອາການໄຂ້ແລະເຈັບຫູ ເພື່ອປ້ອງກັນພຍາດປອດບວມ ແລະ ອື່ນໆ. | ໑. ຈະມີອາການປວດຕາມເນື້ອຕາມຕົວ ຢູ່ຍາກກິນຫວາຍ ປະມານ ໗ ມື້ແລະຫລັງຈາກນັ້ນຕຸ່ມກໍຈະພົ້ນຂຶ້ນ.<br>໒. ຈະມີອາການຢູ່ຣະຫວ່າງ ໙ ຫາ ໑໔ ວັນ. |





ERIC Full Text Provided by ERIC

| ພະຍາດຕ່າງໆ | ອາການເຈັບປ່ວຍ | ການປິ່ນປົວ | ຄຳແນະນຳພິເສດ |
|---|---|---|---|
| ພະຍາດອອກຫັດ | ໑. ພະຍາດນີ້ຈະແຜ່ພາຍໄວທີ່ສຸດແລະຈະເລີ່ມຂຶ້ນໄວຕາມຄວາມຮ້ອນຂອງຮ່າງກາຍ. ອາການໄຂ້ສູງຈະມີຢູ່ຣະຫວ່າງ ໓ ຫາ ໔ ມື້ ແລະ ເດັກນ້ອຍຈະມີອາການສັ່ນ (ເນື່ອງມາຈາກອາການ ໄຂ້ຂຶ້ນສູງ)<br>໒. ບໍ່ຢາກກິນເຂົ້າ ອາຣົມຫງຸດຫງິດ ແລະມີອາການເຈັບຄໍ.<br>໓. ຫລັງຈາກ ໓ ຫາ ໔ ມື້ ອາການໄຂ້ຂຶ້ນ ແລະຄວາມຮ້ອນຂອງຮ່າງກາຍກໍຈະຫລຸດຕ່ຳລົງ ແລະຕຸ່ມນັ້ນກໍຈະຫາຍໄປເອງ.<br>໔. ຕຸ່ມອອກຫັດ ຄ້າຍຄືກັບກີບດອກກຸຫລາບຈະປາກົດຂຶ້ນຢູ່ໜ້າເອິກກ່ອນ ແລະລາມໄປຫາໜ້າແລະແຂນຂາ. ຈະປາກົດຢູ່ຫລາຍວັນ.<br>໕. ບາງທີ ອາດຈະມີອາການໃດຢູ່ຕາມລູກຫູ, ຫົວ ແລະຄໍ. | ໑. ໃຫ້ເອົາຢາໄທຣານອລໃຫ້ເດັກນ້ອຍກິນ ເພື່ອລົດຄວາມໄຂ້ ແລະໃຫ້ເດັກນ້ອຍພັກຜ່ອນຫລາຍໆ | ໑. ພະຍາດນີ້ເປັນພະຍາດຕິດຕໍ່ໄວຈາກເດັກນ້ອຍຜູ້ນຶ່ງຫາເດັກນ້ອຍອື່ນໆ. ພະຍາດນີ້ສ່ວນຫລາຍແລ້ວ ເກີດແກ່ເດັກນ້ອຍທີ່ມີອາຍຸຕ່ຳກວ່າ ໕ ປີ.<br>໒. ຈະປາກົດຢູ່ ຣະຫວ່າງ ໑໐ ຫາ ໑໔ ມື້. |

121





ERIC Full Text Provided by ERIC

# ພ ະ ຍ າ ດ ຕິ ດ ຕໍ່

| ພະຍາດຕ່າງໆ | ອາການເຈັບປ່ວຍ | ການປິ່ນປົວ | ຄຳແນະນຳພິເສດ |
| --- | --- | --- | --- |
| ພະຍາດໝາກສຸກ | ໑. ເປັນພະຍາດທີ່ແຜ່ຫຼາຍໄວຕາມຜິວໜັງ. ກ່ອນຈະເກີດຂຶ້ນ ຕາມປົກກະຕິແລ້ວ ຈະມີໄຂ້ຫຼືຫຼອດລົມອັກເສບ.<br>໒. ເປັນໄຂ້, ເຈັບຫົວ, ກິນເຂົ້າບໍ່ແຊບ ແລະການເມື່ອຍຕ່າງໆປວດ.<br>໓. ພະຍາດນີ້ເປັນພະຍາດຮ້າຍຄືກັນກັບພະຍາດອື່ນໆ<br>໔. ພະຍາດນີ້ຈະຄ່ອຍໆຫາຍໄປເອງຈາກຕຸ່ມ, ເປັນໜອງ ຈະແຫ້ງ ແລະຕົກເກັດໄປເອງ.<br>໕. ພະຍາດນີ້ ຈະບໍ່ມີຮ່ອງຮອຍ ແຜແຕ່ຢ່າງໃດຫຼັງຈາກທີ່ພະຍາດແຜ່ໄດ້ເຊົາລົງແລ້ວ ນອກຈາກເດັກນ້ອຍຈະເກົາດ້ວຍເລັບມືເປື້ອນ ແລະ ຈະຖືກຮອຍແຜໄວ້ຕະຫຼອດໄປ. | ໑. ພັກຜ່ອນ ແລະກິນນ້ຳຫຼາຍໆ ແລະກິນຢາໄທຣານອລ ເພື່ອລົດຄວາມໄຂ້.<br>໒. ການບົວຣະບັດຜິວໜັງເປັນການສຳຄັນຫຼາຍ.<br>໓. ໃຫ້ເອົານ້ຳຢາ ໂລຊັ່ນ ກາລາໄມຍ໌ ຫຼື ຢາບີນາໄດ ທາແກ້ຄັນ.<br>໔. ໃຫ້ເອົາເຂົ້າແປ້ງທາແກ້ຄັນໄດ້ເຊັ່ນດຽວກັນ.<br>໕. ເພື່ອປ້ອງກັນການອັກເສບແຊກຊ້ອນ ໃຫ້ອາບນ້ຳເລື້ອຍໆໂດຍໃຊ້ສະບູ ໃຫ້ປ່ຽນຜ້າປູນອນແລະເສື້ອຜ້າເລື້ອຍໆ. ຕັດເລັບມືໃຫ້ສັ້ນແລະໃຫ້ສະອາດຢູ່ຕະຫຼອດເວລາ. ເວລາເດັກນ້ອຍນອນໃຫ້ໃສ່ຖົງມືໃຫ້ ເພື່ອປ້ອງກັນການເກົາ. | ໑. ພະຍາດນີ້ພາໃຫ້ຢູ່ຍາກໝົດໝັດຣະຫວ່າງ ໒໔ ຊົ່ວໂມງ ກ່ອນຕຸ່ມນ້ຳຈະພົ່ນຂຶ້ນ.<br>໒. ອາການຈະປາກົດຢູ່ຣະຫວ່າງ ໑໐ ຫາ ໒໑ ມື້.<br>໓. ຈະຕ້ອງເອົາລູກຂອງທ່ານໄວ້ຢູ່ບ້ານຈົນກວ່າແຜນັ້ນຈະດີ.<br>໔. ພະຍາດນີ້ ບໍ່ມີການປິ່ນປົວແຕ່ຢ່າງໃດແຕ່ທ່ານຈະຕ້ອງສັກຢາປ້ອງກັນ. |

<u>ພຍາດອອກໝາກແດງ</u>

ພຍາດນີ້ເປັນພຍາດເດັກ, ຊຶ່ງຈະຫາຍໄປໃນຣະຫວ່າງ ໔ ອາທິດ, ອາການຂອງພຍາດນີ້ມີໄຂ້, ເຈັບຫົວໄປ ປວດຫົວ ກິນເຂົ້າບໍ່ແຊບ ແລະ ເຈັບລົງໄປຕາມຕົວ. ການເຈັບຍອນອອກຕຸ່ມແດງ ຕໍ່ໄປກໍ່ເປັນເກັດແລ້ວກໍ່ຄ່ອຍຫາຍໄປ. ພຍາດນີ້ພາໃຫ້ຫມູດຫມັດ ທົນຫວາຍຫລາຍ, ແຕ່ຕ້ອງຫ້າມບໍ່ໃຫ້ເດັກນ້ອຍເກົາຫລາຍ. ໃຫ້ຕັດເລັບມືຂອງເດັກນ້ອຍໃຫ້ສັ້ນ ແລະ ລ້າງໃຫ້ສອາດ ເພື່ອຫລີກເວັ້ນການຕິດຕໍ່, ຖ້າເກົາຫລາຍອາດປະຣອຍໄວ້ຕາມຫນັງ. ຕາມທັມມະດາພຍາດນີ້ປົວຢູ່ກັບບ້ານເຮືອນ, ແຕ່ຕ້ອງໄປໃຫ້ຫມໍກວດຂັ້ນຕົ້ນ ເພື່ອຈະໄດ້ຮູ້ຈັກການຣະວັງຮັກສາ ບໍ່ໃຫ້ຕິດຕໍ່ກັນ ຫລືກາຍເປັນພຍາດພິວຫນັງແບບອື່ນອີກ.

<u>ໄຂ້ພິສອອກຫມຸ່ນຫມ່ານ</u>

ພຍາດນີ້ພາໃຫ້ເຈັບຄໍ ແລະ ອອກຕຸ່ມ, ແລະກໍ່ຕິດຕໍ່ກັນໄວເຕັມທີ. ອາການເຈັບມີດັ່ງ : ປວດຫົວ, ເປັນໄຂ້, ຈົມຈອນເຕັ້ນໄວ, ເກີດເປັນຕຸ່ມລົມ. ໑ ຫາ ໔ ວັນ, ຫລັງຈາກມີໄຂ້ ຈະຫົວນ້ຳ, ຮາກ ແລະ ອາດເສັຍສະຕິ (ເປັນງົ່ງ) ລົ້ມແລະຄໍແດງ ແລະເຈັບ. ຄວນປຶກສາກັບຫມໍ, ເພື່ອຣະວັງ ບໍ່ໃຫ້ກາຍເປັນພຍາດປອດອັກເສບ ແລະ ເຈັບຫມາກໄຂ່ຫລັງ. ພຍາດນີ້ປົວດ້ວຍຢາແສນ (ໂດຍໃບສັ່ງຢາຈາກຫມໍ). ນອນກັບບ່ອນ, ຕ້ອງໃຫ້ພັກຜ່ອນ ແລະ ດື່ມນ້ຳຫລາຍໆ. ໃຫ້ບ້ວນປາກດ້ວຍເກືອ ແລະ ໃຊ້ຢາສັ່ງໂດຍທ່ານຫມໍ, ເພື່ອບັນເທົາອາການເຈັບ. ມີພຍາດຫລາຍຢ່າງທີ່ເດັກນ້ອຍອາດຈະເຈັບປ່ວຍຍອນ, ແລະຕ້ອງການໃຫ້ທ່ານຫມໍເບິ່ງນຳ ໂດຍທົ່ວໄປແລ້ວ, ຄວນປະຕິບັດຕາມຄວາມແນະນຳດັ່ງຕໍ່ໄປນີ້ :

- ຖ້າເຫັນວ່າເດັກນ້ອຍເປັນສີຕ່າງໆ ແລະ ສົງສັຍວ່າເດັກອາດເຈັບ, ຄວນໄປປຶກສາຫມໍ.
- ສຳຫລັບເດັກນ້ອຍໆນັ້ນ, ຖ້າຫາກຄວາມຮ້ອນສູງກາຍ ໑໐໑ ອົງສາ, ຄວນໄປປຶກສາຫມໍ.
- ສຳຫລັບເດັກທົ່ວໄປນັ້ນ, ຄວາມຮ້ອນສູງກວ່າ ໙໘.໖ ອົງສາ, ແລະນານຫາຍ ອາການແບບນີ້, ເຖິງບໍ່ເຫັນມີການເຈັບປວດໃດໆກໍ່ຕາມ, ຄວນໄປປຶກສາຫມໍ.

ສລຸບແລ້ວ, ເມື່ອຄວາມປອດພັຍ, ສົ່ງທີ່ດີກໍ່ຄືຂໍຄວາມແນະນຳຈາກຫມໍ.

<u>ການສັກຢາ ແລະ ກິນຢາເພື່ອປ້ອງກັນໂຣຄຕ່າງໆ</u>

ທຸກໆຄົນບໍ່ວ່າເດັກນ້ອຍ ຫລື ຜູ້ໃຫຍ່, ຕ້ອງກັນຊີວິດດ້ວຍການຮັກສາ ຫລື ກິນຢາປ້ອງກັນໂຣຄຕ່າງໆ. ການປ້ອງກັນໂຣຄນີ້ ຈະເຣີ່ມແຕ່ຕອນຍັງເປັນເດັກອ່ອນໄປ. ເພື່ອປ້ອງກັນໂຣຄຕິດແປດຕ່າງໆ ແລະ ປ້ອງກັນໂຣຄທີ່ຮ້າຍແຮງດັ່ງຕໍ່ໄປນີ້ : ພຍາດຄໍຕີບ, ພຍາດບາດທະຍັກ, ພຍາດໄອຫອບ, ພຍາດຫມາກສຸກ ແລະ ຫມາກໃສ, ພຍາດຄໍໃຄ, ພຍາດເປັ້ຍເປ້ຍຫລອຍ. ໂດຍສະເພາະຖ້າຫາກຜູ້ໃດອາສັຍຢູ່ບ່ອນທີ່ຄັບແຄບ ແອອັດ ຍິ່ງມີແຮງຕ້ອງການຄວາມປ້ອງກັນ.

ແຕ່ສມັຍກ່ອນ, ບໍ່ມີຢາປ້ອງກັນພຍາດຕິດແປດ ຊຶ່ງເປັນພັຍແກ່ຊີວິດແລະສຸຂພາບຢ່າງອະນາຖ. ຕົວຢ່າງພຍາດຫມາກສຸກຊຶ່ງເຄີຍເປັນພຍາດຮ້າຍແຮງ ແລະ ຜູ້ຄົນເສັຽຊີວິດຍ້ອນມາກມາຍ, ສມັຍນີ້, ໄດ້ມີຢາປ້ອງກັນທົ່ວໂລກແລ້ວ. ພຍາດເປັ້ຍເປ້ຍເປັນຫລອຍ ຊຶ່ງພາໃຫ້ເດັກນ້ອຍຕາຍ ແລະ ເສັຍອົງຄະຍ້ອນຈົນເຖິງປີ ໑໙໕໐. ແຕ່ດຽວນີ້, ຈະບໍ່ມີອັນຕລາຍຮ້າຍແຮງອີກແລ້ວ ເນື່ອງຈາກໄດ້ຄົ້ນພົບຢາປ້ອງກັນ ແລະໄດ້ສັກຢາປ້ອງກັນເດັກນ້ອຍຫມົດທຸກຄົນ ກ່ອນຮອດອາຍຸເຂົ້າໂຮງຮຽນ.

144

ERIC Full Text Provided by ERIC

## ຈະໄດ້ຮັບຢາປ້ອງກັນ ດ້ວຍວິທີໃດ ?

ຢາປ້ອງກັນນີ້, ລາງເທື່ອສັກເອົາ ແລະ ລາງເທື່ອຢອດ ຫລື ກິນເອົາ ໂດຍແມ່ນທ່ານໝໍເປັນຜູ້ເຮັດໃຫ້. ຕາມໂຮງພະຍາບານຫລວງ, ທ່ານຈະໄດ້ຮັບຢານີ້ ໂດຍບໍ່ເສັຽຄ່າ ຫລື ເສັຽກໍ່ບໍ່ພໍເທົ່າໃດ. ແຕ່ທ່ານຕ້ອງເສັຽຄ່າ (ອັດຕຣາທັມມະດາ) ຖ້າໄປຫາໝໍສ່ວນຕົວ. ເນື່ອງຈາກເດັກນ້ອຍເປັນພະຍາດເຫລົ່ານີ້ງ່າຍ, ສນັ້ນການສັກຢາປ້ອງກັນນີ້ ຈຶ່ງຕ້ອງສັກແຕ່ອາຍຸເດັກຍັງນ້ອຍໆ ແລະສັກອີກຕໍ່ໄປຈົນເຖິງອາຍຸ ໕ ປີ. ເດັກທຸກຄົນຕ້ອງໄດ້ຮັບການສັກຢາກ່ອນຈະເຂົ້າໂຮງຮຽນ ຜູ້ໃຫຍ່ ກໍ່ບໍ່ຈຳເປັນຈະຕ້ອງສັກຢາປ້ອງກັນໝົດທຸກຢ່າງ, ເພາະວ່າຜູ້ໃດເຄີຍເປັນ ຫລື ຕິດພະຍາດມາກ່ອນແລ້ວ, ຮ່າງກາຍຂອງຜູ້ນັ້ນອາດມີການປ້ອງກັນໃນຕົວໄວ້ແລ້ວ. ຖ້າຜູ້ໃຫຍ່ຫາກຕ້ອງການສັກຢາປ້ອງກັນ ທ່ານຕ້ອງຖາມທ່ານໝໍກ່ອນ ເພື່ອຮູ້ວ່າຢາໃດແດ່ທີ່ທ່ານຕ້ອງການສັກ.

ຕາຕະລາງການສັກຢາປ້ອງກັນ ຕໍ່ໄປນີ້ຈະບອກອາຍຸທີ່ເໝາະ ເພື່ອສັກຢາສນິດໃດໆ ແລະພະຍາດທີ່ຈະປ້ອງກັນ. ໃຫ້ມຮຽນສຳເນົາການສັກຢາປ້ອງກັນໂຣຄໄວ້, ແລະໃຫ້ເອົາຕິດຕົວໄປພ້ອມ ເວລາໄປຫາທ່ານໝໍ ແລະເພື່ອເປັນສຳເນົາສຸຂພາບຂອງເດັກນ້ອຍເວລາເຂົ້າໂຮງຮຽນ.

### ຕາຕະລາງ ການສັກຢາປ້ອງກັນ

| ການສັກຢາປ້ອງກັນ | ກຳນົດເວລາ ແລະຈຳນວນ | ຄົບຮອບສັກຢາຕື່ມ | ພະຍາດທີ່ປ້ອງກັນ |
|---|---|---|---|
| ພະຍາດຄໍຕີບ ເຕຕາໂນສ ແລະ ເປັນໄອຫອບ | ຊຸດທຳອິດຕອນ ໒ ເດືອນ. ຊຸດທີ່ສອງ ຕອນ ໔ ເດືອນ. ຊຸດທີ່ສາມ ຕອນ ໖ ເດືອນ | ຄົບຮອບເທື່ອທຳອິດຕອນ ໑໖-໑໘ ເດືອນ. ຄົບຮອບເທື່ອ ທີ່ສອງ ຕອນ ໕ປີ | ພະຍາດຄໍຕີບ ເປັນພະຍາດຕິດຕໍ່ແລະສາມາດທຳລາຍຊີວິດຜູ້ໃຫຍ່ແລະເດັກ ຊຶ່ງເປັນເຫດໃຫ້ລົມຫາຍໃຈເກີດມີແນວເບື່ອ ພາໃຫ້ຫົວໃຈວາຍ ແລະເສັຽເສັ້ນປະສາດ. ພະຍາດເຕຕາໂນສ ເປັນພະຍາດທີ່ພາໃຫ້ເຮົາເຈັບປວດກ້ອນຊີ້ນແລະຫາຍໃຈຄັດ ຕາຍຍ້ອນ ໗໐% ພະຍາດນີ້ເກີດມາຈາກເຊື້ອໂຣຄຢູ່ໃນດິນຂີ້ຝຸ່ນຫີນທາງແລະຂີ້ສັດ ທີ່ເຂົ້າໃນບາດແຜຂອງເຮົາ, ຜູ້ໃຫຍ່ຄວນສັກຢາປ້ອງກັນທຸກໆ ໑໐ ປີ. ພະຍາດໄອຫອບ ເປັນພະຍາດທີ່ເກີດຕາມປອດ. ໄອຫອບສາມາດພາໃຫ້ເປັນປອດບວມ ສມອງເສັຽ. ຕ້ອງສັກຢານີ້ໃຫ້ຄົບຖ້ວນຈຶ່ງຈະເປັນການດີ. |


ERIC Full Text Provided by ERIC

| ການສັກຢາປ້ອງກັນ | ກຳນົດເວລາ ແລະຈຳນວນ | ລົບຮອບສັກຢາຕື່ມ | ພຍາດທີ່ປ້ອງກັນ |
|---|---|---|---|
| ໂພລີໂອ ຢອດທາງປາກ | ຊຸດແລກຕອນອາຍຸ ໒ ເດືອນ<br>ຊຸດທີ ໒ ຕອນອາຍຸ ໔ ເດືອນ | ສັກໃໝ່ເທື່ອແລກ ອາຍຸ ໑໔ ຫາ ໑໘ ເດືອນ. ສັກເທື່ອທີ ໒ ຕອນອາຍຸ ໕ ປີ. | ພຍາດ ໂພລີໂອ (ເປ້ຍຫລ່ອຍ) - ພຍາດນີ້ພາໃຫ້ເດັກນ້ອຍແລະຜູ້ໃຫຍ່ຕາຍຫລືເສັຽອົງຄະໄດ້. ພຍາດນີ້ມີສາມຢ່າງ. ຈຶ່ງປ້ອງກັນໄດ້ດ້ວຍຢາແນວດຽວກັນ ຕ້ອງສັກຢານີ້ໃຫ້ຄົບຖ້ວນ ຈຶ່ງເປັນການດີ. |
| ເປັນໝາກແດງ, ໝາກໃສ ແລະ ຄໍໃຄ່ | ສັກຢາຊຸດດຽວຕອນອາຍຸ ໑໔ ເດືອນ | ບໍ່ຕ້ອງສັກໃໝ່ອີກ | ພຍາດໝາກແດງ ເປັນພຍາດທີ່ມີອັນຕລາຍຫລາຍອາດພາໃຫ້ເສັຽຊີວິດຍ້ອນ ແລະສາມາດພາໃຫ້ປອດບວມ, ຫູໜວກ, ສມອງຊາ ແລະອາການຄືເປັນຫວັດ, ເປັນປານຕາມໜ້າ ແລະຕົນໂຕ. ສັກຢາຊຸດດຽວເທົ່ານັ້ນ ເພື່ອປ້ອງກັນແຕ່ອາຍຸ ໑ ປີຂຶ້ນໄປ.<br>ພຍາດຄໍໃຄ່ ເປັນພຍາດທີ່ພາໃຫ້ໃຄ່ຕາມຄໍ ເປັນອັນຕລາຍສຳລັບຜູ້ໃຫຍ່ ເພາະອາດພາໃຫ້ເກີດບັນຫາດ້ານສມອງແລະເປັນໝັນແກ່ຜູ້ຊາຍ.<br>ພຍາດໝາກໃສ ຫລື ອອກຫັດເຍັຽຣະມັນ ເປັນພຍາດເດັກທັມມະດາ ແຕ່ຄວນສັກຢາປ້ອງກັນ ເພາະໄປຕິດແມ່ມານອາດພາໃຫ້ເດັກໃນທ້ອງເສັຽອົງຄະ ຫລື ບໍ່ສົມບູນ. |
| ພຍາດເຕຕາໂນສ | ໄດ້ສັກອີກຕອນອາຍຸ ໑໕ ປີ. | ຖ້າຜູ້ໃຫຍ່ໄດ້ສັກອີກ ໑໐ ປີຕໍ່ເທື່ອນຶ່ງ. | ພຍາດເຕຕາໂນສ (ເບິ່ງຄຳອະທິບາຍຂ້າງເທິງ). ຜູ້ໃຫຍ່ທຸກຄົນຈະເປັນຕ້ອງສັກຢາປ້ອງກັນຊ້ຳໃນທຸກໆຣະຍະ ໑໐ ປີ ແລະ ໕ ປີສຳລັບພວກເຮັດວຽກໄຮ່ການນາ ທີ່ໃຊ້ເຄື່ອງມືແຫລມຄົມ. |

# ການຕັ້ງກິດຣະບຽບຂອງຣາຄາ



ບົດຮຽນທີ່ ໑໔.

## ນະໂຍບາຍທາງດ້ານການເງິນ

ກ. ອັດຕຣາ ຣາຄາ/ຄ່າບໍຣິການ
   ໑. ຣາຄາ ຄ່າລ້ຽງເດັກສ່ວນຫລາຍຂຶ້ນຢູ່ກັບຂອບເຂດທີ່ທ່ານຢູ່
   ໒. ການບໍຣິການ ຂຶ້ນຢູ່ກັບມາຕະຖານ ທີ່ທ່ານຕັ້ງຂຶ້ນ.

ຂ. ຄ່າຕ້ອງຂອງທ່ານ / ຄວາມຕ້ອງການ.
   ໑. ໃຫ້ຖືວ່າຕ້ອງຂອງທ່ານເອງ ດີກັນກັບນັກອາຊີບ/ ຫລືນັກທຸຣະກິດຜູ້ນຶ່ງ ແທນທີ່ຈະຖືວ່າຕົນເປັນພຽງຜູ້ລ້ຽງເດັກນ້ອຍ.
   ໒. ຖານະທາງດ້ານການເງິນ.
      - ຕົວພູດຮອ (ບໍ່ພໍ ຫລື ບໍ່ມີເມີຣ)
      - ພໍ ຫລື ເພີ່ມເຮັດການ

ຄ. ບໍຣິການ ທີ່ທ່ານຈັດໃຫ້ ແລະ ຄ່າໃຊ້ຈ່າຍທີ່ກ່ຽວກັບການ ບໍຣິການ
   ໑. ອາຫານທ່ຽງ ແລະ ອາຫານວ່າງ
      - ຜູ້ປົກຄອງ ເປັນຜູ້ນຳເອົາອາຫານວ່າງມາເອງ
      - ຜູ້ຮັບລ້ຽງເດັກ ເປັນຜູ້ຈັດຫາອາຫານທ່ຽງແລະອາຫານວ່າງ (ຕາມປົກກະຕິແລ້ວ ຈະບໍ່ມີອາຫານເຊົ້າ ນອກຈາກຈະມີການຕົກລົງກັນ ພິເສດເທົ່ານັ້ນ).
   ໒. ທັສະນະສຶກສາ / ນາທະນະຂິ້ນສົ່ງ.
      - ໃຫ້ຄິດລວມກັນຢູ່ໃນອັດຕຣາ ຄ່າບໍຣິການນັ້ນ - ຢ່າໄດ້ແຍກອອກຈາກກັນ.
      - ອາດຈະມີການພິຈາຣະນາ ກ່ຽວກັບການບໍຣິການ ທາງດ້ານຣົຖແທັກຊີ່ - ແຕ່ບໍ່ເປັນການດີສຳຫລັບທາງດ້ານປະກັນພັຍ.
   ໓. ໃນກິຈກັມຕ່າງໆ.

ງ. ການຮັບຜິດຊອບຂອງທ່ານ ທາງດ້ານການເງິນ.
   ໑. ດ້ານພາສີລາຍໄດ້ ແລະ ພາສີທາງດ້ານປະກັນສັງຄົມ
   ໒. ການປະກັນພັຍຕ່າງໆເຊັ່ນ : ອຸປະຕິເຫດ, ຫນີ້ສິນ, ບ້ານເຮືອນ, ສຸຂພາບ, ຊີວິດ, ຣົຖຍົນ ແລະ ການມີການຕ່າງໆ
   ໓. ການວາງແຜນ ເຣື່ອງເບັ້ຽບຳນານ
   ໔. ຄ່າເຊົ່າຕ່າງໆ / ຄ່າຈ່າຍງວດເຮືອນ, ຄ່າໄຟ, ຄ່ານ້ຳ, ຄ່າໂທຣະສັພ.

ຈ. ອັດຕຣາຄ່າຈ້າງ ຄິດຈາກຈຳນວນຊົ່ວໂມງ ທີ່ບໍຣິການແລະວ່າຈະຈ່າຍແນວໃດ ?
   ໑. ພວກທີ່ຢູ່ເຕັມເວລາ
      - ຜູ້ທີ່ມາ ໖ ຫາ ໘ ຊົ່ວໂມງຕໍ່ມື້ນຶ່ງ ຖືວ່າເຕັມເວລາ.
      - ຈ່າຍເປັນອາທິດລ່ວງຫນ້າ.
      - ຈ່າຍເປັນເດືອນ. ໃຫ້ນັບແຕ່ຈຳນວນມື້ທີ່ເຮັດການ ຫລື ອາທິດທີ່ເຮັດການຕໍ່ເດືອນເທົ່ານັ້ນ.
   ໒. ພວກທີ່ຢູ່ບໍ່ເຕັມເວລາ
      - ຕາມປົກກະຕິແລ້ວ ຈະມີລາຍການຕ່າງໆທຸກອາທິດ

148

- ອາດຈະຈ່າຍເປັນລາຍຊົ່ວໂມງ, ລາຍວັນ, ຫລື ລາຍອາທິດ
- ຖ້າຫາກມີການຈ່າຍເປັນລາຍຊົ່ວໂມງ ແລະ ລາຍວັນ ຈະໃຊ້ເວລາຫລາຍໃນການບັນທຶກ ບັນຊີ

໓. ພວກທີ່ມາຝາກບໍ່ເປັນປົກກະຕິ (ຊົ່ວຄາວ)
- ຕາມທັມມະດາແລ້ວ ປະມານ ໒ ຊົ່ວໂມງຕໍ່ມື້ນຶ່ງ
- ຈະຕ້ອງຈ່າຍເປັນລາຍຊົ່ວໂມງ ຫລື ເປັນລາຍວັນ.

<u>ສິ່ງທີ່ຄວນຈຳ :</u> ເນື່ອງຈາກວ່າພວກທີ່ມາ ບໍ່ຕົງເວລາ ຫລື ບໍ່ເປັນປົກກະຕິນັ້ນ ຈະໃຊ້ເວລາ ຫລາຍໃນການບັນທຶກບັນຊີ ເພາະສະນັ້ນ ທ່ານຄວນຈະຄິດ/ຕັ້ງຣາຄາແພງ ກວ່າພວກທີ່ມາຕົງເວລາ. ທ່ານຄວນຈະຕັ້ງຣາຄາພິເສດ ແກ່ພວກທີ່ມາ ບໍ່ຕົງເວລາ ຫລື ບໍ່ເປັນປົກກະຕິ.

ສ. ການຈ່າຍລ່ວງໜ້າ ເປັນການດີທີ່ສຸດ ເພື່ອຫລີກເວັ້ນຈາກ ການບໍ່ຈ່າຍເງິນ

ຊ. ການຮັບປະກັນຈ່າຍຄ່າຈ້າງ ເປັນແນວຄວາມຄິດທີ່ດີ ວ່າທ່ານຄວນຈະໄດ້ຮັບຄ່າບໍຣິການ ບໍ່ວ່າເດັກນ້ອຍ ພູ້ນຈະມາໃນສະຖານທີ່ ຫລືບໍ່ມາ (ເພື່ອເປັນການຮັກສາບ່ອນຂອງເດັກນ້ອຍໄວ້.)

ຍ. ການຈ່າຍສຳຫລັບພັກ ຫລື ເວລາບໍ່ສບາຍ.

໑. ພັກຂອງພໍ່ແມ່ເດັກນ້ອຍ ຫລື ເວລາບໍ່ສບາຍຂອງເດັກນ້ອຍ ກໍ່ຖືຄືກັນກັບການປະກັນການຈ່າຍ ຄ່າຈ້າງ (ພໍ່ແມ່ຂອງເດັກນ້ອຍ ຈະຕ້ອງຈ່າຍຄ່າບໍຣິການ ເຖິງແມ່ນວ່າຈະເອົາລູກໄວ້ຢູ່ບ້ານນຳ ທ່ານ.)

໒. ຖ້າເບິ່ງທາງດ້ານຂອງຜູ້ເບິ່ງແຍງເດັກນ້ອຍແລ້ວ ຍັງມີການສັບສົນຫລາຍ
- ຖ້າຫາກຜູ້ເບິ່ງແຍງບໍ່ວ່າງ ພໍ່ແມ່ຂອງເດັກນ້ອຍຈະຕ້ອງ ຈ້າງຜູ້ອື່ນເບິ່ງແຍງແທນ
- ຜູ້ເບິ່ງແຍງກໍ່ຈະຕ້ອງຄິດເງິນ (ໃນຂະນະທີ່ເອົາເດັກໄປຝາກໄວ້ກັບຄົນອື່ນ) ພໍ່ແມ່ຂອງເດັກ ຈະຕ້ອງຈ່າຍເງິນ ໒ ເທື່ອໃນເວລາດຽວກັນ.
- ຖ້າຫາກ ພໍ່ແມ່ຂອງເດັກນ້ອຍ ມີຍາດພີ່ນ້ອງທີ່ຢູ່ໃກ້ຄຽງ ແລະ ເປັນຜູ້ທີ່ມັກເບິ່ງແຍງເດັກ ເຂົາກໍ່ຈະມີໂອກາດທີ່ຈະໄດ້ລັບເງິນຄ່າບໍຣິການ ສຳຫລັບພັກ ແລະ ມື້ເດັກນ້ອຍບໍ່ສບາຍ.
- ເປັນການລຳບາກປະການນຶ່ງ ສຳຫລັບຜູ້ລ້ຽງເດັກ ແລະ ພໍ່ແມ່ຂອງເດັກ ຄືການເອົາພັກ ປະຈຳປີໃນເວລາດຽວກັນ.

ດ. ອາຍຸຂອງເດັກນ້ອຍ

ຕ. ຄ່າບໍຣິການ ພິເສດ

໑. ຄ່ານອກເວລາ

໒. ອາຫານທີ່ບໍ່ໄດ້ຕົກລົງກັນໄວ້ ຕາມໃບສັນຍາ (ເຊັ່ນອາຫານເຊົ້າ)

໓. ເຊັກທີ່ຖືກສົ່ງຄືນມາຈາກທະນາຄານ (ບໍ່ມີເງິນ)

໔. ການບໍຣິການພິເສດອື່ນໆ ເຊັ່ນວ່າ ການສອນລອຍນ້ຳ ການແອບກາຍະກັມ ການໄປພັກຜ່ອນ ຕາມສວນສາທາຣະນະ ຫລື ບ່ອນອື່ນໆ

ຖ. ຄິດຣາຄາແຕກຕ່າງກັນເຊັ່ນ :

໑. ຄອບຄົວທີ່ມີລູກຫລາຍກວ່າ ໑ ຄົນຂຶ້ນໄປ - ຢ່າລືມວ່າຄ່າໃຊ້ຈ່າຍຕ່າງໆຂອງທ່ານນັ້ນຄືເກົ່າ.

໒. ຄອບຄົວທີ່ຢູ່ໃນຖານະລຳບາກ ໃນດ້ານການເງິນ - ຢ່າລັງເລໃຈຊ່ວຍ. ຖ້າຫາກທ່ານຈະສາມາດຊ່ວຍໄດ້. ແຕ່ຕ້ອງບອກໃຫ້ເຂົາເຈົ້າເຂົ້າໃຈວ່າ ທ່ານຊ່ວຍໄດ້ ແຕ່ໃນເວລາຈຳກັດເທົ່ານັ້ນ.

ຄ. ການຂຶ້ນລາຄາ ຄ່າບໍລິການ ຫລື ການລົງລາຄາ

໑. ທ່ານຄວນຈະປັບປຸງ ອັດຕາລາຄາຈ້າງສຳລັບຄອບຄົວ ທີ່ມີລາຍໄດ້ຕ່ຳ ແລະ ລາຍໄດ້ສູງ.

໒. ກິຈການນີ້ ທ່ານມີສິດທີ່ຈະຄິດລາຄາ ຕາມທີ່ທ່ານເຫັນວ່າສົມຄວນ.

໓. ຖ້າໄດ້ຮັບວຽກຈົນເກີນຂອບເຂດ !! ເປັນເຫດຜົນອັນດີໃນການຂຶ້ນລາຄາຄ່າບໍລິການ ດີກວ່າທ່ານຈະໄປຮັບເອົາເດັກນ້ອຍຫລາຍຂຶ້ນຕື່ມ ແລະ ເກີນກຳນົດທີ່ທາງການໄດ້ຕັ້ງໄວ້.



ERIC
Full Text Provided by ERIC

**ບົດຮຽນທີ່ ໑໔.**

# ການສັນຍາ

ກ. ກ່ອນທີ່ທ່ານຈະເຊັນໃບສັນຍາ ສະບັບໃດສະບັບນຶ່ງ ທ່ານຈະຕ້ອງຄິດໃຫ້ຖ້ວນທີ່ເສັຽກ່ອນ.

໑. ທ່ານຕັ້ງໃຈວ່າຈະສແດງບົດບາດແນວໃດ ? ໃນການຈະເປັນຜູ້ຮັບລ້ຽງເດັກນ້ອຍ ?

໒. ທ່ານຈະສັງເກດເດັກນ້ອຍແນວໃດ ? ໃນການຈະເປັນຜູ້ປົກຄອງເດັກນ້ອຍ ?

ຂ. ເປັນຫຍັງຈຶ່ງມີການສັນຍາ ?

໑. ເປັນການຫຍຸ້ງຍາກໃນການທີ່ເຮັດວຽກ ກ່ຽວກັບການລ້ຽງເດັກ.

໒. ໃນການຕົກລົງສັນຍາ ເພື່ອລຶດຜ່ອນຄວາມເຂົ້າໃຈຜິດ ຣະຫວ່າງທ່ານແລະຜູ້ປົກຄອງ ທ່ານຄວນຈະອະທິບາຍ ຄວາມລາດໝາຍຂອງທ່ານຢ່າງແຈ່ມແຈ້ງ.

໓. ເມື່ອຫລີກເວັ້ນຈາກການ ເກີດຟ້ອງຮ້ອງ ທ່ານຄວນຈະຂຽນໃບສັນຍາ ແລະ ເອົາໃຫ້ຜູ້ປົກຄອງໃບສຳເນົານຶ່ງເພື່ອເປັນຫລັກຖານ.

໔. ຖ້າຫາກມີບັນຫາເກີດຂຶ້ນ ໃບສັນຍາທີ່ມີລາຍເຊັນຂອງຜູ້ປົກຄອງຢູ່ນັ້ນ ຈະເປັນຫລັກຖານ.

ຄ. ສ່ວນເພີ່ມເຕີມ :

໑. ທຸກໆມຸມໃດ ຂອງບ່ອນລ້ຽງເດັກທີ່ທ່ານຄິດວ່າເປັນບ່ອນສຳຄັນ

໒. ທຸກຢ່າງທີ່ທ່ານ ຄວນຈະໄດ້ຮັບຈາກຜູ້ປົກຄອງ ທ່ານຈະຕ້ອງຂຽນໃສ່ໃບສັນຍາ

໓. ຂໍ້ສັນຍາ ທຸກຂໍ້ຈະຕ້ອງລວມ :

- ຄຳອະທິບາຍກ່ຽວກັບ ວັນແລະເວລາທີ່ທ່ານຈະເລີ້ມເຮັດວຽກກ່ຽວກັບເດັກນ້ອຍ
- ນະໂຍບາຍດ້ານການເງິນ, ວັນພັກປະຈຳປີ, ການຈ່າຍເງິນລ່ວງໜ້າ, ການປັບໃໝກ່ຽວກັບການຈ່າຍເງິນຊ້າ (ບໍ່ທັນເວລາ) ຫລື ຈ່າຍເຊັກທີ່ບໍ່ມີເງິນຢູ່ໃນທະນາຄານ.
- ປົກສາກ່ຽວກັບ ອາຫານທີ່ເອົາໃຫ້ເດັກນ້ອຍກິນ.
- ຜູ້ປົກຄອງຄວນຈະເອົາອັນໃດມາຕື່ມ ຫລື ບໍ່ຄວນ
- ອະນາມັຍ ສຸຂພາບ ແລະ ການເຈັບປ່ວຍ
- ການຕົກລົງສັນຍາ ໃນການຮັບສົ່ງ.

໔. ສິ່ງເຫລົ່ານີ້ ເປັນລາຍລະອຽດແລະເປັນການດີໃຫ້ແກ່ທ່ານ ຂຶ້ນຢູ່ກັບສະພາບການແວດລ້ອມເທົ່ານັ້ນ

໕. ຖ້າທ່ານຮູ້ວ່າ ຂໍ້ຄຳໃດ ທີ່ບໍ່ໃຫ້ຄວາມຮ່ວມໄມ້ຮ່ວມມືພຽງພໍ ການຕົກລົງສັນຍາ ຄວນຈະໃຫ້ຕັດອອກ ແລະ ໃຫ້ຕື່ມເຂົ້າໄປໃນໃບສັນຍານັ້ນ.

ງ. ໃບສັນຍາຄວນຈະທົບທວນເປັນຣະຍະໆ.

໑. ໃຫ້ທົບທວນ ໃບສັນຍາປີລະເທື່ອ. ສະພາບການປ່ຽນແປງ ຫລື ຫລາຍກວ່ານັ້ນ ໃຫ້ອະທິບາຍຢ່າງແຈ່ມແຈ້ງໃຫ້ຜູ້ປົກຄອງຟັງ ໃນເວລາທີ່ທ່ານໃຫ້ສຳພາດ.

໒. ໃຫ້ຂຽນໃບເຕືອນ ແລ້ວສົ່ງໄປຫາຜູ້ປົກຄອງ ໒ ອາທິດກ່ອນຈະມີການປ່ຽນແປງ ທົ່ວໄປ.

# ການແນະນຳ ວິທີຊອກຫາເດັກນ້ອຍ





ERIC
Full Text Provided by ERIC

ບົດຮຽນ ທີ່ ໑໖

## ວິທີ ການຕິດຕໍ່ ທີ່ໄດ້ຜົລດີ

ກ. ການແບ່ງເວລາສຳຫລັບການຕິດຕໍ່ ກັບພໍ່ແມ່ຂອງເດັກນ້ອຍ.

໑. ສຳຫລັບການຕິດຕໍ່ ແບບທັມມະດາ (ຖາມ, ເວົ້າ) ແຕ່ລະມື້.

໒. ສຳຫລັບການຕິດຕໍ່ ແບບເປັນທາງການ, ປະຈຳອາທິດ ຫລື ປະຈຳເດືອນ.

ກ. ວິທີຫາບ່ອນ ຕິດປ້າຍປະກາດ ໂຄສະນາ.

ຂ. ການຣະວັງຕົວ ເນື່ອງຈາກວ່າ ພໍ່ແມ່ຂອງເດັກນ້ອຍບາງຄົນ ອາດຈະບໍ່ສົນໃຈໃນການອ່ານປ້າຍປະກາດ ສົ້ນທາງທີ່ດີ ຄວນຈະມີການບອກປາກເປົ່າຕື່ມອີກ

໓. ຖ້າຫາກກ່ຽວກັບເຣື່ອງສ່ວນຕົວ ຂໍໃຫ້ເວົ້າທາງໂທຣະສັບ.

ກ. ບາງທີອາດເປັນໄປໄດ້ ໃນເມື່ອຕ້ອງການປຶກສາບັນຫາກ່ຽວກັບເດັກນ້ອຍ.

ຂ. ບາງທີອາດເປັນໄປໄດ້ ໃນເມື່ອພໍ່ແມ່ຂອງເດັກນ້ອຍ ໄດ້ມາຮັບເອົາເດັກນ້ອຍຊ້າຢູ່ເລື້ອຍ ຈົນເຮັດໃຫ້ ບໍ່ມີເວລາໄດ້ເວົ້າລົມກັນ ໃນເວລານັ້ນ.

ຂ. ຈົ່ງເວົ້າລົມກັບເດັກນ້ອຍ ທີ່ຢູ່ໃນຄວາມດູແລຂອງທ່ານ ດ້ວຍພາສາທີ່ເຂົ້າໃຈງ່າຍ ແລະ ແຈ່ມແຈ້ງດີ.

໑. ໃຫ້ຄິດໄປໃນທາງທີ່ດີໄວ້ ຄືໃນເມື່ອຮ້ອງຂໍເດັກນ້ອຍໃຫ້ ຄວາມຮ່ວມໄມ້ຮ່ວມມື ແລະ ຄວນໃຫ້ມີເວລາແກ່ເດັກນ້ອຍພຽງພໍ ໃນການປະຕິບັດ. ເພາະວ່າເດັກນ້ອຍຈະໃຊ້ເວລາ ຫລາຍກ່ອນຈະລົງມືເຮັດອັນໃດອັນນຶ່ງ ກວ່າຜູ້ໃຫຍ່ (ຕາມການຄົ້ນຄວ້າ ເຫັນວ່າ ເດັກນ້ອຍຈະໃຊ້ເວລາ ໓ ຫາ ໔ ຕໍ່ຂອງຜູ້ໃຫຍ່.)

໒. ເມື່ອເວລາເວົ້າລົມກັບເດັກນ້ອຍ ໃຫ້ກົ້ມຫົວລົງ ຫລືວ່າ ນັ່ງຕັ່ງເຕັ້ຽ ເພື່ອໃຫ້ໜ້າຂອງທ່ານຢູ່ໃນຣະດັບດຽວກັນກັບໜ້າຂອງເດັກນ້ອຍ.

໓. ຢ່າໄດ້ໃຊ້ ຄຳຖາມຊ້ອນ ຫລື ສັບສົນກັນເຊັ່ນ : "ເຈົ້າຢາກໃຫ້ຂ້ອຍຊ່ວຍບໍ່ ? ຫລື ເຈົ້າຈະເຮັດເອງ ?" - ທ່ານຄວນຈະໃຊ້ຄຳຖາມອັນທຳອິດກ່ອນ ຫລັງຈາກທີ່ເດັກນ້ອຍຕອບແລ້ວ ຈຶ່ງຖາມ ຄຳຖາມໃໝ່ຕໍ່ໄປ.

໔. ໃນກໍຣະນີທີ່ບໍ່ມີທາງເລືອກ. ກໍໃຫ້ເວົ້າດ້ວຍນ້ຳສຽງໜັກແໜ້ນ ເຊັ່ນວ່າ : "ເຈົ້າເຂົ້າມາທາງໃນ ແລະ ກໍໄປໃຊ້ຫ້ອງນ້ຳດຽວນີ້."

໕. ໃນກໍຣະນີທີ່ມີທາງເລືອກ ກໍຈົ່ງບອກໂດຍການໃຊ້ນ້ຳສຽງເຊັ່ນວ່າ : "ນີ້ນ່ະເຈົ້າຢາກຊ່ວຍຂ້ອຍແຕ່ງໂຕະກິນເຂົ້າບໍ່ ?" ຫລືວ່າໃນເມື່ອເຂົາເຈົ້າ ເຮັດຢູ່ເປັນປະຈຳເຊັ່ນວ່າ :"ຮອດຍາມໄປນອນພັກຜ່ອນແລ້ວ ເຈົ້າໄປນອນເອງໄດ້ບໍ່ ?" ໃຫ້ຖາເບິ່ງສະຖານະການນ້ອຍນຶ່ງກ່ອນແລ້ວຈຶ່ງບອກຕໍ່ໄປອີກວ່າ : "ຫລືວ່າຈະໃຫ້ຂ້ອຍຊ່ວຍເຈົ້າ!"

໖. ຖ້າບໍ່ຈຳເປັນ ຢ່າໄດ້ໄປກວນເດັກນ້ອຍເວລາທີ່ເຂົາເຈົ້າກຳລັງຫລິ້ນຢູ່. ຖ້າຫາກວ່າທ່ານຕ້ອງການຈະບອກວິທີຫລິ້ນແກ່ເຂົາ, ເພາະເດັກນ້ອຍຈະບໍ່ຍອມຟັງສຽງຂອງທ່ານ ໃນເວລາທີ່ເຂົາກຳລັງຫລິ້ນຢູ່. ຈົ່ງໃຫ້ເວລາແກ່ເຂົາເຈົ້າ.

ກ. ຈົ່ງໃຫ້ຄວາມແໜ້ນໜັກ ຕໍ່ວຽກການທີ່ໄດ້ສຳເຣັດໄປ - ບໍ່ແມ່ນມາຈາກການກະທຳຂອງເດັກນ້ອຍ ເຊັ່ນ : "ເປີດນ້ຳຄ່ອຍໆ" ຫລື "ປິດປະຕູຄ່ອຍໆ" ເປັນຕົ້ນ.

ຂ. ຍົກຕົວຢ່າງໃນການລົງໂທດ ຖ້າຈຳເປັນ, ຕ້ອງໃຫ້ແນ່ໃຈວ່າ ເດັກນ້ອຍເຂົ້າໃຈແຈ່ມແຈ້ງຕໍ່ເຫດຜົລໃນການລົງໂທດ. ສນອງຄວາມຕ້ອງການຢ່າງສມ່ຳສເມີ, ຊຶ່ງມີຄຸນຄ່າຂອງຄວາມພຍາຍາມໃນທາງທີ່ຖືກຕ້ອງ.

ພ. ໃຫ້ຟັງເດັກນ້ອຍເວົ້າ, ປາກ, ທ່ານອາດຈະໄດ້ຮຽນຮູ້ເຖິງສິ່ງ ທີ່ມີຄຸນຄ່າຫລາຍຢ່າງຈາກເຂົາເຈົ້າ.

# ຄວາມຄາດຫມາຍຂອງການສົນທະນາ ທີ່ໄດ້ຜົນ



ບົດຮຽນ ທີ ໑໖

## ຄວາມຫວັງ (ຄວາມຄາດໝາຍ)

ກ. ເດັກນ້ອຍຈະມີຄວາມຮູ້ສຶກຢ່າງໃດ ກ່ຽວກັບຕົວຂອງເຂົາເຈົ້າເອງ ? (ການຍົກຍ້ອງຕົນເອງ, ແນວຄວາມຄິດຄວາມເຫັນ, ແລະ ການບູຊາຄຸນຄ່າຂອງຕົນເອງ).

໑. ເດັກນ້ອຍຈະສັງເກດ ແລະ ເອົາຕົວຢ່າງ ຈາກຜູ້ອື່ນດ້ວຍວິທີໃດ ?

໒. ໂດຍສະເພາະແມ່ນພວກເດັກນ້ອຍ ທີ່ຢູ່ໃນໄວເຂົ້າໂຮງຮຽນ ຈຶ່ງໄດ້ຮັບອິດທິພົນ ຈາກພໍ່ແມ່ ແລະຜູ້ດູແລ.

໓. ຄວາມຫວັງຂອງພວກເຮົາ/ການບໍ່ໄດ້ຮັບຜົນຕອບແທນ ຈາກການປະພຶດຂອງເດັກນ້ອຍ ເປັນສ່ວນປະກອບອັນສຳຄັນໃນການສ້າງ ລັກສະນະປະຈຳຕົວຂອງເດັກນ້ອຍ.

ຂ. ພວກເຮົາມີຄວາມຫວັງ ຫຍັງແດ່ຈາກເດັກນ້ອຍ ? ສິ່ງສຳຄັນກໍຄື ຄວາມຫວັງທີ່ເດັກນ້ອຍຈະສາມາດເຮັດໄດ້.

໑. ຖ້າເຮົາບັງຄັບຫລາຍຈົນເກີນໄປ ເດັກນ້ອຍຈະກາຍເປັນຄົນລັງເລໃຈ, ຍອມແພ້ຕໍ່ເຫດການຕ່າງໆ ເປັນໂຣຄປະສາດ ແລະ ບໍ່ກ້າຈະທົດລອງກັບສິ່ງຕ່າງໆ ຈະອາໄສຜູ້ອື່ນເຮັດໃຫ້ຢູ່ເລື້ອຍ.

໒. ຖ້າຫາກເຮົາບັງຄັບນ້ອຍຈົນເກີນໄປ ຈະສອນໃຫ້ເດັກນ້ອຍບໍ່ຮູ້ຈັກຊ່ວຍຕົນເອງ, ຈະກາຍເປັນຄົນອາໄສຜູ້ອື່ນ, ຊຶ່ງຈະເຮັດໃຫ້ເດັກນ້ອຍໝົດຄຸນຄ່າ ໃນຕົວຂອງເຂົາເຈົ້າເອງ.

໓. ພວກເຮົາຕ້ອງຮູ້ຈັກວ່າ ພວກເຮົາມີຄວາມຫວັງຫຍັງ ?

ກ. ໂດຍທົ່ວໄປແລ້ວ ພວກເຮົາຕ້ອງຮູ້ຈັກເຖິງໄວຂອງເດັກນ້ອຍ ທີ່ກຳລັງຈະເຣີນເຕີບໂຕ ແລະ ຄວາມສາມາດ ຂອງເດັກນ້ອຍແຕ່ລະຄົນ.

ຂ. ລັກສະນະທ່າທາງຕ່າງໆ, ນິໄສ ແລະ ອາຣົມ ຣະດັບຄວາມຮູ້ຄວາມສາມາດທີ່ເດັກນ້ອຍສແດງອອກຣະຫວ່າງຢູ່ໃນສະຖານທີ່ບ່ອນລ້ຽງເດັກ.

ຄ. ພວກເຮົາຄວນຈະເຮັດແນວໃດ ?

໑. ເອົາໃຈໃສ່ຕໍ່ເດັກນ້ອຍ.

໒. ເດັກນ້ອຍເກີດມາບາງຄົນ ມີນິສັຍ ກ້າເຮັດກ້າທົດລອງ ຕໍ່ສິ່ງຕ່າງໆ ຖ້າພວກເຮົາໃຫ້ການສນັບສນູນ ແລະ ໃຫ້ໂອກາດຢ່າງອິດສະຣະພາບແລ້ວ ເຂົາເຈົ້າຈະກາຍເປັນຄົນທີ່ຍອມຮັບຕໍ່ການທ້າທາຍຕ່າງໆທີ່ເກີດຂຶ້ນ.

໓. ເດັກນ້ອຍບາງຄົນ ເກີດມາກໍມີນິສັຍບໍ່ກ້າທົດລອງຕໍ່ສິ່ງຕ່າງໆ, ຕາມທັມມະຊາດແລ້ວເດັກນ້ອຍຜູ້ນັ້ນຈະເຮັດຫຍັງກໍຣະມັດຣະວັງ, ຈະຕ້ອງມີການຍົວະເຍົ້າ ຫລື ພາເຮັດຈຶ່ງເຮັດ.

໔. ເດັກນ້ອຍບາງຄົນ ກໍບໍ່ເຮັດສິ່ງໃດເພື່ອຕົນເອງ, ພວກເຮົາຕ້ອງເຂົ້າໃຈ ແລະ ຄວນຫາວຽກ ຫລື ສິ່ງໃດສິ່ງໜຶ່ງ ທີ່ເຮັດໄດ້ງ່າຍໆ ໃຫ້ເຂົາເຮັດໃຫ້ມັນແລ້ວ.

໕. ໃຫ້ເດັກນ້ອຍ ພຍາຍາມເຮັດແນວໃດແນວໜຶ່ງດ້ວຍຕົວເຂົາເອງ ຫລາຍເທົ່າໃດຍິ່ງເປັນການດີ.

໖. ຄວາມສາມາດຂອງເດັກນ້ອຍ ແຕ່ລະຄົນບໍ່ຄືກັນ ຂຶ້ນກັບສະພາບຂອງຮ່າງກາຍ ແລະ ອາຣົມຂອງເຂົາເຈົ້າ.

໗. ເດັກນ້ອຍຕ້ອງຮຽນຮູ້ວິທີການຕິດຕໍ່ ຫລື ການສະແດງອອກເຖິງຄວາມຕ້ອງການຂອງເຂົາເຈົ້າ.
   ກ. "ອາ" ຫລື ການຊີ້ ຄວນຈະປ່ຽນມາເປັນການໃຊ້ຄຳເວົ້າ ເພື່ອໃຫ້ເດັກນ້ອຍເຂົ້າໃຈ. ເດັກນ້ອຍທີ່ຍັງປາກບໍ່ເປັນ ຕ້ອງການຟັງຄວາມເວົ້າເພື່ອໄວ້ເປັນຕົວຢ່າງ ທີ່ພວກເຂົາເຈົ້າຈະນຳເອົາມາໃຊ້ ເມື່ອເວລາທີ່ເຂົາເຈົ້າຈະສາມາດ ເວົ້າອອກມາດ້ວຍຕົນເອງໄດ້.
   ຂ. ເຖິງຈະແມ່ນເດັກນ້ອຍເກີດໃຫມ່ກໍ່ຕາມ ຢ່າຊູ່ໃຊ້ "ພາສາເດັກນ້ອຍປາກ" ເວົ້ານຳເດັກນ້ອຍ ໃຫ້ໃຊ້ພາສາທັມມະດາ ແລະ ເນື້ອຄວາມຂອງການປາກເວົ້າ ຢ່າຊູ່ຫຍໍ້ຄວາມເວົ້າ.
   ຄ. ສະໜັບສະໜູນໃຫ້ເດັກນ້ອຍເວົ້າພາສາຂອງທ່ານ. ຢ່າເຮັດໃຫ້ເດັກນ້ອຍ ແອວ ຮ້ອງຄາງ ຮ້ອງໄຫ້ ຮ້ອງສຽງດັງ (ກົ່ງຄໍຮ້ອງ) ຫລື ເອົານິ້ວມືຊີ້ເອົາຂອງທີ່ເຂົາເຈົ້າຕ້ອງການ.

໘. ເມື່ອເດັກນ້ອຍໄດ້ຮັບຄວາມບາດເຈັບ ພວກເຮົາຈະເຫັນໄດ້ວ່າ ມີບາດເຈັບຫລາຍຊ່ຳໃດ ບາງທີ ເດັກນ້ອຍອາດຈະເສີຍໄປເລີຍ (ບໍ່ເຈັບຫລາຍປານໃດ ?) ຖ້າຫາກຜູ້ໃຫຍ່ເຮົາບໍ່ເວົ້າຕໍ່ໄປ (ຫວງ) ຫລື ອອຍ - ເດັກນ້ອຍສູ້ນ ກໍ່ຈະບໍ່ຮ້ອງໃຫ້ອອກມາ.
   ກ. ຢ່າໄດ້ເຮັດເສີຍເມີຍ ຕໍ່ການເຈັບຂອງເດັກນ້ອຍ ແຕ່ໃຫ້ຢືນຈອບເບິ່ງຢູ່ທາງດ້ານຫລັງ ສັງເກດເບິ່ງວ່າ ເດັກນ້ອຍສູ້ນຈະມີພຶດຕິການແນວໃດ ກ່ອນທີ່ທ່ານຈະເຂົ້າໄປເບິ່ງ ຫລື ຊ່ວຍ.
   ຂ. ເຮັດຈິດໃຈໃຫ້ສະບາຍ ແລະ ປຶກສາຫາລືຕາມຄວາມເປັນຈິງ ວ່າເດັກນ້ອຍ ຫລື ຜູ້ໃຫຍ່ ຈະແກ້ໄຂການເຈັບເປັນນັ້ນດ້ວຍວິທີໃດ ແລະ ຈະເຮັດແນວໃດເມື່ອຫາທາງປ້ອງກັນ ບໍ່ໃຫ້ເດັກນ້ອຍເກີດຄວາມເຈັບຂຶ້ນມາອີກ ໃນອານາຄົດ.

໙. ຈະຕ້ອງເປັນຄົນ ທີ່ມີຄວາມອົດທົນ.
໑໐. ຈະຕ້ອງເປັນຄົນ ທີ່ມີຄວາມອົດກັ້ນ ໂມໂຫໂທໂສ.
໑໑. ຈະຕ້ອງເປັນຄົນ ທີ່ມີບັນຍາກາດທີ່ສົດຊື່ນ, ໃຫ້ຄວາມຮັກແພງ ແລະ ສົ່ງເສີມໃຫ້ເດັກນ້ອຍມີກຳລັງໃຈຢູ່ສະເໝີ.

໓. ການແອບ (ສອນ) ວິທີການ ໃຊ້ຫ້ອງນ້ຳ - ເປັນສິ່ງນຶ່ງຂອງການຄາດໝາຍ ທີ່ຜູ້ໃຫຍ່ສ່ວນຫລາຍມັກຈະເກີດຄວາມໂມໂຫໂທໂສ (ຄວບຄຸມສະຕິບໍ່ໄດ້) ຕໍ່ເດັກນ້ອຍ ໃນເມື່ອເຂົາເຈົ້າບໍ່ສາມາດ ທີ່ຈະປະຕິບັດໄດ້ຕາມຄວາມຕ້ອງການ.

   ໑. ຈະເລີ່ມຕົ້ນຕອນໃດ ?
      ກ. ເດັກນ້ອຍເກີດໃຫມ່ (ຕັ້ງແຕ່ເກີດ) ໂດຍການເວົ້າລົມກັບເດັກນ້ອຍ ໃນຕອນທີ່ປ່ຽນໄດເປີ້.
      ຂ. ເດັກນ້ອຍທີ່ໃຫຍ່ແດ່ແລ້ວ (ຮູ້ຈັກຄວາມ) ໃຫ້ເຂົາເຈົ້າຈັບ ໄດເປີ້ ທີ່ປ່ຽນຊຸ່ມ, ໃຫ້ພາເຂົາເຈົ້າໄປເບິ່ງຫ້ອງສ້ວມວ່າເປັນແນວໃດ ? ຄົນອື່ນໃຊ້ຫ້ອງນ້ຳແນວໃດ ? ສອນໃຫ້ເດັກນ້ອຍ ຢ່າຫນ້າອາຍ ແລະ ແອບໃຫ້ເຂົາຖາມ ແລະ ລົມທຸກຢ່າງກ່ຽວກັບການໃຊ້ຫ້ອງນ້ຳ.
   ໒. ເດັກນ້ອຍໃຫຍ່ຊ່ຳໃດ ? ຫລື ຕອນໃດ ? ທີ່ເດັກນ້ອຍຈຶ່ງຈະພ້ອມໃນການໃຊ້ຫ້ອງນ້ຳ.
      ກ. ເດັກນ້ອຍສ່ວນຫລາຍ ແລະ ພ້ອມທີ່ຈະສອນການໃຊ້ຫ້ອງນ້ຳໄດ້ ໃນອາຍຸຣະຫວ່າງ ໒ ຫາ ໓ປີ ແຕ່ເດັກນ້ອຍອາຍຸ ໒ ປີເຕັມ ບໍ່ຄວນຈະສອນໃນການໃຊ້ຫ້ອງນ້ຳ.
      ຂ. ມີລັນ ເຊັດ ( Milan Sheath ) ຄື ເສັ້ນປະສາດທີ່ກ່ຽວກັບການຄວບຄຸມຂອງການຖ່າຍ. ເສັ້ນປະສາດສ່ວນນີ້ຂອງເດັກນ້ອຍ ຕ້ອງໃຫ້ສົມບູນເຕັມຂັ້ນເສັຽກ່ອນ ເຂົາເຈົ້າຈຶ່ງຈະສາມາດ ຄວບຄຸມການເບື້ອ ສ່ວນທີ່ກ່ຽວຂ້ອງກັບການປ່ອຍ ຫລື ອົດກັ້ນການຖ່າຍຫນັກ ຫລື ຖ່າຍເບົາໄດ້.

ດ. ການສແດງອອກຂອງເດັກນ້ອຍ.

໑. ການແຫ້ງ ຫລື ບໍ່ເປື້ອນເປັນເວລານານ.

໒. ສແດງອາການບໍ່ສດວກ ໃນເວລາທີ່ມີການປຽກຊຸ່ມ ຫລື ເປື້ອນ.

໓. ເດັກນ້ອຍຈະຖາມ ໃຊ້ຫ້ອງນ້ຳ.

ງ. ສອນ ຫລື ຍົວະເດັກນ້ອຍ ໃຫ້ເຮັດຕາມທີ່ທ່ານຕ້ອງການ.

ຈ. ເດັກນ້ອຍທີ່ເລີ້ມຮຽນ ການໃຊ້ຫ້ອງນ້ຳໃໝ່ໆ ຈະໃຫ້ຄວາມຮ່ວມມື ໃນການປະຕິບັດແບບອື່ນນຳ.

ສ. ເດັກນ້ອຍຈະໄດ້ຮັບການແນະນຳ ໃຫ້ຮູ້ຈັກການຄວບຄຸມ ທາງດ້ານອື່ນໆດີກັບ.

ຊ. ຖ້າຫາກທ່ານສອນ ເດັກນ້ອຍໃຫ້ໃຊ້ຫ້ອງນ້ຳໄວເກີນໄປ ຈະເຮັດໃຫ້ເດັກນ້ອຍ ພົບພໍ້ກັບຄວາມບໍ່ສຳເຣັດ (ເພາະບໍ່ສາມາດຈະປະຕິບັດໄດ້ ຕາມຄວາມຕ້ອງການຂອງທ່ານ).

ນ. ວິທີການສອນໃຊ້ຫ້ອງນ້ຳ.

ກ. ຢ່າກັງວົນ ຫລື ຫ່ວງໃນການສອນໃຊ້ຫ້ອງນ້ຳຫລາຍເກີນໄປ.

ຂ. ເລີ້ມຕົ້ນໂດຍການສອນ ໃຊ້ຫ້ອງນ້ຳໃຫ້ເປັນເວລາ.

໑. ຈັດຫລືຕັ້ງເວລາໃດ ເວລາໜຶ່ງສຳຫລັບໃຫ້ເດັກນ້ອຍໄປໃຊ້ຫ້ອງນ້ຳ - ອາດຈະບໍ່ໄດ້ຜົລດີປານໃດ ໃນຕອນແອບເດັກນ້ອຍໃໝ່ໆ.

໒. ບໍ່ຈຳເປັນຈະຕ້ອງໄປຫ້ອງນ້ຳທຸກໆຊົ່ວໂມງ. ເມື່ອເດັກນ້ອຍຫາກໃຊ້ຫ້ອງນ້ຳເວລາໃດເວລາໜຶ່ງເປັນປະຈຳ ກໍຄວນອານຸຍາດໃຫ້ເຂົາໄປໃຊ້ໃນເວລານັ້ນຕລອດໄປ.

໓. ເດັກນ້ອຍໝົດທຸກຄົນ ອາດຈະໃຊ້ຫ້ອງນ້ຳໃນເວລາດຽວກັນ ຊຶ່ງມັກຈະເກີດຂຶ້ນກັບກຸ່ມຂອງເດັກນ້ອຍ ທີ່ແອບໃໝ່ໆເຊັ່ນ : ການອອກໄປຫລິ້ນທາງນອກ ຫລື ວ່າຫລັງຈາກການກິນອາຫານທ່ຽງແລ້ວ.

໔. ສຳຫລັບເດັກນ້ອຍທີ່ຮຽນໃຊ້ຫ້ອງນ້ຳໃໝ່ໆ ມັກຈະເບິ່ງຜູ້ອື່ນເປັນຕົວຢ່າງສເມີ.

ຄ. ໃຫ້ຈຳໄວ້ວ່າ ການສອນຜູ້ໃຫຍ່ ບໍ່ຄືກັນກັບການຝຶກແອບເດັກນ້ອຍ. ເດັກນ້ອຍຈະໃຊ້ຫ້ອງນ້ຳເມື່ອຜູ້ໃຫຍ່ພາໄປ ແຕ່ເຂົາເຈົ້າອາດຈະບໍ່ຈື່ວ່າຈະໄປຫ້ອງນ້ຳດ້ວຍຕົນເອງ ເຖິງແມ່ນວ່າເຂົາຕ້ອງການຢາກໃຊ້ຫ້ອງນ້ຳແລ້ວກໍຕາມ.

ງ. ຖ້າຫາກວ່າ ເດັກນ້ອຍຢ້ານກົວ, ຂັດຂືນ, ຮ້ອງໄຫ້ ບໍ່ຢາກໄປຫ້ອງນ້ຳ ໃຫ້ປ່ອຍໄປຊົ່ວຣະຍະໜຶ່ງກ່ອນ.

ຈ. ຢ່າໄດ້ຖືເອົາການຝຶກແອບ ການໃຊ້ຫ້ອງນ້ຳໄປເປັນບັນຫາ.

ສ. ຢ່າລົງໂທດ, ດ່າວ່າ ຫລື ຈົ່ມ ຖ້າຫາກວ່າເດັກນ້ອຍບໍ່ສາມາດ ຈະໄປໃຊ້ຫ້ອງນ້ຳໄດ້ດ້ວຍຕົນເອງ ເພາະມັນອາດຈະສ້າງບັນຫາທາງດ້ານຈິດໃຈ ແລະ ຮ່າງກາຍຂອງເດັກນ້ອຍ.

ຊ. ບາງທີ ເດັກນ້ອຍກໍບໍ່ມັກໄປໃຊ້ຫ້ອງນ້ຳ ດ້ວຍຕົນເອງເພື່ອເປັນການທົດລອງຜູ້ໃຫຍ່ ໃຫ້ເຮັດ-ຈິດໃຈໃຫ້ດີງ ແລ້ວແອບໃຫ້ເດັກນ້ອຍຜູ້ນັ້ນຮັບຜິດຊອບໃນການທຳຄວາມສອາດຫ້ອງນ້ຳ ຫລັງຈາກທີ່ເຂົາໄດ້ໃຊ້ຫ້ອງນ້ຳແລ້ວ - ການເຮັດເຊັ່ນນີ້ ອາດຈະເປັນການແກ້ບັນຫາໃນຣະຍະສັ້ນໄດ້.

ດ. ເດັກນ້ອຍບາງຄົນ ຢ້ານກົວໃນການໃຊ້ຫ້ອງນ້ຳ (ເວລາເປີດນ້ຳລົງ) ອາດຈະຕ້ອງໄດ້ໃຊ້ຕັ່ງນັ່ງ.

ຕ. ເດັກນ້ອຍບາງຄົນ ຈະຕ້ອງໄດ້ໃຊ້ເວລາສ່ວນຕົວ ຣະຍະໜຶ່ງກ່ອນ ກ່ອນທີ່ເຂົາຈະຖ່າຍໄດ້.

ຖ. ເດັກນ້ອຍບາງຄົນ ຈະຕ້ອງໄດ້ຍົວະເສັຍກ່ອນ ຈຶ່ງຈະເຮັດ.

ທ. ຢ່າໄດ້ຫວັງຜົລສຳເຣັດ ໃນການຝຶກແອບ ໃນຣະຍະສັ້ນໆ.

ນ. ຖ້າຫາກວ່າເດັກນ້ອຍ ປະຕິບັດໄດ້ບໍ່ຄ່ອຍດີປານໃດ ໃນຂັ້ນຕົ້ນ ຈົ່ງພຍາຍາມສົ່ງເສີມ ແລະ ໃຫ້ກຳລັງໃຈແກ່ເຂົາເຈົ້າ.

ບ. ຖ້າຫາກວ່າ ພໍ່ແມ່ຂອງເດັກນ້ອຍຕ້ອງການຢາກໃຫ້ ແອບລູກຂອງເຂົາເຈົ້າເອງ ໒ - ຢ່ຽວ ກ່ອນອາຍຸຂອງເດັກນ້ອຍ ທີ່ທ່ານຄິດວ່າຈະແອບໄດ້ - ທາງທີ່ດີທີ່ສຸດ ບໍ່ຄວນຈະຮັບເອົາເດັກນ້ອຍຜູ້ນັ້ນ.

150

ບົດຮຽນທີ່ ໑໕.

## ແບບຝຶກຫັດ ໃນການແກ້ບັນຫາ

ຄຳແນະນຳ : ໃຊ້ເວລາລະຍະນຶ່ງ ເພື່ອທົບທວນ ການແກ້ບັນຫາທີ່ອາດຈະເກີດຂຶ້ນ ແລະ ປຶກສາຫາລື ວິທີທີ່ດີ ເພື່ອແກ້ໄຂ ບັນຫາເຫຼົ່ານີ້.

໑. ແມ່ຂອງ "ສົມພອນ" ບອກທ່ານວ່າ ເຂົາອາຍຸໄດ້ ໒ ປີແລ້ວ ແລະໄດ້ຮັບການຝຶກແອບ ວິທີການໃຊ້ ຫ້ອງນ້ຳ ບໍ່ຕ້ອງການໃສ່ ໄດເປີ້. ແຕ່ເຖິງຢ່າງໃດກໍຕາມ "ສົມພອນ" ກໍມີບັນຫາເກືອບທຸກວັນ - ບາງທີ ທ່ານຕ້ອງໄປຊື້ ໄດເປີ້ ໃຫ້ເຂົາດ້ວຍຕົນເອງ. ແມ່ຂອງ "ສົມພອນ" ຍັງຢັ້ງຢືນວ່າລູກຂອງ ລາວ ບໍ່ຕ້ອງການໃສ່ ໄດເປີ້ ! ທ່ານຄວນຈະເຮັດແນວໃດ ?

໒. ເມື່ອ "ດາຣາ" ອາຍຸໄດ້ ໓ ເດືອນປ່ອຍໄວ້ຄົນດຽວ ມັກຈະຮ້ອງໄຫ້ - ເມື່ອທ່ານຍ່າງເຂົ້າໄປຫາ ເຂົາວ່າເປັນຫຍັງຈຶ່ງໄຫ້ ; ດ້ວຍເຫດນີ້ເມື່ອເວລາຢູ່ບ້ານ ແມ່ຂອງ "ດາຣາ" ບອກວ່າເມື່ອເວລາ "ດາຣາ" ໄຫ້ຈະຕ້ອງມີຄົນຍ່າງເຂົ້າໄປຫາ "ດາຣາ" ຈຶ່ງຈະເຊົາໄຫ້ ແລະ ແມ່ຂອງ "ດາຣາ" ກໍບໍ່ຢາກໃຫ້ລູກຂອງລາວເປັນດັ່ງນັ້ນ. ແລ້ວທ່ານຄິດວ່າຈະແອບເດັກນ້ອຍຜູ້ນີ້ ດ້ວຍວິທີໃດ ?

໓. "ໄພວັນ" ມາບ່ອນລ້ຽງເດັກຊ້າງທຸກວັນ ແລະ ຮູ້ສຶກວ່າລາວເຫງົານອນທຸກເວລາ ທ່ານເຂົ້າໃຈວ່າ "ໄພວັນ" ໄດ້ຖືກອານຸຍາດໃຫ້ຢູ່ເດິກ (ຫຼິ້ນຈົນເດິກ) ໃນຂະນະດຽວກັນ "ໄພວັນ" ກໍບໍ່ມັກຫຼິ້ນນຳ ເພື່ອນຝູງ ແລະ ບໍ່ມີຄວາມຮູ້ສຶກແບບ ກະຕືລືລົ້ນແຕ່ຢ່າງໃດ ! ທ່ານຄິດວ່າຈະປຶກສາຫາລືກັບ ພໍ່ແມ່ ຂອງ "ໄພວັນ" ວິທີໃດ ?

໔. "ທະນົງສັກ" ຜູ້ມີອາຍຸ ໘ ປີແລ້ວ, ມາບ່ອນລ້ຽງເດັກນ້ອຍທຸກວັນ ຫຼັງຈາກທີ່ໂຮງຮຽນເລີກແລ້ວ. ເຂົາບອກວ່າ : ເຂົາບໍ່ເຂົ້າໃຈໃນເມື່ອທ່ານເວົ້າ ພາສາອັງກິດນຳເຂົາ. ແລະບໍ່ປະຕິບັດຕາມຄຳ ບອກສອນຂອງທ່ານ ທີ່ເປັນພາສາລາວ. "ທະນົງສັກ" ຄິດວ່າ ເວລາທີ່ທ່ານປາກພາສາອັງກິດນຳ ເຂົາ ພາໃຫ້ເປັນຕາຫົວເຣາະເພາະສຳນຽງ ຂອງທ່ານບໍ່ຖືກຕ້ອງຕາມເຂົາຄິດ. ທ່ານຄວນຈະແກ້ ໄຂບັນຫາເຫຼົ່ານີ້ວິທີໃດ ?

# ການແກ້ໃຂ ຄວາມປະພຶດ ຂອງເດັກນ້ອຍ



## ວິທີການແກ້ໄຂຄວາມປະພຶດ ແລະ ບັນຫາຕ່າງໆຂອງເດັກນ້ອຍ

ກ. ການວາງແຜນ ສຳຫລັບຄວາມປະພຶດທີ່ກົງກັນຂ້າມ ຂອງເດັກນ້ອຍ.

໑. ໃຫ້ຄວາມລະອຽດ, ການນັບຖື, ຄວາມເຫັນພ້ອມ ແລະ ຄວາມເຫັນໃຈຕ່າງໆ.

໒. ຈົ່ງຫລີກເວັ້ນຈາກການໃຫ້ອານຸຍາດ ຫລື ໃຊ້ອຳນາດຫລາຍເກີນຂອບເຂດ.

໓. ຈົ່ງໃຫ້ລາງວັນ ໃນການປະພຶດດີຂອງເດັກນ້ອຍ.

໔. ທ່ານຈະຕ້ອງສອນວິທີຕ່າງໆໃຫ້ແກ່ເດັກນ້ອຍ ເຊັ່ນການແນະນຳ ຫລື ຄວາມຊ່ວຍເຫລືອ ເມື່ອເຂົາຈະໄດ້ເອົາໄປໃຊ້ຢ່າງມີເຫດຜົນ ໃນຊີວິດຂອງເຂົາເຈົ້າ.

໕. ການບໍຣິການ ຫລື ການສແດງບົດບາດເມື່ອເປັນຕົວຢ່າງໃຫ້ແກ່ເດັກນ້ອຍ.

- ທ່ານຈະຕ້ອງ ມີຄວາມສຸພາບອ່ອນໂຍນ ເຊັ່ນຕົວຢ່າງ : "ກະຣຸນາ" "ຂອບໃຈ" ຫລື "ຂ້ອຍຂໍໂທດ" ເປັນຕົ້ນ.
- ທ່ານຈະຕ້ອງ ເຕັມໃຈໃນການຟັງ ຫລື ສົນໃຈໃນການເວົ້າຂອງເດັກນ້ອຍ.
- ທ່ານຈະຕ້ອງ ເປັນຄົນເພື່ອແຜ່ ແບ່ງປັນຕໍ່ຄົນອື່ນ.
- ທ່ານຈະຕ້ອງ ໃຫ້ຄວາມຊ່ວຍເຫລືອເທົ່າທີ່ຄວນ.
- ທ່ານຈະຕ້ອງເຕັມໃຈໃນການຍອມຮັບ ແລະ ການຂໍໂທດເວລາທີ່ເດັກນ້ອຍ ໄດ້ມີການເຮັດຜິດພາດ.
- ທ່ານຈະຕ້ອງ ໃຊ້ຄຳເວົ້າທີ່ຫນັກແຫນ້ນຕົວຢ່າງ : "ກະຣຸນາຢ່າງ" - "ກະຣຸນາເວົ້າສຽງຄ່ອຍໆ".
- ທ່ານຈະຕ້ອງ ໃຫ້ຄວາມສຳພັດຢ່າງອ່ອນໂຍນ.

໖. ທ່ານຈະຕ້ອງໃຫ້ຄວາມເບິ່ງແຍງ ຢ່າງທົ່ວເຖິງແລະພຽງພໍ.

໗. ທ່ານຈະຕ້ອງ ມີຄວາມອົດທົນ, ຄວາມສາມາດໃນການອົດກັ້ນ ຄວາມໂມໂຫຢ່າງສງົບ ເຖິງແມ່ນວ່າ ທ່ານຈະມີການຄຽດແຄ້ນ ໃນກໍຣະນີໃດໆກໍຕາມ.

໘. ເດັກນ້ອຍມັກຈະມີສຸດ ເບິ່ງບ້ານເຮືອນຂອງທ່ານ.

ຂ. ເຫດຜົນ ທີ່ບໍ່ສາມາດຈະຍອມຮັບ ໃນຄວາມປະພຶດຂອງເດັກນ້ອຍໄດ້.

ທ່ານຈະຕ້ອງຖາມຕົນເອງ ເລື້ອຍໆວ່າເປັນຫຍັງ ? ໃຫ້ໃຊ້ເວລາຣະຍະນຶ່ງ ເມື່ອເປັນການພິຈາຣະນາເບິ່ງຄວາມເປັນໄປ ແລະ ເພື່ອໃຫ້ເຂົ້າໃຈໃນສະຖານະການທີ່ເກີດຂຶ້ນ ກ່ອນທີ່ທ່ານຈະເຂົ້າໄປເຖິງຕົວຂອງເດັກນ້ອຍ.

໑. ຄວາມປົກກະຕິ ແລະ ຄວາມສຳຄັນຂອງການສແດງອອກ ໂດຍທົ່ວໄປ.

໒. ເດັກນ້ອຍທີ່ຍັງບໍ່ທັນຮູ້ດຽງສາ ອາດຈະມີຄວາມບົກພ່ອງໃນລັກສະນະທາທ່າງຂອງດ້ານການປະຕິບັດ ແລະ ບໍ່ມີເຫດຜົນພຽງພໍ.

໓. ເດັກນ້ອຍບໍ່ມີຄວາມສາມາດ ໃນການຄົບຄ້າສະມາຄົມ ແລະ ຄວາມຮູ້ສຶກຕ່າງໆ.

໔. ເດັກນ້ອຍແຕ່ລະຄົນ ບໍ່ມີກົດຣະບຽບ ບໍ່ມີຄວາມຫວັງ ແລະ ເຫດຜົນຂຶ້ນຢູ່ກັບຂີດຂັ້ນອາຍຸ ຂອງເຂົາເຈົ້າ.

໕. ເດັກນ້ອຍ ອາດຈະບໍ່ເຂົ້າໃຈກ່ຽວກັບ ກົດຣະບຽບວິໄນຂອງທ່ານດ້ວຍເຈຕະນາ.

໖. ເດັກນ້ອຍ ຈະມີຄວາມສັບສົນກັບສິ່ງຕ່າງໆ ຂອງແຕ່ລະມື້ ໃນການທີ່ຢູ່ບ່ອນລ້ຽງເດັກນ້ອຍ ແບບຢູ່ບ້ານເຮືອນ ທີ່ແຕກຕ່າງກັບການຢູ່ບ້ານເຮືອນຂອງເຂົາເຈົ້າ.

໗. ຄວາມຄັບແຄ້ນ ກັບການເປັນຢູ່ຮ່ວມກັບເດັກນ້ອຍຜູ້ອື່ນ.

໘. ເດັກນ້ອຍຮູ້ສຶກ ມີຄວາມໂສກເສົ້າໃນການປ່ຽນແປງ ຊີວິດ ຂອງຄອບຄົວ.

໙. ການຕັ້ງໃຈຫຼຽວຊອກຫາ ບ່ອນຕ່າງໆ.

໑໐. ການເມື່ອຍເມັຍ.

໑໑. ການເຈັບໄຂ້.

໑໒. ການເບື່ອໜ່າຍ.

໑໓. ການຢ້ານກົວ.

໑໔. ການໂກດແຄ້ນ ໂມໂຫ.

໑໕. ການບໍ່ມີຄວາມສະບາຍໃຈ ກ່ຽວກັບສິ່ງແວດລ້ອມ.

໑໖. ບາງທີ ເດັກນ້ອຍກໍ່ຮູ້ສຶກມີຄວາມຜິດ.

ຄ. ທ່ານຈະຕ້ອງ ແກ້ບັນຫາ ກ່ອນທີ່ເຫດການເຫຼົ່ານີ້ ຈະເກີດຂຶ້ນ.

໑. ໃນກໍລະນີ ທີ່ມີການຖົກຖຽງເກີດຂຶ້ນໃຫ້ທ່ານຊອກຫາມູນຄວາມຈິງ ແລະ ຄວາມປະພຶດ ຂອງເດັກນ້ອຍ ແຕ່ລະຄົນ.

໒. ໃຫ້ທ່ານທົບທວນຄືນຫຼາຍໆເທື່ອ.

໓. ໃຫ້ຮຽນຮູ້ ແລະ ສົ່ງເສີມຄວາມຮູ້ສຶກຂອງເດັກນ້ອຍ ຄົນອື່ນເຊັ່ນດຽວກັນ.

໔. ການພັກຜ່ອນ ຫຼື ທາງອອກຢ່າງອື່ນ.

໕. ໃຫ້ເຮັດເສີຍກ່ຽວກັບ ຄວາມປະພຶດຂອງເດັກນ້ອຍ ທີ່ທ່ານບໍ່ສາມາດຈະຮັບໄດ້.

ງ. ຫຼັກວິຊາການ ທີ່ໃຊ້ຢ່າງໄດ້ຜົລ ສຳຫຼັບການຄວບຄຸມຂອງການປະພຶດ ທີ່ບໍ່ເໝາະສົມ.

໑. ລະບຽບວິນັຍ ເມື່ອເວລາທີ່ຜູ້ອື່ນມີຄວາມຈຳເປັນ.

ກ. ອາດຈະເປັນຜົລບໍ່ດີ ໃຫ້ແກ່ເດັກນ້ອຍຜູ້ອື່ນ - ບໍ່ແມ່ນທ່ານຈະປຶດ ຫຼື ຈູງເອົາເດັກ ເຫຼົ່ານັ້ນ ແຕ່ທ່ານຈະຕ້ອງຕັກເຕືອນເຂົາໃນເວລານັ້ນໂລດ - ແຕ່ໃຫ້ຈິກຕ້ອງ ແລະ ສຸຂຸມ ແລະ ກໍ່ບໍ່ເປັນພັຍແກ່ເດັກນ້ອຍ.

ຂ. ການທຳລາຍຊັບສິນຕ່າງໆ

ຄ. ການເຮັດໃຫ້ຕົວເອງ ໄດ້ຮັບອັນຕລາຍ.

ງ. ການບໍ່ຟັງຖ້ອຍທ້ອຍຄວາມ ແລະ ລະເມີດກົດລະບຽບຂອງບ້ານເຮືອນ.

໒. ໃຫ້ເລືອກວິທີ ການລົງໂທດເດັກນ້ອຍ.

ກ. ສິ່ງທີ່ເກີດຕາມມາ.

ຂ. ເອົາສິ່ງຂອງທີ່ເດັກນ້ອຍມັກຫຼິ້ນ ໜີອອກຈາກເຂົາເຈົ້າ.

ຄ. ການປ່ອຍດ່າ - ແລະຕົບຕີ ຈາກຜູ້ລຽງດູ.

໑. ໃຫ້ເດັກນ້ອຍເຫັນຄວາມໂມໂຫຂອງທ່ານ ແລະ ໃຫ້ເຂົາຮູ້ວ່າການໂມໂຫນັ້ນມີຢູ່ ຫຼາຍຂັ້ນ.

໒. ແລະໃຫ້ເຂົາເຫັນວ່າທ່ານຮັກເຂົາຂນາດໃດ ແລະມີຄວາມຮູ້ສຶກຍິນດີ ທີ່ຈະຢູ່ໃກ້ ເຂົາໃນເມື່ອຫາກເຂົາປະພຶດຕົວດີ.

ງ. ໃຫ້ຈອບເບິ່ງ ອາການພຶກໃຫວຂອງເດັກນ້ອຍຕລອດເວລາ.

ຈ. ໃຫ້ຍັບຍັ້ງ ຫຼື ຫ້າມປາມເດັກນ້ອຍ.

໓. ການຍົກຕົນເອງ - ການຍູ້ງຍາກ. ເຖິງແມ່ນວ່າ ມັນຈະເຂົ້າມາໃກ້ຕົວຂອງທ່ານ ກໍ່ຕາມ ຄວນຈະຍັບຍັ້ງເດັກນ້ອຍໄວ້ ໃຫ້ສແດງລັກສະນະ ທ່າທາງຕໍ່ເດັກນ້ອຍເຊັ່ນວ່າ : "ຂ້ອຍຈະບໍ່ຍອມ ໃຫ້ເຈົ້າກັດຄົນອື່ນອີກຕໍ່ໄປ".

໔. ໃນເມື່ອທ່ານມີບັນຫາເຫຼົ່ານີ້ເກີດຂຶ້ນ ໃຫ້ໄປປຶກສາກັບພໍ່ແມ່ຂອງເດັກນ້ອຍນັ້ນໂລດ.

ກ. ໃຫ້ຄຳແນະນຳ ຫຼື ຊ່ວຍເຫຼືອພໍ່ແມ່ຂອງເດັກນ້ອຍ ໃຫ້ອາວເຖິງຄວາມຊຳນິຊຳນານ ບໍ່ໃຫ້ເວົ້າຕາມຖານະຂອງນັກຊ່ຽວຊານ ໃຫ້ຄວາມສນັບສນູນແກ່ພໍ່ແມ່ ແຕ່ວ່າ ທ່ານຢ່າໄດ້ເກັບເອົາບັນຫາເຫຼົ່ານີ້ໄປຄິດເປັນເຣື່ອງສ່ວນຕົວ.

ຂ. ໃຫ້ທ່ານປຶກສາຫາລື ທັນທີທັນໃດ - ໃຫ້ທ່ານຄິດເບິ່ງວ່າຈະໃຊ້ເວລາຍາວຊ່ຳໃດໃນການທົບຕໍ່ການປະພຶດຂອງເດັກນ້ອຍ ໃຫ້ສັງເກດ ແລະ ພິຈາຣະນາ ທ່ານຢ່າໄດ້ຄິດວ່າ ພໍ່ແມ່ຂອງເດັກນ້ອຍຈະຮູ້ ແລະ ເຂົ້າໃຈເອົາເອງ.

ຄ. ຫຼີກເວັ້ນຈາກການ ເຮັດໃຫ້ບັນຫາຕ່າງໆເກີດຂຶ້ນໂດຍບໍ່ຈຳເປັນ - ທາງທີ່ດີທ່ານຄວນຈະຈຳກັດ ໃຫ້ໃວທີ່ສຸດເທົ່າທີ່ຈະເຮັດໄດ້.

ງ. ຢ່າໄດ້ເຮັດໃຫ້ ພໍ່ແມ່ເກີດຄວາມກັງວົນໃຈ ກ່ຽວກັບບັນຫາເຫຼົ່ານີ້.

ຈ. ເດັກນ້ອຍຈະຢູ່ໃນສະຖານທີ່ ບ້ານເຮືອນຂອງທ່ານເປັນເວລາຍາວນານ - ຖ້າຫາກມີບັນຫາຕ່າງໆເກີດຂຶ້ນ ການໃຊ້ສິດໃນການບັງຄັບເດັກນ້ອຍຈະຕ້ອງຢູ່ໃນຂອບເຂດ.

ສ. ໃຫ້ຫຼີກເວັ້ນ ຈາກການຕິຕຽນ ຫຼື ກ່າວຫາ.

ຊ. ໃຫ້ພິຈາຣະນາກ່ຽວກັບການປ່ຽນແປງ ຄວາມປະພຶດຂອງເດັກນ້ອຍ.

ຍ. ໃຫ້ເຮັດວຽກ ຫຼື ຕິດຕໍ່ກັບພໍ່ແມ່ຂອງເດັກນ້ອຍໂດຍກົງ.

໗. ການຊ່ວຍເຫຼືອເດັກນ້ອຍທີ່ມາໃໝ່ ໃຫ້ລຶ້ງເຄີຍກັບບ້ານເຮືອນຂອງທ່ານ.

໑. ໃຫ້ແຍກເດັກນ້ອຍທີ່ມີຄວາມຫງ່ອມເຫງົາ ອອກຈາກເດັກນ້ອຍທີ່ມີຄວາມລຶ້ງເຄີຍໃວ້ຕ່າງຫາກ.

ກ. ຈົ່ງໃຫ້ຄວາມຕັກເຕືອນ ແລະ ຄຳອະທິບາຍຕ່າງໆ ລ່ວງໜ້າແກ່ເດັກນ້ອຍ.

ຂ. ເດັກນ້ອຍໝູ່ນັ້ນໄດ້ຖືກໄປຢ້ຽມຢາມ ສະຖານທີ່ບ່ອນລ້ຽງເດັກນ້ອຍບໍ່ ? ກ່ອນທີ່ເຂົາເຈົ້າຈະເຂົ້າຮ່ວມໃນລາຍການເຫຼົ່ານີ້.

໒. ໃຫ້ຮູ້ໃວ້ວ່າ ເດັກນ້ອຍກໍມີຄວາມຮູ້ສຶກຕ່າງໆກ່ຽວກັບເຣື່ອງນີ້.

໓. ໃຫ້ແນ່ໃຈວ່າ ພໍ່ແມ່ຂອງເຂົາເຈົ້າ ເຂົ້າໃຈກ່ຽວກັບເຣື່ອງນີ້.

໔. ຜູ້ໃຫຍ່ທຸກໆຄົນມີຄວາມຮັບຜິດຊອບກ່ຽວກັບ ຄວາມຮູ້ສຶກຂອງເດັກນ້ອຍ.

໕. ການບອກການກ່າວລາຕໍ່ພໍ່ແມ່ຂອງເດັກນ້ອຍ ໃຫ້ເປັນແບບງ່າຍໆ ແລະ ທັມມະດາ.

໖. ຈົ່ງອານຸຍາດໃຫ້ເດັກນ້ອຍ ຖືສິ່ງຂອງອັນໃດອັນນຶ່ງ ມາຈາກບ້ານຂອງເຂົາໄດ້.

ກ. ຫຼີກເວັ້ນຈາກການປ່ຽນແປງຂອງເດັກນ້ອຍ ຈົນກວ່າເຂົາຈະປັບຕົວໃຫ້ເຂົ້າກັບລາຍການຕ່າງໆໄດ້ຢ່າງສົມບູນ.

ຂ. ເດັກນ້ອຍສາມາດປັບຕົວເຂົ້າກັບຜູ້ລ້ຽງດູ ໃນສະຖານທີ່ບ່ອນລ້ຽງເດັກໄດ້ໃວ ແຕ່ວ່າເຂົາອາດຈະມີທ່າທາງ ກະວົນກະວາຍໃຈ.

ERIC

ສ. ການມາຍັງສະຖານທີ່ບ່ອນລ້ຽງເດັກ ແລະ ການກັບບ້ານ.

໑. ການມາຍັງ ສະຖານທີ່ຂອງເດັກນ້ອຍ.

ກ. ໃຫ້ທ່ານຕັ້ງກົດລະບຽບ ຂອງການປະພຶດຂອງເດັກນ້ອຍ

ຂ. ການຮ້ອງໄຫ້ ຫລື ນ້ຳຕາຂອງເດັກນ້ອຍ ກໍຈະຕ້ອງໃຫ້ມີຂອບເຂດເຊັ່ນດຽວກັນ ເພື່ອເດັກນ້ອຍ ຈະບໍ່ໄດ້ນຳເອົາມາໃຊ້ເປັນປະຈຳຈົນເຄີຍຕົວ.

ຄ. ເດັກນ້ອຍບາງຄົນ ກໍປະພຶດຊົ່ວ ເພື່ອຈະທົດສອບຄວາມຕັ້ງໃຈພໍ່ແມ່ຂອງເຂົາເຈົ້າ.

ງ. ໃຫ້ສົ່ງເສີມເດັກນ້ອຍຢ່າງເປັນກັນເອງ ສັບປ່ຽນກັນຢ່າງເປີດເຜີຍ ກັບພໍ່ແມ່ ຫລື ຜູ້ປົກຄອງ.

໒. ການກັບບ້ານຕ່າງໆ.

ກ. ເດັກນ້ອຍທີ່ມີຄວາມຂັດແດ້ ຖ້າຫາກພໍ່ແມ່ຂອງເຂົາເຈົ້າມາຫາຢູ່ເລື້ອຍໆ ໃນສະຖານທີ່ບ່ອນລ້ຽງເດັກ ຈະຊ່ວຍໃຫ້ຄວາມປະພຶດ ຂອງເດັກນ້ອຍມີຫນ້ອຍລົງ.

ຂ. ໃຫ້ທົດສອບ ເພື່ອຈະໃຫ້ເຫັນວ່າ ຜູ້ໃດມີອຳນາດຫລາຍກວ່າກັນ.

ຄ. ເດັກນ້ອຍ ຈະຮູ້ ແລະ ເຫັນການເອົາໃຈໃສ່ຂອງທ່ານ.

໓. ໃຫ້ຕຽມພ້ອມເດັກນ້ອຍ ກ່ອນທີ່ພໍ່ແມ່ຂອງເຂົາເຈົ້າຈະມາຮັບເອົາ.

ກ. ໃຫ້ມ້ຽນບ່ອນຕ່າງໆທີ່ຫລິ້ນແລ້ວ ແລະ ຢູ່ຢ່າງສງົບ ກ່ອນທີ່ພໍ່ແມ່ຂອງເດັກນ້ອຍຈະມາຮັບເອົາ.

ຂ. ສອນໃຫ້ເດັກນ້ອຍຮູ້ວ່າ ຮອດເວລາກັບບ້ານ ເພື່ອຈະເຮັດໃຫ້ການກັບບ້ານຂອງເຂົາເຈົ້າໄວຂຶ້ນ.

ຄ. ພະຍາຍາມໃຫ້ເດັກນ້ອຍຫລິ້ນຢູ່ຢ່າງສງົບ ເພື່ອເປັນການສັບປ່ຽນລາຍການ.

ຊ. ບັນຫາ ທີ່ເກີດຂຶ້ນມາຈາກ ລູກຂອງທ່ານ.

໑. ບາງທີບັນຫາ ກໍເກີດຂຶ້ນມາຈາກ ການຢູ່ໃນບ້ານເຮືອນຊົ່ວຄາວຮ່ວມກັນ, ຫລິ້ນເຄື່ອງຫລິ້ນຮ່ວມກັນ ແຕ່ບັນຫານັ້ນເກີດຂຶ້ນແກ່ ທຸກໆຄົນ.

໒. ເປັນກໍຣະນີ ທີ່ແກ້ໄດ້ຍາກ.

໓. ການບໍ່ມີປະສົບປະການ, ຄວາມອິດສາຢ້ານລື່ນ.

໔. ຄວາມຕື່ນເຕັ້ນ ໃນການຍ້າຍສະຖານທີ່ຕ່າງໆ.

໕. ການບໍ່ຮູ້ວ່າຈະປັບຕົວເອງເຂົ້າກັບຄົນອື່ນ.

໖. ການສແດງອອກແຕ່ງຄວາມໂມໂຫ ອາຣົມງຸດງິດ, ການປະພຶດຊົ່ວ, ເພື່ອເປັນການທົດສອບທ່ານເອງ ແລະ ກໍເພື່ອເປັນຕົວຢ່າງອັນບໍ່ດີໃຫ້ແກ່ເດັກນ້ອຍຜູ້ອື່ນ.

໗. ເປັນການຫຍຸ້ງຍາກສຳຫລັບທ່ານ ທີ່ຈະເຮັດວຽກກ່ຽວກັບສິ່ງເຫລົ່ານີ້.

໘. ການປັບຕົວ ແລະ ການສແດງທ່າທາງຕ່າງໆ ຕໍ່ລູກຂອງທ່ານທີ່ມີຄວາມປະພຶດຊົ່ວ ແຕກຕ່າງກັນກັບ ການສແດງທ່າທາງຕໍ່ເດັກທີ່ຢູ່ໃນສະຖານທີ່ບ່ອນລ້ຽງເດັກ.

ບົດຮຽນ ທີ່ ໑໗

## ການທາລຸນເດັກນ້ອຍ

ກົດບັນຍັດ ຂອງອົງການສະຫະປະຊາຊາດ ວ່າດ້ວຍສິດທິຂອງເດັກນ້ອຍວ່າ ເຂົາເຈົ້າທຸກຄົນມີສິດ ທີ່ຈະໄດ້ ຮັບ...

- ຄວາມດູແລ ແລະ ຮັບຜິດຊອບຈາກພໍ່ແມ່
- ຊື່ ແລະ ສັນຊາດ
- ການກິນ, ການຢູ່ ແລະ ການປິ່ນປົວເວລາເຈັບໄຂ້ຢ່າງພຽງພໍ
- ການສຶກສາຕາງໆ
- ມີໂອກາດ ທີ່ຈະໄດ້ຫລິ້ນ ແລະ ພັກຜ່ອນໄດ້ຢ່າງເຕັມທີ່.
- ການບັນເທົາທຸກ ບໍ່ວ່າໃນກໍຣະນີໃດ.
- ຄວາມຄຸ້ມຄອງ ຈາກການບໍ່ເອົາໃຈໃສ່, ຄວາມໂຫດຮ້າຍ ແລະ ການສແວງຫາຜົລປະໂຍດ
- ການສຶກສາ ເພື່ອກຽມໂຕໃຫ້ເປັນຄົນ ທີ່ມີປະໂຍດຕໍ່ສັງຄົມ.
- ການລ້ຽງດູ ເບິ່ງແຍງ ຖ້າຫາກວ່າເປັນຄົນພິການ.
- ການພັທນາ ທາງດ້ານກຳລັງກາຍ, ຈິດໃຈ, ສິລທັມ, ປັນຍາ ແລະ ສັງຄົມ ເພື່ອໃຫ້ມີອິສຣະພາບ ແລະ ກຽດສັກສີ.
- ການເບິ່ງແຍງລ້ຽງດູ ພາຍໃຕ້ ພາລະແວດລ້ອມທີ່ສງົບສຸຂ ແລະ ເປັນກັນເອງ ທີ່ຈະໄດ້ສະຕິປັນຍາ ເພື່ອຄວາມສາມາດຮັບໃຊ້ ເພື່ອນຮ່ວມຊາດ.
- ສິດທິເຫລົ່ານີ້ ໂດຍບໍ່ເລືອກ ຊາດ, ສີສັນ, ເພດ, ພາສາ, ສາສນາ, ພັກການເມືອງ, ປະເທດ ຫລື ສັງຄົມ.

ກ. ເດັກນ້ອຍຫລາຍຄົນ ບໍ່ໄດ້ຮັບຜົລປະໂຍດຈາກສິດທິເຫລົ່ານີ້ ກົງກັນຂ້າມ ເຂົາເຈົ້າກາຍເປັນ ຜູ້ຮັບເຄາະ :

໑. ຖືກປະຖິ້ມ - ທາງຮ່າງກາຍ ແລະ ຈິດໃຈ

ກ. ປ່ອຍໃຫ້ເດັກນ້ອຍຢູ່ເຮືອນຜູ້ດຽວ - ກົດໝາຍບໍ່ໄດ້ກຳນົດອາຍຸຂອງເດັກນ້ອຍທີ່ຈະປ່ອຍໃຫ້ຢູ່ເຮືອນຜູ້ດຽວໄດ້. ແຕ່ຖ້າຫາກ ເດັກນ້ອຍຕ່ຳກວ່າ ໖ ປີແລ້ວຈະມີອັນຕະລາຍ - ຖ້າຫາກ ທ່ານຮູ້ເຫັນໃຫ້ຮອງຕຳຣວດ.

ຂ. ບໍ່ໃຫ້ກິນເຂົ້າ ຫລື ບໍ່ຮັກສາເດັກນ້ອຍໃຫ້ສອາດ ກໍ່ຖືວ່າເປັນການ ປ່ອຍປະລະເລີຍ

ຄ. ບໍ່ຮັກສາເດັກນ້ອຍ ທີ່ບໍ່ສບາຍ ຫລື ບໍ່ເບິ່ງວ່າ ເຂົາເຈົ້າໄດ້ຮັບການຮັກສາປິ່ນປົວກໍ່ ຖືວ່າເປັນການປະຖິ້ມເດັກນ້ອຍເຊັ່ນດຽວກັນ.

໒. ການທາລຸນ - ທາງຮ່າງກາຍ ແລະ ຈິດໃຈ

໓. ການທາລຸນ ທາງດ້ານເພດ - ທາງຮ່າງກາຍ ແລະ ຈິດໃຈ

ກ. ປຸກປ້ຳ, ຮ່ວມເພດ, ຮ່ວມເພດລະຫວ່າງພີ່ນ້ອງ, ກອດຈູບ, ປຸກອາຣົມທາງເພດ ຕໍ່ໜ້າເດັກນ້ອຍ.

ຂ. ສິ່ງທີ່ກ່າວມາໃນຂໍ້ ກ. ນັ້ນມັກເກີດຂຶ້ນເລື້ອຍໆ, ເດັກນ້ອຍຈະບໍ່ເວົ້າ ກ່ຽວກັບເລື່ອງນີ້ ຖ້າຫາກເຂົາເຈົ້າເວົ້າໃຫ້ທ່ານຟັງ ຈົ່ງເຊື່ອເຂົາເຈົ້າ.

ຂ. ຄວາມເປັນມາຂອງການທາລຸນເດັກນ້ອຍ.

ມັນບໍ່ແມ່ນເຣື່ອງທີ່ເກີດຂຶ້ນໃໝ່ໆ - ມັນເກີດຂຶ້ນເລື້ອຍໆ ພວກເຮົາໄດ້ຍິນຕື່ມຂຶ້ນເລື້ອຍໆຍ້ອນວ່າ...

໑. ກົດໝາຍ ໃຫ້ບຸຄົນທີ່ເຮັດວຽກກ່ຽວກັບເດັກນ້ອຍ (ສະຖານທີ່ລ້ຽງເດັກ, ນາຍຄູ, ນາຍໝໍ ແລະອື່ນໆ...) ລາຍງານຕໍ່ເຈົ້າໜ້າທີ່ ພາຍໃນ ໒໔ ຊົ່ວໂມງ ຖ້າສົງສັຍວ່າ ເດັກນ້ອຍຖືກທາລຸນ.

໒. ທ່າທີຂອງ ປວງຊົນ ໄດ້ປ່ຽນໄປ.

ກ. ສມັຍກ່ອນ ຍອມຮັບກັນວ່າ ພໍ່ແມ່ມີສິດທີ່ຈະລົງໂທດ ລູກຢ່າງຮຸນແຮງໄດ້ ແລະ ກໍເປັນໜ້າສົນໃຈ ທີ່ຍັງມີຄົນບາງກຸ່ມ ຍັງບໍ່ປ່ຽນແປງ ແນວຄວາມຄິດ.

ຂ. ຫລຸດການປົກປິດຄວາມຈິງ ຍ້ອນເຫັນແກ່ໜ້າທີ່ຂອງພໍ່ແມ່ແລ້ວ ປວງຊົນສ່ວນຫລາຍຖືວ່າ ຄວາມປອດພັຍຂອງເດັກນ້ອຍນັ້ນສຳຄັນ.

ຄ. ຍັງມີຫລາຍຄົນ ທີ່ບໍ່ສົນໃຈກັບການທາລຸນເດັກນ້ອຍ.

໑. ເຈັບປວດເກີນໄປ ທີ່ຈະສູ້ໜ້າກັບຄວາມເປັນຈິງ.

໒. ຄວາມຫຍຸ້ງຍາກ ໂດຍຄິດວ່າຈະເປັນເຫດໃຫ້ ພໍ່ແມ່ຂອງເດັກນ້ອຍເດືອດຮ້ອນ. ສ່ວນຫລາຍແລ້ວພໍ່ແມ່ ທາລຸນເດັກນ້ອຍ ຍ້ອນວ່າມີປັນຫາໃນດ້ານຄອບຄົວ ການລາຍງານການທາລຸນເດັກນ້ອຍ ເປັນການເປີດປະຕູໃຫ້ແກ່ການຊ່ວຍເຫລືອ ມີຫົນທາງໄດ້ຊ່ວຍເຫລືອຄອບຄົວເດັກນ້ອຍ-ນັ້ນນຳ.

໓. ປ້ານຜົລສະທ້ອນ ທີ່ຈະເກີດຂຶ້ນໃນພາຍຫລັງ.

ກ. ບຸຄົນ ຈະບໍ່ໄດ້ຮັບໂທດທາງແພ່ງ ຫລື ທາງອາຊຍາ ຍ້ອນການລາຍງານ ນອກຈາກວ່າ ລາຍງານທີ່ບໍ່ມີມູນຄວາມຈິງ ຍ້ອນຄວາມຄຽດແຄ້ນ ພຍາບາດກັນ.

ຂ. ການບັນທຶກທຸກຢ່າງ ທີ່ກ່ຽວກັບການລາຍງານ ສົງສັຍວ່າມີການທາລຸນ ປະຖິ້ມເດັກນ້ອຍ ຖືວ່າເປັນຄວາມລັບ - ນອກຈາກທ່ານ ຈະໄດ້ຮັບການຄຸ້ມຄອງຈາກກົດໝາຍ ວ່າດ້ວຍ ການລາຍງານກ່ຽວກັບ ການທາລຸນເດັກນ້ອຍແລ້ວ - ທ່ານອາດຈະລາຍງານ ໂດຍບໍ່ຕ້ອງ ບອກຊື່ທ່ານກໍໄດ້.

໔. ປ້ານວ່າ ພໍ່ແມ່ ອາດຈະໂກດແຄ້ນຫລາຍຕື່ມຂຶ້ນ ແລ້ວກໍຈະລົງໂທດເດັກນ້ອຍໜັກກວ່າເກົ່າ.

໕. ບໍ່ຕ້ອງການເຂົ້າໄປກ່ຽວຂ້ອງ.

ຢ່າເປັນຄົນທີ່ບໍ່ປາກ - ການທາລຸນເດັກນ້ອຍຈະມີຢູ່ຕລອດໄປ ຈົນກວ່າຄົນຈະເອົາຊນະຄວາມຮູ້ສຶກ ທີ່ກ່າວມາຂ້າງເທິງ - ເດັກນ້ອຍຈະເກີດມີຄວາມປ້ານກົວທັງດ້ານ ຈິດໃຈແລະຮ່າງກາຍ ແລະ ເຂົາອາດຈະເຖິງແກ່ຄວາມຕາຍໄດ້ ນອກຈາກວ່າຄົນສ່ວນຫລາຍ ຈະຕ້ອງຫັນໜ້າມາຮັບຜິດຊອບທັງດ້ານ ກົດໝາຍ ແລະ ສິລທັມ.

ງ. ໃນປັດຈຸບັນ ກໍຣະນີກ່ຽວກັບການທາລຸນ ເດັກນ້ອຍມີຕື່ມຂຶ້ນເລື້ອຍໆ ຍ້ອນວ່າ ຫລາຍຄົນມີບັນຫາທາງດ້ານຄອບຄົວ.

໑. ມີຄອບຄົວທີ່ມີແຕ່ພໍ່ ຫລື ມີແຕ່ແມ່ ( single parents ) ຫລາຍຂຶ້ນ

໒. ການແຍກກັນຢູ່ ແລະ ການຂາດການອົບຮົມທາງດ້ານຄອບຄົວ ຍ້ອນການ ໂຍກຍ້າຍໄປຢູ່ຕ່າງໄກກັນ

໓. ການຊ່ວຍເຫລືອກັນ ຣະຫວ່າງເພື່ອນບ້ານໃກ້ຄຽງກັນ ກໍຫລຸດນ້ອຍລົງໄປ. ຍ້ອນວ່າ ແມ່ບ້ານ (ເມັຍ) ຕ້ອງອອກໄປເຮັດວຽກນອກບ້ານ.

໔. ບັນຫາກ່ຽວກັບ ເສຖກິດ ແລະ ສັງຄົມ.





ERIC Full Text Provided by ERIC

໓. ວິທີເບິ່ງວ່າ ເດັກນ້ອຍທີ່ໄດ້ຖືກການທາລຸນ.

໑. ຕາມຮ່າງກາຍ - ການເຈັບເປັນອາດຈະບໍ່ແມ່ນເກີດຈາກຜູ້ໃຫຍ່ ໂດຍກົງແຕ່ອາດຈະເກີດຂຶ້ນຍ້ອນການບໍ່ເອົາໃຈໃສ່.

ກ. ບາດແຜ - ຕາມໜ້າເອິກ, ຕາ, ບາດແຜໃຫຍ່ຢູ່ຕາມແຂນ, ຫລັງ, ກົກຂາອ່ອນ ບໍລິເວັນ ອະໄວຍະເພດ

ຂໍ້ສັງເກດ : ເດັກນ້ອຍຂອງພວກທີ່ມາຈາກ ສະເປັນ ແລະ ທາງພາກພື້ນຕະວັນອອກ ( oriental ) ມັກຈະມີປານຢູ່ຕາມສັນຫລັງ ແລວກໍຈະລົບໄປເອງ ເມື່ອເດັກນ້ອຍໃຫຍ່ຂຶ້ນ.

ຂ. ຮອຍຂອງທີ່ໃຊ້ຕີ.

ຄ. ຮອຍແຂ້ວກັດ.

ງ. ຮອຍໄໝ້ - ນ້ຳຮ້ອນລວກ ຫລື ສິ່ງອື່ນໆ.

ຈ. ຮອຍແຕກ - ຮອຍຫັກ ຫລື ບິດ

ສ. ຮອຍເຊືອກ - ບາງທີໃຊ້ໃນການແອບໃຊ້ຫ້ອງນ້ຳ

ຊ. ຕຸ່ມໜົມ ຊຶ່ງເກີດຈາກໄດເປີ້ (ຜ້າອ້ອມ)

ຍ. ມີບັນຫາໃນການຍ່າງ ແລະ ນັ່ງ - ຊຶ່ງເກີດຈາກການທາລຸນທາງເພດ - ຈຶ່ງບັນທຶກຮອຍຕ່າງໆ ແລະ ບາດແຜ.

໒. ການສະແດງອອກທາງດ້ານຄວາມປະພຶດ - ການສະແດງອອກບາງຢ່າງ ອາດຈະບໍ່ແມ່ນຍ້ອນການຖືກທາລຸນ ມັນອາດຈະຍ້ອນບັນຫາຢ່າງອື່ນ ຊຶ່ງກໍຄວນຈະຕ້ອງສືບຖາມເບິ່ງຄືກັນ.

ກ. ເຈັບທ້ອງ, ເຈັບຫົວ, ບັນຫາກ່ຽວກັບລຳໄສ້

ຂ. ເດັກນ້ອຍສະແດງອອກມາເປັນຜູ້ ລຸກລານໝູ່ ຫລື ບໍ່ສູ້ຄົນ.

ຄ. ບໍ່ມັກໝູ່.

ງ. ບໍ່ກ້າເບິ່ງໜ້າຜູ້ອື່ນ.

ຈ. ນິໄສ ມັກຈົ່ມ - ຮ້ອງທຸກ

ສ. ນິໄສ ບໍ່ກ້າສູ້ - ກາຍເປັນຄືກັບເດັກນ້ອຍເກີດໃໝ່.

ຊ. ເຫງົາ - ບໍ່ມ່ວນ ບໍ່ຊື່ນ.

ຍ. ນິໄສ ຜິດປົກກະຕິ - ເຊໄປເຊມາ, ດູດນິ້ວ, ແລະ ອື່ນໆ.

ດ. ໂຣກກ່ຽວກັບການນອນ - ຂີ້ຢ້ານ, ຝັນຮ້າຍ, ບໍ່ຢາກໄປນອນຍ້ອນ ຢ້ານຖືກຂົ່ມຂືນທາງເພດ.

ຕ. ຮ່າງກາຍບໍ່ສົມບູນ ເທົ່າທີ່ຄວນ.

ຖ. ບໍ່ຢາກກິນເຂົ້າກິນນ້ຳ,

ທ. ຫິວຕລອດເວລາ - ລັກຂອງກິນ.

ນ. ເຊື່ອງຊຶມ ມີແຕ່ເນືອຍ.

ບ. ສຸຂພາບ ອ່ອນແອ.

ປ. ຜິດປົກກະຕິ - ຮູ້ເຣື່ອງຕ່າງໆກ່ຽວກັບການຮ່ວມເພດ.

ຜ. ຫລິ້ນຕຸ໊ກກະຕາ ຫລື ສະແດງການທາລຸນຂົ່ມເຫງຕ່າງໆ.

ຝ. ການສະແດງອອກມາ ແບບຜູ້ໃຫຍ່ຈົນເກີນໄປ.

ສ. ປາກເກັ່ງ

ຟ. ໃສ່ເສື້ອຜ້າຫລາຍຊັ້ນ ເພື່ອປົກປິດຮອຍຂ້ຽນຕີ.

ນ. ພໍ່ແມ່ທີ່ເອົາໃຈໃສ່ຈົນເກີນໄປ ຫລື ບໍ່ສົນໃຈກ່ຽວກັບບາດແຜ ຫລື ບັນຫາອື່ນໆຂອງເດັກນ້ອຍ

໓. ໃຫ້ລະວັງ ຫລື ເຂົ້າໃຈຢູ່ສເມີວ່າເດັກນ້ອຍໆ ກໍ່ຮູ້ຈັກປົກປິດ ເພື່ອພໍ່ແມ່ :

ກ. ເພື່ອປົກປ້ອງ ພໍ່ແມ່.

ຂ. ຍ້ອນຄວາມຢ້ານກົວ.

ຄ. ຍອມຮັບວ່າ ໂຕເອງເຮັດຜິດ ຈຶ່ງຖືກທຳໂທດ.

ງ. ຖ້າຫາກເປັນເທື່ອທຳອິດ, ເດັກນ້ອຍອາດຈະບອກຄວາມຈິງ.

ສ. ການລາຍງານ :

໑. ຢູ່ໃສ ຫລື ໄປຫາໃຜ.

ກ. ສູນບໍຣິການເພື່ອປົກປ້ອງເດັກນ້ອຍ Child Protective Services
ໂທຣະສັພ : 560-2191 ຫລືໝູນ " o " ແລ້ວຖາມຫາ
ZENITH 72191 (ບໍ່ເສັຽເງິນ)

ຂ. ຜູ້ກວດກາ ໃບອານຸຍາດ.

໒. ລາຍງານຫຍັງແດ່.

ກ. ກົດໝາຍໃຫ້ລາຍງານ ກໍຣະນີທີ່ສົງສັຍວ່າ ມີການທາຣຸນເດັກນ້ອຍ ພາຍໃນ ໔໘ ຊົ່ວໂມງ. ເຖິງແມ່ນວ່າ ຈະບໍ່ມີຫລັກຖານແນ່ນອນກໍ່ຕາມ - ຫລື ທ່ານຍັງບໍ່ແນ່ໃຈກໍ່ຕາມ ຂໍໃຫ້ລາຍງານໂລດ ເພາະວ່າຜູ້ສອບສວນ ໄດ້ຮັບການຮຽນແລະອົບຮົມ ມາຢ່າງດີແລ້ວ ແລະຮູ້ວ່າ ຈຳເປັນ ຫລື ສົມຄວນທີ່ຈະເຂົ້າໄປກ່ຽວຂ້ອງ ຫລື ບໍ່ ?

ຂ. ໃຫ້ລາຍງານ ກ່ຽວກັບເດັກນ້ອຍທີ່ຖືກປະຖິ້ມ ຫລັງຈາກໄດ້ຖາມແລະຮ້ອງໄປຫາ ບຸຄົນຕ່າງໆທີ່ມີຊື່ຢູ່ໃນແບບຟອມ ເພື່ອແຈ້ງຂ່າວ ( Identification Form ) ແລ້ວ ໃຫ້ລໍຖ້າຊົ່ວຣະຍະນຶ່ງ ແລ້ວໃຫ້ຮ້ອງໄປຫາຕຳຣວດ.

ຊ. ຄວາມຂ້ອງໃຈ ຫລື ຮ້ອງທຸກກ່ຽວກັບຜູ້ເບິ່ງແຍງເດັກນ້ອຍ.

໑. ພໍ່ແມ່ຂອງເດັກນ້ອຍມີສິດ ແລະ ຄວາມຮັບຜິດຊອບ ທີ່ຈະຮ້ອງທຸກກ່ຽວກັບຜູ້ເບິ່ງແຍງເດັກນ້ອຍ. ຖ້າຫາກ ພໍ່ແມ່ຂອງເດັກນ້ອຍ ຮ້ອງທຸກຕໍ່ທ່ານກ່ຽວກັບຜູ້ເບິ່ງແຍງເດັກນ້ອຍຄົນອື່ນ ໃຫ້ທ່ານແນະນຳເຂົາເຈົ້າ ຮ້ອງຫາອົງການ ບ່ອນອອກໃບອານຸຍາດ.

໒. ຜູ້ເບິ່ງແຍງເດັກນ້ອຍ ມີຄວາມຮັບຜິດຊອບຕໍ່ ພໍ່ແມ່, ເດັກນ້ອຍ ແລະ ຜູ້ເບິ່ງແຍງເດັກນ້ອຍຄົນອື່ນ - ມັນເປັນການຍາກ ທີ່ຈະໃຫ້ຜູ້ລ້ຽງເດັກນ້ອຍທັງໝົດທຸກຄົນ ປະຕິບັດຕາມທຸກຢ່າງ ຕາມມາຕຖານທີ່ວາງໄວ້ໃນກົດຣະບຽບ.

໓. ໃນຖານະທີ່ເປັນຜູ້ໃຫ້ ບໍຣິການ ການລ້ຽງເດັກນ້ອຍ ພວກເຮົາຈະຕ້ອງພຍາຍາມ ຄວບຄຸມໂຕຂອງພວກເຮົາເອງ ຈາກສະພາບການທີ່ຈະນຳໄປສູ່ການທາຣຸນຂົ່ມເຫງ/ປະຖິ້ມ ເດັກນ້ອຍ ທີ່ພວກເຮົາເບິ່ງແຍງຢູ່.

ກ. ວຽກຫລາຍ/ຫນັກຈົນເກີນໄປ - ຢ່າຮັບເອົາເດັກນ້ອຍຫລາຍເກີນກວ່າ ຄວາມສາມາດຂອງທ່ານ ຫລື ຫລາຍກວ່າຈຳນວນ ທີ່ໄດ້ບອກໄວ້ໃນໃບອານຸຍາດ.

ຂ. ຄວາມກົດດັນ (ອຸກອັ່ງ) - ຖ້າຫາກທ່ານມີຄວາມກົດດັນ ຫລາຍເກີນຂອບເຂດແລ້ວ ອາດຈະເຮັດໃຫ້ທ່ານລືມໂຕ ຫລື ຄວບຄຸມໂຕເອງບໍ່ໄດ້ ເມື່ອມີບັນຫາກັບເດັກນ້ອຍ ທີ່ມີຄວາມປະພຶດເສັຍ. ໃຫ້ຣະວັງໂຕຂອງທ່ານກ່ຽວກັບບັນຫານີ້.

ຄ. ຫມົດຄວາມອົດທົນ - ຣະວັງຮັກສາ ໂຕຂອງທ່ານຈາກສະຖານະການ ທີ່ທ່ານບໍ່ສາມາດຈະເບິ່ງແຍງເດັກນ້ອຍຕໍ່ໄປໄດ້ ທ່ານຄວນຈະພັກຜ່ອນ ເຮັດວຽກແນວອື່ນ ເພື່ອໃຫ້ຜ່ອນຄາຍຄວາມຕຶງຄຽດ ແລະ ເຮັດວຽກທີ່ຫ່າງໄກຈາກເດັກນ້ອຍ.

໔. ໃຫ້ຣະວັງ ໃນການຈັບໂຕຂອງເດັກນ້ອຍ ເບິ່ງໃຫ້ຢູ່ໃນລັກສະນະ ທີ່ຈະບໍ່ເຮັດໃຫ້ເດັກນ້ອຍໄດ້ຮັບຄວາມເຈັບປວດ.

ກ. ທ່ານເດັດຂາດ ຢ່າຈັບເດັກນ້ອຍສັ່ນ ເພາະອາດຈະເຮັດໃຫ້ເດັກນ້ອຍ ເສັຍສມອງ ຫລື ອາດຈະເຖິງຕາຍໄດ້ !

ຂ. ຢ່າຫິ້ວແຂນເດັກນ້ອຍ ເພາະອາດຈະເຮັດໃຫ້ແຂນຫລຸດໄດ້ !

ຄ. ຖ້າທ່ານເຫັນ ພໍ່ແມ່ ຂອງເດັກນ້ອຍປະຕິບັດດັ່ງກ່າວ ຕໍ່ລູກເຂົາເຈົ້າ ໃຫ້ທ່ານບອກພໍ່ແມ່ຂອງເດັກນ້ອຍວ່າມັນມີອັນຕລາຍ ຮ້າຍແຮງພຽງໃດ.

໕. ສິ່ງທີ່ສຳຄັນກໍຄື ໃຫ້ຕິດຕໍ່ກັບເຈົ້າໜ້າທີ່ ທີ່ອອກໃບອານຸຍາດ ກ່ຽວກັບບັນຫາຂັດແຍ້ງຕ່າງໆ ທີ່ທ່ານມີກັບ ພໍ່ແມ່ຂອງເດັກນ້ອຍ ເຈົ້າໜ້າທີ່ຈະເປັນຜູ້ບັນທຶກການລາຍງານຂອງທ່ານ ແລະ ເຂົາເຈົ້າຈະເປັນຜູ້ຕັດສິນວ່າ ຈະປະຕິບັດແນວໃດ - ຈຶ່ງປ້ອງກັນໂຕຂອງທ່ານເອງ.

ຢ. ສິ່ງທີ່ຈະຕິດຕາມມາ.

໑. ສູນບໍຣິການ ທີ່ໃຫ້ຄວາມຄຸ້ມຄອງແກ່ເດັກນ້ອຍ ຈະໄປສືບສວນເບິ່ງຢູ່ບ້ານເຮືອນຂອງທີ່ເກີດເຫດ - ຈຸດປະສົງບໍ່ແມ່ນເພື່ອຈະລົງໂທດ ແຕ່ເພື່ອຊ່ວຍເຫລືອເດັກນ້ອຍ ແລະ ຄອບຄົວທີ່ມີບັນຫານັ້ນ.

໒. ຖ້າເຫັນວ່າ ເດັກນ້ອຍຢູ່ໃນຣະຫວ່າງອັນຕລາຍ - ເຈົ້າໜ້າທີ່ ກໍຈະເອົາເດັກນ້ອຍ ອອກຈາກພໍ່ແມ່ ແລ້ວເອົາໄປມອບໃຫ້ເຮືອນລ້ຽງເດັກນ້ອຍຢູ່ Hillcrest Receiving Home ເປັນຜູ້ເບິ່ງແຍງ ຫລື ເອົາໄປມອບໃຫ້ພີ່ນ້ອງຂອງຄອບຄົວນັ້ນ ເບິ່ງແຍງຈົນກວ່າເຂົາເຈົ້າ (ເຈົ້າໜ້າທີ່) ເຫັນວ່າຄອບຄົວນັ້ນ ຈະບໍ່ເປັນອັນຕລາຍ ຕໍ່ເດັກນ້ອຍ.

ນ. ພໍ່ແມ່ອາດຈະຕ້ອງ ເຂົ້າຮັບການອົບຮົມ ຫລື ຮຽນກ່ຽວກັບການເປັນພໍ່ແມ່ ກ່ອນທີ່ຈະໄດ້ລູກເຂົາກັບຄືນມາ.

ກ. ພໍ່ແມ່ ສ່ວນຫລາຍແລ້ວບໍ່ຢາກລົງໂທດລູກ ແຕ່ຊ່ວຍໂຕເອງບໍ່ໄດ້ ບໍ່ຮູ້ຈະເລືອກທາງອອກຢ່າງໃດດີ.

ຂ. ພວກທີ່ ທາຣຸນ/ຂົ່ມເຫງ ເດັກນ້ອຍສ່ວນຫລາຍແລ້ວ ແມ່ນເຂົາເຈົ້າເອງ ກໍເຄີຍຖືກທາຣຸນມາກ່ອນແຕ່ຕອນເຂົາເຈົ້າຍັງເປັນເດັກນ້ອຍ ເລີຍບໍ່ມີແນວທາງອື່ນມາໃຊ້ ໃນການແອບສັ່ງສອນບອກເຕືອນລູກ.

ຄ. ສ່ວນຫລາຍແລ້ວ ແມ່ນອາຣົມເສັຍ - ໃຈບໍ່ດີ - ມີບັນຫາ ແລະ ບໍ່ຍອມຮັບ ຄວາມບໍ່ຮູ້ດຽງສາຂອງເດັກນ້ອຍ.

ງ. ຢາກໃຫ້ເດັກນ້ອຍປະຕິບັດ ຕາມຄວາມຕ້ອງການທາງອາຣົມ ແລະ ໂກດຮ້າຍຄຽດແຄ້ນເວລາເດັກນ້ອຍບໍ່ປະຕິບັດຕາມ. ຕາມຄວາມເປັນຈິງ ສ່ວນຫລາຍແລ້ວ ເດັກນ້ອຍຈະກາຍເປັນຜູ້ເຮັດໃຫ້ຜູ້ໃຫຍ່ ປະຕິບັດຕາມອາຣົມຂອງເຂົາເຈົ້າຊໍ້າ.

ຈ. ພໍ່ແມ່ບາງຄົນ (ສ່ວນຫລາຍ) ຄິດວ່າ ຄວາມນິຍົມ ຫລື ຄຸນຄ່າຂອງໂຕເອງຍັງບໍ່ສູງພໍ ແລະຈະພຍາຍາມຕໍ່ຕ້ານທຸກສິ່ງທຸກຢ່າງ ທີ່ຈະເຮັດໃຫ້ກຽດແລະສັກສີ ຂອງໂຕເອງຫລຸດຕ່ຳລົງໄປອີກ ເຊັ່ນລູກມີຄວາມປະພຶດ ບໍ່ດີ.

ສ. ຕັ້ງຄວາມຫວັງຈາກລູກໄວ້ສູງ ເພື່ອໂຕເອງຈະໄດ້ມີຫນ້າມີຕາ.

ຊ. ລົງໂທດລູກຢ່າງຫນັກ ໃນເມື່ອລູກປະພຶດ ຫລື ປະຕິບັດໂຕບໍ່ຖືກຕ້ອງ.

ຍ. ພໍ່ແມ່ສ່ວນໃຫຍ່ ມັກຈະເບິ່ງ ຫລື ຄິດວ່າລູກຂອງໂຕເອງ ມີຄວາມຮູ້ ຄວາມສລາດເກີນກວ່າເຂົາເຈົ້າຈະມີໄດ້ ຕາມວັຍ (ອາຍຸຂອງເຂົາເຈົ້າ).

໔. ເຈົ້າຫນ້າທີ່ປະຊາສົງເຄາະ ແລະ ພວກອາສາສມັກ ທີ່ສົ່ງໄປຫາພໍ່ແມ່ນັ້ນກໍ່ເພື່ອ ໄປເປັນຄູ່ປຶກສາ ແລະ ຫມູ່ເພື່ອນ.

໕. ການເອົາເດັກນ້ອຍຫນີ ອອກຈາກເຮືອນດົນນານປານໃດນັ້ນ ຈະບໍ່ມີກຳນົດແນ່ນອນຕາຍໂຕ. ຈຸດປະສົງກໍ່ເພື່ອຢາກຈະເຮັດໃຫ້ ຄອບຄົວຢູ່ຮ່ວມກັນຢ່າງມີຄວາມສຸຂໄດ້ໄວທີ່ໃດ ແຫ່ງເປັນການດີ.

໖. ເມື່ອເຈົ້າຫນ້າທີ່ຄືນເດັກນ້ອຍໃຫ້ ບໍ່ຈຳເປັນຕ້ອງໃຫ້ມີທຸກສິ່ງທຸກຢ່າງຄົບຖ້ວນ ສົມບູນ. ສິ່ງສຳຄັນທີ່ສຸດແມ່ນ ໃຫ້ເດັກນ້ອຍມີຄວາມປອດພັຍ.

ກ. ມັກຈະໄດ້ຮັບການລາຍງານກັບຄືນມາເລື້ອຍໆ ເມື່ອສົ່ງເດັກນ້ອຍກັບຄືນໄປຢູ່ໃນຄອບຄົວທີ່ຍັງມີບັນຫາ ແຕ່ນັ້ນກໍ່ເປັນເຮື່ອງທັມມະດາ (ຂໍແຕ່ໃຫ້ເດັກນ້ອຍປອດພັຍ) ແຕ່ທາງການຈະບໍ່ສົ່ງລູກຄືນໃຫ້ ເມື່ອຄົ້ນພົບວ່າ ພໍ່ແມ່ ເປັນຄົນທີ່ມີຈິດໃຈຜິດປົກກະຕິ (໑໐% ຂຶ້ນໄປ) ຫລືວ່າ ບໍ່ມີຄວາມສາມາດຈະເບິ່ງແຍງລູກໄດ້.

ຂ. ເມື່ອມີການລາຍງານແຕ່ລະເທື່ອ ທາງເຈົ້າຫນ້າທີ່ຈະເກັບມ້ຽນໄວ້ໃນແຟ້ມ. ເມື່ອໄດ້ - ຫລັກຖານພຽງພໍຄົບຖ້ວນວ່າມີການທາຣຸນ ແລະ ຂົ່ມເຫັງເດັກຕິດຕໍ່ກັນຢູ່ບໍ່ເຊົາແລ້ວ ທາງເຈົ້າຫນ້າທີ່ ຈະແຍກເອົາລູກຫນີເປັນການຖາວອນໄປເລີຍ.

ຄ. ພໍ່ແມ່ຂອງເດັກນ້ອຍເອງ ກໍ່ຕ້ອງການຄວາມຊ່ວຍເຫລືອ - ແຕ່ກໍ່ຈະ ບໍ່ໄດ້ຮັບຄວາມຊ່ວຍເຫລືອທີ່ຕ້ອງການນັ້ນ ຖ້າຫາກວ່າບໍ່ມີການລາຍງານ ສິ່ງທີ່ຜິດປົກກະຕິຕ່າງໆ ທີ່ເກີດຂຶ້ນ.

໗. ໃນກໍຣະນີ ທີ່ມີການທາຣຸນ/ຂົ່ມເຫັງເກີດຂຶ້ນ ທາງການກໍ່ມີການຊ່ວຍເຫລືອເພື່ອບັນເທົາທຸກ ໃນເມື່ອມີຄວາມກົດດັນ ທາງດ້ານຕ່າງໆເກີດຂຶ້ນ ມັນອາດຈະເຮັດໃຫ້ພູກຽວບໍ່ສບາຍ, ມີການຕາຍເກີດຂຶ້ນໃນຄອບຄົວ, ຫຍ່າຮ້າງ, ມີພາຣະຫນັກເກີນກວ່າຈະແກ້ໄຂໄດ້ ແລະ ອື່ນໆ.

# ສະພາບເຫດການສຸກເສີນຕ່າງໆ




172

ERIC
Full Text Provided by ERIC

ບົດຮຽນ ທີ ໑໒.

# ກໍຣະນີ ທີ່ມີເຫດສຸກເສີນ ເກີດຂຶ້ນ

໑. ການວາງແຜນໄວ້ລ່ວງໜ້າ.
ທ່ານຕ້ອງຮູ້ຈັກໂຮງໝໍ ທີ່ຢູ່ໃກ້ບ້ານຂອງທ່ານ (ໃຊ້ເວລາປະມານ ໕ ນາທີ) ໃຫ້ໄປຢ້ຽມຢາມຫ້ອງສຸກເສີນ ຂອງໂຮງໝໍ ແລະ ຮຽນຮູ້ວິທີການ ນຳເອົາຄົນເຈັບເຂົ້າໄປຮັກສາ. ໃຫ້ຮ້ອງຂໍຄົນຂ້າງຄຽງ ທີ່ເວົ້າພາສາອັງກິດໄດ້ ມາຊ່ວຍທ່ານໃນກໍຣະນີ ທີ່ມີເຫດສຸກເສີນເກີດຂຶ້ນ. ທ່ານຄິດວ່າ ຈະໃຊ້ພາຫານະຊະນິດໃດ ? (ແທັກຊີ່ ຖ້າຫາກຈຳເປັນ).

ຄວນວາງແຜນໄວ້ລ່ວງໜ້າ ວ່າທ່ານຈະປະຕິບັດແນວໃດ ຖ້າຫາກມີເຫດເຫຼົ່ານັ້ນເກີດຂຶ້ນ ແລະ ໃຫ້ທ່ານ ປຶກສາຫາລືກັບພໍ່ແມ່ຂອງເດັກນ້ອຍເສັຽກ່ອນ ວ່າເຂົາເຈົ້າມີຄວາມຄິດຄວາມເຫັນແນວໃດ ? ໃຫ້ຈົດຊື່, ໂທຣະສັພ ແລະ ບ່ອນຢູ່ ຂອງທ່ານໝໍໄວ້ ໃຫ້ຖາມກ່ຽວກັບ ອາການແພ້ຕ່າງໆ ຂອງເດັກນ້ອຍແຕ່ລະຄົນ ເຊັ່ນການແພ້ຢາ Penecillin . ໃຫ້ຂຽນຂໍ້ຄວາມເຫຼົ່ານັ້ນໄວ້ໃນແບບຟອມ ຊຶ່ງບອກເຖິງລັກສະນະຕ່າງໆກ່ຽວກັບເຫດການ ແລະ ໃຫ້ກອກໃສ່ຟອມທີ່ໃຫ້ການອານຸຍາດປິ່ນປົວໃນເວລາ ມີເຫດຈຳເປັນເກີດຂຶ້ນ ແລະໃຫ້ຕິດໄວ້ກັບໃບສັນຍາ ຣະຫວ່າງທ່ານ ແລະ ຜູ້ປົກຄອງ ເມື່ອເປັນການປ້ອງກັນຕົວຂອງທ່ານເອງ ແລະ ເດັກນ້ອຍຊຶ່ງຢູ່ໃນຄວາມດູແລຂອງທ່ານ.

໒. ການຕິດຕໍ່.
ໃນເມື່ອມີເຫດສຸກເສີນອັນຮ້າຍແຮງເກີດຂຶ້ນ ຈົ່ງພະຍາຍາມຄວບຄຸມສະຕິໄວ້ໃຫ້ດີ ໃຫ້ຕິດໝາຍເລກໂທຣະສັພທີ່ກ່ຽວກັບ ການເກີດເຫດສຸກເສີນໄວ້ໃນບ່ອນທີ່ເຫັນໄດ້ງ່າຍ ໃຫ້ໂທຣະສັພຂໍຄວາມແນະນຳ ໃນການຮັກສາຈາກບຸກຄົນທີ່ກ່ຽວຂ້ອງໃນທັນທີ. ໃຫ້ບອກລັກສະນະຂອງເຫດການຕ່າງໆທີ່ເກີດຂຶ້ນ ເກີດຂຶ້ນທຸກໆຢ່າງເທົ່າທີ່ທ່ານຈະບອກໄດ້ ແລະ ໃນເວລາດຽວກັນນັ້ນ ໃຫ້ຕິດຕໍ່ພໍ່ແມ່ຂອງເດັກນ້ອຍເຊັ່ນດຽວກັນ. ບຸກຄົນທີ່ຈະເບິ່ງແຍງເດັກນ້ອຍແທນທ່ານ (ໃນຂະນະທີ່ທ່ານກຳລັງຮັກສາເດັກນ້ອຍຜູ້ຖືກບາດເຈັບ ຫຼື ອຸບັດຕິເຫດ) ຢ່າງຕ່ຳຈະຕ້ອງເປັນຜູ້ໃຫຍ່ ທີ່ມີອາຍຸ ໑໘ ປີຂຶ້ນໄປ.

ໃນກໍຣະນີ ທີ່ທ່ານບໍ່ສາມາດຈະຊອກຫາຄົນທີ່ເວົ້າພາສາອັງກິດມາຊ່ວຍທ່ານໄດ້ ທ່ານຈຳເປັນຈະຕ້ອງຊ່ວຍຕົວຂອງທ່ານເອງ ໂດຍການຂຽນຂໍ້ຄວາມເວົ້າຕ່າງໆເປັນພາສາອັງກິດ ຕິດນັ້ນໄວ້ໃກ້ໆກັບໂທຣະສັພ ແລະ ໃຫ້ຫັດອ່ານໃຫ້ໄດ້ກັບປາກ. ຂໍໃຫ້ຈຳໄວ້ອີກວ່າໃນເມື່ອທ່ານລາຍງານເຫດສຸກເສີນຈະຕ້ອງເວົ້າຊ້າໆ ແລະ ໃຫ້ແຈ່ມແຈ້ງດີ.

ໃຫ້ໃຊ້ນຳເບີ 911 ແຕ່ໃນກໍຣະນີທີ່ເກີດເຫດສຸກເສີນເທົ່ານັ້ນ ບຸກຄົນທີ່ໝຸນເລກ "0" ເຈົ້າໜ້າທີ່ຈະຕິດຕໍ່ໃຫ້ທ່ານໄດ້ມີໂອກາດ ໄດ້ເວົ້າກັບກົມດັບເພີງ, ກົມກູ້ໄພ, ກົມຕຳຣວດ, ກົມຕຳຣວດທາງຫຼວງ ຫຼື ຣົຖພະຍາບານ.

ຕົວຢ່າງ : "I would like to report a fire/seizure/drowning etc...
I live at 5400 Eartquke Road, Apt.# 4, San Diego near 54th
Street and University Avenue (major cross street)
I speak no English"

173

ໃນກໍຣະນີ ທີ່ມີການເບື່ອເມົາເກີດຂຶ້ນ ໃຫ້ຕິດຕໍ່ສູນກາງກ່ຽວກັບການເບື່ອເມົາ ໂດຍຮ້ອງໄປຫາ ນຳເບີ 294-6000 ຄວນມີນ້ຳຢາ syrup of Ipecac ໄວ້ປະຈຳບ້ານ. ຢ່າໄດ້ເອົານ້ຳຢາເຫລົ່ານີ້ໃຫ້ເດັກນ້ອຍກິນ ຈົນກວ່າທ່ານຈະໄດ້ ຮັບການແນະນຳຈາກ ທ່ານໝໍເສັຽກ່ອນ.

ທາງສູນກາງກັນເບື່ອເມົາ ມີນາຍພາສາລາວ ແລະ ພາສາວຽດນາມໄວ້ໃຫ້ທ່ານ ເມື່ອທ່ານຮ້ອງໄປສູນກາງ ໃຫ້ບອກພນັກງານຕອນຮັບ Receptionist ວ່າທ່ານຕ້ອງການນາຍພາສາຊນິດໃດ ?.

ຕົວຢ່າງ : I would like to report a poisoning. Speak no English I need a Laotian Translator, The infant/child drank rat poison, Chlorox bleach, Insecticide etc..... .

ໃຫ້ນຳເອົາ ຂວດແກ້ວ ຫລື ກ້ອງຕ່າງໆທີ່ທ່ານສົງໃສວ່າເດັກນ້ອຍກິນ ຫລື ດື່ມໄປນັ້ນ ໃຫ້ທ່ານໝໍ.

ບົດຮຽນ ທີ ໑໘.

## ການແນະນຳກ່ຽວກັບ ການປະຖົມພະຍາບານ

<u>ຂໍ້ສັງເກດ</u> : ພວກເຮົາມີຄວາມລັງເລໃຈ ໃນການໃຫ້ຂໍ້ມູນຕ່າງໆ ກ່ຽວກັບການປະຖົມພະຍາບານແກ່ ພວກທ່ານ ດັ່ງນັ້ນ ຂໍ້ຄວາມຕ່າງໆ ທີ່ຢູ່ຂ້າງລຸ່ມນີ້ ໃຊ້ພຽງແຕ່ເປັນການແນະນຳເທົ່ານັ້ນ.

ກ. ການປະຖົມພະຍາບານ.

໑. ຈົ່ງຕຽມພ້ອມກ່ຽວກັບເຫດການທີ່ເກີດຂຶ້ນ.
- ກ. ໃຫ້ມີເຄື່ອງປະຖົມພະຍາບານໄວ້
- ຂ. ໃຫ້ມີໃບອະນຸຍາດຈາກພໍ່ແມ່ຂອງເດັກ ແລະ ໝາຍເລກໂທລະສັບ ກ່ຽວກັບເຫດການສຸກ-ເສີນໄວ້ ໂດຍສະເພາະແມ່ນຄົນອື່ນ ເຮັດວຽກແທນທ່ານ.
- ຄ. ການຮຽນວິທີປະຖົມພະຍາບານ ມີປະໂຍດຫລາຍ ໂດຍສະເພາະກ່ຽວກັບ CPR ທ່ານແລະຜູ້ຊ່ວຍກໍຄວນຈະຮຽນໄວ້.
- ງ. ໃນກໍລະນີເກີດ ອຸບັດຕິເຫດ.
  - ໑. ໃຫ້ຮອງຫາ ພໍ່ແມ່ຂອງເດັກນ້ອຍທັນທີທັນໃດ ຫລື ຖ້າຮ້າຍແຮງໄປກວ່ານັ້ນ ໃຫ້ຮອງຫາ PARAMEDICS (911) <u>ຢ່າພະຍາຍາມຮັກສາເດັກນ້ອຍດ້ວຍຕົນເອງ.</u>
  - ໒. ໃຫ້ຂຽນ ຫລື ເກັບຫລັກຖານທຸກຢ່າງໄວ້ໃນປຶ້ມບັນທຶກຂອງທ່ານ ສິ່ງເຫລົ່ານີ້ ສຳຄັນຫລາຍ ໂດຍສະເພາະແມ່ນສຳຫລັບການປະກັນໄພ.

໒. ເຜິ້ງຕອດ.
- ກ. ໃຫ້ເອົາໄລເຜິ້ງອອກ - ໃຫ້ຄ່ອນໄປ-ຄ່ອນມາເສັຽກ່ອນ ຢ່າໄດ້ດຶງອອກປາດດຽວໂລດ ເພື່ອກັນບໍ່ໃຫ້ນ້ຳເຊື້ອຂອງເຜິ້ງ ໄຫລເຂົ້າໄປສູ່ຜິວໜັງຂອງທ່ານ.
- ຂ. ໃຫ້ເອົາ baking soda ໃສ່ບ່ອນເຜິ້ງຕອດ.
- ຄ. ໃຫ້ເອົານ້ຳກ້ອນ ຫລື ສິ່ງທີ່ເຢັນວາງທັບໄວ້ ເພື່ອບໍ່ໃຫ້ມັນບວມ
- ງ. ໃຫ້ຕິດຕໍ່ ພໍ່ແມ່ຂອງເດັກນ້ອຍທັນທີ ເພື່ອສອບຖາມກ່ຽວກັບການແພ້ ຕ່າງໆຕໍ່ເຜິ້ງຕອດ.
- ຈ. ຈົ່ງພະຍາຍາມເຝົ້າເບິ່ງອາການເຫລົ່ານີ້ :
  - ໑. ບໍ່ຮວມປາກ ຫລື ສົບໃຂ
  - ໒. ອາການຫາຍໃຈສັ້ນ ຫລື ຫາຍໃຈຍາກ.
  - ໓. ຖ້າຫາກອາການເຫລົ່ານີ້ ເກີດຂຶ້ນໃຫ້ຕິດຕໍ່ຫາທ່ານໝໍດ່ວນ.

໓. ໄຟໄໝ້. (ເລັກນ້ອຍ)
- ກ. ໃຫ້ເອົາຈຸ່ມນ້ຳເຢັນ - ຢ່າໃຊ້ butter ຫລື ນ້ຳກ້ອນ.
- ຂ. ສຳຫລັບປ້ອງກັນບໍ່ໃຫ້ແດດໄໝ້ ໃຫ້ໃຊ້ຜ້າກັ້ງ ຫລື ແນວກັນແສງແດດ
  - ໑. ເດັກນ້ອຍ ຈະຖືກແສງແດດໄໝ້ໄວ
  - ໒. ໃຫ້ຖາມພໍ່ແມ່ຂອງເດັກນ້ອຍ ກ່ຽວກັບອາການແພ້ຢາ ທີ່ໃຊ້ທາ

໔. ການລົ້ມ.

ກ. ອາການຂອງຮອຍຊໍ້າບວມ ຈະປາກົດມີຢູ່ຫລາຍໆຊົ່ວໂມງ ຫລື ຫລາຍມື້

໑. ໃຫ້ສັງເກດເບິ່ງຢ່າງຣະມັດຣະວັງ ກ່ຽວກັບການເຫງົານອນ, ການວິງວຽນ, ການເຈັບຫົວ ແລະ ອາການແສບລົ້ນທົ່ວໄປ ຕາມຕົນຕົວ,

໒. ອາການໜັກ : ເຊັ່ນອາການຮາກ (ຫລາຍກວ່າ ໒ ເທື່ອ) ຕາລອຍ, ອາຣົມອ່ອນແອ, ມີອາການສັ່ນ ຫລື ການໝົດສະຕິ (ບໍ່ມີຄວາມຮູ້ສຶກ).

ຂ. ຖ້າຫາກວ່າ ອາການດັ່ງກ່າວນີ້ເກີດຂຶ້ນ ໃຫ້ຮ້ອງໄປຫາ ພໍ່ແມ່ຂອງເດັກນ້ອຍທັນທີ ເພາະວ່າ ເດັກນ້ອຍ ຈະຕ້ອງໄດ້ຮັບການຮັກສາຈາກທ່ານໝໍ.

ຄ. ຈະຕ້ອງບອກໃຫ້ ພໍ່ແມ່ຂອງເດັກນ້ອຍຮູ້ກ່ຽວກັບ ອາການລົ້ມ (ເຖິງແມ່ນວ່າ ຈະບໍ່ມີອາການອັນໃດສແດງອອກມາກໍຕາມ) ຖ້າຫາກເດັກນ້ອຍເກີດມີຮອຍໂນ ຫລື ຮອຍຊໍ້າຕ່າງໆ ທ່ານຈະຕ້ອງບັນທຶກລາຍຣະອຽດເຫດການໄວ້. ທາງທີ່ດີ ທ່ານຄວນຈະບອກໃຫ້ພໍ່ແມ່ຂອງເດັກນ້ອຍຮູ້ໂດຍທັນທີ ຖ້າຫາກ ເຫດການເຫລົ່ານີ້ເກີດຂຶ້ນ.

UNIVERSITY OF CALIFORNIA
MEDICAL CENTER
SAN DIEGO

# WHAT ABOUT PLANTS?



## ທ່ານຮູ້ຈັກ ກ່ຽວກັບ
## ຕົ້ນໄມ້ ຕ່າງໆບໍ່ ?

SAN DIEGO REGIONAL

## POISON CENTER

**543-6000**

In cooperation with:

AMERICAN ASSOCIATION OF POISON CONTROL CENTERS

ERIC

# ທ່ານຮູ້ຈັກກ່ຽວກັບຕົ້ນໄມ້ຂອງທ່ານບໍ່?



ຕົ້ນໄມ້ທີ່ປູກຢູ່ຕາມບ້ານເຮືອນ ຈະກັບກາຍເປັນພັຍທັມມະຊາດ. ຈະນຳພາໃຫ້ເກີດເປັນພິສແກ່ເດັກນ້ອຍໄດ້. ລາຍການດັ່ງກ່າວຈະຊ່ວຍໃຫ້ທ່ານຮູ້ໃນການສັງເກດເບິ່ງວ່າຕົ້ນໄມ້ຊນິດໃດທີ່ມີພິສ ລາຍຊື່ຕົ້ນໄມ້ທີ່ມີຢູ່ໃນຂ້າງລຸ່ມນີ້ ແມ່ນຈຳນວນນຶ່ງ ທີ່ຖືກເວົ້າເຖິງຢູ່ເລື້ອຍໆ ເປັນການສຳຄັນທີ່ທ່ານຮູ້ຈັກຊື່ຂອງຕົ້ນໄມ້ ທຸກໆຕົ້ນຂອງທ່ານຢູ່ໃນບ້ານເຮືອນແລະສວນຫລັງບ້ານ. ເພາະວ່າພວກເຮົາບໍ່ສາມາດຈະສັນນະສູດຕົ້ນໄມ້ຂອງທ່ານໄດ້ແນ່ນອນ ຈາກການບັລຍາຍທາງໂທຣະສັພ.

ຖ້າຫາກທ່ານບໍ່ສາມາດ ຈະຊອກຫາຊື່ມັນໄດ້ ໂດຍສະເພາະຕົ້ນໄມ້ທີ່ຢູ່ໃນລາຍການນີ້ໃຫ້ຮ້ອງໄປ ຫລື ຂຽນຫາສູນກາງຄວບຄຸມຢາເບື່ອຖ້າຫາກທ່ານບໍ່ຮູ້ຈັກຊື່ຂອງຕົ້ນໄມ້ໃຫ້ທ່ານເອົາໄປໃຫ້ພວກສັງເກດຕົ້ນໄມ້ ແລະ ສູນກາງຂອງພນັກງານຄົນສວນ ທີ່ຢູ່ໃກ້ບ້ານຂອງທ່ານເບິ່ງໃຫ້.



ERIC

# ຈຳພວກຕົ້ນໄມ້ທີ່ມີພິສ

ຕົ້ນໄມ້ທີ່ຢູ່ຂ້າງລຸ່ມນີ້ ໄດ້ສົມມະສຸດວ່າ "ເປ [illegible]" (ມີພິສ ທີ່ອາດຈະເປັນອັນຕລາຍ) ຈຳພວກຕົ້ນໄມ້ເຫລົ່ານີ້ ໄດ້ບັນຈຸພິສເບື່ອຕ່າງໆ ຢ່າງກວ້າງຂວາງແລະ ອາການເບື່ອ ອາດຈະແຕກຕ່າງກັນເຊັ່ນ : ເຈັບທ້ອງຄ່ອຍໆ, ເກີດຕຸ່ມຂຶ້ນຕາມຜິວໜັງ, ປາກໃຄ່ໂພງ ແລະຣະບົບການຫາຍໃຈ, ໝາກໄຂ່ຫລັງ ອະວັຍວະອື່ນໆເກີດອາການອັກເສບ.

ທາງສູນກາງຄວບຄຸມການເບື່ອເມົາ ຈະສາມາດເອົາລາຍຣະອຽດນີ້ໃຫ້ທ່ານໄດ້ ກ່ຽວກັບເຣື່ອງນີ້ ຫລື ຕົ້ນໄມ້ສນິດອື່ນໆທີ່ສາມາດເປັນພິສ ແລະ ບາງທີກໍ່ບໍ່ມີຢູ່ໃນບັນຊີລາຍຊື່ນີ້. ຕົ້ນໄມ້ເຫລົ່ານີ້ ບໍ່ແມ່ນວ່າຈະເກີດເປັນພິສໄດ້ໂລດ ເວັ້ນເສັຍແຕ່ວ່າ ທ່ານຈະກິນເຂົ້າໄປໃນຈຳນວນຫລາຍໆເທົ່ານັ້ນ.

Anemone
Angel Trumpet Tree
Apricot-Kernels
Arrowhead
Avocado-Leaves
Azaleas
Betel Nut Palm
Bittersweet
Buckeye
Buttercups
Caladium
Calla Lily
Castor Bean
Cherries-Wild & Cultivated
Crocus, Autumn
Daffodil
Daphne
Delphinium
Devil's Ivy
Dieffenbachia (Dumb Cane)
Elderberry
Elephant Ear
English Ivy
Four O'Clock
Foxglove
Holly Berries
Horsetail Reed
Hyacinth
Hydrangea
Iris
Ivy (Boston, English and Others)
Jack-In-The-Pulpit
Jequirity Bean
Jerusalem Cherry
Jessamine (Jasmine)
Jimson Weed (Thorn Apple)
Jonquil
Lantana Camara (Red Sage)
Larkspur
Laurels
Lily-Of-The-Valley
Lobelia
Marijuana
Mayapple
Mistletoe
Moonseed
Monkshood
Morning Glory
Mother-In-Law Plant
Mushroom
Narcissus
Nightshade
Oleander
Periwinkle
Peyote (mescal)
Philodendron
Poison Hemlock
Poison Ivy
Poison Oak
Poppy (Calif. Poppy Excepted)
Pokeweed
Potato-Sprouts
Primrose
Ranunculus
Rhododendron
Rhubarb-Blade
Rosary Pea
Star-Of-Bethlehem
Sweet Pea
Tobacco
Tomato-Vines
Tulip
Water Hemlock
Wisteria
Yew

# ຕົ້ນໄມ້ທີ່ບໍ່ເປັນພິສ

ຈຳພວກຕົ້ນໄມ້ທີ່ຢູ່ຕາມຂ້າງລຸ່ມນີ້ ໄດ້ພິຈາຣະນາຢ່າງຖີ່ຖ້ວນແລ້ວວ່າ ບໍ່ເປັນພິສ (ປອດພັຍ ແລະ ບໍ່ເບື່ອ). ຈາກການກິນ ຫລື ການຈັບຕົ້ນໄມ້ເຫລົ່ານີ້ບໍ່ສາມາດຈະເຮັດໃຫ້ເບື່ອ ແຕ່ວ່າອາດຈະສາມາດເຮັດໃຫ້ເບື່ອຂຶ້ນມາໂດຍການບໍ່ ຄາດຄິດ ບໍ່ຄິດບໍ່ຝັນ ດ້ວຍລັກສນະແລະທາດຂອງແຕ່ລະຄົນ.

## NON-TOXIC

The following plants are consid‹‹ l essentially non-toxic (safe, not poisonous). Sy..nptoms from eating or handling these plants are unlikely, but any plant may cause an unexpected reacti›n in certain individuals.

- Abelia
- Absynnian Sword Lily
- African Daisy
- African Palm
- African Violet
- Airplane Plant
- Aluminum Plant
- Aralia
- Araucaria
- Asparagus Fern (Dermatitis)
- Aspidistra (Cast Iron Plant)
- Aster
- Baby's Tears
- Bachelor Buttons
- Bamboo
- Begonia
- Birds Nest Fern
- Blood Leaf Plant
- Boston Ferns
- Bougainvillea
- Cactus-Certain Varieties
- California Holly
- California Poppy
- Camelia
- Christmas Cactus
- Coleus
- Corn Plant
- Crab Apples
- Creeping Charlie
- Creeping Jennie, Moneywort, Lysima
- Croton (House Variety)
- Dahlia
- Daisies
- Dandelion
- Dogwood
- Donkey Tail
- Dracaena
- Easter Lily
- Echeveria
- Eucalyptus (Caution)
- Eugenia
- Gardenia
- Grape Ivy
- Hedge Apples
- Hens & Chicks
- Honeysuckle
- Hoya
- Jade Plant
- Kalanchoe
- Lily (Day, Easter Or Tiger)
- Lipstick Plant
- Magnolia
- Marigold
- Monkey Plant
- Mother-In-Law-Tongue
- Norfolk Island Pine
- Peperomia
- Petunia
- Prayer Plant
- Purple Passion
- Pyracantha
- Rose
- Sansevieria
- Scheffelera
- Sensitive Plant
- Spider Plant
- Swedish Ivy
- Umbrella
- Violets
- Wandering Jew
- Weeping Fig
- Weeping Willow
- Wild Onion
- Zebra Plant

# ທ່ານຮູ້ຈັກກ່ຽວກັບ ສູນກາງຄວບຄຸມຢາເບື່ອບໍ່?

ເພື່ອເປັນການແກ້ໄຂ ອັນຕລາຍທີ່ມັກເກີດຂຶ້ນຈາກສິ່ງເບື່ອເມົາ. ຊຶ່ງເພີ້ມ. ຈຳນວນຂຶ້ນເລື້ອຍໆ. ຫລາຍປະເທດໄດ້ພາກັນຈັດຕັ້ງ ສູນກາງຄວບຄຸມສິ່ງເບື່ອເມົາຂຶ້ນ. ໃນປັດຈຸບັນ ສະຫະຣັຖອະເມຣິກາ ໄດ້ມີໂຮງພຍາບານສະເພາະ - ກ່ຽວກັບການເບື່ອເມົານີ້ຢູ່ຫລາຍໆບ່ອນ ເພື່ອອຳນວຍຄວາມສດວກໃຫ້ແກ່ ປະຊາຊົນ.

ທາງສູນກາງ ມີຄຳແນະທີ່ຖືກຕ້ອງແລະເຄື່ອງມືທີ່ທັນສມັຍກ່ຽວກັບການປ້ອງກັນອັນຕລາຍ ທີ່ຈະເກີດຂຶ້ນຈາກສິ່ງເບື່ອເມົາພ້ອມດ້ວຍການຮັກສາ ຖ້າຫາກທ່ານຕ້ອງການ.

ທາງສູນກາງ ໄດ້ເປີດບໍຣິການຕລອດ ໒໔ ຊົ່ວໂມງທຸກມື້. (໗ ມື້ຕໍ່ອາທິດ) ນອກຈາກນີ້ຍັງໄດ້ຈັດຫາ ທ່ານໝໍ ຫລື ໂຮງໝໍແລະຄຳແນະນຳພິເສດໃນການຮັກສາໃຫ້ທ່ານອີກ.

ສະມາຄົມຂອງສູນກາງ ການຄວບຄຸມສິ່ງເບື່ອເມົາ ຂອງສະຫະຣັຖອະເມຣິກາ ເປັນຂອງທຸກໆຄົນທີ່ມີໄວ້ຢູ່ຫລາຍໆແຫ່ງທົ່ວປະເທດ ແລະ ບຸຄຄົນທີ່ກ່ຽວຂ້ອງກໍໄດ້ອຸທິດເສັຽສະລະເພື່ອການຄົ້ນຄວ້າເພື່ອປ້ອງກັນ ອັນຕລາຍແລະລົດຈຳນວນການເບື່ອເມົາລົງ. ສະມາຄົມໄດ້ປະສານງານກັນກັບ ສູນກາງກ່ຽວກັບການຄວບຄຸມສິ່ງເບື່ອເມົາປະຈຳທ້ອງຖິ່ນ ຣັຖບານ ໂຮງງານອຸສາຫະກັມ ເພື່ອຊ່ວຍຊີວິດຂອງບຸຄຄົນໃຫ້ປອດພັຍ ຈາກອັນຕລາຍທີ່ຈະເກີດຂຶ້ນ.

ວິທີການຮັກສາ ທີ່ດີທີ່ສຸດກ່ຽວກັບການເບື່ອເມົາຄື ການປ້ອງກັນບໍ່ໃຫ້ມັນ - ເກີດຂຶ້ນ. ຈົ່ງຊອກເອົາເລກໂທຣະສັພ ຂອງສູນກາງຄວບຄຸມຢາເບື່ອ ທີ່ມີຢູ່ໃນທ້ອງຖິ່ນຂອງທ່ານ ແລະ ຮ້ອງໄປຂໍຄຳແນະນຳຈາກສູນກາງ.

# ສິ່ງທີ່ ຄວນເຮັດ ແລະ ບໍ່ຄວນເຮັດ

໑. ຢ່າໄດ້ກິນສ່ວນໃດ ສ່ວນນຶ່ງຂອງພືດ ຫລື ເຫັດທີ່ທ່ານບໍ່ເຄີຍກິນ ຫລືບໍ່ຮູ້ຈັກ ໃຫ້ສອນລູກຂອງ ທ່ານ ຢ່າໃດ້ເອົາໃບຜັກ, ກ້ານຜັກ, ເປືອກໝາກໄມ້, ເມັດຜັກ, ແກ່ນຜັກ ຫລື ໝາກໄມ້ປ່າຈາກຕົ້ນຕ່າງໆເອົາເຂົ້າປາກເດັດຂາດ.

໒. ໃຫ້ເອົາຕົ້ນໄມ້ ທີ່ມີພິສໝົດອອກຫ່າງຈາກເດັກນ້ອຍ ທີ່ຈະຢື້ເອົາໄດ້.

໓. ໃຫ້ຮູ້ຈັກຕົ້ນໄມ້ຕ່າງໆ ທີ່ຢູ່ອ້ອມບ້ານເຮືອນຂອງທ່ານ.

໔. ຢ່າໄດ້ຄິດວ່າ ຕົ້ນໄມ້ເຫລົ່ານີ້ ບໍ່ມີພິສ ເພາະທ່ານເຫັນວ່າ ນົກຫລືສັດອື່ນໆ ຍັງສາມາດກິນໄດ້.

໕. ຢ່າໄດ້ຄິດວ່າ ການຕົ້ມຜັກຈະເຮັດໃຫ້ ພິສຢູ່ໃນຜັກນັ້ນໝົດໄປ. ຢ່າໄດ້ເອົາ ໃບໄມ້ອັນໃດ ອັນນຶ່ງມາຕົ້ມເຮັດຢາ ຫລື ເຮັດນ້ຳຊາກິນ.

ຂໍໃຫ້ຈຳໄວ້ອີກວ່າ ມີຈຳພວກຕົ້ນໄມ້ຫລາຍໆຕົ້ນ ທີ່ຈະເກີດເປັນພິສຂຶ້ນໄດ້ຢູ່ກັບທາດຂອງແຕ່ລະບຸຄຄົນເທົ່ານັ້ນ ແຕ່ທ່ານຈະຕ້ອງລາຍງານໃຫ້ແກ່ ສູນກາງຄວບຄຸມຢາເບື່ອ ຫລື ທ່ານໝໍ ຂອງທ່ານ ຖ້າຫາກເກີດມີການກິນຕົ້ນໄມ້ດັ່ງກ່າວ.

ຖ້າຫາກອາການຕ່າງໆເກີດຂຶ້ນ ໃຫ້ຮ້ອງໄປຫາສູນກາງຄວບຄຸມຢາເບື່ອເມົາ
ໂທຣະສັພ : ໒໗໔-໖໐໐໐ ຫລືທ່ານໝໍຂອງທ່ານ________________
ໂຮງພຍາບານສຸກເສີນ : ໒໘໖-໔໗໑໑ ໂຮງພຍາບານ________________

UNIVERSITY OF CALIFORNIA
MEDICAL CENTER · SAN DIEGO

# DO YOU KNOW ABOUT IPECAC SYRUP?

# ທ່ານຮູ້ຈັກກ່ຽວກັບນ້ຳຢາ IPECAC SYRUP ບໍ່?

**San Diego Regional Poison Center**
**UCSD Medical Center**
**543-6000**
**Ambulance: Call 911**

In cooperation with: AMERICAN ASSOCIATION OF POISON CONTROL CENTERS

ERIC Full Text Provided by ERIC

## ທ່ານຮູ້ຈັກກ່ຽວກັບ ສູນກາງຄວບຄຸມສິ່ງເບື່ອເມົາຂອງທ່ານ ຫລືບໍ່ ?

ເພື່ອເປັນການຕອບໂຕ້ ແລະ ແກ້ໄຂອັນຕລາຍທີ່ເກີດຂຶ້ນຈາກສິ່ງເບື່ອເມົາ ທີ່ເພີ້ມຈຳນວນຂຶ້ນເລື້ອຍໆ. ຫລາຍປະເທດທົ່ວໂລກ ໄດ້ພາກັນຈັດຕັ້ງສູນກາງ ຄວບຄຸມສິ່ງເບື່ອເມົາຂຶ້ນ ປັດຈຸບັນໃນສະຫະຣັຖອະເມຣິກາ ໄດ້ມີຫນ່ວຍພຍາບານພິເສດ ກ່ຽວກັບເຣື່ອງນີ້ໂດຍສະເພາະຫຼາຍຮ້ອຍຫນ່ວຍ.

ທາງສູນກາງມີຂໍ້ມູນທີ່ຖືກຕ້ອງ ແລະ ທັນສມັຍກ່ຽວກັບອັນຕລາຍທີ່ອາດຈະເກີດຂຶ້ນຈາກສິ່ງເບື່ອເມົາ ພ້ອມທັງຄຳແນະນຳໃນການຮັກສາ ຖ້າຫາກທ່ານຕ້ອງການທາງສູນກາງ. ທາງສູນກາງມີຂໍ້ມູນຕ່າງໆກ່ຽວກັບສິ່ງເບື່ອເມົາໄວ້ສຳຫລັບທ່ານ ໃນກໍຣະນີສຸກເສີນຢູ່ຕລອດເວລາ ໒໔ ຊົ່ວໂມງທຸກມື້ (ກຸມື້ຕໍ່ອາທິດ) ນອກຈາກນີ້ຍັງສາມາດຈັດຫານາຍຫມໍ ຫລື ໂຮງຫມໍ ແລະຄຳ - ແນະນຳໃນການຮັກສາໃຫ້ທ່ານໄດ້ນຳດ້ວຍ. ອຸປກອນກ່ຽວກັບການສຶກສາ ແລະ ໂຄງການ ການປ້ອງກັນກ່ຽວກັບເຣື່ອງນີ້ ກໍມີຢູ່ໃນສູນກາງຄືກັນ.

ສະມາຄົມຂອງສູນກາງ ການຄວບຄຸມສິ່ງເບື່ອເມົາຂອງສະຫະຣັຖອະເມຣິກາ ເປັນອົງການຂອງສູນກາງຄວບຄຸມສິ່ງເບື່ອເມົາທົ່ວປະເທດ ແລະ ບຸກຄົນທີ່ກ່ຽວຂ້ອງ, ກໍໄດ້ ອຸທິດເສັຍສລະຄວາມຮູ້ ແລະ ການຄົ້ນຄ້ວາເພື່ອລົດຈຳນວນແລະປ້ອງກັນອັນຕລາຍ ທີ່ອາດຈະເກີດຂຶ້ນຈາກສິ່ງເບື່ອເມົາ. ທາງສະມາຄົມ ປະສານງານກັບສູນກາງ ການຄວບຄຸມສິ່ງເບື່ອເມົາປະຈຳທ້ອງຖິ່ນ, ຣັຖບານ ແລະ ໂຮງງານອຸສາຫະກັມ ເພື່ອເຮັດໃຫ້ຊີວິດຂອງພວກເຮົາປອດພັຍ ຈາກອັນຕລາຍທີ່ອາດຈະເກີດຂຶ້ນຈາກສິ່ງເບື່ອເມົາ.

ວິທີການຮັກສາທີ່ດີທີ່ສຸດ ກ່ຽວກັບການເບື່ອເມົາກໍຄືການປ້ອງກັນ ບໍ່ໃຫ້ມັນເກີດຂຶ້ນ ຈົ່ງຊອກຫາເອົາເລກໂທຣະສັພຂອງ ສູນກາງຄວບຄຸມສິ່ງເບື່ອເມົາ ຢູ່ໃນທ້ອງຖິ່ນຂອງທ່ານ ແລະຮ້ອງຫາສູນກາງ ເມື່ອທ່ານຕ້ອງການຂໍ້ມູນຕ່າງໆ ແລະ ຄວາມຊ່ວຍເຫລືອ.

ນ້ຳຢາ IPECAC SYRUP

ຕາມທີ່ໄດ້ສັງເກດ ໄດ້ມີການເກີດເບື່ອເມົາໃນສະຫະຣັຖອະເມຣິກາ ນັບເປັນລ້ານໆລາຍຕໍ່ປີນຶ່ງ, ບໍ່ມີຜູ້ໃດຈະລອດພົ້ນຈາກການເບື່ອເມົາໄປໄດ້ແລະເດັກນ້ອຍມັກຈະເປັນການສ່ຽງ ຕໍ່ສິ່ງເຫລົ່ານີ້. ຖ້າຫາກມີຄົນໃດຄົນນຶ່ງ ຢູ່ໃນບ້ານເຮືອນຂອງທ່ານດື່ມຢາເບື່ອເມົາ ທ່ານຈະ-ເຮັດວິທີໃດ ? ຄຳແນະນຳເຫລົ່ານີ້ຈະເປັນການຊ່ວຍທ່ານໄດ້ ເພື່ອທ່ານຈະໄດ້ປະຕິບັດ ໃຫ້ຖືກຕ້ອງ – ຖ້າຫາກລູກຂອງທ່ານ ເກີດດື່ມຢາເບື່ອເມົາຂຶ້ນມາ ສິ່ງສຳຄັນ ທ່ານຄວນຈະມີຢາ IPECAC SYRUP ນີ້ໄວ້ປະຈຳບ້ານເຮືອນ. ທ່ານຫມໍປະຈຳຄອບຄົວຂອງທ່ານ ຫລື ສູນກາງຄວບຄຸມການເບື່ອເມົາ ບໍ່ປະສົງທີ່ຈະແນະນຳໃຫ້ທ່ານ ເຮັດໃຫ້ຜູ້ເບື່ອເມົານັ້ນຮາກ, ແຕ່ຄວນຈະຮາກອອກມາດ້ວຍການໃຊ້ ນ້ຳຢາ

ເປັນຫຍັງ ?

ການປິ່ນປົວສຳຫລັບ ການເບື່ອເມົາສ່ວນຫລາຍແລ້ວ ຈະຕ້ອງມີການລ້າງທ້ອງ ເພື່ອເອົາພິສຢາເບື່ອນັ້ນອອກຈາກທ້ອງ ກ່ອນທີ່ຈະມີການດູດຊຶມເຂົ້າໄປສູ່ຮ່າງກາຍ. ນ້ຳຢາ IPECAC SYRUP ເປັນການປອດພັຍກວ່ານ້ຳຢາ ຍີ່ຫໍ້ອື່ນໆ ສຳຫລັບການແກ້ໃຂພິສເບື່ອຕ່າງໆ. ເອົານິ້ວມື ແຍ້ລົງໄປໃນຄໍຂອງເດັກນ້ອຍ ຫລື ໃຫ້ໃຊ້ນ້ຳເກືອ ຫາກບໍ່ໄດ້ຜົນອາດຈະສາມາດເປັນອັນຕລາຍໃຫ້ແກ່ຜູ້ເຄາະຮ້າຍໄດ້.

ແນ່ນຫຍັງ ?

ນ້ຳຢາ IPECAC SYRUP ຈະຊ່ວຍໃຫ້ມີອາການຮາກເກີດຂຶ້ນ ນ້ຳ[illegible]ນິດນີ້ຈະເກັບໄວ້ໃຊ້ໄດ້ຫລາຍໆປີ ຖ້າຫາກເກັບໄວ້ໃນຕູ້ ທີ່ມີອາກາດເຢັນດີ.

ໃຜ ?

ນ້ຳຢາ IPECAC SYRUP ຈະສາມາດໃຊ້ໄດ້ຜົນດີ ສຳຫລັບຜູ້ໃຫຍ່ ແລະ ເດັກນ້ອຍ ໃຫ້ທ່ານ ແນ່ໃຈວ່າຈະຕ້ອງປະຕິບັດໃຫ້ຖືກຕ້ອງ ຕາມວິທີແນະນຳ.

ຢູ່ໃສ ?

ນ້ຳຢາ IPECAC SYRUP ອາດຈະບໍ່ມີຂາຍຕາມຮ້ານຂາຍຢາຕ່າງໆ ແຕ່ຄົນຂາຍຢາອາດຈະສາມາດຂາຍໃຫ້ທ່ານໄດ້ແຕ່[illegible]ນວນ ນຶ່ງອອນ (30 ມ.ລ.) ເທົ່ານັ້ນແລະປາສຈາກຫນັງສືສັ່ງຢາຂອງທ່ານຫມໍ.

ເວລາໃດ ?

ນ້ຳຢາ IPECAC SYRUP ຈະບໍ່ສາມາດໃຊ້ໄດ້ທຸກໆກໍຣະນີຂອງການເບື່ອເມົາສຸກເສີນເກີດຂຶ້ນ. ບາງກໍຣະນີ ການເບື່ອເມົາກໍຈະບໍ່ອານຸຍາດໃຫ້ລ້າງທ້ອງ ກ່ອນໃຊ້ຢາ IPECAC SYRUP ໃຫ້ກວດເບິ່ງກັບທ່ານຫມໍ ຫລື ສູນກາງຄວບຄຸມຢາເບື່ອເສັຍກ່ອນ ເພື່ອຊອກຫາ

ຊ່ອງທາງ ຫລືຖ້າວ່າຈະເຮັດໃຫ້ມີອາການຮາກເກີດຂື້ນ.

ຢ່າໃຊ້ນ້ຳຢາ IPECAC SYRUP ຈົນກ່ວາຈະໄດ້ຮັບການແນະນຳຈາກທ່ານໝໍ ຫລື ສູນກາງຄວບຄຸມຢາເບື່ອເສັຍກ່ອນ.

ເຮັດວິທີໃດ ?

ຖ້າຫາກມີອາການຮາກເກີດຂື້ນ ໃຫ້ໃຊ້ນ້ຳຢາ IPECAC SYRUP ທີ່ທ່ານໝໍສູນກາງຄວບຄຸມຢາເບື່ອໄດ້ແນະນຳໃຫ້. ໃຊ້ວິທີການແນະນຳດັ່ງຕໍ່ໄປນີ້.

ສຳຫລັບເດັກນ້ອຍ ທີ່ມີອາຍຸນຶ່ງປີ ຫລື ຫລາຍກ່ວານັ້ນ :

ໃຫ້ເອົານ້ຳຢາ IPECAC SYRUP ໃຫ້ກິນ ນຶ່ງບ່ວງກາເຟ (໑໕ ມ.ລ.) ແລະຕິດຕາມໄປດ້ວຍ ນ້ຳນຶ່ງຈອກ(ປະມານ ໘ ອອນ) ໃຫ້ຜູ້ເຄາະຮ້າຍໃຫ້ດື່ມນ້ຳຫລາຍໆ ເທົ່າທີ່ຈະຫລາຍໄດ້ – ຖ້າຫາກອາການຮາກບໍ່ເກີດຂື້ນໃນຣະຫວ່າງ ໒໐ ນາທີ. ການໃຊ້ນ້ຳຢາ IPECAC SYRUP ຈະຕ້ອງເອົາໃຫ້ກິນຕື່ມອີກ ພ້ອມດ້ວຍຂອງແຫລວ (ເທົ່ານັ້ນ) ໃຫ້ກິນຢາຕື່ມອີກຄັ້ງນຶ່ງ – ຖ້າຫາກ ອາການຮາກບໍ່ປາກົດຂື້ນໃນຣະຍະນຶ່ງ ໃຫ້ຮ້ອງໄປຫາທ່ານໝໍ ຫລື ສູນກາງຄວບຄຸມຢາເບື່ອ.

ການໃຫ້ກິນຢາ IPECAC SYRUP ແຕກຕ່າງກັນສຳຫລັບເດັກນ້ອຍເກີດໃຫມ່, ເດັກນ້ອຍທີ່ໃຫຍ່ແດ່ແລ້ວ ແລະ ຜູ້ໃຫຍ່. ທ່ານໝໍ ຫລື ສູນກາງຄວບຄຸມຢາເບື່ອ ຈະໃຫ້ຄຳແນະນຳແກ່ທ່ານຢ່າງຄົບຖ້ວນ.

UNIVERSITY OF CALIFORNIA
MEDICAL CENTER
SAN DIEGO

# WHAT IF A POISONING OCCURS?

# ທ່ານຈະເຮັດແນວໃດ ?
# ຖ້າຫາກມີ
# ການເບື່ອເມົາເກີດຂຶ້ນ

SAN DIEGO REGIONAL POISON CONTROL CENTER

**543-6000**

Designated as a Regional Poison Control Center by the American Association of Poison Control Centers

187

ERIC

ທ່ານຄວນຈະເຮັດແນວໃດ ຖ້າຫາກມີການເບື່ອເມົາເກີດຂຶ້ນ ?

໑. ກ່ອນສິ່ງອື່ນໃດທັງຫມົດ ໃຫ້ພຍາຍາມຣະງັບຄວາມຕື່ນເຕັ້ນຕົກໃຈ ເຮັດໃຫ້ຈິດໃຈສງົບ

໒. ໃຫ້ຮ້ອງໄປຫາ ສູນກາງເບື່ອເມົາ ເລກທີ ໒໗໔-໕໐໐໐ ຈະຕ້ອງຕຽມ ມີລາຍງານ ດັ່ງນີ້ : ອາຍຸ ແລະ ເພດຂອງຄົນໄຂ້

ຊື່ຂອງທ່ານເອງ ແລະ ຫມາຍເລກໂທຣະສັພ

ຊື່ຂອງ ຕົວຢາເບື່ອ ຫລື ຜລິດພັນຕ່າງໆ (ທີ່ກິນເຂົ້າໄປ)

ຈຳນວນທີ່ກ່ຽວຂ້ອງ (ກິນຫນ້ອຍ-ຫລາຍປານໃດ)

ເວລາ ທີ່ມີອາການເບື່ອເມົາເກີດຂຶ້ນ

ອາການຕ່າງໆ

ຊື່ຂອງທ່ານຫມໍ ປະຈຳຕົວຂອງທ່ານ

໓. ສູນກາງຄວບຄຸມຢາເບື່ອ ຈະໄດ້ເອົາຄຳແນະນຳໃຫ້ທ່ານວ່າ ຄວນຈະເຮັດວິທີໃດ ໃນຂັ້ນຕໍ່ໄປ.

໔. ຢ່າໄດ້ເຮັດ ຕາມຄຳແນະນຳຈາກເຈັ້ຍຂອງຜລິດພັນຂອງກ້ອງຢາ. ບາງທີການແນະນຳກໍເກີດມີການຜິດພາດຂຶ້ນຢູ່ເລື້ອຍໆ. ຢ່າໄດ້ເອົານ້ຳເກືອໃຫ້ຜູ້ຖືກ ເບື່ອເມົາກິນ-ເພື່ອຜ່ອນຄາຍອາການຮາກ.

ທ່ານມີນ້ຳຢາ SYRUP OF IPECAC ບໍ່ ?

ຖ້າຫາກອາການຮາກ ຈຳເປັນຕ້ອງມີ ທາງສູນກາງຄວບຄຸມການເບື່ອເມົາ ຈະແນະນຳວິທີເອົານ້ຳຢາ IPECAC SYRUP ໃຫ້ຄົນໄຂ້ກິນ.

ຢ່າໄດ້ເອົາຢາໃຫ້ ຄົນໄຂ້ກິນຈົນກ່ວາຈະໄດ້ຮັບຄຳແນະນຳພິເສດໃຫ້ເຮັດໄດ້. ຖ້າຫາກທ່ານບໍ່ມີນ້ຳຢາ IPECAC SYRUP ທ່ານຈະສາມາດຊອກຊື້ ກວດລະນຶ່ງອອກໄດ້ຕາມຮ້ານຂາຍຢາ ຢາຕ່າງໆ ຖ້າຫາກທ່ານຕ້ອງການເອົາຄົນໄຂ້ໄປປົວຢູ່ໂຮງພຍາບານ ທາງສູນກາງຄວບຄຸມຢາເບື່ອເມົາ ກໍຈະແນະນຳໃຫ້ທ່ານໄປໂຮງຫມໍ ຢູ່ໃກ້ບ້ານທ່ານ ເພື່ອຈະໄດ້ແກ້ໄຂບັນຫາຂອງທ່ານ. ຜູ້ໃຫຍ່ຄົນນຶ່ງຈະຕ້ອງຂັບຣົຖ ແລະໃນຂນະທີ່ອີກຜູ້ນຶ່ງ ຈະຕ້ອງຊ່ວຍເຫລືອ ຜູ້ທີ່ຖືກເຄາະຮ້າຍໃຫ້ສບາຍໃຈ. ໃຫ້ຖືເອົາກວດທີ່ບັນຈຸນ້ຳຢາເບື່ອແລະຮາກທີ່ຄົນໄຂ້ໄດ້ຮາກອອກໄປນັ້ນ ໄປພ້ອມ ຖ້າຫາກຄົນໄຂ້ຕ້ອງການຣົຖພຍາບານສຸກເສີນ ທາງສູນກາງຄວບຄຸມຢາເບື່ອກໍຈະຈັດໃຫ້.

ທ່ານຈະສາມາດປ້ອງກັນ ການເບື່ອເມົາໄດ້ດ້ວຍວິທີໃດ ?

໑. ໃຫ້ເກັບກວດຢານ້ຽມ ແລະ ນ້ຳຢາເຄມີໄວ້ໃນກວດ ແລະ ອັດໃຫ້ແຫນ້ນເພື່ອວ່າເດັກນ້ອຍຈະບໍ່ສາມາດຍົກເອົາໄດ້ ຫລື ດີກ່ວານັ້ນໃຫ້ເກັບໄວ້ໃນຕູ້ເກັບຢາ ແລະ ລ໊ອກໃສ່-ກຸນແຈໄວ້.

໒. ບໍ່ຄວນເກັບນ້ຳຢາເຄມີໃສ່ໄວ້ໃນກັບເຄື່ອງກິນ.

໓. ບໍ່ຄວນກິນຢາຢູ່ຕໍ່ໜ້າເດັກນ້ອຍ ເພາະພວກເຂົາຈະລຽນແບບຈາກທ່ານ.

໔. ບໍ່ຄວນບອກເດັກນ້ອຍວ່າ ຢາຄືເຂົ້າໜົມກິນ

໕. ໃຫ້ໃຊ້ຜລິດພັນຂອງຢາ ທີ່ມີຝາອັດໄວ້ຢ່າງດີ ແລະ ປອດພັຍ

໖. ໃຫ້ອ່ານປ້າຍແນະນຳ ວິທີຕ່າງໆຂອງກັອງຢາ ກ່ອນຈະໃຊ້ຫລືເອົາໃຫ້ເດັກນ້ອຍກິນ

໗. ໃຫ້ເອົານຳເບີຂອງສູນກາງ ຄວບຄຸມຢາເບື່ອຕິດໃສ່ໂທຣະສັພຂອງທ່ານໄວ້ ຈົ່ງຢ່າໄດ້ລັງເລໃຈ ຮ້ອງໄປຂໍຄວາມແນະນຳ ຖ້າຫາກທ່ານມີບັນຫາ ຫລື ມີຄຳຖາມ.

## ທ່ານຮູ້ຈັກກ່ຽວກັບ ສູນກາງການຄວບຄຸມຢາເບື່ອບໍ່ ?

ສູນກາງການຄວບຄຸມ ສິ່ງທີ່ເບື່ອເມົາສຳຫລັບເຂດ ກຳແພງເມືອງແຊນດິເອໂກ ແລະ ອິມ-ເພ່ຣຽນ ຕັ້ງຢູ່ UNIVERSITY OF CALIFORNIA - MEDICAL CENTER ຊຶ່ງເປັນໂຄງການຮ່ວມກັນ ຣະຫວ່າງ UNIVERSITY OF CALIFORNIA ແລະກຳແພງເມືອງແຊນດິເອໂກ. ສູນກາງນີ້ມີພນັກງານ ເຮັດວຽກເປັນປະຈຳ ໒໔ ຊົ່ວໂມງທຸກໆມື້ ຕລອດປີ ເພື່ອຊ່ວຍເຫລືອບຸຄຄົນ ທີ່ມີບັນຫາທຸກໆຢ່າງກ່ຽວກັບການເບື່ອເມົາ ຖ້າທ່ານຫາກມີຄຳຖາມ ຫລືບັນຫາ ຈົ່ງຢ່າໄດ້ລັງເລໃຈຮ້ອງຂໍຄວາມແນະນຳ ການຮ້ອງໄປຫາອົງການນີ້ ອາດຈະ-ສາມາດຊ່ວຍຊີວິດ ຂອງຄົນທີ່ທ່ານຮັກໄດ້.

ລາຍການຂ້າງລຸ່ມນີ້ ແມ່ນລາຍຊື່ ຈຳພວກເຄື່ອງໃຊ້ສອຍ ທີ່ອາດຈະເປັນ ຢາເບື່ອ ທີ່ພວກເຮົາມີໄວ້ໃນບ້ານເຮືອນ. ຈື່ງເກັບມ້ຽນໃຫ້ຫ່າງຈາກເດັກ ນ້ອຍ - ຢ່າໃຫ້ເຂົ້າຍື້ເອົາໄດ້.

- Alcohalic Beverages
- Ammania
- Antifreeze
- Ant Syrup ar Paste
- Automotive Products
- Bathraam Bawl Cleaner
- Bleach
- Baric Acid
- Camphaphenique
- Charcoal Lighter
- Cleaning Fluid
- Clinitest Tablets
- Calagne
- Capper and Brass Cleaners
- Carn and Wart Remover
- Detergents
- Dishwasher Detergents
- Disinfectants
- Drain Cleaners
- Epaxy Glue Kit
- Furniture Palish
- Garden Sprays
- Gasaline
- Gun Cleaners
- Hair Dyes
- Insecticides
- Iadine
- Iran Medications
- Kerasene
- Lighter Fluid
- Madel Cement
- Muriatic Acid
- Mushrooms
- Nail Polish
- Nail Polish Remover
- Oven Cleaner
- Paint
- Paint Remaver
- Paint Thinner
- Perfume
- Permanent Wave Salutions
- Pesticides
- Pine Oil
- Plants
- Prescriptian and Non-Prescription Medicines
- Rat Killers
- Rubbing Alcohal
- Shaving Latian
- Silver Palish
- Snail Bait
- Spat Remavers
- Strychnine
- Sulfuric Acid
- Super Glue
- Turpentine
- Veterinary Products
- Weed Killers.
- Windaw Wash Salvent

ໃຫ້ຊື້ເອົານ້ຳຢາ **syrup of Ipecac** ແລະເກັບໄວ້ຢ່າງດີ ສາມາດ ນຳອອກມາໃຊ້ທັນກັບເຫດການ. ຢ່າໄດ້ໃຊ້ຢານີ້ ຈົນກ່ວາທ່ານຈະຮ້ອງ ໄປຫາ ສູນກາງຄວບຄຸມຢາເບື່ອ ເສັຽກ່ອນ.

AMERICAN COLLEGE OF EMERGENCY PHYSICIANS

American Association of Poison Control Centers

# Emergency Action for POISONING

## ການຫາຍໃຈເອົາ ຄວັນ ຫລື ອາຍຢາເບື່ອ

ໃຫ້ເອົາຜູ້ທີ່ຖືກເຄາະຮ້າຍ ໄປຫາບ່ອນທີ່ມີອາກາດດີ ໃນທັນທີ – ຫລີກເວັ້ນຈາກການຫາຍໃຈເອົາຄວັນຕ່າງໆ ເປີດປະຕູ ແລະ ປ່ອງຢ້ຽມອອກໃຫ້ກ້ວາງ ຖ້າຫາກຄົນເຈັບບໍ່ມີການເຫນັງຕີງ ແລະຫາຍໃຈ ໃຫ້ເລີ້ມໃຊ້ການຊ່ວຍຫາຍໃຈ.

## ຜິວຫນັງທີ່ຖືກຢາເບື່ອ

ໃຫ້ເອົາເສື້ອຜ້າ ທີ່ຖືກເປື້ອນດ້ວຍນ້ຳຢາເບື່ອນັ້ນອອກທັນທີ ແລະ ແຊ່ດ້ວຍນ້ຳລ້າງຈັກ ໑໐ ນາທີ ແລ້ວລ້າງອອກຄ່ອຍໆ ດ້ວຍສະບູ ແລະ ລ້າງດ້ວຍນ້ຳ.

## ຢາເບື່ອເຂົ້າຕາ

ໃຫ້ມືນຕາໃສ່ນ້ຳອຸ່ນ (ບໍ່ຮ້ອນຫລາຍ) ເອົານ້ຳໃສ່ຈອກແກ້ວໃຫຍ່ໃຫ້ສູງຈັກ ໒ ຫລື ໓ ນີ້ວຈາກຫນ່ວຍຕາ. ໃຫ້ເຮັດຊ້ຳໆກັນຈັກ ໑໕ ນາທີ. ມີຄົນເຈັບຫລາຍໆຄົນ ຕາບອດຍ້ອນ – ຢ່າໄດ້ພຍາຍາມມືນຕາ.

## ການດື່ມຢາເບື່ອ

ຢ່າໄດ້ເອົາຢາອັນໃດອັນນຶ່ງເຂົ້າປາກ ຈົນກ່ວາຈະໄດ້ຮັບຄຳແນະນຳເສັຽກ່ອນ

ນ້ຳຢາເຄມີ ຫລື ນ້ຳຢາລ້າງເຄື່ອງຕ່າງໆ

ຖ້າຫາກຄົນເຈັບເກີດອາການສລົບ, ມີອາການວິງວຽນ ຫລື ບໍ່ສາມາດຈະກືນສິ່ງໃດໄດ້ ໃຫ້ເອົານ້ຳນົມຫລືນ້ຳໃຫ້ກິນທັນທີ ໃຫ້ຮ້ອງຫາ ຜູ້ທີ່ຊ່ຽວຊານໃນການເບື່ອເມົາ ເພື່ອຂໍຄວາມແນະນຳວ່າຄົນໃຂ້ຄວນຈະເຮັດໃຫ້ມີອາການຮາກອອກ ຫລື ບໍ່ ? ທ່ານຈະຕ້ອງມີກວດນ້ຳຢາ IPECAC SYRUP ໄວ້ປະຈຳບ້ານເຮືອນສເມີ. ນ້ຳຢາກວດນ້ອຍ ນຶ່ງອອນ ກວດນຶ່ງສຳຫລັບເດັກນ້ອຍຄົນນຶ່ງ ຫລື ຫລານຂອງທ່ານຢູ່ເຮືອນ ໃຫ້ໃຊ້ຕາມຄຳແນະນຳຂອງສູນກາງຄວບຄຸມການເບື່ອ. ຫ້ອງການສຸກເສີນ ຫລື ທ່ານຫມໍ.

**After the Emergency Actions, CALL**

**San Diego Regional Poison Center**
**UCSD Medical Center**

**543-6000** **Ambulance: Call 911**

191

# ການແນະນຳ ກ່ຽວກັບການຕັ້ງ
# ທຸຣະກິດ ສ່ວນຕົວ



ບົດຮຽນ ທີ່ ໑໙ ແລະ ໒໐.

## ການລ້ຽງເດັກນ້ອຍຢູ່ເຮືອນ ກໍເປັນທຸຣະກິດພິເສດຢ່າງນຶ່ງ

໑. ການຕັ້ງທຸຣະກິດຢູ່ໃນສະຫະຣັຖ ອະເມຣິກາໝາຍຄວາມວ່າ ແນວໃດ ?

ກ. ແມ່ນໃຜແດ່ ທີ່ສາມາດຕັ້ງທຸຣະກິດໄດ້ ?

໑. ຜູ້ໃດກໍມີສິດ ຕັ້ງທຸຣະກິດຂອງຕົນເອງໄດ້ ຈະແມ່ນເດັກນ້ອຍກໍຕາມ ເພື່ອຊອກຫາເງິນ.

ກ. ໂດຍສະເພາະການຂາຍສິນຄ້າຕ່າງໆເຊັ່ນ : ເສື້ອຜ້າ, ເຄື່ອງຫລິ້ນ, ຜລິດຕະພັນກະສິກັມ, ອາຫານ ແລະ ອື່ນໆ ຫລືວ່າໂດຍການບໍຣິການເຊັ່ນ : ຊາວດັດພິມຫານໝໍ, ທະນາຍຄວາມ ແລະ ການບໍຣິການປັ້ມນ້ຳມັນຕ່າງໆ.

ຂ. ສະຖານທີ່ບ່ອນຮັບລ້ຽງເດັກນ້ອຍຢູ່ເຮືອນ ກໍເປັນທຸຣະກິດທີ່ໃຫ້ການບໍຣິການ ແລະຮັບເອົາເງິນ ເພື່ອເປັນຄ່າຕອບແທນ.

ຄ. ສະຖານທີ່ ບ່ອນຮັບລ້ຽງເດັກນ້ອຍເປັນທຸຣະກິດພິເສດຊນິດນຶ່ງ ຖ້າຫາກທ່ານ ຫາກຮັບລ້ຽງເດັກນ້ອຍ ຈຳນວນ ໒ ຄົນລົງມາ.

ງ. ກົດໝາຍໄດ້ຍົກເວັ້ນ ບໍ່ຕ້ອງມີໃບອານຸຍາດ ແລະ ບໍ່ຕ້ອງມີການແບ່ງເຂດ ເຊັ່ນ : ໂຮງງານ, ການຄ້າ ແລະ ບ່ອນຢູ່ ແລະ ອື່ນໆ.

ຈ. ສະຖານທີ່ບ່ອນຮັບລ້ຽງເດັກນ້ອຍ ເກີນກວ່າ ໑໒ ຄົນຂຶ້ນໄປແລ້ວ ຖືວ່າເປັນການດຳເນີນທຸຣະກິດແບບທັມມະດາ ຊຶ່ງຈະຕ້ອງມີໃບອານຸຍາດຕັ້ງ ທຸຣະກິດ, ຈະຕ້ອງຜ່ານການກວດກາກ່ຽວກັບສະຖານທີ່; ຂອບເຂດ, ໄຟຟ້າ ຕ່າງໆ...

໒. ຢູ່ໃນສະຫະຣັຖ ອະເມຣິກາ ມີທຸຣະກິດຢູ່ ໔ ປະເພດ :

໑. ທຸຣະກິດ ທີ່ມີເຈົ້າຂອງຜູ້ດຽວ.

ກ. ສະຖານທີ່ບ່ອນຮັບລ້ຽງເດັກນ້ອຍຢູ່ໃນເຮືອນ ກໍຈັດເຂົ້າຢູ່ໃນປະເພດນີ້.

໒. ທາງຫຸ້ນສ່ວນ : ມີຫຸ້ນສ່ວນຕັ້ງແຕ່ ໒ ຄົນຂຶ້ນໄປ.

໓. ບໍຣິສັດ : ເປັນທຸຣະກິດ ທີ່ມີເຈົ້າຂອງຫລາຍໆຄົນ ຊຶ່ງເອົາເງິນມາລົງທຶນຮ່ວມກັນ.

ກ. ສະຫະກອນ ( CO-OP ) ຊຶ່ງຍໍ່ມາຈາກ ( CO-OPERATE ) ເປັນບໍຣິສັດປະເພດນຶ່ງ

ຂ. ສະຫະກອນ ມີສະມາຊິກຜູ້ນຶ່ງເຂົ້າຮ່ວມກັນ ເພື່ອປະກອບທຸຣະກິດ ແລະ ກາຍເປັນຫຸ້ນສ່ວນໃນການເຮັດວຽກ ແບ່ງພືລ ແລະ ຄ່າໃຊ້ຈ່າຍຕ່າງໆ.

ຄ. ສະຫະກອນເສັຍພາສີ ຄືກັນກັບ ບໍຣິສັດ ແລະ ສະມາຊິກແຕ່ລະຄົນຈະຕ້ອງເສັຍພາສີສ່ວນຕົວອີກດ້ວຍ.

໔. ບໍຣິສັດ (ຂ) ຄືກັນກັບຂໍ້ທີ່ ໓ ຕ່າງກັນແຕ່ວ່າ ບໍຣິສັດປະເພດນີ້ ບໍ່ຕ້ອງເສັຽພາສີລາຍໄດ້ໃຫ້ແກ່ຣັຖບານກາງ. ຜູ້ຖືຫຸ້ນ ຫລື ຜູ້ລົງທຶນ ແຕ່ລະຄົນຈະຕ້ອງໄດ້ແບ່ງພືລກຳໄລ ຫລືຂາດທຶນ ແລ້ວລາຍງານເສັຍພາສີລາຍໄດ້ຂອງໃຜລາວ.

ຄ. ລາຍໄດ້ທີ່ມາຈາກ ທຸຣະກິດຕ່າງໆ ຣວມທັງສະຖານທີ່ບ່ອນລັຽງເດັກນ້ອຍຢູ່ໃນເຮືອນ ຈະຕ້ອງເສັຍພາສີລາຍໄດ້ ໃຫ້ແກ່ຣັຖບາລ ເຊັ່ນດຽວກັນ.

໑. ຈຳນວນເງິນທີ່ເຈົ້າຂອງທຸຣະກິດ ໄດ້ຮັບມາ ຖືວ່າເປັນລາຍໄດ້ ແລະ ຈະຕ້ອງເສັຍພາສີ.

໒. ແຕ່ລະປີທ່ານມີລາຍໄດ້ ທ່ານຈະຕ້ອງເສັຍພາສີລາຍໄດ້ໃຫ້ແກ່ ຣັຖບາລກາງ ແລະ ຣັຖບາລທ້ອງຖິ່ນ.

໓. ສະຖານທີ່ບ່ອນຮັບລ້ຽງເດັກນ້ອຍ ກໍຖືວ່າເປັນ :

ກ. ທຸຣະກິດ ທີ່ມີເຈົ້າຂອງຜູ້ດຽວ ແລະ ມີເຈົ້າຂອງເອງເປັນລູກຈ້າງ (ເຮັດເອງ)

ຂ. ສິ່ງສຳຄັນທີ່ທ່ານ ຄວນຈະຮຽນຮູ້ ເມື່ອທ່ານຈະໄດ້ກອກໃບແຈ້ງລາຍການເສັຍພາສີ ໃຫ້ຖືກຕ້ອງ.

ຄ. ພນັກງານ ຫລື ຄົນເຮັດວຽກ ຢູ່ໃນສະຖານທີ່ບ່ອນຮັບລ້ຽງເດັກນ້ອຍ ຢູ່ໃນເຮືອນ ເຂົາຈ້າງມີສິດທີ່ ທີ່ຈະເອົາເງິນເຂົ້າໄປຝາກໄວ້ໃນຣະບົບສວັສດີການສັງຄົມ ເພື່ອເປັນເງິນບໍ່ຽບບຳນານ ໂດຍຜ່ານຣະບົບການເສັຍພາສີ ຂອງຜູ້ທີ່ຈ້າງຄົນເອງ ແຕ່ກໍບໍ່ເປັນການບັງຄັບແຕ່ຢ່າງໃດ, ແລ້ວແຕ່ຄວາມພໍໃຈ ຂອງບຸກຄົນດັ່ງກ່າວ.

ງ. ແຕ່ລະຄົນສາມາດ ມີທຸຣະກິດ ຫລາຍເທົ່າໃດກໍໄດ້ ແຕ່ໃຫ້ປະຕິບັດຕາມກົດໝາຍກ່ຽວກັບການເສັຍພາສີຕ່າງໆ :

ຍົກຕົວຢ່າງ :

(໑) ຜູ້ຍິງຄົນນຶ່ງສາມາດ ທີ່ທຸຣະກິດໄດ້ຫລາຍໆແບບ ເຊັ່ນຂາຍເຄື່ອງປັກແສ່ວຢູ່ຕາມຕລາດເລຫລັງໃນວັນເສົາແລະວັນທິດ ແລ້ວເປີດທຸຣະກິດພິເສດຕື່ມອີກ ປະເພດນຶ່ງ ເຊັ່ນການຮັບເອົາເດັກນ້ອຍມາລ້ຽງຢູ່ບ້ານເຮືອນ ໃນຣະວ່າງ ວັນຈັນຫາວັນສຸກຕື່ມອີກກໍໄດ້.

(໒) ຜູ້ຍິງຄົນນັ້ນ ຈະມີລາຍໄດ້ມາຈາກສອງບ່ອນ ແລະ ຈະຕ້ອງກອກຟອມ ລາຍງານກ່ຽວກັບການໃຊ້ຈ່າຍຂອງທຸຣະກິດ ແຍກກັນອອກແຕ່ລະຢ່າງໃນໃບແຈ້ງເສັຍພາສີລາຍໄດ້ຂອງລາວ.

(໓) ຖ້າຫາກວ່າຜົວຂອງລາວເຮັດການຢູ່ບໍຣິສັດ ປະກອບເຄື່ອງອາໄຫລ່ຕ່າງໆແລ້ວ ພວກເຂົາເຈົ້າຈະມີລາຍໄດ້ລວມກັນສາມບ່ອນ. ເມື່ອສິ້ນປີມາພວກເຂົາເຈົ້າຈະຕ້ອງຍື່ນໃບແຈ້ງພາສີລາຍໄດ້ແບບ ຄູ່ຜົວເມັຽ ແລະ ແຈ້ງລາຍໄດ້ມາຈາກສາມບ່ອນ.

໔. ການບັນທຶກ ບັນຊີສຳຫລັບການທັກ (ຄ່າໃຊ້ຈ່າຍ) ຂອງທຸຣະກິດ ແລະແບບຟອມຂອງກົມປະຊາສົງເຄາະ ( Welfare Form )

ກ. ເປັນຫຍັງ ທ່ານຈຶ່ງຕ້ອງບັນທຶກບັນຊີ ?

໑. ເພື່ອແຈ້ງລາຍງານກ່ຽວກັບ ການເສັຽພາສີ ແລະ ປະຊາສົງເຄາະ

໒. ເພື່ອປະຢັດເງິນກ່ຽວກັບການເສັຍພາສີນ້ອຍ ແລະ ເກັບເງິນຊ່ວຍເຫລືອຈາກຣັຖບາລ

໓. ເພື່ອເກັບເງິນ ຈາກພໍ່ແມ່ຂອງເດັກນ້ອຍ ທີ່ຍັງບໍ່ຈ່າຍຄ່າລ້ຽງເດັກ.

໔. ເພື່ອເປັນ ນັກທຸຣະກິດທີ່ສລາດ ຜູ້ນຶ່ງ.

໒. ຂໍ້ສັນຍາ.

໑. ຜູ້ຮັບລ້ຽງເດັກນ້ອຍຢູ່ໃນເຮືອນຈະຕ້ອງມີໃບສັນຍາ ຫລື ຂໍ້ຕົກລົງກັບພໍ່ແມ່ຂອງເດັກ.

ກ. ຜູ້ຮັບລ້ຽງເດັກນ້ອຍຕົກລົງ ຫລື ສັນຍາວ່າຈະເບິ່ງແຍງເດັກນ້ອຍເປັນເວລາຈັກ ຊົ່ວໂມງ ? ຕໍ່ມື້ນຶ່ງ ຫລື ຈັກມື້ຕໍ່ອາທິດນຶ່ງ ?

ຂ. ພໍ່ແມ່ຂອງເດັກນ້ອຍສັນຍາວ່າ ຈະຈ່າຍເງິນໃຫ້ແກ່ຜູ້ຮັບລ້ຽງເດັກນ້ອຍທຸກອາທິດ ແລະ ເປັນຈຳນວນເງິນເທົ່າໃດ ?

ຄ. ການຕົກລົງ ຫລື ສັນຍານັ້ນ ເອີ້ນວ່າ ໜັງສືສັນຍາຊຶ່ງພວກທ່ານ ຄວນຈະຂຽນໄວ້ ຢູ່ໃນເຈ້ຍ ເຊັ່ນນີ້ໄວ້ ຫລື ພວກທ່ານຈະເວົ້າກັນດ້ວຍປາກເປົ່າກໍໄດ້.

ງ. ເມື່ອເປັນການປ້ອງກັນຕົວທ່ານເອງ ທາງທີ່ດີຄວນຈະມີແບບຟອມ ເພື່ອໃຫ້ພໍ່ແມ່ ຂອງເດັກນ້ອຍເຊັນຊື່ໄວ້ ເພາະວ່າບາງທີ ພໍ່ແມ່ຂອງເດັກນ້ອຍອາດຈະລືມກຳນົດ ເວລາຂອງຂໍ້ສັນຍາກໍໄດ້.

ຈ. ທ່ານຈະຕ້ອງມີໃບສຳເນົານຶ່ງໃບ ເພື່ອເກັບໄວ້ເປັນຫລັກຖານ ແລະ ອີກໃບນຶ່ງ ໃຫ້ເອົາໃຫ້ພໍ່ແມ່ຂອງເດັກນ້ອຍເກັບໄວ້.

໔. ຂໍ້ສັນຍາເລົ່ານີ້ ກໍຄືກັນກັບ ໜັງສືສັນຍາເຊົ່າເຮືອນນັ້ນເອງ.

ກ. ຖ້າຫາກທ່ານໄດ້ເຊັນຊື່ ລົງໄປໃນແບບຟອມນັ້ນແລ້ວ ແລະ ບໍ່ຍອມຈ່າຍຄ່າເຊົ່າຕາມ ສັນຍາ ເຈົ້າຂອງເຮືອນ ກໍມີສິດ ທີ່ຈະນຳເອົາທ່ານຂຶ້ນຟ້ອງສານ ໃນຖານທີ່ທ່ານ ຍັງຕິດໜີ້ເຂົາຢູ່.

ຂ. ໃນທຳນອງດຽວກັນ ຜູ້ຮັບລ້ຽງເດັກນ້ອຍກໍສາມາດ ນຳເອົາທ່ານຂຶ້ນຟ້ອງສານໄດ້ ເຊັ່ນດຽວກັນ ໃນຖານທີ່ທ່ານບໍ່ຈ່າຍເງິນຕາມສັນຍາທີ່ໄດ້ມີໄວ້.

ຄ. ການບັນທຶກລາຍໄດ້ ແລະ ລາຍຈ່າຍ :

- ລາຍໄດ້ : ຄືຈຳນວນເງິນທີ່ທ່ານໄດ້ຮັບມາຈາກ ກິດຈະການຕ່າງໆ
- ລາຍຈ່າຍ: ຄືຈຳນວນເງິນທີ່ທ່ານໄດ້ຈ່າຍກ່ຽວກັບ ກິດຈະການຕ່າງໆ.

໑. ການຈ່າຍຈຳນວນນີ້ ບໍ່ໄດ້ລວມຢູ່ກັບ ການໃຊ້ຈ່າຍສຳຫລັບພາຍໃນຄອບຄົວ ຂອງທ່ານ ເຊັ່ນການຈ່າຍເພື່ອຊື້ອາຫານ ແລະ ເຄື່ອງໃຊ້ສອຍ ຢູ່ໃນ ຄອບຄົວ.

໔. ຕົວຢ່າງ : ອາຫານ, ເຂົ້າໜົມປັງ, ນ້ຳໝາກໄມ້, ເຂົ້າແລະນົມສົດ. ເຄື່ອງໃຊ້ໃນການກິນອາຫານ ເຊັ່ນ : ຈານເຈ້ຍ, ຈອກກິນນ້ຳ, ເຈ້ຍ ເຊັດມື, ເຄື່ອງໃຊ້ໃນການທຳຄວາມສະອາດເຊັ່ນ : ສະບູ, ເຈ້ຍເຊັດມື, ເຈ້ຍຫ້ອງນ້ຳ ແລະ ເຈ້ຍເຊັດໜ້າ, ເຄື່ອງຫລິ້ນຕ່າງໆ ແລະ ເຄື່ອງນອນ ນອນຂອງເດັກນ້ອຍ. ເຄື່ອງໃຊ້ໃນການເຮັດວຽກ ເຊັ່ນ: ປຶ້ມຂຽນ, ຢາກິນ ຜ້າພັນແຜ, ເຄື່ອງໃຊ້ກ່ຽວກັບເດັກນ້ອຍເກີດໃໝ່ ເຊັ່ນ: ຜ້າອ້ອມ, ເຈ້ຍ ເຊັດມື, ນ້ຳມັນທາ, ຂອງຂວັນຕ່າງໆ ເຄື່ອງໃຊ້ຈ່າຍກ່ຽວກັບການບັນທຶກ ບັນຊີເຊັ່ນ : ປຶ້ມໃບເຊັກຮັບເງິນ, ການສ້ອມແປງຕ່າງໆເຊັ່ນ : ໂຕະ ຕັ່ງປະຕູ ປ່ອງຢ້ຽມແລະອື່ນໆ ຊຶ່ງເກີດມາຈາກການກະທຳຂອງເດັກນ້ອຍ. ເຊັກທີ່ບໍ່ມີເງິນ ແລ້ວຖືກສົ່ງກັບຄືນ ແລະ ໜີ້ສູນ (ໜີ້ທີ່ເກັບເງິນບໍ່ໄດ້) ຄ່າປະກັນໄພ, ຄ່າທຳນຽມຂອງທະນາຄານ, ຄ່າຈ້າງຄົນເຮັດລາຍງານເສັຍ ພາສີ; ຄ່າຈ້າງນັກບັນຊີ, ຄ່າໂທຣະສັບ ແລະ ຄ່າໃຊ້ຈ່າຍຕ່າງໆກ່ຽວກັບທຸ

ຈາກທ່ານໃຊ້ຣົດນັ້ນຂົນສົ່ງເດັກນ້ອຍມາຍັງສະຖານທີ່ບ່ອນລ້ຽງເດັກ.

໓. ການແບ່ງສ່ວນຄ່າໃຊ້ຈ່າຍຕ່າງໆ :

ຄ່າໃຊ້ຈ່າຍຕ່າງໆເລົ່ານີ້ ຄິດເປັນຈຳນວນເປີເຊັນຂອງເວລາ ຄູນດ້ວຍຈຳນວນຂອງພື້ນທີ່ ຂອງເຮືອນທີ່ໃຊ້ທຳທຸຣະກິດ.

(ກ) ແບບຟອມການເສັຍພາສີລາຍໄດ້ຂອງຣັຖບານກາງ ໄດ້ອານຸຍາດໃຫ້ທ່ານຫັກຄ່າໃຊ້ຈ່າຍຕ່າງໆທີ່ເປັນສ່ວນກ່ຽວກັບ ທຸຣະກິດຂອງການລ້ຽງເດັກອອກຈາກສ່ວນ ຫລື ຈຳນວນເງິນທີ່ທ່ານຈະຕ້ອງເອົາໄປເສັຍພາສີແກ່ຣັຖບານ.

(ຂ) ທ່ານຍັງສາມາດຫັກຄ່າເຊົ່າ ຫລື ດອກເບັ້ຽ ຄ່າງວດເຮືອນ ຄ່ານ້ຳ ຄ່າໄຟ ຄ່າປະກັນໄພ ທີ່ທ່ານຈ່າຍແລະຄິດໃຫ້ເປັນເປີເຊັນ. ນອກນັ້ນວ່າທ່ານໄດ້ໃຊ້ກ່ຽວກັບທຸຣະກິດນ້ອຍ/ຫລາຍປານໃດ (ສ່ວນທີ່ກ່ຽວກັບທຸຣະກິດນີ້ ທ່ານຈະສາມາດເອົາໄປຫັກອອກຈາກ ລາຍການເສັຍພາສີໄດ້).

໔. ທ່ານຈະບັນທຶກບັນຊີແນວໃດ ?

(ກ) ໃຫ້ໃຊ້ຣະບົບການບັນຊີແບບງ່າຍໆ ເຊັ່ນໃຊ້ເຈັ້ຍບັນທຶກລາຍການ ໒ ຊ່ອງ ( 2 colums work sheet) ສຳຫລັບບັນທຶກ ລາຍໄດ້/ລາຍຈ່າຍ.

(ຂ) ບັນທຶກວັນທີ ຊື່ຂອງບຸກຄົນ ແລະ ຈຳນວນເງິນທີ່ເຂົາຈ່າຍສຳຫລັບລາຍໄດ້ຂອງທ່ານ.

(ຄ) ບັນທຶກວັນທີ ລາຍການຫລື ຈຳນວນຂອງການໃຊ້ຈ່າຍຕ່າງໆ

ຕົວຢ່າງ :

| ລາຍໄດ້ | | | ລາຍຈ່າຍ | | |
|---|---|---|---|---|---|
| ວັນທີ | ຊື່ແລະນາມສະກຸນ | ຈຳນວນເງິນ | ວັນທີ | ລາຍການ | ຈຳນວນເງິນ |
| ໑໐/໑໗ | ແມ່ປານີ | $ ໔໐.໐໐ | ໑໐/໒໐ | ສີສີ ໒ ກັບ | $ ໑.໔໗ |
| ໑໐/໒໕ | ນາງ ດຳດີ | ໒.໐໐ | | ນ້ຳນົມ ໑ ແອບ | ໐.໖໗ |
| ໑໐/໓໐ | ຍາແມ່ ອໍຣະພິນ | ໔.໔໐ | | ຜ້າເຊັດແຜ | ໒.໑໒ |
| | ລວມລາຍໄດ້ | $ ໔໖.໔໐ | | ລວມລາຍຈ່າຍ | $ ໔.໔໐ |

(ງ) ໃບຮັບເງິນເປັນສິ່ງສຳຄັນ ທີ່ທ່ານຈະຕ້ອງເກັບມ້ຽນໄວ້ໃຫ້ດີສຳຫລັບ ຄ່າໃຊ້ຈ່າຍຕ່າງໆ ແລະ ອອກໃບລັບເງິນສຳຫລັບລາຍໄດ້ທີ່ທ່ານໄດ້ຮັບມາ

- ປຶ້ມໃບລັບເງິນກໍເປັນການບັນທຶກອັນດີນຶ່ງ ຊຶ່ງທ່ານຄວນຈະຮັກສາໄວ້ເພື່ອເປັນຫລັກຖານ.
- ຄວນເກັບໃບລັບເງິນ ສຳຫລັບຄ່າໃຊ້ຈ່າຍຕ່າງໆຕລອດປີໃສ່ຊອງໄວ້.

໔. ການຮັບເງິນ : ທ່ານຈະໄດ້ຮັບເງິນຈາກພໍ່ແມ່ຂອງເດັກ ເຊັ່ນເງິນສົດ ແລະ ແຊັກ.

(ກ) ພໍ່ແມ່ຂອງເດັກນ້ອຍສ່ວນຫລາຍ ຈະຕ້ອງການໃບຮັບເງິນຈາກທ່ານ ເພື່ອຈະໄດ້ເອົາໄປຫັກອອກຈາກການເສັຍພາສີຕອນປາຍປີ.

(ຂ) ພໍ່ແມ່ຂອງເດັກນ້ອຍ ຈະໃຊ້ໃບຮັບເງິນນີ້ ເປັນໃບບັນທຶກສຳຫລັບ ການເສັຍຄ່າລ້ຽງເດັກຕ່າງໆ ເພື່ອໄປຫັກອອກຈາກລາຍໄດ້ຂອງເຂົາເຈົ້າ ກ່ອນແຈ້ງເສັຍພາສີ.

(ຄ) ບາງຄອບຄົວກໍ່ຈ່າຍຄ່າລ້ຽງເດັກນ້ອຍດ້ວຍ ແຊັກ ເພື່ອເຂົາຈະໄດ້ໃຊ້ເປັນຫລັກຖານໃນການໃຊ້ຈ່າຍ.

(ງ) ຜູ້ຮັບລ້ຽງເດັກນ້ອຍ ຄວນຈະບັນທຶກລາຍໄດ້ ແລະ ລາຍຈ່າຍຕ່າງໆເຊັ່ນດຽວກັນ.

(ຈ) ສຳຫລັບພໍ່ແມ່ຂອງເດັກນ້ອຍ ທີ່ຈ່າຍເງິນສົດໃຫ້ທ່ານ ໃຫ້ຂຽນໃບຮັບເງິນໃຫ້ເຂົາເຈົ້າ ປຶ້ມໃບຮັບເງິນນັ້ນ ທ່ານຈະສາມາດຫາຊື້ໄດ້ຕາມຮ້ານຄ້າທົ່ວໄປ.

(ສ) ການບັນທຶກເວລາ : ຂຽນຊື່ຂອງເດັກນ້ອຍ, ວັນທີ່ຂອງການເບິ່ງແຍງ ແລະ ຊົ່ວໂມງທັງໝົດ (ເວລາເຂົ້າ ແລະ ອອກ).

(ຊ) ໄມລ໌ຣົດ : ຖ້າຫາກທ່ານຂັບຣົດຂົນສົ່ງເດັກນ້ອຍ ໃຫ້ມີປຶ້ມບັນທຶກຕິດໄວ້ໃນຣົດ ຈົດວັນທີ່, ສະຖານທີ່ເລີ່ມຕົ້ນ, ຈຸດໝາຍປາຍທາງ (ໄປໃສ-ວັດຖຸປະສົງຕ່າງໆ) ຮັບມາຈາກໂຮງຮຽນ, ບັນທຶກເລກໄມລ໌ທີ່ເລີ່ມຕົ້ນ ແລະ ຕອນສຸດທ້າຍ (ເພື່ອຄິດຈຳນວນ ຣະຍະທາງທີ່ໃຊ້).

(ຍ) ອາຫານ : ໃຫ້ຈົດວັນທີ່ໄວ້ວ່າ ໄດ້ເອົາໃຫ້ຜູ້ໃດ ແລະ ປະມານຄ່າອາຫານເທົ່າໃດ (ໃຫ້ບອກຕ່າງຫາກ ແຈກອາຫານຟຣີ).

(ດ) ຈົດລາຍການ ປະຕິບັດງານແຕ່ລະມື້ ຖ້າຫາກທ່ານມີ.

(ຕ) ແມ່ນໃຜ ? ຈະເປັນຄົນກວດເບິ່ງການບັນທຶກ ບັນຊີ ?

໑. ທ່ານຈະໃຊ້ການບັນທຶກໃນການເຮັດແບບຟອມສຳຫລັບການເສັຍພາສີລາຍໄດ້ປະຈຳປີໃນຣະຫວ່າງເດືອນມົກກະຣາ ແລະ ເດືອນ ເມສາ.

໒. ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທາງດ້ານພາສີກໍຕ້ອງການເບິ່ງການບັນທຶກຂອງທ່ານ ເມື່ອເວລາເຂົາເຈົ້າກວດທົບທວນເບິ່ງການເສັຍພາສີລາຍໄດ້ຂອງທ່ານ (ຊຶ່ງເອີ້ນວ່າການກວດບັນຊີ).

໓. ທາງແຜນກົມປະຊາສົງເຄາະ ກໍຕ້ອງການເບິ່ງຫລັກຖານ ຫລື ໃບຮັບເງິນກ່ຽວກັບການ ໃຊ້ຈ່າຍຕ່າງໆເຊັ່ນດຽວກັນ.

໔. ເຈົ້າໜ້າທີ່ຜູ້ອອກໃບອະນຸຍາດ ກໍຕ້ອງການເບິ່ງແບບຟອມ ທີ່ກ່ຽວກັບການເກີດເຫດສຸກເສີນ ແລະ ໃບອະນຸຍາດຕ່າງໆ ເຊັ່ນດຽວກັນ.

໕. ໃຫ້ທ່ານເກັບ ການບັນທຶກທີ່ກ່ຽວກັບ ກິດຈະການຕ່າງໆຂອງທ່ານໄວ້ຢ່າງຕ່ຳ ໔ ຫາ ໕ ປີ.

(ຖ) ຂ້າພະເຈົ້າຈະຈ້າງຄົນອື່ນ ມາບໍຣິຫານກິດຈະການຂອງຂ້າພະເຈົ້າ ໄດ້ຫລືບໍ່ ?

໑. ທ່ານສາມາດຈ້າງທະນາຍຄວາມໃນການຂຽນ ໃບສັນຍາ, ນັກບັນຊີ, ຫລື ຜູ້ຊ່ວຍນັກບັນຊີ ແລະ ທີ່ປຶກສາກ່ຽວກັບພາສີ ກໍໄດ້.

໒. ແຕ່ວ່າ ບຸກຄົນທີ່ກ່າວມາຂ້າງເທິງນີ້ ຄິດຄ່າບໍຣິການແພງຫລາຍ ນອກຈາກວ່າທ່ານຈະຮູ້ວິທີເຮັດເອົາເອງ ຫລືວ່າມີຄົນໃດຄົນນຶ່ງ ທີ່ຢູ່ໃນຄອບຄົວຂອງທ່ານ ຮູ້ຈັກວິທີຕ່າງໆ ຈະເປັນການຜ່ອນຄ່າໃຊ້ຈ່າຍຕ່າງໆໄດ້ຫລາຍ.

໓. ຈຳນວນເງິນທີ່ທ່ານໄດ້ຈ່າຍ ໃຫ້ແກ່ການບໍຣິການນີ້ ສາມາດເອົາໄປຫັກອອກຈາກການເສັຍພາສີລາຍໄດ້ຂອງທ່ານໄດ້.

໓. ການປະກັນພັຍ ສຳລັບຜູ້ຮັບລ້ຽງເດັກນ້ອຍຢູ່ໃນເຮືອນ.

ກ. ການປະກັນພັຍຊັບສິນ.

໑. ທ່ານຈະຕ້ອງເປັນຜູ້ຮັບຜິດຊອບກັບເຫດການຕ່າງໆທີ່ເກີດຂຶ້ນ ຢູ່ໃນບ້ານເຮືອນຂອງທ່ານ ໃນຣະຫວ່າງທີ່ ທ່ານກຳລັງເບິ່ງແຍງເດັກນ້ອຍຢູ່.

(ກ) ໃນເຫດຜົລອັນດຽວກັນ ພວກທ່ານຄວນຈະມີປະກັນພັຍຣົຖ ສຳລັບປ້ອງກັນການ ຕຳ ແລະ ຊັບສິນ, ຜູ້ຮັບລ້ຽງເດັກນ້ອຍ ກໍຄວນຈະມີປະກັນພັຍສຳລັບທາງດ້ານ ຊັບສິນເຊັ່ນດຽວກັນ.

໒. ໃນປີຈະມາທາງກົດໝາຍ ອາດຈະບັງຄັບໃຫ້ຜູ້ຮັບລ້ຽງເດັກນ້ອຍທຸກຄົນໃຫ້ມີ ປະກັນພັຍ ສຳລັບທາງດ້ານຊັບສິນໄວ້.

໓. ທ່ານອາດຈະຖືກຟ້ອງຮ້ອງຮຽກຄ່າເສັຽຫາຍ ດັ່ງນັ້ນພວກເຮົາຈຶ່ງຢາກແນະນຳ ພວກທ່ານ ໃຫ້ມີປະກັນພັຍໄວ້.

(ກ) ເດັກນ້ອຍທີ່ຢູ່ໃນຄວາມດູແລຂອງພວກທ່ານ ອາດຈະມີໂອກາດ ໄດ້ຮັບການບາດເຈັບຢູ່ຕລອດເວລາ.

(ຂ) ເດັກນ້ອຍອາດຈະສະດຸດຂອງຫລິ້ນລົ້ມ ແລ້ວແຂນຫັກຢູ່ໃນສະຖານທີ່ບ່ອນລ້ຽງເດັກ ຄອບຄົວຂອງເດັກນ້ອຍອາດຈະບໍ່ມີປະກັນພັຍທາງດ້ານສຸຂພາບ ດັ່ງນັ້ນເຂົາຈະຕ້ອງເສັຽເງິນໃຫ້ຄ່າຫ້ອງສຸກເສີນ, ຄ່າທ່ານໝໍ, ຄ່າເຂົ້າເຝືອກ, ຄ່າຮັກສາຢູ່ນອກໂຮງໝໍ ແລະ ຄ່າກິນຕ່າງໆຂອງເດັກນ້ອຍ ພໍ່ແມ່ຂອງເດັກນ້ອຍອາດຈະຟ້ອງຮ້ອງຮຽກຄ່າເສັຽຫາຍ ຄ່າໃຊ້ຈ່າຍຕ່າງໆເຫລົ່ານັ້ນຈາກທ່ານ ແຕ່ຖ້າຫາກທ່ານບໍ່ມີປະກັນພັຍ ທ່ານຈະຕ້ອງໄດ້ຈ່າຍເງິນຂອງທ່ານເອງ ຖ້າຫາກທ່ານບໍ່ມີຊັບສິນ (ບໍ່ມີເຮືອນ - ບໍ່ມີອອມສິນ ແລະ ອື່ນໆ) ໂອກາດທີ່ທ່ານຈະຖືກການຟ້ອງຮ້ອງກໍ່ມີໜ້ອຍລົງ.

ຂ. ການປະກັນພັຍ ກ່ຽວກັບອຸປະຕິເຫດ.

໑. ການປະກັນພັຍຊະນິດນີ້ ມີໄວ້ເພື່ອການຮັກສາ ເວລາເກີດອຸປະຕິເຫດ ຫລື ການເຈັບໄຂ້ທີ່ເກີດຂຶ້ນຢູ່ໃນບ້ານເຮືອນຂອງທ່ານ ຕາມຕົວຢ່າງທີ່ໄດ້ຍົກມາຢູ່ຂ້າງເທິງນີ້.

໒. ການປະກັນພັຍ ກ່ຽວກັບອຸປະຕິເຫດນີ້ ສ່ວນຫລາຍຈະຣວມເຂົ້າຢູ່ນຳກັນກັບ ການປະກັນພັຍກ່ຽວກັບຊັບສິນ.

໓. ການປະກັນພັຍ ເຫລົ່ານີ້ຈະຊ່ວຍທ່ານໃນການຟ້ອງຮ້ອງ ຂໍເງິນຮຽກຮ້ອງຄ່າເສັຽຫາຍຕື່ມ

ຄ. ການປະກັນພັຍ ກ່ຽວກັບ ຣົຖຍົນ.

໑. ຖ້າຫາກທ່ານຈະໃຊ້ຣົຖຂອງທ່ານ ເພື່ອຮັບຂົນສົ່ງເດັກນ້ອຍມາຍັງສະຖານທີ່ບ່ອນລ້ຽງເດັກ ແລ້ວທ່ານຈະຕ້ອງມີປະກັນພັຍສຳລັບຜູ້ໂດຍສານນັ້ນນຳ.

ງ. ການປະກັນພັຍ ສຳລັບເຈົ້າຂອງເຮືອນ ຫລື ຜູ້ເຊົ່າເຮືອນ.

໑. ການປະກັນພັຍ ແບບນີ້ສຳລັບປ້ອງກັນເຈົ້າຂອງເຮືອນ ຫລື ຜູ້ເຊົ່າເຮືອນ ກ່ຽວກັບການເສັຽ ຫາຍທີ່ເນື່ອງຕ່າງໆທີ່ເກີດຂຶ້ນຕໍ່ບ້ານເຮືອນ ເຊັ່ນການລັກ, ການແຕກເພ.

໔. <u>ບົດສລຸບ :</u>

ກ. ການລ້ຽງເດັກນ້ອຍຢູ່ໃນເຮືອນ ກໍຖືວ່າເປັນທຸຣະກິດຊນິດນຶ່ງ ແລະ ຕົວເອງເປັນນັກອາຊີບທີ່ຈ້າງຕົວເອງ ແລະ ເຮັດການຢູ່ໃນບ້ານເຮືອນແບບສ່ວນຕົວ.

໑. ເມື່ອທ່ານຫາກໄດ້ຮັບໃບອະນຸຍາດ ຂອງການລ້ຽງເດັກ ເຖິງແມ່ນວ່າ ທ່ານຈະລ້ຽງເດັກນ້ອຍແຕ່ຄົນດຽວກໍຕາມ ທ່ານຄວນຄິດວ່າ ທ່ານເປັນນັກອາຊີບຜູ້ນຶ່ງ.

໒. ນັກທຸຣະກິດຜູ້ດີ ທີ່ມີຄວາມຣະມັດຣະວັງ ໃນການເກັບການບັນທຶກຕ່າງໆ ໄດ້ດີແລະກໍເຊັ່ນດຽວກັນກັບການເບິ່ງແຍງ ແລະ ລ້ຽງດູເດັກໄດ້ດີນັ້ນເອງ.

໓. ເມື່ອທ່ານຫາກປະຕິບັດ ໄດ້ຕາມຄຳສັນຍາຂອງທ່ານພໍ່ແມ່ຂອງເດັກນ້ອຍ ເຂົາເຈົ້າກໍຈະໃຫ້ຄວາມນັບຖືແກ່ທ່ານ ແລະພວກເຂົາກໍຈະປະຕິບັດ ກັບຄຳສັນຍາທີ່ພວກເຂົາ ໄດ້ເຊັນໄວ້ໃນໃບສັນຍາເຊັ່ນດຽວກັນ.

໔. ວິທີເຫຼົ່ານີ້ ຈະເຮັດໃຫ້ທຸຣະກິດຂອງທ່ານ ດຳເນີນໄປຢ່າງໂດຍດີ ແລະ ປະສົບຜົລສຳເຣັດທຸກປະການ.